

# ບົດລາຍງານຄວາມຄືບໜ້າ 2016
## ຂອບການຊ່ວຍເຫຼືອເພື່ອການພັດທະນາຂອງ ອົງການສະຫະປະຊາຊາດ ຢູ່ ສປປ ລາວ

ນະຄອນຫຼວງວຽງຈັນ, ກຸມພາ 2017

*ຮູບພາບໜ້າປົກ: ການອະນຸລັກໂອງ-ມັ່ງ ແມ່ນຈຸດສຸມພື້ນຖານຂອງໂຄງການລິເລີ່ມອະນຸລັກສັດປ່າຂອງອົງການ UNDP ໂດຍຜ່ານໂຄງການ 'ຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ຢູ່ໃນລະບົບນິເວດປ່າໂຄກພາກໃຕ້ຂອງ ສປປ ລາວ'. ນັບຕັ້ງແຕ່ເປີດເຂດອະນຸລັກສັດປ່າ ໂອງ-ມັ່ງ ໃນປີ 2005, ຈຳນວນໂອງ-ມັ່ງ ກໍໄດ້ເພີ່ມຂຶ້ນເປັນ 3 ເທົ່າຄື ຈາກທີ່ມີປະມານ 13 ໂຕ ໄປເປັນ 46 ໂຕ ຫາ 80 ໂຕ.*

*ຮູບພາບໂດຍ: UNDP Lao PDR/ Lou Sensouphone*

# ສາລະບານ


ພາກສະເໜີ........................................................................................................ 1

1. ການເຕີບໂຕແບບສະເໝີພາບ ແລະຍືນຍົງ........................................................ 4
2. ການບໍລິການພາກລັດ, ສິດທິ ແລະການມີສ່ວນຮ່ວມ.............................................. 11
3. ການສຶກສາ ແລະການຝຶກອົບຮົມທີ່ສະເໝີພາບ.................................................... 16
4. ການບໍລິການສະຫວັດດີການສັງຄົມ ແລະ ສາທາທີ່ສະເໝີພາບ............... 23
5. ການປັບປຸງການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ.............. 29
6. ການປ້ອງກັນ HIV, ການປິ່ນປົວ ແລະ ການຊ່ວຍເຫຼືອຜູ້ຕິດເຊື້ອ HIV...... 35
7. ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ................................ 39
8. ການປັບຕົວ ແລະ ການຫຼຸດຜ່ອນຄວາມບອບບາງຈາກການປ່ຽນແປງຂອງ ສະພາບດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ....... 43
9. ການຫຼຸດຜ່ອນຜົນກະທົບຈາກບັນຫາລະເບີດບໍ່ທັນແຕກ.......................... 48
10. ຄວາມສະເໝີພາບບົດບາດຍິງ-ຊາຍ ແລະການມີສ່ວນຮ່ວມຂອງແມ່ຍິງ.. 51

ການສື່ສານຮ່ວມ.................................................................................................. 56

ການຮ່ວມປະຕິບັດງານ....................................................................................... 60

ພາບລວມດ້ານການເງິນໂດຍປະມານ.................................................................... 63

# ຄຳສັບຫຍໍ້

| | |
|---|---|
| ASEAN | ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| INGO | ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ |
| MDGs | ເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| SDGs | ເປົ້າໝາຍພັດທະນາແບບຍືນຍົງ |
| UXO | ລະເບີດບໍ່ທັນແຕກ |

**ບັນດາອົງການຈັດຕັ້ງພາຍໃນລະບົບ ສປຊ ຢູ່ ສປປ**

| | |
|---|---|
| FAO | ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ |
| IAEA | ອົງການພະລັງງານປະລາມະນູສາກົນ |
| IFAD | ກອງທຶນສາກົນເພື່ອການພັດທະນາກະສິກຳ |
| ILO | ອົງການແຮງງານສາກົນ |
| ITC | ສູນການຄ້າສາກົນ |
| IOM | ອົງການສາກົນເພື່ອການເຄື່ອນຍ້າຍຖິ່ນຖານ |
| UN-Habitat | ອົງການສະຫະປະຊາຊາດດ້ານເຄຫາສະຖານ |
| UN Women | ອົງການສະຫະປະຊາຊາດເພື່ອສົ່ງເສີມບົດບາດຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ |
| UNAIDS | ໂຄງການສະຫະປະຊາຊາດກ່ຽວກັບໂລກເອດສ໌ |
| UNCDF | ກອງທຶນສະຫະປະຊາຊາດເພື່ອການພັດທະນາ |
| UNCITRAL | ອົງການກົດໝາຍການຄ້າສາກົນແຫ່ງສະຫະປະຊາຊາດ |
| UNCTAD | ອົງການສະຫະປະຊາຊາດກ່ຽວກັບການຄ້າ ແລະ ການພັດທະນາ |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |
| UNEP | ອົງການແຫ່ງສະຫະປະຊາຊາດເພື່ອສິ່ງແວດລ້ອມ |
| UNESCO | ອົງການການສຶກສາ, ວິທະຍາສາດ ແລະ ວັດທະນະທຳແຫ່ງສະຫະປະຊາຊາດ |
| UNFPA | ອົງການສະຫະປະຊາຊາດ ກອງທຶນສໍາລັບປະຊາກອນ |
| UNHCR | ອົງການຂ້າຫຼວງໃຫຍ່ຂອງສະຫະປະຊາຊາດເພື່ອຜູ້ລີ້ໄພ |
| UNICEF | ອົງການສະຫະປະຊາຊາດ ກອງທຶນສໍາລັບເດັກ |
| UNIDO | ອົງການສະຫະປະຊາຊາດເພື່ອການພັດທະນາອຸດສາຫະກຳ |
| UNODC | ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ |
| UNV | ອາສາສະໝັກຂອງສະຫະປະຊາຊາດ |
| WFP | ອົງການອາຫານໂລກ |
| WHO | ອົງການອະນາໄມໂລກ |

ນອກຈາກນີ້, ທະນາຄານພັດທະນາອາຊີ (ADB), ອົງການກອງທຶນການເງິນສາກົນ (IMF) ແລະ ທະນາຄານໂລກ ກໍມີຫ້ອງການປະຈຳຢູ່ ສປປ ລາວ



# ພາກສະເໜີ

**ບົດລາຍງານສະບັບນີ້ ກວມເອົາທ່າອ່ຽງການພັດທະນາຕົ້ນຕໍ ແລະ ຜົນໄດ້ຮັບທີ່ບັນລຸໄດ້ ພາຍໃຕ້ຂອບການຊ່ວຍເຫຼືອ ເພື່ອການພັດທະນາຂອງອົງການ ສປຊ ສໍາລັບໄລຍະ 2012-2016 ກໍຄື ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ. ບົດລາຍງານສະບັບນີ້ ຍັງໄດ້ລາຍງານ ຄວາມຄືບໜ້າດ້ານການສື່ສານ ແລະ ການເຄື່ອນໄຫວວຽກງານຕ່າງໆ ຕະຫຼອດ ເຖິງພາບລວມການຊ່ວຍເຫຼືອດ້ານ ການເງິນ.**





2016 ແມ່ນປີທີ່ມີການປ່ຽນແປງ-ຂ້າມຜ່ານ ແລະ ມີຄວາມຄືບໜ້າຫຼາຍຢ່າງສໍາລັບ ສປປ ລາວ. ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ 10 ຂອງພັກປະ ຊາຊົນປະຕິວັດລາວໃນໄລຍະວັນທີ 18 ຫາ ວັນທີ 22 ມັງກອນ 2016 ໄດ້ສໍາ ເລັດລົງ ໂດຍໄດ້ເລືອກຕັ້ງກໍາມະການກົມການເມືອງສູນກາງພັກ 11 ທ່ານ (ເປັນຍິງ 1 ທ່ານ) ແລະ ກໍາມະການສົມບູນ 69 ທ່ານໃນຄະນະບໍລິຫານງານສູນກາງພັກ (ເປັນຍິງ 7 ທ່ານ). ກອງປະຊຸມໃຫຍ່ດັ່ງກ່າວຈັດຂຶ້ນທຸກໆຫ້າປີ. ພະນະ ທ່ານ ບຸນຍັງ ວໍລະຈິດ ອະດີດຮອງປະທານປະເທດ ໄດ້ຮັບເລືອກຕັ້ງເປັນ ເລຂາທິການໃຫຍ່ ແລະ ໄດ້ຖືກແຕ່ງຕັ້ງເປັນ ປະທານປະເທດ ສ່ວນພະນະທ່ານ ທອງລຸນ ສີສູລິດ ອະດີດ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ຮັບຕໍາ ແໜ່ງເປັນນາຍົກລັດຖະມົນຕີ. ໂດຍມີປະຊາຊົນອອກມາໃຊ້ສິດເລືອກຕັ້ງເຖິງ 73 ສ່ວນຮ້ອຍ, ການເລືອກຕັ້ງຜູ້ແທນສະ ພາແຫ່ງຊາດໄດ້ສໍາເລັດລົງ ດ້ວຍການແຕ່ງຕັ້ງສາມະຊິກສະພາແຫ່ງຊາດຈໍານວນ 149 ທ່ານ (ເປັນຍິງ 41 ທ່ານ).

ການປັບປຸງດັດແກ້ລັດຖະທໍາມະນູນເປັນຄັ້ງທໍາອິດນັບແຕ່ປີ 2003 ເປັນຕົ້ນມາ ໄດ້ນໍາໄປສູ່ການແບ່ງອໍານາດຢ່າງຊັດເຈນ ລະຫວ່າງອໍານາດການປົກຄອງໃນຂັ້ນຕ່າງໆ ໂດຍມີການສ້າງຕັ້ງສະພາປະຊາຊົນຂັ້ນແຂວງຂຶ້ນ ເຊິ່ງໄດ້ມີການຈັດການເລືອກຕັ້ງຜູ້ແທນ ໃນເວລາດຽວກັນກັບການເລືອກຕັ້ງສາມະຊິກສະພາແຫ່ງຊາດ.

ໃນເດືອນເມສາ, ສະພາແຫ່ງຊາດ ໄດ້ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສະບັບທີ VIII (NSEDP 2016-2020) ແລະ ຂອບການຕິດຕາມກວດກາ ແລະ ປະເມີນຜົນຕາມຜົນໄດ້ຮັບຂອງແຜນ 8 ໂດຍມີບູລິມະສິດລວມສຸມໃສ່ການນໍາເອົາປະເທດຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ. ໃນບັນດາ ຕົວຊີ້ວັດຂອງແຜນ 8 ແມ່ນໄດ້ເຊື່ອມສານເອົາຕົວຊີ້ວັດຂອງເປົ້າໝາຍການພັດທະນາແບບຍືນຍົງເຂົ້າເຖິງ 60 ສ່ວນຮ້ອຍ, ແຜນແປດເຊິ່ງສ້າງຂຶ້ນໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ ສປຊ ໄດ້ເນັ້ນໜັກໃຫ້ເຫັນຄໍາໝາຍໝັ້ນຂອງລັດຖະບານໃນເຊື່ອມສານວາລະການພັດທະນາແຕ່ນີ້ຮອດປີ 2030 ເຂົ້າໃນແຜນການລະດັບຊາດ ແລະ ການເຮັດໃຫ້ບັນລຸວາລະດັ່ງກ່າວ. ແນວໃດກໍຕາມ, ເຖິງວ່າຈະສັງເກດເຫັນໄດ້ເຖິງການປັບປຸງໃນຫຼາຍຂົງເຂດ, ແຕ່ຄວາມສາມາດຂອງ ປະເທດໃນການຄຸ້ມຄອງຕາມຜົນໄດ້ຮັບຍັງມີຈໍາກັດ ແລະ ພົບເລື້ອຍໆວ່າ: ຍັງບໍ່ທັນມີຂໍ້ມູນສໍາຄັນ ຫຼື ຖ້າມີກໍຍັງຂາດ ຄວາມໜ້າເຊື່ອຖື.

ຂະບວນການກອງປະຊຸມໂຕະມົນ ສືບຕໍ່ສະໜັບສະໜູນການຮ່ວມມື ແລະ ການປະສານງານເພື່ອການພັດທະນາ ລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ. ກອງປະຊຸມໂຕະມົນປະຈໍາປີໃນໄລຍະວັນທີ 24-25 ພະຈິກ ໄດ້ສະໜອງ ເວທີສົນທະນາແລກປ່ຽນທີ່ຟົດຟື້ນລະຫວ່າງລັດຖະບານ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເຊິ່ງເປັນການສົ່ງເສີມວິທີການເປັນຄູ່ຮ່ວມງານທີ່ລວມເອົາທຸກຝ່າຍ ເພື່ອເຮັດສໍາເລັດ ບັນດາບູລິມະສິດຕ່າງໆຂອງປະເທດ ໂດຍມີຈຸດສຸມການຈັດຕັ້ງປະຕິບັດທີ່ໜັກແໜ້ນ ໂດຍສະເພາະ 4 ຂົງເຂດບູລິມະສິດຄື: ເປົ້າໝາຍການພັດທະນາແບບຍືນຍົງ; ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ; ການເຕີບໂຕສີຂຽວ, ບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ຄວາມພ້ອມຮັບມືໄພພິບັດ;

ຕະຫຼອດເຖິງ ແຜນຈັດຕັ້ງປະຕິບັດ ຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມງານ 2016-2025 ເຊິ່ງ ຖືກຮັບຮອງເອົາໃນກອງປະຊຸມໂຕະມົນປະຈໍາປີຄັ້ງດັ່ງກ່າວ.

ສປປ ລາວ ຍັງເປັນລັດພາຄີຕໍ່ 7 ຈາກ 9 ສົນທິສັນຍາຫຼັກວ່າດ້ວຍສິດທິມະນຸດ. ເຖິງແມ່ນວ່າ ໄດ້ສົ່ງບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບແບບ ການຈໍາແນກຕໍ່ແມ່ຍິງ, ແຕ່ບົດລາຍງານອີກຫ້າສະບັບແມ່ນຍັງບໍ່ທັນໄດ້ສົ່ງເທື່ອ. ລັດຖະບານ ໄດ້ສະແດງຄໍາໝາຍໝັ້ນ ອັນແຮງກ້າຕໍ່ການປັບປຸງຄະນະຮັບຜິດຊອບການລາຍງານການຈັດຕັ້ງປະຕິບັດສົນທິສັນຍາກ່ຽວຂ້ອງໃນໄລຍະທີ່ຈະມາເຖິງນີ້.

ໃນດ້ານການພັດທະນາເສດຖະກິດ, ສປປ ລາວ ສືບຕໍ່ເປັນໜຶ່ງໃນບັນດາປະເທດທີ່ມີເສດຖະກິດຂະຫຍາຍຕົວໄວທີ່ສຸດໃນພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ໂດຍມີອັດຕາການຂະຫຍາຍຕົວສະເລ່ຍຂອງ GDP ຢູ່ທີ່ 7 ສ່ວນຮ້ອຍ ໃນຊຸມປີທີ່ຜ່ານມາ. ແນວໃດກໍຕາມ, ບັນຫາຄວາມບໍ່ສະເໝີພາບ ຍັງສືບຕໍ່ມີການເພີ່ມຂຶ້ນ ແລະ ການຂະຫຍາຍຕົວ ຂອງເສດຖະກິດສ່ວນໃຫຍ່ ແມ່ນເອື່ອຍອີງໃສ່ຂະແໜງຊັບພະຍາກອນທໍາມະຊາດ ໂດຍສະເພາະ ພະລັງງານໄຟຟ້າ ນໍ້າຕົກ, ບໍ່ແຮ່ ແລະ ກະສິກໍາ-ປ່າໄມ້. ການສືບຕໍ່ເອື່ອຍອີງໃສ່ຂະແໜງຊັບພະຍາກອນທໍາມະຊາດຂອງປະເທດ ບໍ່ພຽງ ແຕ່ເປັນຜົນນໍາໄປສູ່ບັນຫາການສູນເສຍເນື້ອທີ່ປ່າຢ່າງໄວວາ ແຕ່ຍັງສົ່ງຜົນຕໍ່ສັດປ່າ ແລະ ຊີວະນາໆພັນ. ດັ່ງນັ້ນ, ປະເທດລາວ ຈິ່ງໄດ້ຈັດຕັ້ງປະຕິບັດຫຼາຍບາດກ້າວສໍາຄັນເພື່ອກ້າວໄປສູ່ການສະຫງວນເນື້ອທີ່ປ່າ, ສັດປ່າ ແລະ ຊີວະນາໆພັນ.

ສປປ ລາວ ຍັງສືບຕໍ່ປະເຊີນຜົນກະທົບຈາກເຫດການຕ່າງໆທີ່ກ່ຽວພັນກັບການປ່ຽນແປງຂອງສະພາບດິນຟ້າອາກາດ ໂດຍຊຸມຊົນຢູ່ເຂດຊົນນະບົດ ເປັນຜູ້ໄດ້ຮັບຜົນກະທົບຫຼາຍສຸດຈາກຮູບການການປ່ຽນແປງທີ່ຄາດເດົາບໍ່ໄດ້ຂອງສະ ພາບອາກາດ. ເຄິ່ງປີທໍາອິດຂອງປີ 2016 ໄດ້ພົບເຫັນໄລຍະອາກາດໜາວເຢັນທີ່ບໍ່ເຄີຍມີມາກ່ອນ ແລະ ໃນລະຫວ່າງປີ ກໍມີຝົນຕົກໜັກຈາກພະຍຸໄຕ້ຝຸ່ນ ແລະ ມີໄລຍະແລ້ງທີ່ຍາວນານ. ເຫດການເຫຼົ່ານີ້ເຮັດໃຫ້ເກີດມີສະພາບນໍ້າກ້າມ, ນໍ້າຖ້ວມ ແລະ ໄພແຫ້ງແລ້ງ, ສົ່ງຜົນກະທົບຕໍ່ການສູນເສຍພືດຜົນລະປູກ, ການຕາຍຂອງສັດລ້ຽງ, ນໍ້າຖ້ວມຊຸ, ຖະໜົນຫົນ ທາງຖືກທໍາລາຍ, ຊຸມຊົນຖືກຕັດຂາດຊົ່ວຄາວ ແລະ ມີພະຍາດລະບາດ. ຍ້ອນວ່າມີການຕິດຕາມກວດກາ, ການຈັດຕັ້ງ ປະຕິບັດ ແລະ ລະບົບເຕືອນໄພລ່ວງໜ້າທີ່ຍັງອ່ອນນ້ອຍ, ປະເທດລາວ ຈິ່ງຍັງສືບຕໍ່ໄດ້ຮັບຜົນກະທົບຈາກລະດັບຄວາມບອບບາງທີ່ສູງຕໍ່ການກະທົບທັງພາຍໃນ ແລະ ພາຍນອກ ເຊິ່ງລວມທັງຜົນກະທົບຕ່າງໆຈາກບັນຫາການປ່ຽນແປງຂອງ ສະພາບດິນຟ້າອາກາດ.

ປີ 2016 ຍັງເປັນຂີດໝາຍສໍາຄັນສໍາລັບ ສປປ ລາວ ທີ່ໄດ້ສໍາເລັດການເປັນເຈົ້າພາບຈັດກອງປະຊຸມສຸດຍອດຜູ້ນໍາ ASEAN ຄັ້ງທີ 28 ແລະ 29 ແລະ ກອງປະຊຸມປິ່ນອ້ອມ ຢູ່ນະຄອນຫຼວງວຽງຈັນ ໃນໄລຍະວັນທີ 6 ເຖິງ ວັນທີ 8 ກັນຍາ ເຊິ່ງເລຂາທິການໃຫຍ່ອົງການ ສປຊ ທ່ານ ບັນ ຄີ-ມູນ ກໍ່ໄດ້ເດີນທາງມາຢ້ຽມຢາມປະເທດລາວໃນໄລຍະນັ້ນ. ນອກຈາກວຽກງານອື່ນໆແລ້ວ, ທ່ານເລຂາທິການໃຫຍ່ອົງການ ສປຊ ແລະ ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວຍັງໄດ້ ຮ່ວມຖະແຫຼງເປົ້າໝາຍ SDG 18 ທີ່ເປັນເປົ້າໝາຍສະເພາະຂອງ ສປປ ລາວ ກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນ ແຕກ (UXO) ເຊິ່ງເປັນສິ່ງກີດຂວາງການພັດທະນາສ້າງສາປະເທດ; ພ້ອມນັ້ນ, ລັດຖະບານລາວ ຍັງເປັນສາມະຊິກ ASEAN ຊາດທໍາອິດທີ່ໄດ້ໃຫ້ສັດຕະຍາບັນຕໍ່ສັນຍາປາຣີ; ແລະ ຂອບການເປັນຄູ່ຮ່ວມງານລະຫວ່າງ ສປປ ລາວ ແລະ ສປຊ ສໍາລັບໄລຍະ 2017-2021 ກໍໄດ້ຮັບການລົງນາມ.

ຂອບການເປັນຄູ່ຮ່ວມງານສະບັບໃໝ່ ໄດ້ປ່ຽນແທນຂອບການຊ່ວຍເຫຼືອເພື່ອການພັດທະນາຂອງ ສປຊ ສໍາລັບ 2011-2016. ຂອບດັ່ງກ່າວ ຍັງສະໜັບສະໜູນແຜນ 8 ໂດຍຜ່ານ 3 ເສົາຄໍ້າຄື: (1) ການເຕີບໂຕທີ່ລວມເອົາທຸກຄົນ, ການຫາລ້ຽງຊີບ ແລະ ຄວາມທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ; (2) ການພັດທະນາມະນຸດ; ແລະ (3) ການປົກຄອງ, ລັດແຫ່ງກົດໝາຍ ແລະ ການມີສ່ວນຮ່ວມໃນການຕັດສິນບັນຫາຂອງປະເທດ. ຂອບການເປັນຄູ່ຮ່ວມງານສໍາລັບໄລຍະ 2017-2021 ສອດຄ່ອງກັບຮອບວຽນການວາງແຜນຂອງລັດຖະບານເພື່ອເອື້ອອໍານວຍໃຫ້ມີ ການທັນຂະບວນການເຮັດວຽກໃຫ້ໄປລວງດຽວກັນຢ່າງຄົບຖ້ວນ. ດ້ວຍການສານຕໍ່ຈາກຂອບການເປັນຄູ່ຮ່ວມງານສະບັບດັ່ງກ່າວ, ບັນດາອົງການໃນລະບົບ ສປຊ ສ່ວນໃຫຍ່ ເຊິ່ງລວມທັງອົງການ FAO, UNDP, UNFPA, UNICEF, WFP ແລະ WHO ໄດ້ຕົກລົງເປັນເອກະພາບກັບລັດຖະບານ ກ່ຽວກັບບັນດາແຜນງານຍຸດທະສາດຮ່ວມມືສະເພາະຂອງເຂົາເຈົ້າກັບລັດຖະບານ.

ການສະໜັບສະໜູນຂອງຄູ່ຮ່ວມພັດທະນາພາຍໃນ ກໍຄື ສາກົນເຊັ່ນ: ອົດສະຕາລີ, ສະຫະພາບເອີຣົບ, ຝຣັ່ງ, ເຢຍລະມັນ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ລຸກຊໍາບວກ, ສະວິດເຊີແລນ ແລະ ສະຫະລັດອາເມລິກາ ພົບວ່າ: ມີຄວາມສໍາຄັນ ຕໍ່ການເປັນຄູ່ຮ່ວມງານລະຫວ່າງ ສປປ ລາວ ແລະ ອົງການ ສປຊ ເຊິ່ງຍັງຄົງເປັນອັນດັບໜຶ່ງ ແລະ ຢູ່ແນວໜ້າດ້ານ ການເປັນຜູ້ສະໜອງການຮ່ວມມືທາງວິຊາການ ແລະ ເປັນຜູ້ອໍານວຍຄວາມສະດວກດ້ານການສົນທະນາແລກປ່ຽນທາງນະໂຍບາຍ.

ບົດລາຍງານສະບັບນີ້ ກວມເອົາທ່າອ່ຽງການພັດທະນາຕົ້ນຕໍ ແລະ ຜົນໄດ້ຮັບທີ່ບັນລຸໄດ້ ພາຍໃຕ້ຂອບການຊ່ວຍເຫຼືອ ເພື່ອການພັດທະນາຂອງອົງການ ສປຊ ສໍາລັບໄລຍະ 2012-2016 ກໍຄື ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ. ບົດລາຍງານສະບັບນີ້ ຍັງໄດ້ລາຍງານຄວາມຄືບໜ້າດ້ານການສື່ສານ ແລະ ການເຄື່ອນໄຫວວຽກງານ ຕ່າງໆ ຕະຫຼອດເຖິງພາບລວມການຊ່ວຍເຫຼືອດ້ານການເງິນ.

*“ການສະໜັບສະໜູນຂອງຄູ່ຮ່ວມພັດທະນາພາຍໃນ ກໍຄື ສາກົນເຊັ່ນ: ອົດສະຕາລີ, ສະຫະພາບເອີຣົບ, ຝຣັ່ງ, ເຢຍລະມັນ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ລຸກຊໍາບວກ, ສະວິດເຊີແລນ ແລະ ສະຫະລັດອາເມລິກາ ພົບວ່າ: ມີຄວາມສໍາຄັນ ຕໍ່ການເປັນຄູ່ຮ່ວມງານລະຫວ່າງ ສປປ ລາວ ແລະ ອົງການ ສປຊ...”*



# 1. ການເຕີບໂຕແບບສະເໝີພາບ ແລະ ຍືນຍົງ

# ລັດຖະບານ ສົ່ງເສີມການເຕີບໂຕແບບສະເໝີພາບ ແລະ ຍືນຍົງສຳລັບຜູ້ທຸກຍາກຢູ່ ສປປ ລາວ





## ທ່າອ່ຽງການພັດທະນາຕົ້ນຕໍ

ສປປ ລາວ ຍັງສືບຕໍ່ເປັນໜຶ່ງໃນບັນດາປະເທດທີ່ມີເສດຖະກິດຂະຫຍາຍຕົວໄວທີ່ສຸດໃນພາກພື້ນອາຊີ ແລະ ປາຊີຟິກ ໂດຍມີອັດຕາການຂະຫຍາຍຕົວສະເລ່ຍຂອງ GDP ຢູ່ທີ່ 7 ສ່ວນຮ້ອຍໃນຊຸມປີທີ່ຜ່ານມາ. ໂດຍສອດຄ່ອງກັບທ່າອ່ຽງ ດັ່ງກ່າວນີ້, ມີການຄາດຄະເນວ່າເສດຖະກິດລາວຈະມີອັດຕາການຂະຫຍາຍຕົວຢູ່ທີ່ 6,9 ເຖິງ 7 ສ່ວນຮ້ອຍສຳລັບສົກປີ ງົບປະມານ 2015/2016. ຜະລິດຕະພັນ ແລະ ບໍລິການຂອງລາວ ນັບມື້ນັບເປັນທີ່ຍອມຮັບຫຼາຍຂຶ້ນ ໂດຍຜູ້ຊົມໃຊ້ພາຍໃນ ແລະ ຕ່າງປະເທດ ເຊິ່ງເປັນການສ້າງວຽກເຮັດງານທຳ ແລະ ລາຍໄດ້. ໃນຂະນະດຽວກັນ, ບັນຫາຄວາມບໍ່ສະ ເໝີພາບ ຍັງສືບຕໍ່ເພີ່ມຂຶ້ນ ແລະ ການຂະຫຍາຍຕົວຂອງເສດຖະກິດສ່ວນໃຫຍ່ ແມ່ນເອື່ອຍອີງຂະແໜງຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນພະລັງງານໄຟຟ້ານ້ຳຕົກ, ບໍ່ແຮ່ ແລະ ກະສິກຳ-ປ່າໄມ້.

ລັດຖະບານ, ໂດຍຜ່ານແຜນພັດທະນາເສດຖິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (NSEDP 2016-2020), ໄດ້ຢືນຢັນຄຳໝາຍໝັ້ນຂອງຕົນທີ່ຈະນຳເອົາປະເທດຫຼຸດພົ້ນອອກຈາກສະຖະນະພາບການເປັນປະເທດດ້ອຍພັດທະນາໃຫ້ໄດ້ ພາຍໃນປີ 2020, ຫຼຸດຜ່ອນຄວາມທຸກຍາກ ແລະ ສ້າງຄວາມຄືບໜ້າຕໍ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs ). ເດືອນເມສາ, ສະພາແຫ່ງຊາດ ໄດ້ຮັບຮອງແຜນ 8 ລວມທັງຂອບຕິດຕາມກວດກາ ແລະ ປະເມີນຜົນ ຂອງແຜນດັ່ງກ່າວ - ໂດຍ 60 ສ່ວນຮ້ອຍຂອງຕົວຊີ້ວັດເຫັນວ່າສອດຄ່ອງກັບຕົວຊີ້ວັດຂອງ SDG. ປະຈຸບັນ, ລັດຖະບານ ກຳລັງພິຈາລະນາຄັດເລືອກຕົວຊີ້ວັດ SDG ສະເພາະຂອງປະເທດ ທີ່ຢູ່ນອກເໜືອຈາກຕົວຊີ້ວັດທີ່ໄດ້ເຊື່ອມສານ ເຂົ້າໃນແຜນ 8 ແລ້ວ. ນອກຈາກ SDG ທັງ 17 ເປົ້າໝາຍທີ່ເປັນເອກະພາບທົ່ວສາກົນແລ້ວ, ປະເທດລາວຍັງໄດ້ຮັບຮອງເອົາ SDG 18 ທີ່ເປັນເປົ້າໝາຍສະເພາະຂອງປະເທດກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກ (UXO) ທີ່ ເປັນອຸປະສັກສກົດຂວາງການພັດທະນາສ້າງສາປະເທດ. ໄດ້ມີການປັບປຸງດັດແກ້ດຳລັດທ່ານນາຍົກລັດຖະມົນຕີວ່າດ້ວຍເປົ້າໝາຍສະຫັດສະວັດເພື່ອການພັດທະນາ ເພື່ອສະໜອງບ່ອນອີງທາງກົດໝາຍ ໃຫ້ການຈັດຕັ້ງປະຕິບັດ SDG. ໂດຍເນື້ອໃນສຳຄັນມີຄື: ທ່ານນາຍົກລັດຖະມົນຕີ ເປັນປະທານຄະ


*“ລັດຖະບານ, ໂດຍຜ່ານແຜນພັດທະນາເສດຖິດ–ສັງຄົມແຫ່ງຊາດ ຄັ້ງທີ VIII (NSEDP 2016–2020), ໄດ້ຢືນຢັນ ຄຳໝາຍໝັ້ນຂອງຕົນທີ່ຈະນຳເອົາປະເທດຫຼຸດພົ້ນອອກຈາກສະຖະນະພາບການເປັນປະເທດດ້ອຍພັດທະນາໃຫ້ໄດ້ ພາຍໃນປີ 2020, ຫຼຸດຜ່ອນຄວາມທຸກຍາກ ແລະ ສ້າງຄວາມຄືບໜ້າຕໍ່ການບັ້ນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs).”*

ນະກຳມະການຊີ້ນຳການຈັດຕັ້ງປະຕິບັດ SDG ແຫ່ງຊາດ ເພື່ອຊີ້ນຳ ແລະ ໃຫ້ຄຳແນະນຳຕໍ່ການຈັດຕັ້ງປະຕິບັດ SDG. ກະຊວງການຕ່າງປະເທດ ເຮັດໜ້າທີ່ເປັນຂົວຕໍ່ລະຫວ່າງຜູ້ມີບົດບາດພາຍໃນ ແລະ ຕ່າງປະເທດ; ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ເຊື່ອມສານ SDGs ເຂົ້າໃນການວາງແຜນໃນລະດັບຊາດ; ແລະ ສູນສະຖິຕິແຫ່ງຊາດ ສະໜັບສະໜູນດ້ານການຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ.

ກອງປະຊຸມໂຕະມົນປະຈຳປີໃນໄລຍະວັນທີ 24-25 ເດືອນພະຈິກ ໄດ້ເຕົ້າໂຮມລັດຖະບານ, ຄູ່ຮ່ວມພັດທະນາສາກົນຕ່າງໆ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ເພື່ອມາທົບທວນຄວາມຄືບໜ້າທີ່ຍາດມາໄດ້ພາຍໃນປີ ເພື່ອກ້າວສູ່ການບັນລຸຈຸດປະສົງຂອງແຜນ 8 ເຊິ່ງລວມທັງຜົນໄດ້ຮັບຈາກກອງປະຊຸມໂຕະມົນລະດັບສູງ 2015; ແລະ ເພື່ອຮ່ວມກັນກຳນົດບູລິມະສິດລວມ ສຳລັບປີ 2017 ໂດຍສຸມໃສ່ຄຳຖະແຫຼງຜົນໄດ້ຮັບດ້ານການເຕີບໂຕສີຂຽວ, ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ຄວາມພ້ອມຮັບມືໄພພິບັດ; ການຄໍ້າປະກັນສະບຽງອາຫານ ແລະ ໂພ ຊະນາການ; ການເຊື່ອມສານແລະການຈັດຕັ້ງປະຕິບັດວາລະປີ 2030 ວ່າດ້ວຍການພັດທະນາແບບຍືນຍົງ; ແລະ ປະ ສິດທິຜົນຂອງການພັດທະນາ. ທຸກພາກສ່ວນ ເປັນເອກະພາບຮັບຮອງແຜນຈັດຕັ້ງປະຕິບັດວ່າດ້ວຍການເປັນຄູ່ຮ່ວມ ງານເພື່ອການພັດທະນາທີ່ມີປະສິດທິຜົນ. ກອງປະຊຸມໂຕະມົນປະຈຳປີຄັ້ງນີ້  ສະຫຼຸບລົງດ້ວຍຄຳຖະແຫຼງຮ່ວມຂອງຜູ້ ປະສານງານອົງການ ສປຊ, ຜູ້ຕາງໜ້າ 14 ຄູ່ຮ່ວມພັດທະນາ ແລະ ພະນະທ່ານນາຍົກລັດຖະມົນຕີ. ຜົນໄດ້ຮັບຂອງ ກອງປະຊຸມໂຕະມົນ ໄດ້ຖືກຜັນຂະຫຍາຍເປັນຄຳສັ່ງແນະນຳຂອງນາຍົກລັດຖະມົນຕີເພື່ອຊີ້ນຳການເຮັດວຽກຂອງບັນດາກະຊວງຂະແໜງທີ່ກ່ຽວຂ້ອງ.

ໂດຍຮັບຮູ້ເຖິງຄວາມສຳຄັນໃນການນຳໃຊ້ປະໂຫຍດຈາກຊັບພະຍາກອນພາຍໃນ ເຊິ່ງລວມທັງການລົງທຶນຂອງພາກ ເອກະຊົນພາຍໃນ ເພື່ອສະໜັບສະໜູນການນຳເອົາປະເທດຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍ ພັດທະນາ, ພະນະທ່ານນາຍົກລັດຖະມົນຕີ ໄດ້ຮັບຮອງເອົາແຜນຍຸດທະສາດການພັດທະນາລະບົບການເງິນ (ໄລຍະ 2016-2025) ແລະ ວິໄສທັດ 2030 ໃນເດືອນກັນຍາ. ນອກຈາກການສ້າງຄວາມເຂັ້ມແຂງໃຫ້ຂະແໜງທະນາຄານ ແລະ ການພັດທະນາຕະຫຼາດທຶນແລ້ວ, ແຜນດັ່ງກ່າວ ຍັງໄດ້ຮຽກຮ້ອງໃຫ້ມີການຂະຫຍາຍການເຂົ້າເຖິງຕາໜ່າງລະບົບ ການເງິນໄປສູ່ເຂດຊົນນະບົດ ເພື່ອຄຸ້ມຄອງ ແລ ະລວມເອົາສະຖາບັນການເງິນເຄິ່ງໃນລະບົບໃຫ້ເຂົ້າສູ່ລະບົບເຊັ່ນ: ກອງທຶນບ້ານທີ່ມີການເຂົ້າເຖິງຄົວເຮືອນທຸກຍາກຢ່າງກ້ວາງຂວາງໃນເຂດຊົນນະບົດໂດຍສະເພາະແມ່ຍິງ. ໃນເດືອນ ຕຸລາ, ທະນາຄານແຫ່ງ ສປປ ລາວ ໄດ້ແລກປ່ຽນຮ່າງແຜນແມ່ບົດສົ່ງເສີມການເຂົ້າເຖິງແຫຼ່ງທຶນສຳລັບໄລຍະ 2016-2021 ກັບ ບັນດາອົງການຈັດຕັ້ງຕ່າງໆຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ໂດຍມີເປົ້າໝາຍເພື່ອປັບປຸງສະຫວັດດີການຂອງຄົວເຮືອນ, ເພີ່ມປະສິດທິຜົນຂອງເສດຖະກິດ ແລະ ສະໜັບສະໜູນການຂະຫຍາຍຕົວຂອງເສດຖະກິດ ໂດຍຫຼຸດຜ່ອນສ່ວນຮ້ອຍຂອງປະຊາກອນຜູ້ໃຫຍ່ທີ່ບໍ່ສາມາດເຂົ້າເຖິງບໍລິການຂອງຂະແໜງເງິນຈາກ 25 ສ່ວນຮ້ອຍໃຫ້ຫຼຸດລົງເປັນ 15 ສ່ວນຮ້ອຍ, ແລະ ເພີ່ມອັດຕາຂອງຄົນທີ່ສາມາດເຂົ້າເຖິງຜະລິດຕະພັນການເງິນໃນລະບົບໃຫ້ຫຼາຍກ່ວາ ໜຶ່ງຜະລິດຕະພັນ ຈາກ 28 ສ່ວນຮ້ອຍ ເປັນ 42 ສ່ວນຮ້ອຍ ພາຍໃນປີ 2020. ຄາດວ່າ ແຜນແມ່ບົດດັ່ງກ່າວ ຈະໄດ້ຮັບ ການຮັບຮອງໃນຕົ້ນປີ 2017.

> *ທີມງານຂອງອົງການ ສປຊ ໄດ້ສະໜັບສະໜູນການສ້າງແຜນ 8 ສຳລັບໄລຍະ 2016-2020 ໂດຍມີຈຸດສຸມສະເພາະເພື່ອຮັບປະກັນວ່າເປັນແຜນຕາມຜົນໄດ້ຮັບ, ສາມາດວັດແທກໄດ້ ແລະ ມີການເຊື່ອມໂຍງກັບວາລະ 2030 ວ່າດ້ວຍການພັດທະນາແບບຍືນຍົງ.*

## ຜົນໄດ້ຮັບ

ທີມງານຂອງອົງການ ສປຊ ໄດ້ສະໜັບສະໜູນການສ້າງແຜນ 8 ສຳລັບໄລຍະ 2016-2020 ໂດຍມີຈຸດສຸມສະເພາະເພື່ອຮັບປະກັນວ່າເປັນແຜນຕາມຜົນໄດ້ຮັບ, ສາມາດວັດແທກໄດ້ ແລະ ມີການເຊື່ອມໂຍງກັບວາລະ 2030 ວ່າດ້ວຍການພັດທະນາແບບຍືນຍົງ. ສະນັ້ນ, ເປັນຄັ້ງທຳອິດ ທີ່ແຜນການລະດັບຊາດມີຂອບຕິດຕາມກວດກາ ແລະ ປະເມີນຜົນຕາມຜົນໄດ້ຮັບ ໂດຍມີການເຊື່ອມສານຕົວຊີ້ວັດ SDGs ເຂົ້າໃນແຜນດັ່ງກ່າວ 60 ສ່ວນຮ້ອຍ ເພື່ອຊ່ວຍໃຫ້ ລັດຖະບານສາມາດຕິດຕາມຄວາມຄືບໜ້າກ່ຽວກັບ SDGs. ພ້ອມນັ້ນ, ຍັງໄດ້ຮ່າງຄູ່ມືຕິດຕາມກວດກາ ແລະ ປະເມີນ ຜົນຂຶ້ນເພື່ອສະໜັບສະໜູນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນ 8. ທີມງານ ສປຊ ຍັງໄດ້ອຳນວຍຄວາມ ສະດວກໃຫ້ຂະບວນການສ້າງຕົວຊີ້ວັດສຳລັບເປົ້າໝາຍ SDGs ສະເພາະຂອງປະເທດ ທີ່ນອກເໜືອຈາກຕົວຊີ້ວັດທີ່ມີ ໃນແຜນ 8, ເຊິ່ງປະຈຸບັນຕົວຊີ້ວັດສະເພາະເຫຼົ່ານັ້ນ ກຳລັງຢູ່ຂັ້ນການພິຈາລະນາຮັບຮອງເອົາໂດຍລັດຖະບານ.

ອົງການ UNDP ຍັງສືບຕໍ່ເປັນປະທານຮ່ວມໃນຂະບວນການກອງປະຊຸມໂຕະມົນ ເຊິ່ງເປັນເວທີລະດັບຊາດສຳລັບ ການສົນທະນາແລກປ່ຽນ ແລະ ປະຕິບັດການພັດທະນາຢ່າງມີໂຄງສ້າງລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ ຕາມທິດບູລິມະສິດແຫ່ງຊາດດັ່ງທີ່ໄດ້ກຳນົດໄວ້ໃນແຜນ 8. ສານຕໍ່ຈາກຄວາມຄືບໜ້າທີ່ຍາດມາໄດ້ໂດຍບັນດາ ໜ່ວຍງານສົນທະນາຫົວຂໍ້ຕ່າງໆທີ່ປິ່ນອ້ອມຂະບວນການກອງປະຊຸມໂຕະມົນ ແລະ ຄຳແນະນຳຈາກກອງປະຊຸມໂຕະມົນຄັ້ງຜ່ານມາ, ກອງປະຊຸມໂຕະມົນປະຈຳປີ ເມື່ອເດືອນພະຈິກ ໄດ້ທົບທວນຄວາມຄືບໜ້າໃນການບັນລຸບູລິມະສິດ ແຫ່ງຊາດປີ 2016 ແລະ ໄດ້ສົນທະນາແລກປ່ຽນບູລິມະສິດສຳລັບປີ 2017 ໂດຍສະເພາະໃນຫົວຂໍ້ປິ່ນອ້ອມການເຕີບໂຕສີຂຽວ, ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ຄວາມພ້ອມຮັບມືໄພພິບັດ; ການຄໍ້າປະກັນສະບຽງອາ ຫານແລະໂພຊະນາການ; ການເຊື່ອມສານ ແລະ ການຈັດຕັ້ງປະຕິບັດວາລະ 2030 ວ່າດ້ວຍການພັດທະນາແບບຍືນຍົງ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs); ຕະ

ຫຼອດເຖິງປະສິດທິຜົນຂອງການພັດທະນາ. ບັນດາຮອງລັດຖະມົນຕີຂອງຂະແໜງຕ່າງໆ ໄດ້ແລກປ່ຽນຄຳຖະແຫຼງ ຜົນໄດ້ຮັບໃນ 4 ຂົງເຂດທີ່ໄດ້ກ່າວເຖິງນັ້ນ. ພ້ອມນັ້ນ, ກອງປະຊຸມໂຕະມົນປະຈຳປີຄັ້ງນີ້ ຍັງໄດ້ຮັບຮອງເອົາແຜນຈັດຕັ້ງປະຕິບັດຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມງານ ເພື່ອການພັດທະນາທີ່ມີປະສິດທິຜົນສຳລັບໄລຍະ 2016-2025 ທີ່ມີ 14 ຕົວຊີ້ວັດເພື່ອວັດແທກຄວາມຄືບໜ້າດ້ານປະ ສິດທິຜົນຂອງການພັດທະນາ. ໂດຍມີຜູ້ເຂົ້າຮ່ວມປະມານ 300 ຄົນ ເຊິ່ງລວມທັງຈາກພາກລັດຖະບານ, ອົງການຈັດຕັ້ງ ສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ຈຶ່ງມີທັດສະນະເປັນເອກະພາບກັນຢ່າງກ້ວາງຂວາງວ່າ: ກອງ ປະຊຸມໂຕະມົນປະຈຳປີຄັ້ງນີ້ ມີຜົນສຳເລັດອັນຈົບງາມ.

ກອງປະຊຸມດັ່ງກ່າວ ຜູ້ປະສານງານອົງການ ສປຊ ຍັງໄດ້ແລກປ່ຽນຖະແຫຼງການຮ່ວມລະຫວ່າງຜູ້ປະສານງານ ອົງການ ສປຊ ແລະ 14 ຄູ່ຮ່ວມພັດທະນາ ທີ່ເປັນເອກະພາບກັບທ່ານນາຍົກລັດຖະມົນຕີ. ບັນດາຄຳແນະນຳຫຼັກຈາກກອງປະຊຸມດັ່ງກ່າວແມ່ນໄດ້ຖືກຜັນຂະຫຍາຍເປັນຄຳສັ່ງແນະນຳຂອງທ່ານນາຍົກລັດຖະມົນເພື່ອຊີ້ນຳ ການເຮັດວຽກຂອງບັນດາກະຊວງຂະແໜງກ່ຽວຂ້ອງ.

ນອກຈາກການສົນທະນາປຶກສາຫາລືທາງດ້ານນະໂຍບາຍແລ້ວ, ອົງການ ສປຊ ຍັງສືບຕໍ່ສົ່ງເສີມການສ້າງນະໂຍບາຍບົນພື້ນຖານຫຼັກຖານຕົວຈິງ ເພື່ອເພີ່ມທະວີຜົນໄດ້ຮັບຂອງການພັດທະນາ. ເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວາລະ 2030 ທີ່ຢາກໃຫ້ມີຂໍ້ມູນແຍກເພດທີ່ມີຄຸນນະພາບ, ສາມາດເຂົ້າເຖິງໄດ້, ທ່ວງທັນກໍາ ນົດເວລາ ແລະ ໜ້າເຊື່ອຖື, ບັນດາອົງການຕ່າງໆໃນລະບົບ ສປຊ ໄດ້ສືບຕໍ່ຊ່ວຍເຫຼືອລັດຖະບານໃນການສ້າງຄວາມ ເຂັ້ມແຂງໃຫ້ລະບົບສະຖິຕິແຫ່ງຊາດ ໂດຍສະເພາະແມ່ນການຮັບປະກັນໃຫ້ມີຂໍ້ມູນແຍກເພດ ເພື່ອຕິດຕາມກວດ ກາການຈັດຕັ້ງປະຕິບັດແຜນ 8, SDGs ແລະ ແຜນຂອງຂະແໜງ.

ອົງການ UNICEF ໄດ້ສະໜອງການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ການເງິນໃຫ້ສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດ ເພື່ອສ້າງຂອບການຄົ້ນຄ້ວາເສດຖະກິດ-ສັງຄົມແຫ່ງຊາດ ເຊິ່ງຖືເປັນສິ່ງສຳຄັນສຳລັບຜູ້ສ້າງນະໂຍບາຍເພື່ອສ້າງນະໂຍບາຍບົນພື້ນຖານການມີຂໍ້ມູນຫຼັກຖານ ພຽງພໍ, ໃນການອອກແບບຍຸດທະສາດ ແລະ ແຜນງານຕ່າງໆເພື່ອບັນລຸແຜນ 8 ແລະ ຍຸດທະສາດ 2025 ໂດຍສະ ເພາະແມ່ນການນຳເອົາປະເທດຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ. ດ້ວຍການຊ່ວຍ ເຫຼືອຈາກອົງການ UNDP ແລະ ອົງການອື່ນໆ, ໃນເດືອນພະຈິກ ຈຶ່ງສາມາດສຳເລັດການປະເມີນຜົນແບບຮອບດ້ານ ຕໍ່ກັບກົນໄກປະສານງານລະດັບຊາດສຳລັບການຕິດຕາມຄວາມຄືບໜ້າຂອງ SDGs.

ດ້ວຍການຊ່ວຍເຫຼືອຫຼັກຈາກອົງການ UNFPA ຮ່ວມກັນກັບອົງການ ESCAP, ILO, UNICEF, ທະນາຄານໂລກ, ອົງການຮ່ວມມືເພື່ອການພັດທະນາຂອງສະວິດເຊີແລນ, ອົງການສາກົນເພື່ອຄົນພິການ ແລະ ລັດຖະບານຂອງ ສປ ຈີນ, ໄດ້ສຳເລັດເຜີຍແຜ່ຜົນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສແຫ່ງຊາດ 2015 ເມື່ອເດືອນຕຸລາ. ການສຳຫຼວດ ດັ່ງກ່າວ ໄດ້ສະໜອງຂໍ້ມູນແຍກເພດທີ່ອຸດົມສົມບູນ ເພື່ອອຳນວຍຄວາມສະດວກໃຫ້ການວາງແຜນ ແລະ ການຕັດສິນ ບັນຫາໃນລະດັບຊາດ ລວມທັງໃນຂົງເຂດການລຶບລ້າງຄວາມທຸກຍາກ, ສາທາລະນະສຸກ, ສຶກສາ, ນໍ້າດື່ມ, ສຸຂາພິບານ, ປັບປຸງໂຄງລ່າງພື້ນຖານ ແລະ ຄວາມສະເໝີພາບທາງດ້ານບົດບາດຍິງ-ຊາຍ ແລະ ການສ້າງຄວາມເຂັ້ມ ແຂງໃຫ້ແມ່ຍິງ.

ອົງການ UNICEF ໂດຍຮ່ວມມືກັບ ສູນສະຖິຕິແຫ່ງຊາດ ແລະ ກະຊວງສາທະລະນະສຸກ ໄດ້ສຳເລັດ ແລະ ເຜີຍແຜ່ ຜົນການສຳຫຼວດການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການເຊິ່ງເປັນການສະໜອງຂໍ້ມູນຂ່າວສານຫຼ້າສຸດກ່ຽວ ກັບການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ຢູ່ 5 ແຂວງຄື: ຫຼວງນໍ້າທາ, ອຸດົມໄຊ, ສາລະວັນ, ເຊກອງ ແລະ ອັດຕະປື. ການສຳຫຼວດດັ່ງກ່າວ ເຮັດໜ້າທີ່ເປັນຂໍ້ມູນພື້ນຖານອັນສຳຄັນສຳລັບ ແຜນດຳເນີນງານແຫ່ງຊາດວ່າດ້ວຍ ໂພຊະນາການ ແລະ ທັງເປັນການສະໜອງຕົວເລກປະເມີນ ສຳລັບການວິເຄາະທ່າອ່ຽງໃນຂັ້ນແຂວງ ເພື່ອຮັບໃຊ້ການ ວາງແຜນ ແລະ ການຕິດຕາມກວດກາໃນຂັ້ນທ້ອງຖິ່ນ.

ໃນເດືອນມີນາ, ໄດ້ມີການເຜີຍແຜ່ບົດສຶກສາກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ລັດຖະບານ ກໍໄດ້ນຳໃຊ້ບົດສຶກສາ ດັ່ງກ່າວເພື່ອເພີ່ມຈິດສຳນຶກຕໍ່ຂົງເຂດບັນຫາດັ່ງກ່າວ. ອົງການUNFPA ຍັງໄດ້ໃຫ້ການຊ່ວຍເຫຼືອການຄົ້ນຄ້ວາ ແລະ ໂຄສະນາຂໍການສະໜັບສະໜູນທາງດ້ານນະໂຍບາຍ ໂດຍເອົາໃຈເປັນພິເສດ ຕໍ່ໄວໜຸ່ມຍິງ. ໄດ້ມີການຈັດງານວັນຄົ້ນ ຄ້ວາ ວິໄຈກ່ຽວກັບໄວໜຸ່ມຂຶ້ນເປັນຄັ້ງທຳອິດຢູ່ທີ່ສະຖາບັນສາທາລະນະສຸກແຫ່ງຊາດ ເຊິ່ງເປັນຜົນນຳໄປສູ່ການກຳນົດຊ່ອງ ຫວ່າງດ້ານການຄົ້ນຄ້ວາວິໄຈ ແລະ ການສ້າງເຄືອຂ່າຍການຄົ້ນຄ້ວາວິໄຈ. ລັດຖະບານ ໂດຍໄດ້ຮັບການສະໜັບສະໜູນຈາກອົງການ UNFPA ປະສົບຜົນສຳເລັດໃນການໂຄສະນາປຸກຈິດສຳນຶກກ່ຽວກັບໄວໜຸ່ມຍິງຜ່ານຕົວລະຄອນກະຕູນທີ່ມີຊື່ວ່າ “ນ້ອຍ” ອັນເປັນຜົນເຮັດໃຫ້ລັດຖະບານ ແລະ ຄູ່ຮ່ວມພັດທະນາໃຫ້ຄວາມເອົາໃຈໃສ່ຫຼາຍຂຶ້ນຕື່ມຕໍ່ບັນຫາທີ່ໄວໜຸ່ມຍິງປະສົບພົບພໍ້.

ດ້ວຍການຊ່ວຍເຫຼືອຈາກອົງການ UNICEF, ລັດຖະບານໄດ້ດຳເນີນການສຳຫຼວດບັນຫາຄວາມຮຸນແຮງຕໍ່ເດັກໃນທົ່ວປະເທດ ເປັນຄັ້ງທຳອິດ ເຊິ່ງເປັນການສະໜອງຂໍ້ມູນໃໝ່ໃຫ້ຮູ້ກ່ຽວກັບ ຂະໜາດ ແລະ ຂອບເຂດຂອງບັນຫາຄວາມຮຸນແຮງທີ່ເດັກນ້ອຍໄດ້ຮັບ. ການສຳຫຼວດດັ່ງກ່າວ ໄດ້ສຶກສາເບິ່ງປະສົບການດ້ານຄວາມຮຸນແຮງທາງຮ່າງກາຍ, ທາງ ອາລົມ ແລະ ທາງເພດທີ່ເດັກນ້ອຍອາຍຸຕໍ່າກ່ວາ 18 ປີ ຖືກກະທຳ. ຜົນໄດ້ຮັບຈາກການສຳຫຼວດດັ່ງກ່າວ ຈະປະກອບຂໍ້ມູນໃຫ້ການສ້າງນະໂຍບາຍ, ແຜນງານ ແລະ ກິດຈະກຳຕ່າງໆ. ຂໍ້ມູນຂ່າວສານດັ່ງກ່າວ ຍັງໄດ້ປະກອບສ່ວນ ເຂົ້າໃນການສ້າງບົດລາຍງານຂອງລັດພາຄີທີ່ມີກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ.

> *“ໄດ້ສຳເລັດເຜີຍແຜ່ຜົນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສແຫ່ງຊາດ 2015 ເມື່ອເດືອນຕຸລາ. ການສຳຫຼວດ ດັ່ງກ່າວ ໄດ້ສະໜອງຂໍ້ມູນແຍກເພດທີ່ອຸດົມສົມບູນ ເພື່ອອຳນວຍຄວາມສະດວກໃຫ້ການວາງແຜນ ແລະ ການຕັດສິນ ບັນຫາໃນລະດັບຊາດ...”*

ດ້ວຍການຊ່ວຍເຫຼືອຈາກອົງການ UNDP, ໃນເດືອນມິຖຸນາ ໄດ້ມີການເຜີຍແຜ່ຜົນການປະເມີນການຊ່ວຍເຫຼືອລ້າ ແລະ ການສະໜອງທຶນເພື່ອການພັດທະນາ ໂດຍການປະເມີນດັ່ງກ່າວ ໄດ້ສະໜອງພາບລວມກ່ຽວກັບການສະໜອງ ທຶນເພື່ອການພັດທະນາ ແລະ ຊຸດຄຳແນະນຳທາງດ້ານນະໂຍບາຍ. ໃນເດືອນທັນວາ, ກໍໄດ້ມີການເຜີຍແຜ່ບົດລາຍ ງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ສະບັບທີ V ຂອງອົງການ UNDP ເຊິ່ງເປັນເອກະສານທີ່ສະໜັບ ສະໜູນແຜນ 8 ໃນການວິເຄາະຄວາມ ຄືບໜ້າຂອງການນຳເອົາປະເທດຫຼຸດພົ້ນອອກຈາກສະຖານະພາບການເປັນ ປະເທດດ້ອຍພັດທະນາ, ໂດຍໄດ້ມີການສຶກສາເບິ່ງຜົນປະໂຫຍດ ແລະ ສິ່ງທ້າທາຍຕ່າງໆ ພ້ອມທັງສະໜອງຄຳແນະ ນຳຫຼັກທາງດ້ານນະໂຍບາຍ ເຊິ່ງອົງການ UNDP ຈະໃຫ້ການຊ່ວຍເຫຼືອລັດຖະບານໃນການຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດໃນປີ 2017.

ໃນປີ 2016, ໄດ້ເລີ່ມການສຳຫຼວດສຳຄັນຈຳນວນໜຶ່ງ ເພື່ອສະໜອງຂໍ້ມູນໃຫ້ການຕັດສິນບັນຫາບົນພື້ນຖານຂໍ້ມູນຫຼັກ ຖານຕົວຈິງ ເຊິ່ງຄາດວ່າ ຈະໄດ້ຮັບຜົນການສຳຫຼວດໃນໄລຍະປີ 2017. ເພື່ອກຳນົດຂໍ້ມູນພື້ນຖານ ແລະ ວັດແທກ ຄວາມຄືບໜ້າຕໍ່ SDGs, ສູນສະຖິຕິແຫ່ງຊາດ ແລະ ບັນດາກະຊວງຫຼັກຈຳນວນໜຶ່ງ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງ ການ UNICEF ແລະ ອົງການອື່ນໆພາຍໃຕ້ລະບົບ ສປຊ ຕະຫຼອດເຖິງຄູ່ຮ່ວມພັດທະນາອື່ນໆ ໄດ້ຈັດຕັ້ງປະຕິບັດການ ສຳຫຼວດດັດສະນີໝາຍສັງຄົມລາວ (LSIS) ຄັ້ງທີ II ໂດຍການນຳໃຊ້ຖານ ແລະ ບົດການສຳຫຼວດແມ່ ແລະ ເດັກ(MICS). ການສຳຫຼວດຄົວເຮືອນທົ່ວປະເທດດັ່ງກ່າວນີ້ ຈະສ້າງຂໍ້ມູນແຍກຕາມດ້ານຄວາມຮັ່ງມີ, ເພດ, ພູມລຳເນົາ, ອາຍຸ ແລະ ຊົນເຜົ່າ ໃນ 18 ແຂວງທົ່ວປະເທດ ສຳລັບເກືອບທຸກຂະແໜງສັງຄົມ. ໄດ້ມີການສ້າງການເປັນຄູ່ຮ່ວມງານໃນວົງກ້ວາງ ເພື່ອສະໜັບສະໜູນການສຳຫຼວດດັ່ງກ່າວນີ້ ເຊິ່ງລວມທັງການຊ່ວຍເຫຼືອດ້ານການເງິນຈາກສະຫະພາບເອີຣົບ, ອົງການ UNFPA, ອົງການ USAID, ອົງການ WFP, ອົງການ WHO, ອົງການຮ່ວມມືເພື່ອການພັດທະ ນາຂອງສະວິດເຊີແລນ, ປະເທດລຸກຊຳບວກ ແລະ ອົງການຮ່ວມມືສາກົນຂອງຍີ່ປຸ່ນ (JICA).

ອົງການ UNIDO ກໍກຳລັງໃຫ້ການຊ່ວຍເຫຼືອກະຊວງອຸດສາຫະກຳ ແລະ ການຄ້າ ໃນການດຳເນີນການສຳຫຼວດຂະແໜງການຜະລິດໃນປະເທດລາວ ເຊິ່ງຄາດວ່າ ຈະໄດ້ຂໍ້ມູນການສຳຫຼວດໃນຕົ້ນປີ 2017.

ໄດ້ມີການຈັດຕັ້ງປະຕິບັດການສຳຫຼວດກຳລັງແຮງງານ ຄັ້ງທີສອງ. ໃນໄລຍະປີ 2017, ການສຳຫຼວດດັ່ງກ່າວ ຄາດວ່າ ຈະປັບປຸງຂໍ້ມູນຂ່າວສານຫຼ້າສຸດກ່ຽວກັບຕະຫຼາດແຮງງານພາຍໃນປະເທດ ບົນພື້ນຖານມາດຕະຖານສາກົນທີ່ໃຊ້ໃນ ປະຈຸບັນ ແລະ ສະໜອງຂໍ້ມູນກ່ຽວກັບເສດຖະກິດນອກລະບົບ, ການເຄື່ອນຍ້າຍແຮງງານ, ສຸຂະພາບ ແລະ ຄວາມປອດໄພແຮງງານ, ຜູ້ທີ່ມີສ່ວນຮ່ວມໃນກິດຈະກຳການຜະລິດເພື່ອຊົມໃຊ້ເອງໃນຄົວເຮືອນ, ກໍຄື ບັນດາຂໍ້ກັງວົນຕົ້ນຕໍທາງ ດ້ານນະໂຍບາຍປະຈຸບັນທີ່ມີໃນວາລະແຫ່ງຊາດວ່າດ້ວຍການສ້າງວຽກທີ່ມີຄຸນຄ່າເປັນທຳ. ການສຳຫຼວດດັ່ງກ່າວ ຈະປະກອບສ່ວນເຂົ້າໃນການ ຕິດຕາມກວດກາຄາດໝາຍຕ່າງໆດ້ານວຽກທີ່ມີຄຸນຄ່າເປັນທຳໃນ SDG.

ທີມງານອົງການ ສປຊ ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອດ້ານການສົ່ງເສີມວຽກທີ່ມີຄຸນຄ່າເປັນທຳ, ການລົງທຶນທີ່ມີຄຸນນະພາບ ແລະ ການປະຕິບັດໃຫ້ສອດຄ່ອງຕາມມາດຕະຖານສາກົນ ເພື່ອສົ່ງເສີມການຄ້າ. ຕົວຢ່າງ: ອົງການ UNDP ໄດ້ສືບຕໍ່ ຊ່ວຍເຫຼືອປັບປຸງຄວາມກະຈ່າງແຈ້ງ, ຂັ້ນຕອນ ແລະ ການປະສານງານທາງດ້ານລະບຽບກົດໝາຍ ເພື່ອຮັບປະກັນໃຫ້ ມີການລົງທຶນທີ່ມີຄຸນນະພາບ ໃນນັ້ນລວມທັງການທົບທວນຍຸດທະສາດສົ່ງເສີມການລົງທຶນລະດັບຊາດ ແລະ ສ້າງສຳເລັດຍຸດທະສາດສົ່ງເສີມການລົງທຶນຂັ້ນແຂວງສຳລັບແຂວງສະຫວັນນະເຂດ. ຜົນສຳເລັດຂອງລັດຖະບານຕະຫຼອດ 4 ປີທີ່ຜ່ານມາ ໃນໂຄງການເຊື່ອມໂຍງສິ່ງແວດລ້ອມເຂົ້າໃນກິດຈະກຳແກ້ໄຂຄວາມທຸກຍາກ (PEI)  ທີ່ໄດ້ຮັບທຶນຈາກ ອົງການ UNDP/UNEP ໄດ້ຖືກຮັບຮູ້ໂດຍບັນດາຜູ້ໃຫ້ທຶນສາກົນ ໃນໄລຍະການມາຢ້ຽມຢາມ ສປປ ລາວ ໃນປີ 2016. ບັນດາຜູ້ໃຫ້ທຶນ ໄດ້ໃຫ້ຄຳໝາຍໝັ້ນທີ່ຈະສືບຕໍ່ສະໜອງທຶນໃຫ້ໄລຍະ 3 ຂອງໂຄງການດັ່ງກ່າວທົ່ວໂລກ.

ສຳລັບປະຊາຊົນບັນດາເຜົ່າໃນເຂດຊົນນະບົດດ້ອຍໂອກາດຂອງບ້ານເປົ້າໝາຍຈຳນວນໜຶ່ງ, ອົງການ ILO ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອລັດຖະບານ ໃນການສະໜອງການເຂົ້າເຖິງການພັດທະນາສີມືແຮງງານ ເພື່ອການສ້າງລາຍໄດ້ ແລະ ໂອກາດໃນການມີວຽກເຮັດງານທຳຢູ່ເຂດຊົນນະບົດ. ດ້ວຍການຊ່ວຍເຫຼືອທາງດ້ານວິຊາການຈາກອົງການ ILO, ຊາວບ້ານ 433 ຄົນ ຢູ່ແຂວງເຊກອງ ເຊິ່ງເປັນໜຶ່ງໃນແຂວງທີ່ທຸກຍາກທີ່ສຸດຢູ່ ສປປ ລາວ ໄດ້ຍົກລະດັບທັກສະຄວາມຮູ້ ດ້ານການເປັນຜູ້ປະກອບການ (ໂດຍເອົາໃຈໃສ່ເປັນພິເສດຕໍ່ຜູ້ປະກອບການທີ່ເປັນເພດຍິງ), ດ້ານການປູກເຫັດ, ກໍ່ສ້າງໜອງປາ, ການລ້ຽງປາ ແລະ ໄກ່, ສ້ອມແປງລົດຈັກ, ການບຳລຸງຮັກສາຖະໜົນຫົນທາງເປັນປະຈຳ ແລະ ການປັບປຸງການຜະລິດກາເຟ. ໜຶ່ງໃນຕົວຢ່າງທີ່ສະແດງໃຫ້ເຫັນຜົນກະທົບຕໍ່ການພັດທະນາສີມືແຮງງານຢູ່ເຂດຊົນນະບົດ ເພື່ອສ້າງລາຍໄດ້ ແມ່ນກໍລະນີຂອງຊາວບ້ານໃນຊົນນະບົດຈຳນວນ 35 ຄົນ. ຊາວບ້ານເຫຼົ່ານີ້ ສາມາດຫາລາຍໄດ້ 500,000 ເຖິງ 1,200,000 ກີບ ຕໍ່ເດືອນ ຫຼັງຈາກທີ່ໄດ້ຮັບການຝຶກອົບຮົມສ້ອມແປງລົດຈັກ. ການຄັດເລືອກເອົາປະ ຊາຊົນໜຶ່ງຄົນຕໍ່ໜຶ່ງບ້ານໃນເຂດຊົນນະບົດ ເພື່ອມາຮັບການຝຶກອົບຮົມດັ່ງທີ່ໄດ້ກ່າວມາຂ້າງເທິງນີ້ ໄດ້ຊ່ວຍແກ້ໄຂຄວາມຈຳເປັນທີ່ຊາວບ້ານຕ້ອງເດີນທາງເປັນໄລຍະ 30 km ຫຼືຫຼາຍກ່ວານັ້ນ ເພື່ອເຂົ້າມາແປງລົດຈັກໃນຕົວເມືອງ. ຈະ ມີການຂະຫຍາຍການພັດທະນາສີມືແຮງງານໃນຊົນນະບົດເພີ່ມຕື່ມອີກ ເພື່ອເຊື່ອມໂຍງກັບລະບົບອອກໃບຢັ້ງຢືນ ມາດຕະຖານສີມືແຮງງານແຫ່ງຊາດ.

ໄດ້ສ້າງໜ່ວຍບໍລິການຂໍ້ມູນຂ່າວສານຕະຫຼາດແຮງງານຂຶ້ນພາຍໃຕ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ໄດ້ສ້າງມາດຕະຖານການຈັດປະເພດອາຊີບແຫ່ງຊາດຂອງລາວ ໃນຖານະເປັນໜຶ່ງໃນບັນດາກ້ອນເສົາຂອງກະຊວງ.

ອົງການ UNIDO ໄດ້ສືບຕໍ່ຊ່ວຍເຫຼືອພັດທະນາຄວາມສາມາດໃນດ້ານການຄ້າ ໂດຍສະເພາະໃນຂົງເຂດມາດຕະ ຖານ, ການວັດແທກ, ການທົດສອບ ແລະ ຄຸນນະພາບ. ໄດ້ແກ້ໄຂຂໍ້ຈຳກັດທາງດ້ານມາດຕະການສຸຂະອະນາໄມພືດ ແລະ ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການສ້າງຄວາມເຂັ້ມແຂງທາງດ້ານການຄ້າ ເຊິ່ງເປັນການເພີ່ມເຊື່ອມໂຍງ ສປປ ລາວ ເຂົ້າໃນລະບົບການຄ້າຫຼາຍຝ່າຍ. ບັນດາສະຖາບັນຕ່າງໆເຊັ່ນ: ສູນວັດແທກແຫ່ງຊາດ, ສູນຄວບຄຸມຄຸນນະພາບ ອາຫານ ແລະ ຢາ, ແລະ ຫ້ອງວິໄຈສະມາຄົມກາເຟລາວ ແມ່ນພ້ອມທີ່ຈະໃຫ້ການຢັ້ງຢືນໃນລະດັບສາກົນ. ໄປຄຽງຄູ່ ກັບການສ້າງທໍາສະມຸດມາດຕະຖານ, ໄດ້ມີການສ້າງມາດຕະຖານແຫ່ງຊາດສຳລັບຜະລິດຕະພັນຕ່າງໆເຊັ່ນ: ຢາສະ ຫົວ, ນ້ຳມັນກາຊວນຊີວະພາບ, ມາດຕະຖານເຕັກນິກສະເພາະຢາງ, ຊາຂຽວ, ແປ້ງມັນຕົ້ນ, ໄມ້ອັດ ແລະ ເສົາໄຟຟ້າ ເຊິ່ງເປັນການປະກອບສ່ວນໃສ່ການເສີມຂະຫຍາຍການຄ້າ, ການລົງທຶນ, ການປົກປ້ອງຜູ້ຊົມໃຊ້ ແລະ ການສ້າງວຽກເຮັດງານທຳ.

*ເພື່ອກຳນົດຂໍ້ມູນພື້ນຖານ ແລະ ວັດແທກຄວາມຄືບໜ້າຕໍ່ SDGs, ສູນສະຖິຕິແຫ່ງຊາດ ແລະ ບັນດາກະຊວງຫຼັກຈຳນວນໜຶ່ງ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງ ການ UNICEF ແລະ ອົງການອື່ນໆພາຍໃຕ້ລະບົບ ສປຊ ຕະຫຼອດເຖິງຄູ່ຮ່ວມພັດທະນາອື່ນໆ ໄດ້ຈັດຕັ້ງປະຕິບັດການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) ຄັ້ງທີ II ໂດຍການນຳໃຊ້ຖານ ແລະ ບົດການສຳຫຼວດແມ່ ແລະ ເດັກ (MICS). ການສຳຫຼວດຄົວເຮືອນທົ່ວປະເທດດັ່ງກ່າວນີ້ ຈະສ້າງຂໍ້ມູນແຍກຕາມດ້ານຄວາມຮັ່ງມີ, ເພດ, ພູມລຳເນົາ, ອາຍຸ ແລະ ຊົນເຜົ່າ ໃນ 18 ແຂວງທົ່ວປະເທດ ສຳລັບເກືອບທຸກຂະແໜງສັງຄົມ.*

ແຜນງານຮ່ວມຂອງອົງການ ສປຊ ທີ່ປະກອບມີອົງການ ILO, ITC, UNCTAD, ແລະ UNIDO ໃນການເສີມຂະ ຫຍາຍການທ່ອງທ່ຽວແບບຍືນຍົງ, ການຜະລິດ ແລະ ການສົ່ງອອກແບບສະອາດ ຍັງໄດ້ປະກອບສ່ວນເຂົ້າໃນການປັບ ປຸງຄວາມປອດໄພຂອງອາຫານ, ຄຸນນະພາບຂອງການບໍລິການ ແລະ ມາດຕະຖານທາງດ້ານສິ່ງແວດລ້ອມ ໃນຂະແໜງທ່ອງທ່ຽວ ໂດຍຜ່ານການນຳສະເໜີເຄື່ອງໝາຍຢັ້ງຢືນຄຸນນະພາບແຫ່ງຊາດແບບສະໝັກໃຈ ຢູ່ແຂວງຫຼວງພະບາງ. ໂດຍສຳເລັດການລິເລີ່ມໃນກາງປີ 2014, ໄດ້ອອກການຢັ້ງຢືນໃຫ້ໂຮງແຮມ 12 ແຫ່ງ ແລະ ຮ້ານອາຫານ 5 ຮ້ານຢູ່ແຂວງຫຼວງພະບາງ ແລະ ຍັງມີອີກ 15 ພາກສ່ວນທີ່ຍັງຢູ່ໃນຂະບວນອອກການຢັ້ງຢືນດັ່ງກ່າວ. ພາຍໃຕ້ສະພາບເງື່ອນໄຂດັ່ງກ່າວ, ມີໂຮງແຮມ ແລະ ຮ້ານອາຫານຫຼາຍກ່ວາ 100 ຫົວໜ່ວຍ ມີຄວາມຮັບຮູ້ຕໍ່ກັບເງື່ອນໄຂມາດຕະຖານສາກົນໃນຂົງເຂດຄວາມປອດໄພຂອງອາຫານ ແລະ ສຸຂະພາບ, ແລະ ຂົງເຂດສຸຂະພາບ ແລະ ຄວາມປອດໄພແຮງງານ. ສະຖາບັນທ່ອງທ່ຽວ ແລະ ການໂຮງແຮມແຫ່ງຊາດ ໄດ້ຝຶກອົບຮົມຫົວຂໍ້ເຫຼົ່ານີ້ໃຫ້ກັບບັນດານັກວິຊາຊີບ 500 ຄົນ. ວຽກງານການອອກໃບຢັ້ງຢືນດັ່ງກ່າວນີ້ ໄດ້ຂະຫຍາຍໄປແຂວງວຽງຈັນ ແລະ ຈຳປາສັກ ເຊິ່ງປະກອບສ່ວນໃຫ້ມີການສ້າງລາຍໄດ້, ສ້າງວຽກເຮັດງານທຳ ແລະ ການລົງທຶນ.

ການຊ່ວຍເຫຼືອຂອງອົງການ UNIDO ທີ່ສະໜອງໃຫ້ສູນການຜະລິດສະອາດ ໄດ້ເສີມຂະຫຍາຍການນຳໃຊ້ແນວ ຄວາມຄິດ ແລະ ວິທີປະຕິບັດກ່ຽວກັບການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະ ການຜະລິດສະອາດ ໃນ ຂະແໜງຜະລິດ ແລະ ບໍລິການເປົ້າໝາຍ ເພື່ອການສົ່ງອອກເປັນຫຼັກ. ຫຼັກສູດການນຳໃຊ້ຊັບພະຍາກອນຢ່າງມີປະ ສິດທິພາບ ແລະ ການຜະລິດສະອາດ ໄດ້ຖືກນຳສະເໜີເຂົ້າສອນໃນມະຫາວິທະຍາໄລແຫ່ງຊາດ ແລະ ອີກຫຼັກສູດໜຶ່ງ ແມ່ນຢູ່ໃນຂັ້ນຕອນການກະກຽມສອນຢູ່ມະຫາວິທະຍາໄລສຸພານຸວົງໃນແຂວງຫຼວງພະບາງ.

ອົງການ UNCDF ໄດ້ໃຫ້ການຊ່ວຍເຫຼືອທະນາຄານແຫ່ງ ສປປ ລາວ ໃນການຮ່າງແຜນໄລຍະຍາວເພື່ອສົ່ງເສີມການເຂົ້າເຖິງແຫຼ່ງທຶນ ສຳລັບໄລຍະ 2016-2021. ແຜນໄລຍະຍາວດັ່ງກ່າວຖືເປັນການສົມທົບໃສ່ຍຸດທະສາດຂະແໜງ ການເງິນ ສຳລັບໄລຍະ 2016-2025 ຂອງລັດຖະບານ ໂດຍພິຈາລະນາລວມເອົາຫັດສະນະປົກປ້ອງຜູ້ຊົມໃຊ້ ເຊິ່ງມີ ຈຸດສຸມແກ້ໄຂຂໍ້ຈຳກັດທີ່ມີຕໍ່ຄົວເຮືອນທຸກຍາກ, ບັນດາຜູ້ປະກອບການຂະໜາດຈຸລະພາກ ແລະ ແມ່ຍິງ ເພື່ອຊ່ວຍເຂົາ ເຈົ້າທ້ອນເງິນ, ເຂົ້າເຖິງສິນເຊື່ອ ແລະ ປະກັນໄພ, ດຳເນີນການຊຳລະ ແລະ ໄດ້ຮັບການຊຳລະ. ຄາດການວ່າ: ແຜນ ໄລຍະຍາວເພື່ອສົ່ງເສີມການເຂົ້າເຖິງແຫຼ່ງທຶນສຳລັບໄລຍະ 2016-2021 ຈະໄດ້ຮັບການຮັບຮອງໃນຕົ້ນປີ 2017. ອົງ ການ UNCDF ຍັງຈະໃຫ້ການຊ່ວຍເຫຼືອທະນາຄານແຫ່ງ ສປປ ລາວ ໃນການຈັດຕັ້ງປະຕິບັດແຜນໄລຍະຍາວດັ່ງກ່າວ ໂດຍການຊ່ວຍຮ່າງແຜນດຳເນີນງານຮອບດ້ານ ທີ່ມີຂອບການຕິດຕາມກວດກາ ແລະ ການປະເມີນຜົນ ແລະ ການປະກອບຊັບພະຍາກອນທີ່ຈະແຈ້ງ.

ໂຄງການ "ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກໃຫ້ຫຼາຍ ຂຶ້ນ" ທີ່ອົງການ UNCDF ໄດ້ໃຫ້ການຊ່ວຍເຫຼືອທະນາຄານແຫ່ງ ສປປ ລາວ ນັ້ນ ໄດ້ສະໜອງການເຂົ້າເຖິງບໍລິການທາງດ້ານການເງິນໃຫ້ປະຊາຊົນຈຳນວນ 46,504 ຄົນ ອີງຕາມຕົວເລກຂອງເດືອນກັນຍາ 2016. ສິ່ງທີ່ມີຄວາມສຳຄັນພິເສດກໍຄື ການເພີ່ມຂຶ້ນຂອງການບໍລິການດ້ານການເງິນດິຈິຕໍ ເຊິ່ງເປັນອົງປະກອບອັນສຳຄັນໃນການຂະຫຍາຍບໍລິການຂອງຂະແໜງເງິນໃຫ້ເຂົ້າເຖິງເຂດຊົນນະບົດຕາມຍຸດທະສາດຂະແໜງເງິນຂອງລັດຖະບານເຊັ່ນ: ບໍລິການໂອນເງິນດ່ວນຊຸມຊົນຂອງ ທຄຕລ ເຊິ່ງເປັນບໍລິການທີ່ໃຫ້ເຈົ້າ ຂອງຮ້ານຄ້າໃນບ້ານທີ່ມີສັນຍາກັບ ທຄຕລ ດຳເນີນທຸລະກຳທະນາຄານຂັ້ນພື້ນຖານໃຫ້ທັງລູກຄ້າ ແລະ ຜູ້ທີ່ບໍ່ແມ່ນ ລູກຄ້າຂອງ ທຄຕລ ເຊິ່ງໄດ້ບັນລຸຂອບເຂດປົກຄຸມທົ່ວປະເທດໃນ ປີ 2016 ຄື: ຈຸດບໍລິການຫຼາຍກ່ວາ 100 ຈຸດ ໄດ້ເຮັດ ເຄືອຂ່າຍບໍລິການຂອງທະນາຄານເພີ່ມຂຶ້ນສອງທົບ. ຜ່ານວິທີນີ້, ເຮັດໃຫ້ມູນຄ່າການໂອນເງິນໃນແຕ່ລະເດືອນຢູ່ທີ່ປະ ມານທີ່ US$ 650,000. ມູນຄ່າສະເລ່ຍຂອງທຸລະກຳທີ່ US$ 183 ນັ້ນ ສະແດງໃຫ້ເຫັນຢ່າງຊັດເຈນວ່າ: ເປັນການນຳໃຊ້ ໂດຍຄົວເຮືອນທຸກຍາກ. ມີຜູ້ຊົມໃຊ້ທັງໝົດ 4,785 ຄົນ ຕາມບັນທຶກໃນໄຕມາດທີ 4 ຂອງປີ 2016. ບໍລິສັດ ຢູນິເທວ (Unitel) ໄດ້ປະກາດໃນເດືອນທັນວາທີ່ງານວາງສະແດງ ITC ຢູ່ນະຄອນຫຼວງວຽງຈັນວ່າ: ຈະເປີດໃຫ້ບໍລິການເງິນຜ່ານ ໂທລະສັບມືຖື ຫຼື ຢູມັນນີ້ (U-Money) ໃນຕົ້ນປີ 2017. ໂດຍໄດ້ຮັບຊ່ວຍເຫຼືອຈາກອົງການ UNCDF, ບໍລິສັດ ຢູນິເທວ

ຈະສະໜອງບໍລິການກະເປົາເງິນເອເລັກໂຕຣນິກສໍາລັບການຊໍາລະ ແລະ ທຸລະກໍາລະຫວ່າງບຸກຄົນກັບບຸກຄົນ ໂດຍ ການນໍາໃຊ້ຫົວໜ່ວຍບໍລິການຂອງບໍລິສັດໃນແຕ່ລະເມືອງພາຍໃນ ສປປ ລາວ ເປັນຈຸດເອົາເງິນເຂົ້າ/ເອົາເງິນອອກ. ບໍລິສັດຍູນິເທວ ມີເປົ້າໝາຍໃຫ້ໄດ້ຜູ້ໃຊ້ບໍລິການທີ່ຈົດທະບຽນ 95,000 ຄົນພາຍໃນ 6 ເດືອນ.

ຄວາມຮູ້ທາງດ້ານການເງິນໄດ້ເພີ່ມຂຶ້ນ. ນັກຮຽນຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ 42,536 ຄົນ ຈາກນະຄອນຫຼວງວຽງຈັນ ໄດ້ຍົກລະດັບຄວາມຮູ້ຂອງຕົນທາງດ້ານການເງິນ ແລະ ມີບັນຊີເງິນຝາກປະຢັດ ທີ່ໃຫ້ບໍລິການເປັນປະຈໍາ ອາທິດຢູ່ຕາມໂຮງຮຽນຕ່າງໆ ພາຍໃຕ້ໂຄງການເງິນຝາກເດັກສະຫຼາດ ທີ່ຈັດຕັ້ງປະຕິບັດໂດຍສະຖາບັນການເງິນຈຸລະ ພາກເອກພັດທະນາ (EMI) ເຊິ່ງໄດ້ຮັບການຊ່ວຍເຫຼືອຈາກອົງການ UNCDF; ພ້ອມນັ້ນ ຍັງມີນາຍຄູ 1,706 ຄົນ ທີ່ໄດ້ ເປີດບັນຊີເງິນຝາກເດັກສະຫຼາດ. ສະມາຄົມການເງິນຈຸລະພາກຂອງລາວ ໄດ້ລິເລີ່ມແຜນງານການສ້າງຄວາມສາມາດ ໃນການສ້າງແຜນທຸລະກິດ ແລະ ໃຫ້ຄວາມຮູ້ທົ່ວໄປທາງດ້ານການເງິນ ໃຫ້ຜູ້ປະກອບການຂະໜາດຈຸລະພາກ ໂດຍ ຜ່ານ 8 ສະຖາບັນການເງິນຈຸລະພາກ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ການມີສ່ວນຮ່ວມ ແລະ ການປະກອບສ່ວນເຂົ້າໃນແຜນງານການພັດທະນາຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ພາຍໃນປະເທດ ຍັງສືບຕໍ່ເປັນເງື່ອນໄຂເບື້ອງຕົ້ນສໍາລັບຄວາມຍືນຍົງຂອງບັນດາແຜນງານເຫຼົ່ານັ້ນ. ໃນເວລາດຽວກັນ, ການເປັນຄູ່ຮ່ວມງານ ແລະ ການຮ່ວມມື ລະຫວ່າງອົງການຕ່າງໆພາຍໃນລະບົບ ສປຊ ແລະ ຄູ່ຮ່ວມພັດທະນາ ອື່ນໆ ຈໍາຕ້ອງໄດ້ຮັບການເສີມຂະຫຍາຍໃຫ້ຫຼາຍຂຶ້ນຕື່ມອີກ ແລະ ຊອກຫາວິທີທາງໃໝ່ໃນການເຮັດວຽກຮ່ວມກັນ ເພື່ອປັບປຸງການປະສານສົມທົບ, ຫຼີກເວັ້ນການເຮັດວຽກຊໍ້າຊ້ອນກັນ ແລະ ສະໜອງວິທີທາງແກ້ບັນຫາແບບປະສົມປະສານຕໍ່ສິ່ງທ້າທາຍທີ່ສະຫຼັບຊັບຊ້ອນ ເຊິ່ງປະເທດລາວກໍາລັງປະເຊີນຢູ່.

ການພັດທະນາຄວາມສາມາດທາງດ້ານການວາງແຜນ, ການຄຸ້ມຄອງ ແລະ ການຕິດຕາມກວດກາບົນພື້ນຖານຜົນໄດ້ຮັບຢ່າງມີຄວາມຮັບຜິດຊອບຕໍ່ພົນລະເມືອງ ຕ້ອງໄດ້ຮັບການເສີມສ້າງຄວາມເຂັ້ມແຂງ ແລະ ທັນເປັນລະບົບ ເພື່ອຮັບ ປະກັນໃຫ້ມີການຄຸ້ມຄອງ ແລະ ການປະສານງານທີ່ມີປະສິດທິຜົນລະຫວ່າງບັນດາກົມກອງ ແລະ ຂະແໜງຕ່າງໆ.

ງົບປະການທີ່ຈໍາກັດ ກໍາລັງສົ່ງຜົນກະທົບຕໍ່ຄວາມສາມາດຂອງບັນດາອົງການຕ່າງໆພາຍໃຕ້ລະບົບ ສປຊ ເພື່ອໃຫ້ ການຊ່ວຍເຫຼືອ ສປປ ລາວ. ເພີ່ມການທັນເປັນເອກະພາບລະຫວ່າງບັນດາອົງການຕ່າງໆພາຍໃນລະບົບ ສປຊ ເຊັ່ນ: ຜ່ານແຜນງານຮ່ວມ ຫຼື ການສ້າງແຜນງານຮ່ວມ ແມ່ນຈະຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດໃນການ ລະດົມທຶນ ແລະ ບັນລຸການສ້າງຜົນໄດ້ຮັບໃຫ້ຫຼາຍຂຶ້ນກ່ວາເກົ່າ.

*“ງົບປະການທີ່ຈໍາກັດ ກໍາລັງສົ່ງຜົນກະທົບຕໍ່ຄວາມສາມາດຂອງບັນດາອົງການຕ່າງໆພາຍໃຕ້ລະບົບ ສປຊ ເພື່ອໃຫ້ ການຊ່ວຍເຫຼືອ ສປປ ລາວ. ເພີ່ມການທັນເປັນເອກະພາບລະຫວ່າງບັນດາອົງການຕ່າງໆພາຍໃນລະບົບ ສປຊ ເຊັ່ນ: ຜ່ານແຜນງານຮ່ວມ ຫຼື ການສ້າງແຜນງານຮ່ວມ ແມ່ນຈະຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດໃນການ ລະດົມທຶນ ແລະ ບັນລຸການສ້າງຜົນໄດ້ຮັບໃຫ້ຫຼາຍຂຶ້ນກ່ວາເກົ່າ.”*



# 2. ການບໍລິການພາກລັດ, ສິດທິ ແລະ ການມີສ່ວນຮ່ວມ

ຜູ້ທຸກຍາກ
ແລະ ຜູ້ບໍ່ສາມາດປົກປ້ອງ
ຕົນເອງໄດ້ ໄດ້ຮັບຜົນປະ
ໂຫຍດຈາກການປັບປຸງການສະ
ໜອງບໍລິ ການພາກລັດ, ໄດ້ຮັບການ
ປົກປ້ອງສິດທິຂອງຕົນຢ່າງມີປະສິດ
ທິຜົນ ແລະ ມີສ່ວນຮ່ວມຫຼາຍຂຶ້ນ
ໃນການຕັດສິນບັນຫາຢ່າງໂປ່ງໃສ





## ທ່າອ່ຽງການພັດທະນາຕົ້ນຕໍ

"ແຜນແມ່ບົດກ່ຽວກັບການພັດທະນາລັດແຫ່ງກົດໝາຍ ແຕ່ນີ້ຮອດ ປີ 2020" ທີ່ຖືກຮອງຮັບໂດຍລັດຖະບານ ໃນວັນທີ 11 ກັນຍາ 2009 ໄດ້ກໍານົດວາລະການປັບປຸງປະຕິຮູບຂະແໜງຮອບດ້ານ ເພື່ອຊ່ວຍສະໜັບສະໜູນປະເທດຊາດ ໃນເສັ້ນທາງກ້າວສູ່ການເປັນລັດທີ່ປົກຄອງດ້ວຍກົດໝາຍຢ່າງສົມບູນແບບ, ປັບປຸງການປົກປ້ອງສິດທິຂອງປະຊາຊົນ ໂດຍສະເພາະຜູ້ທຸກຍາກ ແລະ ບໍ່ສາມາດປົກປ້ອງຕົນເອງໄດ້. ໄດ້ມີການຈັດຕັ້ງປະຕິບັດ ຫຼື ກໍາລັງຈັດຕັ້ງປະຕິບັດຫຼາຍ ກົດຈະກໍາພາຍໃຕ້ແຜນແມ່ບົດຂະແໜງກົດໝາຍດັ່ງກ່າວ.

ມີກົດໝາຍປະມານ 109 ສະບັບທີ່ໄດ້ຖືກຮັບຮອງໂດຍສະພາແຫ່ງຊາດ, ໄດ້ມີການດັດປັບໂຄງສ້າງຂອງສານປະຊາຊົນ ແລະ ຫ້ອງການອົງການໄອຍະການປະຊາຊົນ ແລະ ສ້າງ ຂຶ້ນໃໝ່ຈໍານວນໜຶ່ງ; ກໍາລັງມີແຜນຈະສ້າງສານປົກຄອງ; ນອກຈາກນັ້ນເກືອບໝົດທຸກບ້ານ ແມ່ນໄດ້ສ້າງຕັ້ງໜ່ວຍໄກ່ ເກ່ຍຂັ້ນບ້ານ. ເປັນຄັ້ງທໍາອິດໃນຂະແໜງຍຸຕິທໍາ ທີ່ໄດ້ມີຄວາມພະຍາຍາມຮ່າງດໍາລັດວ່າດ້ວຍການຊ່ວຍເຫຼືອທາງກົດໝາຍ ບົນພື້ນຖານຂໍ້ມູນຫຼັກຖານຕົວຈິງ. ເຖິງແມ່ນວ່າຈະມີສິ່ງກີດຂວາງທາງບໍລິຫານຫຼາຍຢ່າງ ແຕ່ສະພາທະນາຍ ຄວາມ ຍັງສືບຕໍ່ເຮັດວຽກຂະຫຍາຍການຈັດຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ວິຊາຊີບກົດໝາຍຢູ່ພາຍໃນປະເທດ ແລະ ມີບົດບາດສໍາຄັນໃນຂະບວນການປັບປຸງດັດແກ້ກົດໝາຍວ່າດ້ວຍທະນາຍຄວາມ.

ຫຼັງຈາກສໍາເລັດຂະບວນການທົບທວນປະຈໍາໄລຍະກ່ຽວກັບສິດທິມະນຸດ (UPR) ຄັ້ງທີ II, ລັດຖະບານ ໄດ້ຮັບເອົາ 116 ຄໍາແນະນໍາຈາກທັງໝົດ 196 ຄໍາແນະນໍາ. ບົດຮຽນຈາກ UPR ຮອບທໍາອິດ ເຜີຍໃຫ້ເຫັນຄວາມຈໍາເປັນທີ່ຕ້ອງມີ ແຜນດໍາເນີນງານລະອຽດ ເພື່ອຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດບັນດາຄໍາແນະນໍາຕ່າງໆ. ກະຊວງການຕ່າງປະເທດ ໄດ້ລິເລີ່ມຂະບວນການຮ່າງແຜນດໍາເນີນງານດັ່ງກ່າວ.

*"ແຜນແມ່ບົດກ່ຽວກັບການພັດທະນາລັດແຫ່ງກົດໝາຍ ແຕ່ນີ້ ຮອດ ປີ 2020" ທີ່ຖືກຮອງຮັບໂດຍລັດຖະບານ ໃນວັນທີ 11 ກັນຍາ 2009 ໄດ້ກໍານົດວາລະການປັບປຸງປະຕິຮູບຂະແໜງຮອບດ້ານ ເພື່ອຊ່ວຍສະໜັບສະໜູນປະເທດຊາດ ໃນເສັ້ນທາງກ້າວສູ່ການເປັນລັດທີ່ປົກຄອງດ້ວຍກົດໝາຍຢ່າງສົມບູນແບບ.*

ເພື່ອປັບປຸງການປົກປ້ອງຜູ້ທີ່ບໍ່ສາມາດປົກປ້ອງຕົນເອງໃຫ້ໄດ້ຫຼາຍສຸດ, ລັດຖະບານແຫ່ງ ສປປ ລາວ ໄດ້ປະກາດນຳ ໃຊ້ນິຕິກຳສະບັບທຳອິດ ເພື່ອສະກັດກັ້ນ ແລະ ດຳເນີນຄະດີຕໍ່ການຄ້າມະນຸດ ແລະ ສຳເລັດການເຈລະຈາກັບລັດຖະ ບານຂອງປະເທດໄທ ໂດຍມີບົດບັນທຶກຄວາມເຂົ້າໃຈສະບັບໃໝ່ວ່າດ້ວຍການສົ່ງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກັບຄືນປະເທດ. ນອກຈາກນີ້, ການຮ່ວມມືລະຫວ່າງບັນດາເຈົ້າໜ້າທີ່ຄວບຄຸມຊາຍແດນ ແລະ ອົງການຈັດຕັ້ງອື່ນໆ ທີ່ມີໜ້າທີ່ຮັບຜິດຊອບຢູ່ ສປປ ລາວ ກັບ ບັນດາຄູ່ຮ່ວມງານຈາກບັນດາປະເທດໃກ້ຄຽງ ໄດ້ຊ່ວຍປັບປຸງກົນໄກປະສານ ງານແກ້ໄຂບັນດາອາຊະຍາກຳຂ້າມຊາດທີ່ພົວພັນກັບການຄ້າມະນຸດ ແລະ ການລັກລອບຂົນຄົນຂ້າມແດນ ກໍ່ຄືການ ຄ້າຢາເສບຕິດ, ອາຊະຍາກຳສິ່ງແວດລ້ອມ, ການຟອກເງິນ ແລະ ການສໍ້ລາດບັງຫຼວງ.

ໄດ້ຜ່ານດຳລັດນາຍົກລັດຖະມົນຕີ ວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງແຮງງານ ທີ່ກອງປະຊຸມຄະນະກຳມະການໄຕພາຄີ ລະດັບສູງ ເຊິ່ງຕໍ່ມາໃນເດືອນພະຈິກ ກອງປະຊຸມລັດຖະບານ ໄດ້ຮັບຮອງເອົາດຳລັດດັ່ງກ່າວ.

*ໂດຍໄດ້ຮັບການຊ່ວຍເຫຼືອຮ່ວມຈາກອົງການ UNCDF ແລະ ອົງການ UNDP, ກອງທຶນພັດທະນາເມືອງ ສືບຕໍ່ ສະໜັບສະໜູນການແບ່ງຂັ້ນຄຸ້ມຄອງໃຫ້ທ້ອງຖິ່ນ ໂດຍການເສີມສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງການເງິນພາກລັດ ແລະ ການໃຫ້ບໍລິການຢູ່ຂັ້ນທ້ອງຖິ່ນ.*

## ຜົນໄດ້ຮັບ

ອົງການ UNDP ໄດ້ໃຫ້ການຊ່ວຍເຫຼືອທີ່ມີປະສິດທິຜົນເພື່ອຮັບປະກັນວ່າ ສະມາຊິກສະພາແຫ່ງຊາດຊຸດໃໝ່ ເຊິ່ງ ລວມທັງສະມາຊິກສະພາຂັ້ນແຂວງທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່ ນັ້ນມີຄວາມສາມາດປະຕິບັດໜ້າທີ່ ແລະ ພັນທະຂອງຕົນ ໃນ ຖານະເປັນຜູ້ແທນຂອງປະຊາຊົນ. ເພື່ອເສີມຂະຫຍາຍການມີສ່ວນຮ່ວມຂອງປະຊາຊົນໃນຂະບວນການຕັດສິນບັນ ຫາ, ອົງການ UNDP ໄດ້ຊ່ວຍສ້າງຄວາມສາມາດໃຫ້ບັນດາຫ້ອງການປະຈຳເຂດເລືອກຕັ້ງຂອງສະພາແຫ່ງຊາດຕາມ ແຂວງຕ່າງໆ ກ່ຽວກັບກົນໄກການລາຍງານຂອງພົນລະເມືອງ. ການລົງພົບປະຂອງສະມາຊິກສະພາແຫ່ງຊາດກັບປະ ຊາຊົນປະຈຳເຂດເລືອກຕັ້ງທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ແມ່ນໄດ້ຮັບການສົ່ງເສີມຜ່ານການລົງຢ້ຽມຢາມເຂົ້າເຖິງ ປະຊາຊົນ ແລະ ການຂໍຄຳປຶກສາກັບປະຊາຊົນແບບເປີດກວ້າງ.

ເພື່ອເປັນເຄື່ອງມືໃນການປັບປຸງປະສິດທິຜົນຂອງການປົກຄອງ, ອົງການ UNDP ໄດ້ໃຫ້ການຊ່ວຍເຫຼືອກະຊວງພາຍໃນ ຮ່າງນິຕິກຳ ແລະ ສ້າງກົດໝາຍ, ຕົວຢ່າງ: ການສ້າງລະບຽບການທີ່ກ່ຽວຂ້ອງກັບພົນລະເມືອງ ເຊັ່ນ ດຳລັດວ່າດ້ວຍການຄຸ້ມຄອງພົນລະເມືອງ ແລະ ດຳລັດວຽກງານຊົນເຜົ່າ. ໄດ້ມີການພັດທະນາເຄື່ອງມືຫຼາຍຢ່າງໃນການປະເມີນສູນ ບໍລິການປະຕູດຽວ ເພື່ອປັບປຸງຄຸນນະພາບບໍລິການດ້ານຕ່າງໆຂອງລັດ. ນອກຈາກນີ້, ການອອກແບບຄູ່ມືຕ່າງໆ ຍັງໄດ້ຊ່ວຍປັບປຸງການສື່ສານ ແລະ ການປຶກສາຫາລືກັນກັບພົນລະເມືອງຫຼາຍຂຶ້ນ ກ່ຽວກັບກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວພັນກັບການປົກຄອງ ຫຼື ການບໍລິຫານລັດ.

ໂດຍໄດ້ຮັບການຊ່ວຍເຫຼືອຮ່ວມຈາກອົງການ UNCDF ແລະ ອົງການ UNDP, ກອງທຶນພັດທະນາເມືອງ ສືບຕໍ່ສະໜັບສະໜູນການແບ່ງຂັ້ນຄຸ້ມຄອງໃຫ້ທ້ອງຖິ່ນ ໂດຍການເສີມສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງການເງິນພາກລັດ ແລະ ການໃຫ້ບໍລິການຢູ່ຂັ້ນທ້ອງຖິ່ນ . ກອງທຶນພັດທະນາເມືອງ ໄດ້ສະໜອງເງິນຊ່ວຍເຫຼືອລ້າ ເປັນສິ່ງຈູງໃຈພັກດັນ, ມີວິຈາລະນະຍານ ແລະ ຢູ່ບົນພື້ນຖານຜົນການຈັດຕັ້ງປະຕິບັດວຽກ ໃຫ້ກັບຫ້ອງການປົກຄອງເມືອງ 53 ຫ້ອງການໃນ 4 ແຂວງ ເພື່ອເປັນທຶນສຳລັບໂຄງການລົງທຶນ ແລະ ເພື່ອເປັນການຊ່ວຍເຫຼືອການສະໜອງບໍລິການອື່ນໆຂອງລັດ. ປະຈຸບັນ, ມີພະນັກງານ 2,645 ຄົນ (ເປັນຍິງ 455 ຄົນ) ຈາກຫ້ອງການປົກຄອງເມືອງ ແລະ ແຂວງ ລວມທັງກະຊວງພາຍ ໃນ ເຂົ້າໃຈວຽກງານການຄຸ້ມຄອງການເງິນພາກລັດຫຼາຍຂຶ້ນ. ບັນດາພະນັກງານ ໄດ້ດຳເນີນໂຄງການການລົງທຶນຂະໜາດນ້ອຍ 662 ໂຄງການ ແລະ ກິດຈະກຳຊ່ວຍເຫຼືອການໃຫ້ບໍລິການຕ່າງໆ ທີ່ມີມູນຄ່າ US$2,9 ລ້ານ ລວມທັງ ໂຄງການລົງທຶນເພື່ອສ້າງທຶນ ທີ່ມີມູນຄ່າ US$2,1 ລ້ານ ແລະ 578 ກິດຈະກຳຊ່ວຍເຫຼືອການໃຫ້ບໍລິການຕ່າງໆ ທີ່ມີມູນຄ່າ US$ 800.000. ສາມາດບັນລຸໃຫ້ເກີດຜົນກະທົບໄດ້ຢູ່ 3 ລະດັບ: ການສາທິດ ແລະ ການບັນລຸນະໂຍບາຍສາມສ້າງ (ການແບ່ງຂັ້ນຄຸ້ມຄອງໃຫ້ທ້ອງຖິ່ນ 3 ລະດັບ) ເຊິ່ງ ແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍຈັດຕັ້ງປະຕິບັດ; ການພັດທະນາຄວາມສາມາດດ້ານການປົກຄອງ ທ້ອງຖິ່ນ; ແລະ ການປັບປຸງການບໍລິການຂອງລັດໃນຂັ້ນຊຸມຊົນ ແລະ ການພັດທະນາການຫາລ້ຽງຊີບ.

ປະຈຸບັນ, ລັດຖະບານ ກຳລັງຢູ່ໃນຂະບວນການປັບປຸງປະມວນກົດໝາຍອາຍາ. ອົງການ UNDP, UN Women, UNICEF, UNFPA, UNODC ແລະ WHO ໄດ້ສ້າງທີມງານສະເພາະກິດ ເພື່ອໃຫ້ຄຳປຶກສາທາງດ້ານເຕັກນິກແກ່ ຄະນະປັບປຸງດັດແກ້ປະມວນກົດໝາຍອາຍາ. ວຽກງານດັ່ງກ່າວ ໄດ້ເປັນຂີດໝາຍສຳຄັນໃນຂະແໜງນິຕິກຳ ຍ້ອນວ່າ ປະມວນກົດໝາຍອາຍາ ຄາດວ່າ ຈະນຳສະເໜີບັນດາຂໍ້ກຳນົດໃໝ່ໆທາງດ້ານກົດໝາຍ ທີ່ຈະນຳໄປສູ່ການປ່ຽນແປງ ສຳຄັນໃນຂົງເຂດກົດໝາຍ. ເວົ້າສະເພາະ ກໍ່ຄືການເຊື່ອມສານພັນທະສາກົນເຂົ້າໃນບັນດາກົດໝາຍພາຍໃນຂອງປະເທດ.

ວິທະຍຸຊຸມຊົນ ທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການ UNDP ໄດ້ຊ່ວຍໃຫ້ປະຊາຊົນລາວ 295.000 ຄົນ ທີ່ອາໄສຢູ່ຊົນນະບົດ ໃນ 5 ແຂວງເປົ້າໝາຍ ໄດ້ເຂົ້າເຖິງຂໍ້ມູນຂ່າວສານໂດຍຜ່ານລາຍການວິທະຍຸຫຼາຍລາຍການ ທີ່ກະຈາຍສຽງ ເປັນ 11 ພາສາຊົນເຜົ່າ ໝາຍວ່າ ໄດ້ເພີ່ມໂອກາດໃຫ້ປະຊາຊົນເຫຼົ່ານີ້ ເຂົ້າມີສ່ວນຮ່ວມໃນການຕັດສິນບັນຫາ ແລະ ຊີວິດຊຸມຊົນຫຼາຍຂຶ້ນ. ອາສາສະໝັກຈາກຊຸມຊົນບັນດາເຜົ່າ ລວມທັງໄວໜຸ່ມ, ນັກຮຽນ/ນັກສຶກສາ, ກຸ່ມຄົນຕ່າງໆ ໃນທ້ອງຖິ່ນ ແລະ ອຳນາດການປົກຄອງທ້ອງຖິ່ນ ໄດ້ປະກອບສ່ວນເຂົ້າໃນການ

ຜະລິດລາຍການ ແລະ ການກະຈາຍ ສຽງລາຍການວິທະຍຸຊຸມຊົນ. ມີການປັບປຸງການເປັນຄູ່ຮ່ວມງານລະຫວ່າງອົງການຈັດຕັ້ງຕ່າງໆ ເຊັ່ນ: ວິທະຍຸຊຸມຊົນ ໄດ້ຮັບຜົນປະໂຫຍດຈາກອາສາສະໝັກພາຍໃນ 2 ຄົນ ແລະ ສາກົນ 1 ຄົນ ຈາກອາສາສະໝັກ ສປຊ. ວິທະຍຸຊຸມຊົນ ເຮັດບົດບາດໂຄສະນາສົ່ງເສີມນະໂຍບາຍ ແລະ ແລກປ່ຽນຄວາມຮູ້ ຕໍ່ກັບບັນຫາຕ່າງໆກ່ຽວກັບການພັດທະນາ. ດ້ວຍການຊ່ວຍເຫຼືອຈາກຈາກອົງການ IOM ແລະ UNODC, ລາຍການວິທະຍຸ ໄດ້ກະຈາຍສຽງ ກ່ຽວກັບ ຫົວຂໍ້ການຄ້າມະນຸດ ແລະ ການເຄື່ອນຍ້າຍແຮງງານແບບປອດໄພ ໃນ 3 ເມືອງທີ່ມີຊາຍແດນຕິດຈອດກັບປະເທດ ບ້ານໃກ້ເຮືອນຄຽງ. ໃນທ້າຍປີ 2016, ອົງການ UNDP ໄດ້ຮ່ວມມືກັນກັບ ກອງທຶນການາດາເພື່ອໂຄງການລິເລີ່ມ ໃນທ້ອງຖິ່ນ ເພື່ອທົດລອງໂຄງການໄລຍະ 6 ເດືອນ ກ່ຽວກັບການປຸກຈິດສຳນຶກ ແລະ ໂຄສະນາສົ່ງເສີມນະໂຍບາຍ ດ້ານສິ່ງແວດລ້ອມ. ລາຍການວິທະຍຸຊຸມຊົນ ໄດ້ກະຈາຍສຽງກ່ຽວກັບບັນຫາການພັດທະນາ ໃນຫຼາກຫຼາຍຫົວຂໍ້ ທີ່ແທດເໝາະ ກັບຄວາມຕ້ອງການຂໍ້ມູນຂ່າວສານຂອງປະຊາຊົນບັນດາເຜົ່າໃນເຂດຊົນນະບົດ. ລາຍການທີ່ໄດ້ຮັບຄວາມນິຍົມສູງສຸດ ແມ່ນກ່ຽວຂ້ອງກັບວຽກງານກະສິກຳ, ວາງແຜນຄອບຄົວ, ສາທາລະນະສຸກ, ບົດບາດຍິງ-ຊາຍ ແລະ ວັດທະນະທຳ. ຈຳນວນຂອງອາສາສະໝັກໄວໜຸ່ມຊົນເຜົ່າ ທີ່ມີສ່ວນຮ່ວມໃນສະຖານີວິທະຍຸຊຸມຊົນ ໄດ້ເພີ່ມຂຶ້ນຈາກ 55 ຄົນ ໃນປີ 2015 ມາເປັນ 82 ຄົນໃນປີ 2016, ເຊິ່ງໃນນັ້ນເປັນຍິງ 38 ຄົນ.

ສົມທົບໃສ່ວຽກງານທີ່ໄດ້ກ່າວມາຂ້າງເທິງນີ້, ອົງການ IOM ໄດ້ສືບຕໍ່ ຮ່ວມມືກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອສະໜອງຂໍ້ມູນຂ່າວສານ ກ່ຽວກັບ ການເຄື່ອນຍ້າຍແຮງງານແບບປອດໄພ ໃຫ້ຊຸມຊົນທີ່ຢູ່ຫ່າງໄກສອກ ຫຼີກ ແລະ ຊົນນະບົດ. ການຝຶກອົບຮົມ ແລະ ການປຸກຈິດສຳນຶກ ໃນຂັ້ນບ້ານ ໄດ້ມີອິດທິພົນບົດບາດ ຕໍ່ກັບການຕັດສິນ ຂອງບັນດາປະຊາຊົນ ທີ່ມີທ່າແຮງໄປເປັນແຮງງານຢູ່ຕ່າງປະເທດ ເກືອບ 10.000 ຄົນ. ໃນປີ 2016, ກິດຈະກຳໄດ້ສຸມ ໃສ່ແຂວງວຽງຈັນ ແລະ ຫຼວງພະບາງ ໂດຍຜ່ານການມີສ່ວນຮ່ວມຂອງ ນັກຮຽນ/ນັກສຶກສາ, ນາຍຄູ, ການນຳບ້ານ ແລະ ພະນັກງານທີ່ມາຈາກປ້ອງການຄວາມສະຫງົບ, ແຮງງານ ແລະ ສະຫວັດດີການສັງຄົມ, ສະຫະພັນແມ່ຍິງລາວ ແລະ ສູນກາງຊາວໜຸ່ມ.

ອົງການ IOM ໄດ້ສືບຕໍ່ສະໜອງການຊ່ວຍເຫຼືອການກັບຄືນປະເທດ ແລະ ຄືນເຂົ້າສູ່ສັງຄົມ ໃຫ້ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕະຫຼອດເຖິງແມ່ຍິງ, ຜູ້ຊາຍ ແລະ ເດັກນ້ອຍທີ່ບໍ່ສາມາດປົກປ້ອງຕົນເອງໄດ້. ຢູ່ສູນຊ່ວຍເຫຼືອຊົ່ວຄາວທີ່ນະຄອນຫຼວງວຽງຈັນ, ອົງການ IOM ຍັງໄດ້ສະໜອງການຊ່ວຍເຫຼືອທາງດ້ານເຄື່ອງນຸ່ງຫົ່ມ, ຢາປົວພະຍາດ ແລະ ການຊ່ວຍ ເຫຼືອດ້ານຈິດຕະ-ສັງຄົມ ແລະ ການເດີນທາງໃຫ້ຜູ້ທີ່ຖືກສົ່ງກັບຄືນປະເທດ.

ອົງການ UNODC ໄດ້ສະໜອງການຊ່ວຍເຫຼືອ ໃຫ້ກັບຄະນະຮັບຜິດຊອບຮ່າງກົດໝາຍວ່າດ້ວຍຕ້ານການຄ້າມະນຸດ ເພື່ອໃຫ້ກົດໝາຍດັ່ງກ່າວມີເນື້ອໃນຄົບຖ້ວນຮອບດ້ານ ສອດຄ່ອງກັບ ສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳຂ້າມ ຊາດ ແລະ ອະນຸສົນທິສັນຍາຕ້ານການຄ້າມະນຸດ ເຊິ່ງຖືເປັນການປະກອບສ່ວນເຂົ້າໃນການປະກາດນຳໃຊ້ກົດໝາຍ ວ່າດ້ວຍການຄ້າມະນຸດ ໃນປີ 2016. ກ່ອນທີ່ຈະຜ່ານກົດໝາຍໃໝ່ນີ້, ລັດຖະບານໄດ້ໃຊ້ນິຕິກຳທາງອາຍາອື່ນໆ ເພື່ອ ດຳເນີນຄະດີຄ້າມະນຸດ ແລະ ບໍ່ໄດ້ກຳນົດສະເພາະລັກສະນະຕົວຈິງຂອງແຕ່ລະຄະດີ.

ນອກຈາກນີ້, ອົງການ UNODC ໄດ້ຊ່ວຍເຫຼືອການສ້າງຄວາມສ້າງມາດໃຫ້ບັນດາສະຖາບັນທີ່ກ່ຽວຂ້ອງ ໃນການສະ ກັດກັ້ນ, ການສືບສວນສອບສວນ ແລະ ການດຳເນີນຄະດີກະທຳຜິດສະຖານການສໍ້ລາດບັງຫຼວງ ແລະ ການຟອກເງິນ. ອົງການ UNODC ຍັງໄດ້ສະໜອງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ເພື່ອປັບປຸງການຄຸ້ມຄອງຊາຍແດນ ໂດຍສະເພາະແມ່ນການສະກັດກັ້ນອາຊະຍາກຳຂ້າມປະເທດ ລວມທັງຢາເສບຕິດ, ອາຊະຍາກຳສິ່ງແວດລ້ອມ ແລະການລັກລອບຂົນຄົນຂ້າມແດນ ແລະ ການຄ້າມະນຸດ. ໄດ້ສະໜອງການສ້າງຄວາມສາມາດ, ລວມທັງການຝຶກອົບຮົມ, ຈັດກອງປະຊຸມສຳມະນາ ແລະ ສະໜອງອຸປະກອນ ໃຫ້ເຈົ້າໜ້າທີ່ຕຳຫຼວດຕ້ານຢາເສບຕິດ, ຕຳຫຼວດກວດຄົນເຂົ້າ ເມືອງ, ຕຳຫຼວດຕ້ານການຄ້າມະນຸດ, ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ກວດກາປ່າໄມ້.

ອົງການ ILO ໄດ້ສືບຕໍ່ສະໜັບສະໜູນ ຄະນະກຳມະການ ໄຕພາຄີ ໃນການສ້າງ ແລະ ປັບປຸງດັດແກ້ນິຕິກຳ ແລະ ສ້າງຄວາມສາມາດ ເພື່ອປັບປຸງບໍລິການຂອງລັດ. ຜົນສຳເລັດອັນພົ້ນເດັ່ນ ແມ່ນ ການສ້າງສຳເລັດ ດຳລັດນາຍົກລັດຖະມົນ ຕີວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງແຮງງານ. ໄດ້ມີການປຶກສາຫາລື ແລະ ຮັບຮອງເອົາດຳລັດດັ່ງກ່າວໃນກອງປະຊຸມໄຕ ພາຄີລະດັບສູງ ແລະ ຕໍ່ມາໃນກອງປະຊຸມລັດຖະບານເມື່ອເດືອນພະຈິກ

> *ວິທະຍຸຊຸມຊົນ ທີ່ໄດ້ຮັບການຊ່ວຍເຫຼືອ ຈາກອົງການ UNDP ໄດ້ຊ່ວຍໃຫ້ປະຊາຊົນລາວ 295.000 ຄົນ ທີ່ອາໄສຢູ່ຊົນ ນະບົດ ໃນ 5 ແຂວງເປົ້າໝາຍ ໄດ້ເຂົ້າເຖິງຂໍ້ມູນຂ່າວສານ ໂດຍຜ່ານລາຍການວິທະຍຸຫຼາຍລາຍການ ທີ່ກະຈາຍສຽງ ເປັນ 11 ພາສາຊົນເຜົ່າ.*

ປີ 2016 ກໍ່ໄດ້ມີການຮັບຮອງເອົາດຳລັດດັ່ງ ກ່າວ ຢ່າງເປັນທາງການ. ໄດ້ມີການສົນທະນາຂັ້ນສູງ ລະຫວ່າງ ລັດຖະບານ ແລະ ອົງການຕາງໜ້າຂອງຜູ້ອອກແຮງ ງານ ແລະ ອົງການຕາງໜ້າຜູ້ໃຊ້ແຮງງານ ໃນການສ້າງຕັ້ງຄະນະກຳມະການໄຕພາຄີແຫ່ງຊາດ ເພື່ອເປັນເວທີໃນການ ສົນທະນາປຶກສາຫາລືຕໍ່ເນື່ອງ ກ່ຽວກັບບັນຫາແຮງງານ ໃນປະເທດ.

ໃນຄວາມພະຍາຍາມພັດທະນາຄວາມສາມາດດ້ານການກວດກາແຮງງານພາຍໃນປະເທດ, ອົງການ ILO ໄດ້ຊ່ວຍ ເຫຼືອລັດຖະບານ ໃນການປັບປຸງດັດແກ້ ຂໍ້ຕົກລົງລັດຖະມົນຕີວ່າດ້ວຍການກວດກາແຮງງານ ທີ່ໄດ້ເຊັນຮັບຮອງໃນ ເດືອນທັນວາ. ມີແຜນກວດກາແຮງງານແຫ່ງຊາດ. ຄາດໝາຍຜົນໄດ້ຮັບລວມເອົາ ການປັບປຸງຄວາມສາມາດຂອງພະ ນັກງານກວດກາແຮງງານ, ຈຳນວນຜູ້ອອກແຮງງານທີ່ໄດ້ຮັບການປົກປ້ອງຈາກປະກັນສັງຄົມ ແລະ ການປັບປຸງການ ເກັບກຳຂໍ້ມູນຂອງຫົວໜ່ວຍແຮງງານ. ໄດ້ດຳເນີນການໂຄສະນາເຜີຍແຜ່ ເພື່ອສົ່ງເສີມໃຫ້ຫົວໜ່ວຍແຮງງານ ປະຕິບັດ ຕາມລະບຽບການທາງດ້ານຄ່າແຮງຂັ້ນຕ່ຳສຸດ ດັ່ງທີ່ໄດ້ກຳນົດໄວ້ໃນກົດໝາຍປົກປ້ອງແຮງງານ ສະບັບ ປີ 2014. ມີພະ ນັກງານກວດກາແຮງງານ ທີ່ເປັນເພດຍິງ 4 ທ່ານ ຄະນະໃຈກາງກວດກາແຮງງານ ທີ່ໄດ້ຮັບຜົນປະໂຫຍດຈາກການສ້າງ ຄວາມສາມາດທີ່ມີເປົ້າໝາຍສະເພາະ. ສະມາຊິກຂອງຄະນະດັ່ງກ່າວ ປະຈຸບັນ ເປັນຍິງ 30 ສ່ວນຮ້ອຍເຊິ່ງສອດຄ່ອງ ກັບຂໍ້ຕົກລົງຂອງລັດຖະມົນຕີ ທີ່ກຳນົດວ່າ ຢ່າງໜ້ອຍ 30 ສ່ວນຮ້ອຍຂອງພະນັກງານກວດກາແຮງງານທັງໝົດ ຕ້ອງເປັນເພດຍິງ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ກ່ຽວກັບການຊ່ວຍເຫຼືອຂອງອົງການ UNDP ໃຫ້ການຈັດຕັ້ງປະຕິບັດແຜນແມ່ບົດຂະແໜງກົດໝາຍ, ເຫັນວ່າ ຂອບກຳ ນົດເວລາຂອງກິດຈະກຳຕ່າງໆ ຕັ້ງເປົ້າໝາຍສູ້ຊົນສູງຫຼາຍ. ຕົວຢ່າງ, ຄວາມຫຼ້າຊ້າຂອງການສ້າງຄວາມສາມາດໃຫ້ ໜ່ວຍໄກ່ເກ່ຍຂັ້ນບ້ານ ອາດຈະສົ່ງຜົນກະທົບຕໍ່ກຳນົດເວລາຂອງກິດຈະກຳອື່ນໆທີ່ມາຕາມຫຼັງ. ການຊ່ວຍເຫຼືອໃນຕໍ່ ໜ້າ ຄວນພິຈາລະນາໃຫ້ການຊ່ວຍເຫຼືອເປັນເວລາ 4 ປີ ເພື່ອສຳເລັດການຈັດຕັ້ງປະຕິບັດຂອບວຽກງານທັງໝົດໃຫ້ຄົບຖ້ວນ.

ການກຳນົດບູລິມະສິດຂອງ ລັດຖະບານ ເປັນສິ່ງສຳຄັນ ເພື່ອເສີມຂະຫຍາຍປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ. ພົບເລື້ອຍໆວ່າ: ພະນັກງານລັດ ມັກຈະຖືກມອບໝາຍໃຫ້ມີໜ້າທີ່ຮັບຜິດຊອບຫຼາຍອັນ ແລະ ຕ້ອງໄດ້ບໍລິຫານ ຕາຕະລາງທີ່ມີລັກສະນະຍາດແຍ່ງເວລາເຮັດວຽກກັນຫຼາຍ. ຕ້ອງສຶກສາຫາວິທີເພື່ອປັບປຸງການເປັນຄູ່ຮ່ວມງານ ແລະ ການຮ່ວມມື ລະຫວ່າງບັນດາອົງການພາຍໃນລະບົບ ສປຊ ກັບ ບັນດາຄູ່ຮ່ວມພັດທະນາອື່ນໆ ໃຫ້ດີຂຶ້ນຕື່ມອີກ.



# 3. ການສຶກສາ ແລະ ການຝຶກອົບຮົມທີ່ສະເໝີພາບ

## ຊຸມຊົນ ແລະ ປະຊາຊົນທີ່ດ້ອຍໂອກາດໃນຂົງເຂດບູລິມະສິດດ້ານການສຶກສາ ໄດ້ຮັບຜົນປະໂຫຍດຈາກການສຶກສາ ແລະ ການຝຶກອົບຮົມທີ່ມີຄຸນນະພາບ ແລະ ສະເໝີພາບ ເຊິ່ງສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ





### ທ່າອ່ຽງການພັດທະນາຕົ້ນຕໍ

ຫຼັງຈາກທີ່ມີການຮັບຮອງ ແຜນພັດທະນາຂະແໜງ ສຶກສາທິການ ແລະ ກິລາ 2016-2020 ໃນທ້າຍປີ 2015, ລັດຖະບານ ໄດ້ເລີ່ມການຈັດຕັ້ງປະຕິບັດແຜນດັ່ງກ່າວໃນປີ 2016 ເພື່ອຮັບປະກັນວ່າ ພົນລະເມືອງທຸກຄົນມີຄວາມສະເໝີພາບ ໃນການເຂົ້າເຖິງການສຶກສາ ແລະ ກິລາທີ່ມີຄຸນນະພາບ ແລະ ນໍາເອົາ ສປປ ລາວ ຫຼຸດພົ້ນອອກຈາກສະຖານະ ພາບການເປັນປະເທດດ້ອຍພັດທະນາ. ແຜນພັດທະນາຂະແໜງສຶກສາທິການ ແລະ ກິລາ ສອດຄ່ອງກັນກັບ ແຜນພັດ ທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP) ສະບັບທີ VIII ແລະ ເປົ້າໝາຍພັດທະນາແບບຍືນຍົງ ເພື່ອສົ່ງເສີມ ການສຶກສາທີ່ມີຄຸນນະພາບ, ມີລັກສະນະຮຽນຮ່ວມ ແລະ ສະເໝີພາບກັນ ແລະ ໂອກາດໃນການຮຽນຮູ້ຕະຫຼອດຊີວິດ ໃຫ້ທຸກຄົນ. ໜ່ວຍງານສົມທະນາຂະແໜງສຶກສາທິການ ແລະ ກິລາ (ESWG) ໄດ້ມີບົດບາດຕົ້ນຕໍໃນການອໍານວຍ ຄວາມສະດວກໃຫ້ການປະສານງານທີ່ຈໍາເປັນ ເພື່ອໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາ ເຊິ່ງ ລວມທັງອົງການຕ່າງໆພາຍໃນລະບົບ ສປຊ ສາມາດຈັດຕັ້ງປະຕິບັດແຜນພັດທະນາຂະແໜງສຶກສາທິການ ແລະ ກິລາ. ໄດ້ລິເລີ່ມການປັບປຸງຫຼັກສູດທັງໝົດສໍາລັບຊັ້ນປະຖົມສຶກສາປີທີ 1 – 5 ເຊິ່ງເປັນບາດກ້າວອັນສໍາຄັນໃນການປະຕິຮູບ ຄຸນນະພາບການສຶກສາທີ່ໄດ້ກໍານົດໄວ້ໃນແຜນພັດທະນາດັ່ງກ່າວ. ການເປັນປະທານ ASEAN ຂອງ ສປປ ລາວ ໃນປີ 2016 ໄດ້ເສີມຂະຫຍາຍການຍູ້ດັນ SDG 4 ກ່ຽວກັບການສຶກສາ ແລະ ວາລະ 2030. ໃນເດືອນມິຖຸນາ, ກະຊວງສຶກສາທິການ ແລະ ກິລາ ໄດ້ນໍາພາກອງປະຊຸມວິຊາການແຫ່ງຊາດຂັ້ນສູງ ເພື່ອຫັນ SDG 4 ເປັນວາລະພາຍໃນ. ໄດ້ມີການຮັບຮອງເອົາຖະແຫຼງການອາຊຽນວ່າດ້ວຍການເສີມສ້າງຄວາມ ເຂັ້ມແຂງທາງດ້ານການສຶກສາໃຫ້ເດັກນ້ອຍ ແລະ ໄວໜຸ່ມທີ່ບໍ່ໄດ້ເຂົ້າຮຽນ ເພື່ອສົ່ງເສີມໂອກາດເຂົ້າຮຽນ ຢ່າງສະເໝີ ພາບກັນ. ສໍາລັບການເຊື່ອມໂຍງລະຫວ່າງຂະແໜງການ ແລະ ການເຊື່ອມສານວາລະພັດທະນາໄວໜຸ່ມເຂົ້າໃນ SDG 4 ນັ້ນໄດ້ມີການສ້າງເຄືອຄ່າຍການຄົ້ນຄ້ວາວິໄຈຂຶ້ນ ເອີ້ນວ່າ ເປົ້າໝາຍພັດທະນາແບບຍືນຍົງສໍາລັບໄວໜຸ່ມ. ຫຼັງເລີ່ມ ຈັດຕັ້ງປະຕິບັດປະຊາຄົມເສດຖະກິດອາຊຽນ, ປະຈຸບັນ, ສປປ ລາວ ຍິ່ງຕ້ອງຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການ ແຮງງານທີ່ມີສີມືທັງຊັ້ນກາງ ແລະ ຊັ້ນສູງໃຫ້ໄດ້ດີຂຶ້ນກ່ວາເດີມ. ອົງການຕ່າງໆພາຍໃຕ້ລະບົບ ສປຊ ໄດ້ມີບົດບາດອັນ ສໍາຄັນ ໃນການຊ່ວຍເຫຼືອບັນດາໂຄງການລິເລີ່ມສໍາຄັນໃນລະດັບພາກພື້ນ.

ຫຼັງຈາກທີ່ໄດ້ບັນລຸຄາດໝາຍການເຂົ້າເຖິງການສຶກສາຂັ້ນປະຖົມສໍາລັບທຸກຄົນ ໂດຍມີຄວາມສະເໝີພາບດ້ານບົດ ບາດຍິງ-ຊາຍ ໃນເປົ້າໝາຍສະຫັດສະວັດເພື່ອການພັດທະນາ (MDG) ໃນປີ 2015, ສປປ ລາວ ຍາດໄດ້ຄວາມຄືບ ໜ້າທີ່ໜັກແໜ້ນໃນປີ 2016 ດ້ານການປັບປຸງການສຶກສາຂັ້ນປະຖົມ ໂດຍມີອັດຕາເຂົ້າຮຽນສຸດທິຢູ່ທີ່ 98,8 ສ່ວນຮ້ອຍ (ເດັກຊາຍ 99,0; ເດັກຍິງ 98,5). ໃນລະຫວ່າງປີ 2011 ຫາ 2016, ອັດຕາຄ້າງຫ້ອງ ແລະ ອັດຕາປະລະ ໄດ້ຫຼຸດລົງຢ່າງ ຫຼວງຫຼາຍ ຈາກ 12,2 ສ່ວນຮ້ອຍ (ເດັກຊາຍ 13,2; ເດັກຍິງ 11,2) ມາເປັນ 4,8 ສ່ວນຮ້ອຍ (ເດັກຊາຍ 5,5; ເດັກຍິງ 4,1) ແລະ ຈາກ 7,8 ສ່ວນຮ້ອຍ (ເດັກຊາຍ 8,2; ເດັກຍິງ 7,5) ມາເປັນ 4,7 ສ່ວນຮ້ອຍ (ເດັກຊາຍ 5,0; ເດັກຍິງ 4,5), ຕາມລໍາດັບ.

ເຖິງວ່າຍາດໄດ້ຜົນສຳເລັດເຫຼົ່ານີ້, 50 ສ່ວນຮ້ອຍຂອງເດັກອາຍຸ 3 ເຖິງ 5 ປີ ຍັງຂາດໂອກາດເຂົ້າເຖິງການສຶກສາ ກ່ອນໄວຮຽນ ຕາມຂໍ້ມູນປີ 2016 ໂດຍມີອັດຕາແຕກໂຕນກັນຫຼາຍ ລະຫວ່າງ ເຂດຕົວເມືອງ ແລະ ຊົນນະບົດ ແລະ ລະຫວ່າງຜູ້ຮັ່ງ ແລະ ຜູ້ທຸກ . ອັດຕາການເຂົ້າເຖິງການສຶກສາຂອງເດັກກ່ອນໄວຮຽນທີ່ຕໍ່າ ນັ້ນອາດເປັນສິ່ງທີ່ອະທິບາຍ ໄດ້ວ່າ ເປັນຫຍັງຈຶ່ງມີອັດຕາຄ້າງຫ້ອງສູງ ໃນຊັ້ນປໍ 1 ທີ 11,5 ສ່ວນຮ້ອຍ (ເດັກຊາຍ 12,6; ເດັກຍິງ 10,4). ຜົນທີ່ຕາມ ມາ ກໍຄື ອັດຕາລອດເຫຼືອໃນຊັ້ນປະຖົມ (ເຖິງຈະມີຄວາມຄືບໜ້າທີ່ສະໝໍ່າສະເໝີ) ຍັງມີອັດຕາທີ່ຕໍ່າ ເຊິ່ງຢູ່ທີ່ 79,6 ສ່ວນຮ້ອຍ (ເດັກຊາຍ 78,7; ເດັກຍິງ 80,7), ເຮັດໃຫ້ເກີດຂໍ້ກັງວົນດ້ານຄຸນນະພາບຂອງການສຶກສາ. ຕົວເລກດັ່ງກ່າວ ເປັນຕົວເນັ້ນຢໍ້າຜົນໄດ້ຮັບທີ່ໜ້າເປັນຫ່ວງ ຈາກການປະເມີນຜົນໄດ້ຮັບຈາກການຮຽນຮູ້ ຢູ່ ສປປ ລາວ ເຊິ່ງລວມທັງ ການຕີລາຄາການອ່ານຂອງນັກຮຽນ ໃນປີ 2011 ແລະ ການປະເມີນຜົນໄດ້ຮັບດ້ານການຮຽນຮູ້ໃນປີ 2012 ໂດຍທັງ ສອງການປະເມີນ ໄດ້ເປີດເຜີຍໃຫ້ເຫັນສິ່ງທ້າທາຍສໍາຄັນຫຼາຍຢ່າງດ້ານການຮຽນຮູ້ຂອງນັກຮຽນ. ນອກຈາກນັ້ນ, ມີ ພຽງແຕ່ 60 ສ່ວນຮ້ອຍ ຂອງໂຮງຮຽນຊັ້ນປະຖົມທັງໝົດ ທີ່ມີນໍ້າສະອາດ ແລະ ລະບົບສຸຂາພິບານທີ່ໃຊ້ໄດ້ປົກກະຕິ. ເຖິງແມ່ນວ່າ ອັດຕາການເຂົ້າຮຽນລວມໃນຊັ້ນມັດທະຍົມສຶກສາຕອນຕົ້ນ ຈະມີຕົວເລກຢູ່ທີ່ 82,2 ສ່ວນຮ້ອຍ (ເດັກຊາຍ 84,3; ເດັກຍິງ 80,0), ອັດຕາໃນຊັ້ນມັດທະຍົມສຶກສາຕອນປາຍ ຍັງຢູ່ທີ່ 47,8 ສ່ວນ ຮ້ອຍ (ເດັກຊາຍ 50,4; ເດັກຍິງ 45,2), ເຊິ່ງຊີ້ໃຫ້ເຫັນ ສິ່ງທ້າ ທາຍໃນການສຶກສາ ຫຼັງການສຶກສາພາກບັງຄັບ ໂດຍເດັກຍິງ ຍັງຕາມຫຼັງ. ຄວາມບໍ່ສະເໝີ ພາບທາງດ້ານການສຶກສາ ຍັງເຫັນໄດ້ຢ່າງຊັດເຈນໃນອັດຕາການອ່ານອອກ-ຂຽນເປັນ ໃນບັນດາກຸ່ມເດັກຍິງ ແລະ ເດັກຊົນເຜົ່າ.

ບັນຫາຕົ້ນຕໍ ແມ່ນ ຄວາມສາມາດທາງສະຖາບັນ ຫຼື ການຈັດຕັ້ງ ແລະ ຊັບພະຍາກອນມະນຸດຂອງ ກະຊວງສຶກສາທິການ ແລະກິລາ ໃນທຸກຂັ້ນຍັງຈໍາກັດ, ຊ່ອງຫວ່າງ ລະຫວ່າງ ນະໂຍບາຍ ກັບ ການປະຕິບັດຕົວຈິງ, ການປະສານງານທີ່ບໍ່ເຂັ້ມແຂງຂອງບັນດາກົມຕ່າງໆ ແລະ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ພ້ອມທັງ ການສະໜອງງົບປະມານ ໃຫ້ຂະ ແໜງສຶກສາທີ່ຍັງບໍ່ທັນພຽງພໍ ແລະ ບໍ່ທັນມີປະສິດທິພາບເທົ່າທີ່ຄວນ.

ສປປ ລາວ ສືບຕໍ່ປະຕິຮູບອະຊີວະສຶກສາ ແລະ ການພັດທະນາສີມືແຮງງານ ເພື່ອອັດຊ່ອງຫວ່າງ ລະຫວ່າງ ຄວາມຕ້ອງ ການ ແລະ ການສະໜອງແຮງງານທີ່ມີທັກສະສີມື ແບບມີຄຸນນະພາບ. ໄດ້ເສີມສ້າງຄວາມເຂັ້ມແຂງໃຫ້ການລົງທຶນ ແລະ ການຮ່ວມມືໃນບັນດາສະຖາບັນຂອງລັດ, ລະຫວ່າງລັດ ແລະ ເອກະຊົນ ກໍຄື ໃນບັນດາຄູ່ຮ່ວມງານຕ່າງໆ. ໄດ້ຂະ ຫຍາຍການພັດທະນາສີມືແຮງງານ ໃຫ້ກວ້າງຂວາງຂຶ້ນຕື່ມ ເພື່ອສ້າງໂອກາດໃຫ້ໄວໜຸ່ມໃນເຂດຊົນນະບົດ. ຢ່າງໃດກໍ່ຕາມ, ຍັງມີສິ່ງທ້າທາຍຫຼາຍຢ່າງ ດ້ານການເຊື່ອມໂຍງວຽກງານພັດທະນາສີມືແຮງງານ ກັບ ໂອກາດມີວຽກເຮັດງານທໍາ ແລະ ສ້າງລາຍໄດ້ ກໍ່ຄື ການມີຜະລິດຕະພາບແຮງງານສູງ ແລະ ການຫຼຸດຜ່ອນຄວາມທຸກຍາກ.

*“50 ສ່ວນຮ້ອຍຂອງເດັກອາຍຸ 3 ເຖິງ 5 ປີ ຍັງຂາດໂອກາດເຂົ້າເຖິງການສຶກສາ ກ່ອນໄວຮຽນ ຕາມຂໍ້ມູນປີ 2016 ໂດຍມີອັດຕາແຕກໂຕນກັນຫຼາຍ ລະຫວ່າງ ເຂດຕົວເມືອງ ແລະ ຊົນນະບົດ ແລະ ລະຫວ່າງຜູ້ຮັ່ງ ແລະ ຜູ້ທຸກ.”*

## ຜົນໄດ້ຮັບ

ບັນດາອົງການໃນລະບົບ ສປຊ ສືບຕໍ່ປະສານສົມທົບກັບ ກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາ ອື່ນໆ ທີ່ໃຫ້ການຊ່ວຍເຫຼືອຂະແໜງສຶກສາ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ຄວາມພະຍາຍາມຮ່ວມໃນການບັນລຸໃຫ້ ໄດ້ຕາມຄາດໝາຍສູ້ຊົນແຫ່ງຊາດ. ຍ້ອນໄດ້ຮັບການຊ່ວຍເຫຼືອຮ່ວມລະຫວ່າງອົງການ UNICEF ແລະ ອົງການ UNESCO, ວຽກງານການວາງແຜນ ແລະ ການຄຸ້ມຄອງຂະແໜງສຶກສາ ໃນປະຈຸບັນ ແມ່ນດໍາເນີນບົນພື້ນຖານຫຼັກ ຖານຕົວຈິງຫຼາຍຂຶ້ນ ແລະ ມີການເຊື່ອມສານວາລະ SDG 4 ເຂົ້າຫຼາຍຂຶ້ນກ່ວາເດີມ. ດ້ວຍການຊ່ວຍເຫຼືອຈາກ ອົງການ UNICEF, ທັງການໂອກາດເຂົ້າເຖິງ ແລະ ຄຸນນະພາບຂອງການສຶກສາກ່ອນໄວຮຽນແມ່ນໄດ້ຮັບການປັບປຸງ ດີຂຶ້ນຫຼາຍ ໂດຍສະເພາະ ຢູ່ເມືອງຫ່າງໄກສອກຫຼີກ ແລະ ດ້ອຍໂອກາດ. ຄວາມພະຍາຍາມເປັນໝູ່ຄະນະຂອງບັນດາ ອົງການພາຍໃນລະບົບ ສປຊ ໄດ້ຊ່ວຍປັບປຸງຄຸນນະພາບຂອງການສຶກສາຂັ້ນພື້ນຖານ, ລວມທັງ ການປະຕິຮູບຫຼັກສູດ ການຮຽນການສອນ (ອົງການ UNFPA, WFP ແລະ UNICEF) ຕະຫຼອດເຖິງວຽກງານສ້າງຄູ (ອົງການ UNESCO ແລະ UNICEF). ມີຫຼາຍໂຮງຮຽນ ສາມາດບັນລຸການສ້າງສະພາບແວດລ້ອມການຮຽນຮູ້ທີ່ດີ ອັນເປັນຜົນມາຈາກການ ຊ່ວຍເຫຼືອຮ່ວມຂອງອົງການ UNICEF, WFP ແລະ UNFPA. ຊ່ອງຫວ່າງລະຫວ່າງ ການສຶກສາ ແລະ ການຝຶກອົບ ຮົມວິຊາຊີບ ກັບ ຄວາມຕ້ອງການຂອງຕະຫຼາດແຮງງານ ເຫັນວ່າ: ຍັບແຄບເຂົ້າ ຍ້ອນໄດ້ຮັບການຊ່ວຍເຫຼືອຈາກອົງການ ILO ແລະ IOM ເຊິ່ງຖືໄດ້ວ່າເປັນການປະກອບສ່ວນຫຼຸດຜ່ອນຄວາມທຸກຍາກ.

### ການວາງແຜນ ແລະ ການຄຸ້ມຄອງຂະແໜງສຶກສາ

ອົງການ UNICEF ໂດຍການເປັນຄູ່ຮ່ວມງານ ກັບ ອົງການຮ່ວມມືສາກົນເພື່ອການສຶກສາ, ປະສານງານຜ່ານໜ່ວຍ ງານສົມທະນາຂະແໜງງານສຶກສາທິການ ແລະ ກິລາ ໄດ້ຊ່ວຍກະຊວງສຶກສາທິການ ແລະ ກິລາ ສ້າງຕາຕະລາງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງສຶກສາທິການ ແລະ ກິລາ (2016-2020). ຕາຕະລາງການຈັດຕັ້ງປະຕິບັດດັ່ງກ່າວ ໄດ້ສະໜອງຂໍ້ມູນໃຫ້ເພື່ອສ້າງແຜນວຽກປະຈໍາປີພ້ອມແຜນເງິນຂອງກະຊວງ ເພື່ອບັນລຸໃຫ້ໄດ້ຕາມຄາດໝາຍສູ້ຊົນ ຕ່າງໆຂອງຂະແໜງການ. ອົງການ UNICEF ຍັງໄດ້ໃຫ້ການຊ່ວຍເຫຼືອສ້າງຖານຂໍ້ມູນໃນເວັບໄຊ້ ລາວ ອີດູອິນໂຟ (Lao EduInfo) ເພື່ອໃຫ້ສາມາດດໍາເນີນການຄຸ້ມຄອງຂະແໜງການບົນພື້ນຖານຂໍ້ມູນຫຼັກຖານຕົວຈິງ ເຊິ່ງເປັນລະບົບ ຂໍ້ມູນດ້ານການຄຸ້ມຄອງຂະແໜງສຶກສາ ທີ່ສະໜອງຂໍ້ມູນແຍກເພດ ແລະ ມີການປັບປຸງຂໍ້ມູນເປັນເປັນປະຈໍາທຸກປີ ເພື່ອໃຫ້ຂະແໜງສຶກສາໃນຂັ້ນສູນກາງ, ແຂວງ ແລະ ຂັ້ນເມືອງ ນໍາໃຊ້. ໄດ້ສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດ ຂອງກະຊວງໃນວຽກງານການວາງແຜນ ແລະ ການຄຸ້ມຄອງຂະແໜງສຶກສາດ້ວຍການສ້າງແຜນພັດທະນາສະຖາບັນ ໃຫ້ສະຖາບັນພັດທະນາການບໍລິຫານການສຶກສາ ໂດຍມີການຄາດຄະເນລາຍຈ່າຍ ທີ່ສອດຄ່ອງກັບ ແຜນພັດທະນາ ຂະແໜງສຶກສາທິການ ແລະ ກິລາ ພາຍໃຕ້ຂອບການຊ່ວຍເຫຼືອຮ່ວມ ລະຫວ່າງ ອົງການ UNICEF ແລະ ສະຖາບັນສາກົນເພື່ອການວາງແຜນການສຶກສາຂອງອົງການ UNESCO. ນອກນັ້ນ, ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ UNICEF, ຍັງໄດ້ສ້າງຄໍາສັ່ງແນະນໍາ

ວ່າດ້ວຍການວາງແຜນ ແລະ ການລາຍງານປະຈຳປີ ເຊິ່ງຖືກຮັບຮັບຮອງເອົາໃນ ກອງປະຊຸມບໍລິຫານການສຶກສາປະຈຳປີຂອງກະຊວງສຶກສາທິການ ແລະ ກິລາ ໃນເດືອນມິຖຸນາ.

ສຳລັບການຈັດຕັ້ງປະຕິບັດ SDG 4, ອົງການ UNESCO ແລະ UNICEF ໄດ້ຮ່ວມກັນສະໜັບສະໜູນຊ່ວຍເຫຼືອການ ສ້າງຄວາມເຂົ້າໃຈໃຫ້ເປັນເອກະພາບ ຕໍ່ ຄາດໝາຍຂອງ SDG 4 ແລະ ຕົວຊີ້ວັດກ່ຽວຂ້ອງຕ່າງໆ ໃຫ້ພາກສ່ວນກ່ຽວຂ້ອງທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເຊິ່ງລວມທັງ ອົງການຈັດຕັ້ງທາງສັງຄົມ ໂດຍຜ່ານການຈັດກອງປະຊຸມສຳມະນາສະເພາະ. ໄດ້ຕົກລົງເຫັນດີວ່າ: ຈະນຳໃຊ້ກົນໄກໜ່ວຍງານສົນທະນາຂະແໜງສຶກສາທິການ ແລະ ກິລາ (ESWG) ເພື່ອປະສານງານ ແລະ ຕິດຕາມກວດກາບັນດາຄາດໝາຍໃນ SDG4 ພາຍໃຕ້ຂອບ SDG ລວມໃນລະດັບຊາດ.

ໃນເດືອນມິຖຸນາ, ກະຊວງສຶກສາທິການ ແລະ ກິລາ ໄດ້ນຳພາເປີດກອງປະຊຸມແຫ່ງຊາດຄັ້ງທີ 1 ກ່ຽວກັບ SDG 4 ໂດຍ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນລວມທັງ ອົງການຈັດຕັ້ງທາງສັງຄົມ. ກອງປະຊຸມ ຈົບລົງດ້ວຍຜົນສຳເລັດຂອງຄວາມເຂົ້າໃຈເປັນເອກະພາບຕໍ່ບັນດາຄາດໝາຍຂອງ SDG4 ແລະ ຕົວຊີ້ວັດກ່ຽວຂ້ອງ ເຊິ່ງຕົກລົງເຫັນດີວ່າຈະໃຊ້ກົນໄກໜ່ວຍງານສົນທະນາຂະແໜງສຶກສາທິການ ແລະ ກິລາ ທີ່ມີຢູ່ໃນປະຈຸບັນ ເພື່ອເຮັດໜ້າທີ່ປະສານງານ ແລະ ຕິດຕາມກວດກາພາຍໃຕ້ຂອບ SDG ລວມໃນລະດັບຊາດ, ໂດຍຈະໄດ້ຮັບການຊ່ວຍເຫຼືອ ຈາກທີມງານຂອງອົງການ ສປຊ.

## ການສຶກສາຂອງເດັກກ່ອນໄວຮຽນ

ອົງການ UNICEF ສືບຕໍ່ຄວາມພະຍາຍາມຈຸດສຸມຂອງຕົນ ເພື່ອເສີມຂະຫຍາຍຄວາມສະເໝີພາບດ້ານໂອກາດເຂົ້າເຖິງການສຶກສາຂອງເດັກກ່ອນໄວຮຽນ ທີ່ມີຄຸນນະພາບ. ສະເພາະແຕ່ປີ 2016, ມີເດັກນ້ອຍ 402 ຄົນ ໃນຊຸມຊົນຫ່າງ ໄກສອກຫຼີກ ແລະ ທຸກຍາກ ທີ່ໄດ້ຮັບຜົນປະໂຫຍດຈາກແຜນງານສ້າງຄວາມພ້ອມໃຫ້ເດັກກ່ອນເຂົ້າໂຮງຮຽນ ທີ່ເອົາຊຸມຊົນເປັນໃຈກາງ ໂດຍແຜນງານດັ່ງກ່າວ ໄດ້ມີການຈັດຕັ້ງປະຕິບັດຢູ່ 18 ສູນເປົ້າໝາຍທົ່ວປະເທດ ດ້ວຍການຊ່ວຍເຫຼືອ ຈາກອົງການ UNICEF. ອົງການ UNICEF ຍັງໄດ້ໃຫ້ການຊ່ວຍເຫຼືອກໍ່ສ້າງຫ້ອງຮຽນກຽມປະຖົມ ທີ່ມີສິ່ງອຳນວຍຄວາມສະດວກດ້ານນ້ຳສະອາດ ແລະ ສຸຂາພິບານ ທັງໝົດ 10 ແຫ່ງໃນບັນດາເມືອງຊົນນະບົດຢູ່ສອງແຂວງເປົ້າໝາຍ ເຊິ່ງສ້າງຜົນປະໂຫຍດໃຫ້ເດັກນ້ອຍ 379 ຄົນ.

ເດັກນ້ອຍ 1.407 ຄົນ ຈາກໂຮງຮຽນຊັ້ນກຽມປະຖົມ 62 ແຫ່ງ ໄດ້ຮັບຜົນປະໂຫຍດຈາກການສິດສອນທີ່ມີຄຸນນະພາບດີຂຶ້ນ ຫຼັງຈາກອົງການ UNICEF ໄດ້ຊ່ວຍເຫຼືອສ້າງຄວາມສາມາດໃຫ້ບັນດາຄູອາຈານ, ສະໜອງຊຸດເຄື່ອງມືພັດທະນາເດັກກ່ອນໄວຮຽນ ແລະ ຕິດຕາມກວດກາ ແລະ ລົງຊຸກຍູ້ຢ່າງເປັນປະຈຳປົກກະຕິ. 74% ຂອງແຜນງານການສຶກສາ ເດັກກ່ອນໄວຮຽນ ທີ່ອົງການ UNICEF ໃຫ້ການຊ່ວຍເຫຼືອ ຢູ່ 4 ເມືອງ ໄດ້ຊ່ວຍປັບປຸງລະດັບຄະແນນຈັດອັນດັບ ສະພາບແວດລ້ອມຂອງການສຶກສາກ່ອນໄວຮຽນ ຂອງລັດຖະບານ ເຊິ່ງເປັນລະບົບທີ່ພັດທະນາຂຶ້ນ ດ້ວຍການຊ່ວຍ ເຫຼືອຈາກອົງການ UNICEF.

ເພື່ອສົ່ງເສີມວິທີການພັດທະນາເດັກກ່ອນໄວຮຽນແບບຮອບດ້ານ ແລະ ມີສ່ວນຮ່ວມຂອງຫຼາຍຂະແໜງການ, ອົງການ UNICEF ໄດ້ຊ່ວຍສ້າງຊຸດປຶ້ມອ່ານທີ່ເໝາະສົມສຳລັບແຕ່ລະໄວອາຍຸ ເຊິ່ງສອດຄ່ອງກັບ ຫຼັກສູດການສຶກສາເດັກກ່ອນໄວຮຽນຂອງກະຊວງ. ມີເດັກນ້ອຍຫຼາຍກວ່າ 15.000 ຄົນໄດ້ຮັບຜົນປະໂຫຍດຈາກປຶ້ມເຫຼົ່ານີ້ ຍ້ອນວ່າໄດ້ມີການແຈກຢາຍໃຫ້ຫ້ອງກຽມປະຖົມ 256 ແຫ່ງ ແລະ ຊັ້ນປະຖົມ 432 ແຫ່ງ (ຊັ້ນປ. 1). ປະຈຸບັນ ມີຜູ້ສະໜອງການສຶກສາເດັກກ່ອນໄວຮຽນຈຳນວນ 329 ຄົນ ທີ່ຮູ້ວິທີນຳໃຊ້ປຶ້ມນິທານດັ່ງກ່າວ ເພື່ອປະກອບສ່ວນເຂົ້າໃນການພັດທະນາເດັກນ້ອຍ. ປຶ້ມນິທານເຫຼົ່ານີ້ ເຊື່ອມໂຍງກັນກັບລາຍການໂທລະພາບ "ບ້ານຂອງຂ້ອຍ" ທີ່ໄດ້ຮັບການສະໜັບສະໜູນຈາກອົງການ UNICEF ແລະ ມີໃຈຄວາມຕົ້ນຕໍກວມຫຼາຍຂະແໜງກ່ຽວກັບການພັດທະນາເດັກກ່ອນໄວຮຽນ, ເວົ້າເຖິງປະເດັນກ່ຽວກັບວຽກງານສຶກສາ, ໂພຊະນາການ, ສາທາລະນະສຸກ, ນ້ຳສະອາດ, ສຸຂາພິບານ, ສຸຂະອະນາໄມ ແລະ ການປົກປ້ອງ.

> *“ບັນດາອົງການພາຍໃຕ້ລະບົບ ສປຊ ໄດ້ສະໜອງການຊ່ວຍເຫຼືອແບບເຂັ້ມຂຸ້ນໃຫ້ຄວາມພະຍາຍາມສືບຕໍ່ປັບປຸງດັດ ແກ້ຫຼັກສູດການຮຽນການສອນຊັ້ນປະຖົມທົ່ວປະເທດ.”*

## ປະຖົມສຶກສາ

ບັນດາອົງການພາຍໃຕ້ລະບົບ ສປຊ ໄດ້ສະໜອງການຊ່ວຍເຫຼືອແບບເຂັ້ມຂຸ້ນໃຫ້ຄວາມພະຍາຍາມສືບຕໍ່ປັບປຸງດັດ ແກ້ຫຼັກສູດການຮຽນການສອນຊັ້ນປະຖົມທົ່ວປະເທດ . ຕົວຢ່າງ, ອົງການ UNFPA ໄດ້ສະໜອງການຊ່ວຍເຫຼືອດ້ານ ການເງິນ ແລະ ວິຊາການ ເພື່ອສ້າງຫຼັກສູດການຮຽນການສອນເພດສຶກສາທີ່ມີເນື້ອໃນຮອບດ້ານ ແລະ ແທດເໝາະກັບ ແຕ່ລະໄວອາຍຸ. ໃນປີ 2016, ວິຊາເພດສຶກສາ ໄດ້ຖືກເຊື່ອມສານເຂົ້າໃນປຶ້ມແບບຮຽນຂອງນັກຮຽນຊັ້ນປະຖົມປີທີ 1 ແລະ ໃນຄູ່ມືຄູ ໂດຍມີເປົ້າໝາຍແນໃສ່ເພີ່ມຄວາມຮູ້ຄວາມເຂົ້າໃຈຂອງເຂົາເຈົ້າກ່ຽວກັບແນວຄວາມຄິດຕ່າງໆເຊັ່ນ: ສິດທິເດັກ, ຄວາມເຄົາລົບນັບຖື, ບົດບາດຍິງ-ຊາຍ, ຄວາມຮັກແພງ ແລະ ຄວາມຮັກ ກໍຄືຮ່າງກາຍ ແລະ ສຸຂະພາບ.

ອົງການ WFP ໂດຍການເປັນຄູ່ຮ່ວມງານກັບ ອົງການ FAO ໄດ້ສະແຫວງຫາວິທີປັບປຸງຫຼັກສູດກ່ຽວກັບໂພຊະນາ ການ ແລະ ການຜະລິດກະສິກຳຢູ່ໂຮງຮຽນ ເພື່ອຮັບປະກັນວ່າ: ເດັກນ້ອຍມີເວທີຮຽນຮູ້ໃນຫ້ອງຮຽນ ແລະ ພາກປະຕິບັດຕົວຈິງຢູ່ສວນຄົວໃນໂຮງຮຽນ.

> *“ຜົນຈາກການເປັນຄູ່ຮ່ວມງານລະຫວ່າງອົງການ UNICEF, ລັດຖະບານລາວ, ລັດຖະບານອົດສະຕາລີ ແລະ ສະຫະ ພາບເອີລົບ, ນັກຮຽນ 447.256 ຄົນໃນຊັ້ນປະຖົມປີທີ 3, 4 ແລະ 5 ໄດ້ຮັບຊຸດປຶ້ມແບບຮຽນຕາມມາດຕະຖານແຫ່ງ ຊາດ – ປຶ້ມແບບຮຽນຫົວໜຶ່ງ ຕໍ່ເດັກນ້ອຍໜຶ່ງຄົນ ຕໍ່ໜຶ່ງວິຊາຮຽນ.”*

ອົງການ UNICEF ຍັງໄດ້ຊ່ວຍປັບປຸງດັດແກ້ຫຼັກສູດປະຖົມສຶກສາ ໂດຍສຸມໃສ່ການປະເມີນຜົນການຮຽນ ແລະ ການສະໜັບສະໜູນວຽກງານສຶກສານິເທດ. ອົງການ UNICEF ໄດ້ຊ່ວຍການທົບທວນຜົນໄດ້ຮັບດ້ານການຮຽນຮູ້ຂອງນັກຮຽນ, ລະບົບປະເມີນນັກຮຽນ, ແລະ ລະບົບຊຸກຍູ້ທາງດ້ານສຶກສານິເທດ. ການທົບທວນເຫຼົ່ານີ້ ໄດ້ສະໜອງຂໍ້ມູນໃຫ້ ການສືບຕໍ່ປັບປຸງດັດແກ້ ແລະ ການປະເມີນຫຼັກສູດການຮຽນການສອນຊັ້ນປະຖົມທົ່ວປະເທດ, ການສ້າງຄູ ແລະ ຂອບ ການຊຸກຍູ້ວຽກງານສຶກສານິເທດ ເຊິ່ງຈະຊ່ວຍຮັບປະກັນຄວາມສອດຄ່ອງຂອງນະໂຍບາຍ, ມາດຕະຖານການຮຽນຮູ້, ຫຼັກສູດ ແລະ ສື່ການຮຽນການສອນ, ການສ້າງຄູ ແລະ ແບບວິທີການສິດສອນ ໃນຫ້ອງຮຽນ.

ພະນັກງານສຶກສາເມືອງ 36 ຄົນ ລວມທັງຄູສຶກສານິເທດ 21 ທ່ານ ຈາກ 4 ເມືອງເປົ້າໝາຍ ໄດ້ຍົກລະດັບຄວາມສາມາດຂອງເຂົາເຈົ້າ ຜ່ານການຊ່ວຍເຫຼືອຈາກອົງການ UNICEF. ໂດຍປະມານ, ນາຍຄູຊັ້ນປະຖົມສຶກສາ ຈຳນວນ 1.000 ຄົນ ໃນ 4 ເມືອງເປົ້າໝາຍ ໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການ ດ້ານການສິດສອນ ໂດຍຜ່ານການຝຶກອົບຮົມ ແລະ ການລົງຊຸກຍູ້ຂອງຄູສຶກສານິເທດ ເຊິ່ງເປັນການສ້າງປະໂຫຍດໃຫ້ກັບນັກຮຽນ ຈຳນວນ 20.000 ຄົນ.

ຜົນຈາກການເປັນຄູ່ຮ່ວມງານລະຫວ່າງອົງການ UNICEF, ລັດຖະບານລາວ, ລັດຖະບານອົດສະຕາລີ ແລະ ສະຫະພາບເອີລົບ, ນັກຮຽນ 447.256 ຄົນໃນຊັ້ນປະຖົມປີທີ 3, 4 ແລະ 5 ໄດ້ຮັບຊຸດປຶ້ມແບບຮຽນ ຕາມມາດຕະຖານແຫ່ງ ຊາດ - ປຶ້ມແບບຮຽນຫົວໜຶ່ງ ຕໍ່ເດັກນ້ອຍໜຶ່ງຄົນ ຕໍ່ໜຶ່ງວິຊາຮຽນ .

ອົງການ UNICEF ຍັງໄດ້ຊ່ວຍເຫຼືອວຽກງານນ້ຳສະອາດ, ສຸຂາພິບານ ແລະ ສຸຂະອະນາໄມ ໃນໂຮງຮຽນ ໂດຍຜ່ານການກໍ່ສ້າງສິ່ງອຳນວຍຄວາມສະດວກ ແລະ ສະໜອງສຸຂະສຶກສາໃນໂຮງຮຽນ. ຍ້ອນແນວນັ້ນ, ມີນັກຮຽນຊັ້ນປະຖົມ ຫຼາຍກ່ວາ 10.000 ຄົນ - ກ່ວາເຄິ່ງເປັນ ເດັກຍິງ - ສາມາດເຂົ້າເຖິງຫ້ອງນ້ຳໃນໂຮງຮຽນທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ແລະຍັງປະກອບດ້ວຍບ່ອນລ້າງມື, ພ້ອມນັ້ນ, ໄດ້ປັບປຸງແຫຼ່ງນ້ຳໃຫ້ໂຮງຮຽນ 102 ແຫ່ງ ໃນ 3 ແຂວງ. ນັກຮຽນຊັ້ນປະ ຖົມ 5.452 ຄົນໃນໂຮງຮຽນປະຖົມ 49 ແຫ່ງ ຢູ່ແຂວງສາລະວັນ ແລະ 2 ແຫ່ງ ຢູ່ ນະຄອນຫຼວງວຽງຈັນ ໄດ້ຮັບສຸຂະສຶກສາ ແລະ ໄດ້ປະຕິບັດພຶດຕິກຳສຸຂະສຶກສາ 4 ຢ່າງທຸກມື້ ພາຍໃຕ້ກິດຈະກຳສົ່ງເສີມສຸຂະອະນາໄມ ທີ່ນັກຮຽນເປັນ ເຈົ້າການ: 1) ລ້າງມືດ້ວຍສະບູ ແລະ ນ້ຳສະອາດເປັນກຸ່ມ ກ່ອນກິນອາຫານ, 2) ນຳໃຊ້ວິດຖ່າຍ ແລະ ອະນາໄມ ຫຼັງນຳໃຊ້, 3) ດື່ມນ້ຳທີ່ກອງແລ້ວ ໃນຫ້ອງຮຽນ ແລະ 4) ອະນາໄມເດີ່ນໂຮງຮຽນ. ໄດ້ມີການສ້າງສະໂມສອນສຸຂະພາບສິ່ງແວດລ້ອມຂຶ້ນໃນໂຮງຮຽນ 15 ແຫ່ງ ຢູ່ແຂວງສາລະວັນ ພ້ອມທັງໄດ້ມີການຝຶກອົບຮົມຄູສອນ.

ອົງການ WFP ໄດ້ສືບຕໍ່ສະໜອງອາຫານທ່ຽງ ໂດຍເຂົ້າເຖິງນັກຮຽນໃນຊັ້ນກຸ່ມປະຖົມ ແລະ ຊັ້ນປະຖົມທັງໝົດ 16 ສ່ວນຮ້ອຍຢູ່ ສປປ ລາວ ໃນ 30 ເມືອງທີ່ດ້ອຍໂອກາດທາງດ້ານການສຶກສາທີ່ສຸດ ໃນແຂວງພາກເໜືອ ແລະ ພາກໃຕ້ . ຫຼັງຈາກທີ່ໄດ້ນຳສະເໜີນະໂຍບາຍຂອງລັດຖະບານໃນປີ 2014 ກ່ຽວກັບການສົ່ງເສີມອາຫານທ່ຽງໃນໂຮງຮຽນ, ອົງ ການ WFP ໄດ້ສະໜັບສະໜູນອາຫານທ່ຽງໃນໂຮງຮຽນ ໂດຍສ່ວນໜຶ່ງ ເຮັດມາຈາກຜັກ ແລະ ພືດພັນຕ່າງໆທີ່ຜະລິດຈາກສວນຄົວໃນໂຮງຮຽນທີ່ໄດ້ຮັບການສະໜັບສະໜູນຈາກອົງການ WFP. ໃນປີ 2016, ອົງການ WFP ໄດ້ສະໜັບ ສະໜູນອາຫານທ່ຽງໃຫ້ຫຼາຍກ່ວາ 500 ໂຮງຮຽນ ແລະ ອາຫານເບົາຕອນເຊົ້າຢູ່ 940 ໂຮງຮຽນ. ໃນປີ 2017, ມີແຜນຈະ ລວມເອົາໂຮງຮຽນອີກ 940 ແຫ່ງເຂົ້າ

*ອົງການ WFP ໄດ້ສືບຕໍ່ສະໜອງອາຫານທ່ຽງ ໂດຍເຂົ້າເຖິງນັກຮຽນໃນຊັ້ນກຸ່ມປະຖົມ ແລະ ຊັ້ນປະຖົມທັງໝົດ 16 ສ່ວນຮ້ອຍຢູ່ ສປປ ລາວ ໃນ 30 ເມືອງທີ່ດ້ອຍໂອກາດທາງດ້ານການສຶກສາທີ່ສຸດ ໃນແຂວງພາກເໜືອ ແລະ ພາກໃຕ້.*

ໃນໂຄງການອາຫານທ່ຽງ. ໃນຂັ້ນນະໂຍບາຍ, ອົງການ WFP ໄດ້ສືບຕໍ່ບົດບາດ ຫຼັກຂອງຕົນໃນໜ່ວຍງານວິຊາການວຽກງານສະໜອງອາຫານທ່ຽງຢູ່ໂຮງຮຽນ ພາຍໃຕ້ ໜ່ວຍງານສົມທະບາຂະແໜງ ສຶກສາທິການ ແລະ ກິລາ ໃນດ້ານວຽກງານການປະສານງານ ແລະ ການສະໜັບສະໜູນຊ່ວຍເຫຼືອທາງນະໂຍບາຍ. ກຳລັງມີການສ້າງແຜນໄລຍະຍາວ ເພື່ອສົ່ງມອບວຽກງານອາຫານທ່ຽງໃນໂຮງຮຽນໃຫ້ຊຸມຊົນ ແລະລັດຖະບານ, ແລະ ການໃຫ້ການຊ່ວຍເຫຼືອຈັດຕັ້ງປະຕິບັດໂຄງການສະໜອງອາຫານທ່ຽງໃນໂຮງຮຽນທົ່ວປະເທດ.

ແນວຄວາມຄິດຂອງໂຄງການອາຫານທ່ຽງ ແມ່ນໄດ້ຮັບການຂະຫຍາຍຂຶ້ນອີກໃນໄລຍະປີ 2016 ເຊິ່ງລວມມີ ຊຸດການ ສະໜັບສະໜູນຊຸມຊົນໂຮງຮຽນ ດ້ວຍການເຊື່ອມໂຍງເອົາການລົງທຶນຂອງບັນດາຄູ່ຮ່ວມພັດທະນາອື່ນໆ. ອົງການ WFP ແລະ UNICEF ໄດ້ຕົກລົງເຫັນດີ ເພີ່ມການປະສານສົມທົບ ບົນພື້ນຖານສິ່ງຄົ້ນພົບຈາກການທົບທວນຜົນກະ ທົບ ເຊິ່ງໄດ້ຢືນຢັນຜົນໄດ້ຮັບທາງບວກ ໃນການລວມວຽກງານນ້ຳສະອາດ, ສຸຂາພິບານ ແລະ ສຸຂະອະນາໄມ ເຂົ້າໃນ ກິດຈະກຳສະໜອງອາຫານທ່ຽງຢູ່ໂຮງຮຽນໃຫ້ເດັກນ້ອຍ ແລະ ການສ້າງສວນຄົວໃນໂຮງຮຽນ. ອົງປະກອບອື່ນໆໃນຊຸດ ການສະໜັບສະໜູນ ລວມເອົາ ກິດຈະກຳສຸຂະອະນາໄມ ແລະ ກິດຈະກຳຖູແຂ້ວ, ຊ່ວຍເຫຼືອກ່ຽວກັບໜອງປາ ແລະ ກິດຈະກຳການອ່ານໜັງສື.

## ມັດທະຍົມສຶກສາ

ເອົງການ ILO ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອລັດຖະບານໃນການດັດປັບຫຼັກສູດການຮຽນການສອນ "ຮູ້ກ່ຽວກັບທຸລະກິດ"ເຂົ້າໃນຂະແໜງທ່ອງທ່ຽວ ໂດຍສຸມໃສ່ບັນດາໂຮງຮຽນຢູ່ແຂວງຫຼວງພະບາງ - ເຊິ່ງເປັນ "ເຂດໂດ່ງດັງ" ສຳລັບນັກທ່ອງທ່ຽວທີ່ມາຈາກທົ່ວໂລກ. ໃນປີ 2016, ໄດ້ມີການດັດປັບບົດຮຽນຊຸດສຸດທ້າຍ (6-9) ໃຫ້ເຂົ້າກັບສະພາບເງື່ອນໄຂທ້ອງຖິ່ນຂອງລາວ ເຊິ່ງໄດ້ສ້າງສຳເລັດ ແລະ ຖືກຮັບຮອງໂດຍກະຊວງສຶກສາທິການ ແລະ ກິລາ ແລະ ໄດ້ແຈກຢາຍໃຫ້ບັນ ດາໂຮງຮຽນມັດທະຍົມ ສຶກສາຢູ່ແຂວງຫຼວງພະບາງ. ຫຼັກສູດຄົບຊຸດ ແຕ່ບົດທີ 1 ຫາ 9 ໄດ້ຖືກເຊື່ອມສານເຂົ້າໃນຫຼັກ ສູດການຮຽນການສອນໂຮງຮຽນມັດທະຍົມສຶກສາຕອນປາຍໃນທົ່ວແຂວງຫຼວງພະບາງ ຢ່າງເປັນທາງການ ເຊິ່ງໄດ້ມີ ການຈັດສັນຊົ່ວໂມງສອນວິຊາດັ່ງກ່າວ ຢ່າງໜ້ອຍ 68 ຊົ່ວໂມງ. ໃນປີ 2016, ຢ່າງໜ້ອຍມີຄູ 40 ຄົນຈາກທົ່ວປະເທດ ໄດ້ຮຽນຮູ້ວິທີການສອນຫຼັກສູດສະເພາະດັ່ງກ່າວ ແລະ ມີນາຍຄູສອນມັດທະຍົມ ຢ່າງໜ້ອຍ 60 ຄົນ ຈາກ 36 ໂຮງຮຽນ ທົ່ວແຂວງຫຼວງພະບາງ ໄດ້ຮຽນຮູ້ວິທີການອຳນວຍຄວາມສະດວກໃຫ້ການຮຽນຮູ້ຂອງນັກຮຽນ ໃນວິຊາ "ຮູ້ກ່ຽວກັບທຸ ລະກິດ".

ຫຼັກສູດດັ່ງກ່າວ ໄດ້ປະກອບທັກສະ ແລະ ທັດສະນະ ທາງດ້ານການເປັນຜູ້ປະກອບການໃຫ້ຜູ້ຮຽນ ເຊິ່ງຈະເປັນການເສີມຂະຫຍາຍໂອກາດໃນການມີວຽກເຮັດງານທຳ ແລະ ຊ່ວຍສ້າງ ຫຼື ປັບປຸງທຸລະກິດຂອງເຂົາເຈົ້າ. ໃນໄລ ຍະຍາວ, ຫຼັກສູດດັ່ງກ່າວນີ້ ຈະຊ່ວຍສົ່ງເສີມໃຫ້ມີວັດທະນະທຳເປັນຜູ້ປະກອບການ, ເພີ່ມຜະລິດຕະພາບ ແລະ ຄວາມສາມາດໃນການແຂ່ງຂັນ ໃຫ້ບັນດາຜູ້ປະກອບການໃນທັງປະຈຸບັນ ແລະ ອະນາຄົດ.

ອົງການ UNFPA ໄດ້ສືບຕໍ່ຊ່ວຍສ້າງຄວາມສາມາດໃຫ້ນາຍຄູຜ່ານຮູບການຕ່າງໆ - ເຊັ່ນ: ການຝຶກອົບຮົມ, ຄູ່ມືຄູ, ຂໍ້ມູນຂ່າວສານ, ແລະ ສື່ພິມສຶກສາອົບຮົມ ແລະ ການສື່ສານ - ເພື່ອເຊື່ອມສານຫົວຂໍ້ສຸຂະພາບທາງເພດ ແລະ ຈະເລີນ ພັນຂອງໄວໜຸ່ມເຂົ້າໃນຫຼັກສູດການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນ. ຢູ່ແຂວງ ອຸດົມໄຊ ແລະ ຜົ້ງສາລີ, ນາຍຄູ 182 ຄົນຈາກມັດທະຍົມສຶກສາ ແລະ ການສຶກສານອກໂຮງຮຽນ ປະຈຸບັນ ຮູ້ວິທີການໃຊ້ຄູ່ມືຄູ ສຳລັບການສອນ ວິຊາສຸຂະພາບທາງເພດ ແລະ ຈະເລີນພັນຂອງໄວໜຸ່ມ. ຢູ່ແຂວງຫຼວງນໍ້າທາ, ນາຍຄູ 50 ຄົນຈາກຊັ້ນມັດທະຍົມສຶກສາ ແລະ ອະຊີວະສຶກສາ ໄດ້ຍົກລະດັບຄວາມຮູ້ຂອງຕົນກ່ຽວກັບສຸຂະພາບທາງເພດ ແລະ ຈະເລີນພັນ ຜ່ານການຝຶກອົບຮົມຄືນ. ນອກຈາກນີ້, ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ UNFPA, ໄດ້ມີການປັບປຸງດັດແກ້ເຄື່ອງມືຕິດຕາມກວດກາ ແລະ ປະເມີນຜົນ ພ້ອມທັງຈັດການຝຶກອົບຮົມໃຫ້ຜູ້ປະສານງານວຽກຕິດຕາມກວດກາ ແລະ ປະເມີນຜົນ ຈຳນວນ 34 ຄົນ ໃຫ້ຮູ້ກ່ຽວກັບເຕັກນິກການສັງເກດ ແລະ ການຊຸກຍູ້ສະໜັບສະໜູນຄູສອນວິຊາດັ່ງກ່າວ.

ອົງການ UNFPA ຍັງໄດ້ຊ່ວຍການປະເມີນການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບຂອງການນຳໃຊ້ຄູ່ມືຄູ ຢູ່ 3 ເມືອງໃນແຂວງຫຼວງນໍ້າທາ ເພື່ອສະໜອງຂໍ້ມູນໃຫ້ການດັດປັບ ແລະ ຂະຫຍາຍໂຄງການ. ນັກຮຽນທັງໝົດຈຳນວນ 1.585 ຄົນຈາກໂຮງຮຽນມັດທະຍົມສຶກສາຕົ້ນຕົ້ນ ແລະ ຕອນປາຍ 9 ແຫ່ງ, 6 ບ້ານທີ່ມີວຽກການສຶກສານອກໂຮງຮຽນ, 1 ສະຖາບັນສ້າງຄູ ແລະ ໜຶ່ງ ໂຮງຮຽນອະຊີວະສຶກສາ ຢູ່ແຂວງຫຼວງນໍ້າທາໄດ້ສຳເລັດການສຳຫຼວດດັ່ງກ່າວ. ຄາດວ່າ ການວິເຄາະຂໍ້ມູນຈາກການສຳຫຼວດດັ່ງກ່າວ ຈະອອກມາໃນເດືອນມັງກອນ 2017.

> *ເພື່ອສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດຂອງຄູໃນການພັດທະນາທັກສະການອ່ານການຂຽນພື້ນຖານໃນຊັ້ນປະ ຖົມຂັ້ນຕົ້ນ, ອົງການ UNESCO ໄດ້ດຳເນີນຊຸດຝຶກອົບຮົມຄູປະຈຳການ ທີ່ສອນພາສາລາວ ໃນຊັ້ນປີ 1-3 ຢູ່ທຸກແຂວງ ຕາມຂໍ້ມູນປີ 2016 ແມ່ນໄດ້ຝຶກອົບຮົມຄູຊັ້ນປະຖົມທັງໝົດຈຳນວນ 2.000 ຄົນ.*

## ການສ້າງຄູ

ເພື່ອສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດຂອງຄູໃນການພັດທະນາທັກສະການອ່ານການຂຽນພື້ນຖານໃນຊັ້ນປະຖົມຂັ້ນຕົ້ນ, ອົງການ UNESCO ໄດ້ດຳເນີນຊຸດຝຶກອົບຮົມຄູປະຈຳການ ທີ່ສອນພາສາລາວ ໃນຊັ້ນປີ 1-3 ຢູ່ທຸກແຂວງ ຕາມຂໍ້ມູນປີ 2016 ແມ່ນໄດ້ຝຶກອົບຮົມຄູຊັ້ນປະຖົມທັງໝົດຈຳນວນ 2.000 ຄົນ . ພ້ອມນັ້ນ, ໄດ້ສ້າງປຶ້ມຄູ່ມືຄູເສີມຂຶ້ນ ເພື່ອເປັນເອກະສານທີ່ໃຊ້ໃນການຝຶກອົບຮົມ ໂດຍຖືກອອກແບບມາເພື່ອຊ່ວຍຄູໃນຂົງເຂດທີ່ເຂົາເຈົ້າເຫັນວ່າຍາກໃນ ການສອນ ແລະ ເພື່ອເສີມໃຫ້ຄູ່ມືຄູທີ່ມີໃນປະຈຸບັນທີ່ສະຖາບັນຄົ້ນຄ້ວາວິທະຍາສາດສຶກສາຂອງກະຊວງສຶກສາທິການ ແລະກິລາ ໄດ້ຜະລິດອອກ. ນອກຈາກນີ້, ຄູຝຶກຂັ້ນແຂວງ ຈຳນວນ 72 ຄົນ ຍັງໄດ້ຮັບຜົນປະໂຫຍດຈາກການຊ່ວຍເຫຼືອ ຂອງອົງການ UNESCO ແລະ ໄດ້ຮັບການຖ່າຍທອດທັກສະການນຳພາການສິດສອນພາສາ ແລະ ວິທີການວິທະຍາ ໃນການສອນຄູທີ່ເປັນກຸ່ມເປົ້າໝາຍ. ໄດ້ສ້າງຄູ່ມືຝຶກອົບຮົມ ເພື່ອແນະນຳຄູຝຶກຂັ້ນແຂວງເປັນແຕ່ລະບາດກ້າວໃນການ ອຳນວຍຄວາມສະດວກໃຫ້ການຝຶກອົບຮົມຄູປະຈຳການພາຍໃນແຂວງຂອງເຂົາເຈົ້າ ດ້ວຍທັດສະນະຕ້ອງການປັບປຸງ ມາດຕະຖານການສອນວິຊາພາສາລາວ.

## ການສຶກສານອກໂຮງຮຽນ ແລະ ອະຊີວະສຶກສາ

ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ UNICEF, ເດັກນ້ອຍຈຳນວນ 2.582 ຄົນ ໃນບັນດາຊຸມຊົນທີ່ເຂົ້າເຖິງຍາກຢູ່ 3 ແຂວງ ໄດ້ຮັບຜົນປະໂຫຍດຈາກການສອນຫຼັກສູດທຽບເທົ່າປະຖົມ. ໄດ້ມີການສ້າງຄວາມສາມາດດ້ານເຕັກນິກ ການສອນຫ້ອງຄວບໃຫ້ບັນດາຄູເຄື່ອນທີ່ ທັງໝົດ 93 ທ່ານ ຜ່ານການຝຶກອົບຮົມ ແລະ ການຕິດຕາມຊຸກຍູ້.

ອົງການ ILO ໄດ້ສືບຕໍ່ຊ່ວຍເຫຼືອລັດຖະບານໃນການສ້າງກົນໄກຢັ້ງຢືນຄູນນະວຸດໃນຂະແໜງກໍ່ສ້າງ ກັບປະເທດໄທທີ່ຕ່າງຝ່າຍຕ່າງຮັບຮູ້. ນອກຈາກນີ້, ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ ILO, ສະພາການຄ້າ ແລະ ອຸດສາຫະກຳ ລາວໄດ້ເຜີຍແຜ່ຜົນການປະເມີນຄວາມຕ້ອງການຂອງຜູ້ໃຊ້ແຮງງານ ເພື່ອແຈ້ງຂໍ້ມູນໃຫ້ສັງຄົມ ແລະ ລັດຖະບານ ຮູ້ ກ່ຽວກັບທັດສະນະຂອງຜູ້ໃຊ້ແຮງງານ ທີ່ມີກ່ຽວກັບ ສີມືແຮງງານ ແລະ ຄວາມສາມາດໃນບັນດາຂະແໜງຕົ້ນຕໍ. ຜົນໄດ້ ຮັບຈາກການປະເມີນດັ່ງກ່າວ ໄດ້ສະໜອງຂໍ້ມູນຂ່າວສານຈຳເປັນ ເພື່ອຊ່ວຍປັບປຸງຄວາມສອດຄ່ອງລະຫວ່າງການສະ ໜອງ ແລະ ຄວາມຕ້ອງປະເພດສີມືແຮງງານໃນຕະຫຼາດ; ເສີມຂະຫຍາຍຖານຄວາມຮູ້ຂອງຜູ້ອອກແຮງງານລາວ ເພື່ອ ເພີ່ມທ່າແຮງໃນການໄດ້ວຽກເຮັດງານທຳແລະຜະລິດຕະພາບຂອງເຂົາເຈົ້າ; ແລະ ສ້າງຄວາມເຂັ້ມແຂງໃຫ້ຄວາມສາ ມາດໃນການແຂ່ງຂັນຂອງວິສາຫະກິດຕ່າງໆ, ຄວາມທັນສະໄໝດ້ານເຕັກໂນໂລຊີ ແລະ ຄວາມຍືນຍົງໃນການຜະລິດ, ຜົນຜະລິດ ແລະ ຂະບວນການຕ່າງໆຂອງວິສາຫະກິດ.

ອົງການ IOM ໄດ້ເຮັດວຽກ ເພື່ອສ້າງຄວາມເຂັ້ມແຂງໃຫ້ການເຊື່ອມໂຍງລະຫວ່າງການພັດທະນາສີມືແຮງງານ, ການ ເຄື່ອນຍ້າຍແຮງງານທີ່ມີຄວາມສຳເລັດ ແລະ ການຫຼຸດຜ່ອນຄວາມທຸກຍາກໃຫ້ແຮງງານເຄື່ອນຍ້າຍ ເພື່ອປັບປຸງໂອ ກາດ ແລະ ເງື່ອນໄຂການເຮັດວຽກ ທັງຢູ່ໃນປະເທດໄທ ແລະ ຢູ່ລາວຫຼັງຈາກໄດ້ກັບຄືນປະເທດ, ເຊິ່ງຈະເປັນການປະ ກອບສ່ວນຫຼຸດຜ່ອນຄວາມທຸກຍາກໃນຊຸມຊົນຕົ້ນທາງ. ອົງການ IOM ໄດ້ທົດສອບແຜນງານທົດລອງຝຶກອົບຮົມ ແລະ ຈັດຫາງານ ໃຫ້ແມ່ຍິງດ້ອຍໂອກາດທີ່ມາຈາກເຂດຫ່າງໄກສອກຫຼີກ ໂດຍເປັນຜູ້ທີ່ໄດ້ຮັບການສຶກສາໃນໂຮງຮຽນໃນ ຂອບເຂດຈຳກັດ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ຊ່ອງຫວ່າງ ລະຫວ່າງ ນະໂຍບາຍ ແລະ ພາກປະຕິບັດຕົວຈິງ ຍັງຄົງເປັນສິ່ງທ້າທາຍໃນຂະແໜງສຶກສາຢູ່. ເພື່ອໃຫ້ມີ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດທີ່ມີປະສິດທິຜົນ, ວິທີການທີ່ເປັນລະບົບ ແລະ ມີການປະສານງານ ກັນເປັນຢ່າງດີ ພ້ອມກັບຄວາມຮັບຜິດຊອບທີ່ຊັດເຈນຂອງແຕ່ລະຝ່າຍກ່ຽວຂ້ອງ ຕ້ອງໄດ້ຮັບການສ້າງຄວາມເຂັ້ມແຂງ ໂດຍຜ່ານການປະສານງານທີ່ດີກ່ວາເດີມລະຫວ່າງບັນດາກົມຕ່າງໆຂອງກະຊວງສຶກສາທິການ ແລະ ກິລາ ແລະ ລະ ຫວ່າງສູນກາງ ກັບ ທ້ອງຖິ່ນ; ແລະ ຕ້ອງເສີມດ້ວຍການປະສານງານທີ່ດີກ່ວາເກົ່າກັບ ແລະ ລະຫວ່າງບັນດາຄູ່ຮ່ວມພັດ ທະນາຕ່າງໆ. ຂອບການຮ່ວມມືລະຫວ່າງ ສປປ ລາວ ແລະ ອົງການ ສປຊ 2017-2021 ເຊິ່ງສອດຄ່ອງກັບແຜນ 8, SDGs ແລະ ແຜນພັດທະນາຂະແໜງສຶກສາທິການ ແລະ ກິລາ ຈະເປັນເຄື່ອງມືອຳນວຍຄວາມສະດວກໃຫ້ຄວາມພະ ຍາຍາມດັ່ງກ່າວ.

ພ້ອມນັ້ນ, ຍັງເຫັນວ່າຈຳເປັນຕ້ອງສ້າງຄວາມເຂັ້ມແຂງໃຫ້ຄວາມພະຍາຍາມຮ່ວມຂອງອົງການ ສປຊ ໃນການປະສານກັບບັນດາໜ່ວຍງານສົນທະນາຫົວຂໍ້ປິ່ນອ້ອມຂະບວນການໂຕະມົນ (SWG) ທີ່ມີຢູ່ໃນປະຈຸບັນ ໃນຖານະເປັນເວທີປະສານງານທົ່ວຂະແໜງການ. ການປະສານສົມທົບ ແລະ ການເປັນຄູ່ຮ່ວມງານລະຫວ່າງຂະແໜງການ ຄວາມມີເພີ່ມຂຶ້ນເພື່ອໃຫ້ເກີດກິດຈະກຳຊ່ວຍເຫຼືອຮ່ວມລະຫວ່າງຂະແໜງການ ເຊິ່ງລວມທັງວຽກງານພັດທະນາເດັກ ກ່ອນໄວຮຽນ, ວຽກງານອະຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ.

ການວາງແຜນ ແລະ ການຕິດຕາມກວດກາ ໂດຍອີງໃສ່ຂໍ້ມູນຫຼັກຖານຕົວຈິງ ຕ້ອງໄດ້ຮັບການສ້າງຄວາມເຂັ້ມແຂງຂຶ້ນຕື່ມ ໂດຍສຸມໃສ່ ບໍ່ພຽງແຕ່ການສ້າງຂໍ້ມູນຫຼ້າສຸດ ແຕ່ລວມເຖິງການນຳໃຊ້ຂໍ້ມູນນຳ. ເພື່ອຈັດຕັ້ງປະຕິບັດແຜນພັດທະນາຂະແໜງສຶກສາທິການ ແລະ  ກິລາ ແລະ ເພື່ອສ້າງຄວາມຄືບໜ້າໃນການບັນລຸ SDG 4 ໃນລັກສະນະຍືນຍົງ ຢ່າງ ມີປະສິດທິຜົນ ແລະ ລາວເປັນເຈົ້ານັ້ນ, ຈຳເປັນຕ້ອງມີລະບົບການຕິດຕາມກວດກາທີ່ມີປະສິດທິຜົນ ແລະ ດຳເນີນງານ ໄດ້ດີ ເຊິ່ງຕ້ອງໄດ້ເຊື່ອມສານເຂົ້າ ແລະ ນຳໃຊ້ໃນແຜນການ ແລະ ກິດຈະກຳຕ່າງໆຂອງກະຊວງສຶກສາທິການ ແລະ ກິລາ. ຕ້ອງໄດ້ຕິດຕາມກວດກາບັນດາຕົວຊີ້ວັດສຳຄັນເພີ່ມຈຳນວນໜຶ່ງທີ່ເປັນຂໍ້ມູນແຍກປະເພດຢ່າງເປັນປະຈຳປົກກະຕິ ນອກຈາກການຕິດຕາມຂໍ້ມູນ ແລະ ການເຂົ້າເຖິງ ເຊິ່ງລວມທັງຕົວຊີ້ວັດທີ່ມີກ່ຽວກັບຂະບວນການ ແລະ ຜົນໄດ້ຮັບດ້ານການຮຽນຮູ້, ການເປັນພົນລະເມືອງຂອງໂລກ ແລະ ການພັດທະນາແບບຍືນຍົງ.

ພ້ອມນັ້ນ, ຍັງຈຳເປັນຕ້ອງລົງ ເລິກການວິເຄາະຕ່າງໆ ເພື່ອສ້າງກິດຈະກຳແກ້ໄຂຄວາມບໍ່ສະເໝີພາບໃນການເຂົ້າເຖິງ, ການມີສ່ວນຮ່ວມ ແລະ ການຮຽນຮູ້. ນີ້ສາມາດເຮັດໄດ້ຜ່ານການສ້າງຂໍ້ມູນແຍກປະເພດໃຫ້ຫຼາຍຂຶ້ນກ່ວາເກົ່າ, ເຊິ່ງລວມທັງບົດບາດຍິງ-ຊາຍ, ພາສາ ແລະ ສະຖານະພາບທາງດ້ານເສດຖະກິດ-ສັງຄົມ. ການວິເຄາະໃນລັກສະນະດັ່ງກ່າວຈະເປັນປະໂຫຍດຕໍ່ການປັບ ປຸງການດຸ່ນດ່ຽງງົບປະມານໃຫ້ຂະແໜງສຶກສາ.

ການສ້າງຄວາມສາມາດໃຫ້ຄູອາຈານ, ອຳນວຍການໂຮງຮຽນ ແລະ ຄູນິເທດ ຕ້ອງສືບຕໍ່ເປັນບູລິມະສິດຕົ້ນຕໍ ຍ້ອນວ່າ ຄວາມສາມາດຂອງເຂົາເຈົ້າ ເປັນປັດໃຈສຳຄັນ ສຳລັບການປັບປຸງຄຸນນະພາບການສຶກສາ. ການລົງທຶນດັ່ງກ່າວ ຮຽກ ຮ້ອງໃຫ້ຄວາມພະຍາຍາມເປັນເອກະພາບກັນລະຫວ່າງບັນດາຄູ່ຮ່ວມງານ ແລະ ອົງການຕ່າງໆພາຍໃຕ້ລະບົບ ສປຊ ຈະຕ້ອງສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ຄວາມພະຍາຍາມຮ່ວມທີ່ມີ ໂດຍຜ່ານຂອບການຮ່ວມມືລະຫວ່າງ ສປປ ລາວ ແລະ ອົງການ ສປຊ.



# 4. ການບໍລິການ ສະຫວັດດີການສັງຄົມ ແລະ ສາທາທີ່ສະເໝີພາບ

# ປະຊາຊົນຢູ່ ສປປ ລາວ ໄດ້ຮັບ ຜົນປະໂຫຍດຈາກບໍລິການສະຫວັດດີການສັງຄົມ ແລະ ສາທາດ້ານການສົ່ງເສີມສຸຂະພາບດີ, ການປ້ອງກັນພະຍາດ, ການປິ່ນປົວ, ແລະ ການຟື້ນຟູ ທີ່ມີຄວາມສະເໝີພາບຫຼາຍຂຶ້ນກ່ວາເກົ່າ





## ທ່າອ່ຽງການພັດທະນາຕົ້ນຕໍ

ການຂ້າມຜ່ານຈາກ ເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ (MDGs) ຫາ ເປົ້າໝາຍພັດທະນາແບບຍືນຍົງ (SDGs) ເປັນຜົນນຳໄປສູ່ ການມີບັນດາຄາດໝາຍໃໝ່ສຳລັບອັດຕາການຕາຍຂອງແມ່ ກໍຄື ອັດຕາການຕາຍຂອງເດັກ ເກີດໃໝ່ ແລະ ເດັກລຸ່ມ 5 ປີ ສຳລັບໄລຍະ 15 ປີຕໍ່ໜ້າ. ສປປ ລາວ ມີເປົ້າໝາຍແນໃສ່ຫຼຸດຜ່ອນອັດຕາການຕາຍ ຂອງແມ່ລົງໃຫ້ເຫຼືອ 160 ຕໍ່ 100.000 ຄົນພາຍໃນປີ 2020, ດັ່ງທີ່ໄດ້ລະບຸໄວ້ໃນແຜນພັດທະນາຂະແໜງສາທາລະນະສຸກ ສະບັບທີ VIII. SDGs ຮຽກຮ້ອງໃຫ້ຍຸຕິທຸກການຕາຍຂອງເດັກເກີດໃໝ່ ແລະ ເດັກນ້ອຍອາຍຸລຸ່ມ 5 ປີ ທີ່ເກີດຈາກສາເຫດທີ່ສາມາດປ້ອງກັນໄດ້. ກ່ຽວກັບເລື່ອງນີ້, ສປປ ລາວ ແນໃສ່ຫຼຸດການຕາຍຂອງເດັກແດງ ແລະ ການຕາຍຂອງເດັກລຸ່ມ 5 ປີ ໃຫ້ເຫຼືອ 12 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນ ແລະ 25 ຄົນ ຕໍ່ເດັກເກີດມີຊີວິດ 1.000 ຄົນ ຕາມລຳດັບ. ໄດ້ມີການຮັບຮອງເອົາຍຸດທະສາດແຫ່ງຊາດ ແລະ ແຜນດຳເນີນງານການສະໜອງບໍລິການສຸຂະພາບຈະເລີນພັນ, ສຸຂະພາບຂອງແມ່, ຂອງເດັກເກີດໃໝ່ ແລະ ຂອງເດັກນ້ອຍແບບເຊື່ອມສານ, ສຳລັບໄລຍະ 2016-2025.

ໜ່ວຍງານສົນທະນາຂະແໜງສາທາລະນະສຸກໃນຂັ້ນນະໂຍບາຍ ໄດ້ຕົກລົງເຫັນດີ ຜັນຂະຫຍາຍບູລິມະສິດຕ່າງໆ ທີ່ ໄດ້ສົນທະນາກັນໃນກອງປະຊຸມໂຕະມົນປະຈຳປີ 2016,ເວົ້າສະເພາະ ທີ່ກ່ຽວຂ້ອງກັບຂົງເຂດຈຸດສຸມຂອງການເຕີບ ໂຕສີຂຽວ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ; SDGs; ຖະແຫຼງການວຽງຈັນ ແລະ ແຜນດຳເນີນງານ; ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ.

ເຫັນວ່າມີການປັບປຸງໃນດ້ານການເຂົ້າເຖິງນ້ຳສະອາດ ແລະ ສຸຂາພິບານ ຍ້ອນເສດຖະກິດ ສືບຕໍ່ຂະຫຍາຍຕົວດີ ສົ່ງຜົນກະທົບໃນທາງບວກຕໍ່ບັນດາແຜນງານຕ່າງໆ ທີ່ມີເປົ້າໝາຍແນ ໃສ່ຫຼຸດຜ່ອນພາລະແບກຫາບດ້ານພະຍາດຖອກທ້ອງ, ອະຫິວາ, ຕັບອັກເສບ A, ພະຍາດເຂດຮ້ອນທີ່ຖືກປ່ອຍປະລະເລີຍ ແລະ ພະຍາດອື່ນໆ ທີ່ກ່ຽວຂ້ອງກັບນ້ຳ, ສຸຂາພິບານ ແລະ ສຸຂະອະນາໄມ. ສິ່ງດັ່ງກ່າວ ຍັງຈະປະກອບສ່ວນທາງອ້ອມເຂົ້າໃນການປັບປຸງສະຖານະດ້ານໂພຊະນາການຂອງ ເດັກນ້ອຍພາຍໃນປະເທດ. 76 ສ່ວນຮ້ອຍຂອງປະຊາຊົນລາວ ໄດ້ເຂົ້າເຖິງແຫຼ່ງນ້ຳທີ່ດີກ່ວາເກົ່າ ແລະ 71 ສ່ວນຮ້ອຍ ໄດ້ເຂົ້າເຖິງສຸຂາພິບານທີ່ດີກ່ວາເດີມ. ໄດ້ຮ່າງນະໂຍບາຍວ່າດ້ວຍນ້ຳສະອາດ, ສຸຂາພິບານ ແລະ ສຸຂະອະນາໄມ ເຊິ່ງ ປະຈຸບັນນີ້ ນະໂຍບາຍດັ່ງກ່າວ ກຳລັງຢູ່ໃນຂະບວນການພິຈາລະນາຮັບຮອງ.

ເພື່ອເສີມຂະຫຍາຍການເຂົ້າເຖິງບໍລິການທີ່ມີຄຸນນະພາບທຸກທົ່ວໜ້າ, ລັດຖະບານ ມີເປົ້າໝາຍແນໃສ່ສ້າງຄວາມເຂັ້ມ ແຂງໃຫ້ການສະໜອງບໍລິການ ແລະ ການສະໜັບສະໜູນລະບົບປະກັນສຸຂະພາບແຫ່ງຊາດ ດ້ວຍການນຳໃຊ້ທຶນທີ່ໄດ້ ຈາກອາກອນຢາສູບ ເພື່ອສະໜອງການປະກັນສຸຂະພາບທາງສັງຄົມ. ສິ່ງດັ່ງກ່າວ ຮຽກຮ້ອງໃຫ້ມີວິທີການແບບມີຈຸດ ສຸມ ເພື່ອລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ, ຕົວຢ່າງ ເພື່ອຝຶກອົບຮົມທ່ານໝໍ, ພະຍາບານ, ທັນຕະເພດ, ຜະດຸງຄັນ ແລະ ວິຊາການສາທາລະນະສຸກດ້ານອື່ນໆ. ສອງສ່ວນຮ້ອຍຂອງອາກອນກຳໄລ ຈາກໂຄງການລິເລີ່ມກ່ຽວກັບ ການນຳໃຊ້ອາກອນຢາ

ສູບ ຈະຖືກນຳໃຊ້ເພື່ອສ້າງຕັ້ງກອງທຶນຄວບຄຸມຢາສູບ ເຊິ່ງຈະ ນຳໃຊ້ເພື່ອການປະກັນສຸຂະ ພາບສັງຄົມ ແລະ ກົນໄກການຈັດ ຕັ້ງປະຕິບັດລະບຽບການຄວບຄຸມຢາສູບ ເພື່ອສ້າງຮູບເຕືອນ ອັນຕະລາຍຂອງການ ສູບຢາລົງໃສ່ຊອງຢາສູບ, ສ້າງສະພາບ ແວດລ້ອມທີ່ປອດຄວັນຢາສູບ ແລະ ຫ້າມໂຄສະນາ, ສົ່ງເສີມ ຫຼື ຫ້າມບໍ່ໃຫ້ມີການອຸປະຖຳຈາກບໍລິສັດຜະລິດຢາສູບ.

ຫຼັງຈາກທີ່ໄດ້ຢືນຢັນວ່າມີເກີດກໍລະນີ ພະຍາດໂປລີໂອທີ່ເກີດ ມາຈາກກາຍພັນຂອງວັກແຊັງ (cVDPV) ທີ່ໄດ້ພົບເຫັນ ໃນ ເດືອນຕຸລາ 2015, ຈຶ່ງໄດ້ຈັດໃຫ້ມີການຢອດຢາວັກແຊັງກັນພະ ຍາດໂປລີໂອທາງປາກ ທັງໝົດ 9 ຮອບ . ພ້ອມນັ້ນ, ໄດ້ມີການ ປະເມີນພາຍນອກສອງຄັ້ງ ໃນເດືອນພຶດສະພາ ແລະ ເດືອນ ກັນຍາ ເພື່ອປະເມີນການຕອບໂຕ້ຕໍ່ການລະ ບາດດັ່ງກ່າວ ເຊິ່ງ ມີຄຳແນະນຳໃຫ້ປັບປຸງການຕິດຕາມເຝົ້າລະວັງກໍລະນີລ່ອຍ ແຫຼວກະທັນຫັນ (AFP). ໄດ້ຢືນຢັນວ່າມີ ທັງໝົດ 11 ກໍລະນີ ພະຍາດໂປລີໂອທີ່ເກີດມາຈາກກາຍພັນຂອງວັກແຊັງ (cVDPV) ພົບເຫັນຢູ່ ແຂວງບໍລິຄຳໄຊ, ໄຊ ສົມບູນ ແລະ ວຽງຈັນ. ທ່າມກາງການລະບາດຂອງໂປລີໂອ, ສປປ ລາວ ໄດ້ ຍັງຢືນຄວາມສຳເລັດການປ່ຽນການຢອດ ຢາກັນພະຍາດໂປລີ ໂອແບບ 3 ສາຍພັນ ມາເປັນ 2 ສາຍພັນ. ການປ່ຽນແປງດັ່ງ ກ່າວແມ່ນສອດຄ່ອງກັບ ແຜນຍຸດທະສາດລຶບລ້າງ ແລະ ຍຸຕິໂປລີໂອຂອງອົງການ WHO, ສຳລັບໄລຍະ 2013-2018 ເຊິ່ງໄດ້ຮຽກຮ້ອງໃຫ້ມີການຫັນປ່ຽນຢາວັກແຊັງ ທີ່ໃຊ້ລຶບລ້າງ ໂປລີໂອ.

ພະຍາດອື່ນໆທີ່ສາມາດປ້ອງກັນໄດ້ໂດຍການໃຫ້ຢາວັກແຊັງ ເຊັ່ນ: ພະຍາດໄອໄກ່ ແລະ ຄໍຕີບ ໄດ້ຮັບລາຍງານວ່າມີກໍ ລະນີ ເກີດຂຶ້ນຢູ່ບາງຊຸມຊົນໃນຊົນນະບົດ ທີ່ມີອັດຕາການສັກຢາວັກ ແຊັງທີ່ຕໍ່າ, ປະເທດລາວ ຈະສືບຕໍ່ສຸມໃສ່ ການສັກຢາກັນພະ ຍາດເປັນປະຈຳໃຫ້ເດັກນ້ອຍເກີດໃໝ່ ແລະ ເດັກລຸ່ມ 5 ປີ. ອີກຂົງເຂດໜຶ່ງທີ່ໜ້າເປັນຫ່ວງ ແມ່ນ ເຂດທີ່ມີໄຂ້ເລືອດອອກສູງ ເຊິ່ງພົບເຫັນຄັ້ງທຳອິດຢູ່ເມືອງສຸຂຸມາ ແຂວງຈຳປະສັກ ເມື່ອ ເດືອນເມສາ ເຊິ່ງກໍລະນີໄຂ້ ເລືອດອອກເພີ່ມຂຶ້ນສູງສຸດໃນທ້າຍ ເດືອນພຶດສະພາ ມີທັງໝົດ 198 ກໍລະນີ ແລະ ເສຍຊີວິດ 3 ກໍລະນີ. ມາຮອດປະຈຸບັນ, ມີກໍລະນີໄຂ້ເລືອດອອກທັງໝົດທົ່ວ ປະເທດ 5.373 ກໍລະນີ ແລະ ເສຍຊີວິດ 10 ກໍລະນີ ໃນນັ້ນ ລວມທັງ 1.325 ກໍລະນີ ແລະ ເສຍຊີວິດ 7 ກໍລະນີ ຈາກແຂວງ ຈຳປາສັກ ຕາມຂໍ້ມູນໃນວັນທີ 7 ທັນວາ.

> *“ຫຼັງຈາກທີ່ໄດ້ຢືນຢັນວ່າມີເກີດກໍລະນີ ພະ ຍາດໂປລີໂອທີ່ເກີດມາຈາກກາຍພັນຂອງ ວັກແຊັງ (cVDPV) ທີ່ໄດ້ພົບເຫັນ ໃນເດືອນ ຕຸລາ 2015, ຈຶ່ງໄດ້ຈັດໃຫ້ມີການຢອດຢາ ວັກແຊັງກັນພະຍາດໂປລີໂອທາງປາກ ທັງໝົດ 9 ຮອບ.”*

## ຜົນໄດ້ຮັບ

ບັນດາອົງການໃນລະບົບ ສປຊ ໄດ້ສືບຕໍ່ຄຳໝາຍໝັ້ນຂອງຕົນ ໃນການຂະຫຍາຍການຊ່ວຍເຫຼືອໃຫ້ຂະແໜງສາທາລະ ນະສຸກ ເຊິ່ງສອດຄ່ອງກັບ ຂອບການປະຕິຮູບຂະແໜງສາທາລະນະສຸກ 2025. ການສູ້ຊົນບັນລຸ SDGs ແລະ ບໍລິການ ສຸຂະພາບຢ່າງ ທົ່ວເຖິງ (UHC) ໃຫ້ໄດ້ພາຍໃນປີ 2030 ຍັງຄົງເປັນແຮງຂັບ ເຄື່ອນໃຫ້ວຽກງານຊ່ວຍເຫຼືອຢູ່ ສປປ ລາວ ຂອງບັນດາອົງການ ຕ່າງໆພາຍໃນລະບົບ ສປຊ ເຊິ່ງສອດຄ່ອງກັບ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ສະ ບັບທີ VIII (NSEDP 2016 -2020), ຂອບການຮ່ວມມືລະຫວ່າງ ສປປ ລາວ ແລະ ອົງ ການ ສປຊ 2017-2021 ແລະ ຍຸດທະສາດການຮ່ວມມືກັບ ປະເທດລາວ ຂອງອົງການ WHO ໃນໄລຍະດຽວກັນ. ຍຸດທະ ສາດຂອງອົງການ WHO ໄດ້ ລະບຸຫ້າທິດທາງບູລິມະສິດຄື: ການຈັດຕັ້ງປະຕິບັດແຜນງານສາທາລະນະສຸກທີ່ເປັນບູລິມະ ສິດ, ສ້າງຄວາມເຂັ້ມແຂງ ໃຫ້ຄວາມຕ້ານທານຂອງລະບົບ ສາທາລະນະສຸກ, ເພີ່ມຄວາມສາມາດເພື່ອຮັບປະກັນການຄ້ຳ ປະກັນສຸຂະພາບ, ປັບ ປຸງປະສິດທິຜົນຂອງການພັດທະນາ ທີ່ສອດຄ່ອງກັບ ຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມ ງານ, ແລະ ການ ເປັນຄູ່ຮ່ວມງານຢ່າງຕັ້ງໜ້າພາຍໃນບັນດາ ໂຄງການລິເລີ່ມລະດັບອະນຸພາກພື້ນລຸ່ມແມ່ນ້ຳຂອງ.

ໃນຖານະເປັນສ່ວນໜຶ່ງຂອງການປະຕິຮູບຂະແໜງສາທາລະ ນະສຸກ ໄລຍະ II (2016-2020), ອົງການ WHO ໄດ້ສຸມໃສ່ ການສ້າງຄວາມເຂັ້ມແຂງໃຫ້ ການຮັກສາສຸຂະພາບຂັ້ນພື້ນຖານ ແລະ ການພັດທະນາຊຸດບໍລິການເປົ້າໝາຍ ໂດຍ ສະເພາະຢູ່ ຂັ້ນທ້ອງຖິ່ນ. ບໍລິການສຸຂະພາບແມ່ແລະເດັກແບບເຊື່ອມສານ ຈະຖືກນຳໃຊ້ເປັນຈຸດເລີ່ມຕົ້ນຂອງການ ຊ່ວຍເຫຼືອ ລວມທັງ ການໃຫ້ຄຳປຶກສາດ້ານການວາງແຜນຄອບຄົວ, ການຝາກ ທ້ອງ, ກິດຈະກຳສັກຢາກັນພະຍາດ ແລະ ບໍລິການເຂົ້າເຖິງຊຸມ ຊົນທີ່ດ້ອຍໂອກາດຢູ່ເຂດທີ່ເຂົ້າເຖິງໄດ້ຍາກ.

ໄດ້ຮັບຮອງເອົາ ຍຸດທະສາດແຫ່ງຊາດ ແລະ ແຜນດຳເນີນງານ ສຳລັບການສະໜອງບໍລິການສຸຂະພາບຈະເລີນພັນ, ສຸຂະພາບ ຂອງແມ່, ຂອງເດັກເກີດໃໝ່ ແລະ ຂອງເດັກນ້ອຍແບບເຊື່ອມ ສານ, ສຳລັບໄລຍະ 2016-2025 ທີ່ສ້າງຂຶ້ນ ໂດຍໄດ້ຮັບການ ຊ່ວຍເຫຼືອຈາກອົງການ UNFPA, UNICEF ແລະ WHO. ບົດແນະນຳດ້ານເຕັກນິກສະບັບໃໝ່ ໄດ້ລວມເອົາ ຄູ່ມືພິກພາ ສຳລັບການປິ່ນປົວເດັກເກີດໃໝ່, ປຶ້ມການປິ່ນປົວເດັກໃນໂຮງ ໝໍ (ສະບັບທີ 2) ແລະ ບົດແນະນຳການສົ່ງຕໍ່ຄົນເຈັບ ແລະ ຄູ່ມື ການປິ່ນປົວເພື່ອປ້ອງກັນການແທ້ງລູກທີ່ບໍ່ປອດໄພ.

ຍ້ອນວ່າພະຍາດຕິດແປດ ຍັງຄົງເປັນສາເຫດຕົ້ນຕໍຂອງອັດຕາ ການເຈັບປ່ວຍ ແລະ ເສຍຊີວິດ ໃນ ສປປ ລາວ, ອົງການ WHO ສືບຕໍ່ສະໜັບສະໜູນກິດຈະກຳຕ່າງໆຂອງ ກົມຄວບຄຸມ ພະຍາດຕິດຕໍ່ ແລະ ສູນວິເຄາະແລະລະບາດວິທະຍາແຫ່ງຊາດ ສຳລັບລະບົບການຕິດຕາມເຝົ້າລະວັງແຫ່ງຊາດ ເພື່ອຮັບປະ ກັນການຕອບໂຕ້ຢ່າງພຽງພໍໃນວຽກງານປົກ ປ້ອງສຸຂະພາບ ຂອງປະຊາຊົນ. ການແຜ່ລະບາດຂອງໂປລີໂອ ໃນຄັ້ງຫຼ້າສຸດນີ້ ສະແດງໃຫ້ເຫັນຄວາມຈຳເປັນ ໃນການ ສືບຕໍ່ລົງທຶນເພື່ອປັບ ປຸງວຽກງານການຕິດຕາມເຝົ້າລະວັງ. ໃນເວລາດຽວກັນ, ການຄ້າສາກົນ ແລະ ການເດີນທາງທົ່ວ ໂລກ ອາດຈະເປັນຜົນ ນຳໄປສູ່ການແຜ່ລະບາດຂອງພະຍາດຕິດແປດ ດັ່ງທີ່ພວກເຮົາ ໄດ້ເຫັນໃນກໍລະນີຂອງພະຍາດ ເຊື້ອໄວຣັສໂຄໂລນາຕາເວັນ ອອກກາງທີ່ສົ່ງຜົນກະທົບຕໍ່ລະບົບທາງເດີນຫາຍໃຈ

(MERS-CoV), ພະຍາດໄວຣັສອີ ໂບລາ, ໄຂ້ຫວັດສັດປີກ ແລະ ຫຼ້າສຸດກໍ່ແມ່ນ ພະຍາດໄວຣັສຊິກາ (Zika) ທີ່ສົ່ງຜົນກະທົບຕໍ່ 22 ປະເທດໃນພາກພື້ນນີ້.

ກົດລະບຽບສາກົນດ້ານສາທາລະນະສຸກ 2015, ຍຸດທະສາດອາຊີປາຊີຟິກສຳລັບພະຍາດທີ່ເກີດຂຶ້ນໃໝ່ ແລະ ເຫດການສຸກເສີນທາງດ້ານສາທາລະນະສຸກ ແລະ ວຽກງານການປະເມີນຜົນຮ່ວມກັນ ຈະຊ່ວຍສະໜັບສະໜູນ ສປປ ລາວ ໃນການສ້າງຄວາມສາມາດ ເພື່ອກວດຫາ ແລະ ຕອບໂຕ້ໄພຄຸກຄາມຈາກພະຍາດຕິດແປດທີ່ເກີດຂຶ້ນໃໝ່ ແລະ ເຫດ ສຸກເສີນທາງດ້ານສາທາລະນະສຸກ ດ້ວຍການເສີມຂະຫຍາຍຄວາມສາມາດໃນການຕິດຕາມເຝົ້າລະວັງ ແລະ ການເຮັດວຽກຂອງຫ້ອງທົດລອງ.

ເພື່ອຫຼຸດຜ່ອນຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດຕໍ່ລະບົບສາທາລະນະສຸກ, ອົງການ WHO ກຳລັງເຮັດວຽກຮ່ວມກັບ ອົງການ UNDP ເພື່ອສະໜອງການຊ່ວຍເຫຼືອໃຫ້ ລັດຖະບານ ໃນການເພີ່ມຄວາມຕ້ານທານ ຂອງພື້ນຖານໂຄງລ່າງດ້ານສາທາລະນະສຸກ ແລະ ລະບົບນ້ຳປະປາ, ປັບປຸງບໍລິການສາທາລະນະສຸກ ສຳລັບການປັບ ຕົວເຂົ້າກັບການປ່ຽນແປງຂອງສະພາບດິນຟ້າອາກາດ, ແລະ ການຮັບມືກັບຜົນກະທົບຈາກປ່ຽນແປງຂອງສະພາບດິນ ຟ້າອາກາດ ທີ່ເກີດຍ້ອນການປ່ຽນແປງຂອງສະພາບດິນຟ້າອາກາດ.

ໃນປີ 2016,  ລັດຖະບານ ໄດ້ໃຫ້ຄຳໝາຍໝັ້ນວ່າຈະເປັນພາກສ່ວນໜຶ່ງຂອງຂະບວນການເຄື່ອນໄຫວສາກົນເພື່ອສົ່ງເສີມການວາງແຜນຄອບຄົວ 2020. ຄຳໝາຍໝັ້ນດັ່ງກ່າວ ລວມເອົາ: ເພີ່ມອັດຕາການນຳໃຊ້ວິທີຄຸມກຳເນີດທີ່ທັນສະ  ໄໝຈາກ 42 ເປັນ 65 ສ່ວນຮ້ອຍ, ຫຼຸດຄວາມຕ້ອງການວາງແຜນຄອບຄົວທີ່ບໍ່ຮັບບໍລິການຈາກ 20 ລົງມາເປັນ 13 ສ່ວນຮ້ອຍ; ແລະ ຂະຫຍາຍອັດຕາການປົກຄຸມຂອງການວາງແຜນຄອບຄົວ ແລະ ການປະສົມປະສານວິທີການຄຸມ ເນີດ. ໃນດ້ານນະໂຍບາຍ, ຄຳໝາຍໝັ້ນດັ່ງກ່າວ ແມ່ນເພື່ອຮັບຮອງເອົານະໂຍບາຍສະໜັບສະໜູນຕ່າງໆ ເພື່ອເຮັດໃຫ້ ມີການສະໜອງບໍລິການວາງແຜນຄອບຄົວຢ່າງທົ່ວເຖິງ, ສ້າງຍຸດທະສາດແຫ່ງຊາດວ່າດ້ວຍໂຄສະນາສຶກສາອົບຮົມ ແລະສື່ສານຂໍ້ມູນຂ່າວສານກ່ຽວກັບການວາງແຜນຄອບຄົວ ແລະ ເພີ່ມການຈັດສັນງົບປະມານຂອງລັດເຂົ້າໃນການ ຈັດຊື້ອຸປະກອນຄຸມກຳເນີດ.

ອົງການ UNFPA ໄດ້ໃຫ້ການຊ່ວຍເຫຼືອກະຊວງສາທາລະນະສຸກ ເພື່ອຈັດຕັ້ງປະຕິບັດຍຸດທະສາດວ່າດ້ວຍການສະ ໜອງບໍລິການສຸຂະພາບຈະເລີນພັນ, ສຸຂະພາບຂອງແມ່, ຂອງເດັກເກີດໃໝ່ ແລະ ຂອງເດັກນ້ອຍແບບເຊື່ອມສານ ໃນ ຫຼາຍຂົງເຂດເພື່ອສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດ ແລະ ປັບປຸງຄຸນນະພາບຂອງບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ເຊິ່ງລວມທັງການສ້າງ ແລະ ບໍລິການຜະດຸງຄັນ; ການຕິດຕາມເຝົ້າລະວັງ ແລະ ການຕອບ ໂຕ້ກໍລະນີການຕາຍຂອງແມ່; ການວາງແຜນຄອບຄົວ; ລະບົບຄຸ້ມຄອງພາລາທິການຂອງສິນຄ້າແລະຢາປົວພະຍາດ; ແລະ ກິດຈະກຳຊ່ວຍເຫຼືອທີ່ເອົາຊຸມຊົນເປັນໃຈກາງ ເພື່ອປັບປຸງສຸຂະພາບຈະເລີນພັນໃນເຂດຫ່າງໄກສອກຫຼີກ.

ວຽກທີ່ກ່ຽວພັນກັບຜະດຸງຄັນ ໃນປີ 2016 ແມ່ນໄດ້ສຸມໃສ່ປັບປຸງຄຸນນະພາບຂອງການສອນວິຊາຜະດຸງຄັນ ໂດຍຜ່ານການສ້າງຄວາມສາມາດໃຫ້ຄູ ແລະ ຜູ້ບໍລິຫານໂຮງຮຽນ ເພື່ອປັບປຸງການຄຸ້ມຄອງ ແລະ ນະພາບຂອງຫຼັກສູດສ້າງ ຜະດຸງຄັນ. ໄດ້ສຳເລັດການສ້າງແຜນປັບປຸງຜະດຸງຄັນ 2016-2020 ແລະ ໂດຍແຜນດັ່ງກ່າວ ແມ່ນລັດຖະບານ ໄດ້ຮັບ ຮອງເອົາແລ້ວ. ແຜນດັ່ງກ່າວ ຈະສຸມໃສ່ການປັບປຸງຄຸນນະພາບຂອງການສ້າງຜະລຸງຄັນ ແລະບໍລິການຜະດຸງຄັນ ຜ່ານການສ້າງຄວາມເຂັ້ມແຂງໃຫ້ທັກສະ ແລະ ຄວາມຮູ້ຂອງຄູສອນຜະດຸງຄັນ.

> *ໄດ້ຮັບຮອງເອົາ ຍຸດທະສາດແຫ່ງຊາດ ແລະ ແຜນດຳເນີນງານສຳລັບການສະໜອງບໍລິການສຸຂະພາບຈະເລີນພັນ, ສຸຂະພາບຂອງແມ່, ຂອງເດັກເກີດໃໝ່ ແລະ ຂອງເດັກນ້ອຍແບບເຊື່ອມສານ, ສຳລັບໄລຍະ 2016-2025 ທີ່ສ້າງຂຶ້ນ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ UNFPA, UNICEF ແລະ WHO.*

ໂດຍການປະສານງານກັບອົງການ WHO, ອົງການ UNFPA ໄດ້ສະໜອງການຊ່ວຍເຫຼືອໃຫ້ກົມປິ່ນປົວ ແລະ ກົມ ອະນາໄມ ແລະ ສົ່ງເສີມສຸຂະພາບ ເພື່ອຮັບປະກັນວ່າ: ຄະນະກຳມະການວິຊາການ ແລະ ຄະນະກຳມະການຊີ້ນຳວຽກ ງານຕິດຕາມເຝົ້າລະວັງແລະຕອບໂຕ້ກໍລະນີການຕາຍຂອງແມ່ ນັ້ນເຄື່ອນໄຫວດຳເນີນງານໄດ້ເປັນຢ່າງດີ.

ໄດ້ສ້າງຊຸດເຄື່ອງມືຝຶກອົບຮົມການວາງແຜນຄອບຄົວຂຶ້ນ ທີ່ລວມເອົາເອກະສານ ແລະ ເຄື່ອງມືຕ່າງໆ ສຳລັບໃຊ້ໃນ ການຝຶກອົບຮົມຜູ້ໃຫ້ບໍລິການສາທາລະນະສຸກ. ດ້ວຍການຮ່ວມມືກັບອົງການສົ່ງເສີມການເຂົ້າເຖິງບໍລິການສາທາລະນະສຸກຄຣິນຕັນ, ໄດ້ສ້າງຄວາມເຂັ້ມແຂງໃຫ້ລະບົບຄຸ້ມຄອງພາລາທິການສາທາ ຢູ່ບາງແຂວງທົດລອງ ຜ່ານການເສີມ ຄວາມເຂັ້ມແຂງໃຫ້ຕ່ອງໂສ້ການສະໜອງ ໂດຍນຳໃຊ້ລະບົບເອັມຊັບພລາຍ (mSupply). ນອກຈາກນີ້, ຍ້ອນໄດ້ຮັບ ການຊ່ວຍເຫຼືອດ້ານເຕັກນິກ ແລະ ການຈັດຕັ້ງ ຈາກ ອົງການ UNFPA, ຄະນະກຳມະການຄຸ້ມຄອງຕ່ອງໂສ້ການສະໜອງຢູ່ຂັ້ນສູນກາງ ສາມາດເຮັດການຄາດຄະເນອຸປະກອນສິນຄ້າດ້ານສຸຂະພາບ ຈະເລີນພັນ ເຊິ່ງລວມທັງອຸປະກອນຄຸມກຳເນີດ ໄດ້ທຸກທົກເດືອນ.

ກິດຈະກຳຊ່ວຍເຫຼືອໃນຂັ້ນທ້ອງຖິ່ນ ໄດ້ສຸມໃສ່ເຂດຫ່າງໄກສອກຫຼີກຢູ່ແຂວງເປົ້າໝາຍ ເຊິ່ງເປັນເຂດທີ່ການເຂົ້າເຖິງບໍລິການສຸຂະພາບຈະເລີນພັນ ຍັງຕ່ຳ. ປະຈຸບັນ ຜູ້ນຳຊຸມຊົນສາມາດຊ່ວຍອາສາສະໝັກສາທາບ້ານ ໄດ້ດີຂຶ້ນກວ່າ ເກົ່າເມື່ອທຽບໃສ່ເມື່ອກ່ອນ; ສ່ວນຜູ້ສະໜອງອຸປະກອນຄຸມກຳເນີດໃນຊຸມຊົນ ກໍ່ເຫັນວ່າ: ສາມາດສະໜອງອຸປະກອນ ຄຸມກຳເນີດໃຫ້ແມ່ຍິງໃນເຂດຫ່າງໄກສອກຫຼີກ ໄດ້ດີຂຶ້ນກ່ວາເດີມຫຼາຍ. ພ້ອມນັ້ນ ຍັງເຫັນວ່າ: ຜູ້ນຳຊຸມຊົນ ມີຄວາມສາ ມາດເພີ່ມຂຶ້ນໃນການປູກຈິດສຳນຶກໃຫ້ຊຸມຊົນຂອງເຂົາເຈົ້າຮູ້ກ່ຽວກັບຂໍ້ມູນຂ່າວສານດ້ານສຸຂະພາບທາງເພດ ແລະ ສຸ ຂະພາບຈະເລີນ

ພັນ, ບໍລິການການສົ່ງຕໍ່ ແລະ ການສ້າງແຜນກຽມພ້ອມການເກີດລູກສຸກເສີນ. ລາຍການວິທະຍຸຊຸມຊົນ ຍັງຊ່ວຍກະຈາຍສຽງເນື້ອໃນສາລະກ່ຽວກັບກ່ຽວກັບສຸຂະພາບຈະເລີນພັນ ເປັນພາສາຊົນເຜົ່າທ້ອງຖິ່ນ (ດັ່ງທີ່ໄດ້ສົນທະ ນາໄວ້ໃນ ພາກ 2), ເພື່ອປູກຈິດສໍານຶກກ່ຽວກັບບໍລິການທີ່ມີຢູ່ໃນປະຈຸບັນ, ວິທີການວາງແຜນຄອບຄົວ ແລະ ຫົວຂໍ້ ອື່ນໆທີ່ກ່ຽວຂ້ອງກັບການປັບປຸງສຸຂະພາບຈະເລີນພັນ.

ອົງການ IOM ຍັງໃຫ້ການຊ່ວຍເຫຼືອຕໍ່ຄວາມພະຍາຍາມຂອງກະຊວງສາທາລະນະສຸກ ເພື່ອລຶບລ້າງການລະບາດຂອງໄຂ້ຍຸງທີ່ດື້ຢາ ເວົ້າສະເພາະ ແມ່ນການແກ້ໄຂປັດໄຈຂັບເຄື່ອນຕົ້ນຕໍໃນການລະບາດປະຈຸບັນຂອງໄຂ້ຍຸງ ຢູ່ ສປປ ລາວ ຄື: ຂໍ້ຈໍາກັດໃນການເຂົ້າເຖິງບໍລິການປ້ອງກັນ, ກວດຫາເຊື້ອ ແລະ ປິ່ນປົວໄຂ້ຍຸງ ຂອງປະຊາກອນເຄື່ອນທີ່ ແລະ ແຮງງານເຄື່ອນຍ້າຍ ຢູ່ພາກໃຕ້ຂອງ ສປປ ລາວ.

ດ້ວຍການຊ່ວຍເຫຼືອຈາກອົງການ UNICEF, ໃນປີ 2016 ປະຊາຊົນ ປະມານ 39.000 ຄົນທີ່ອາໄສຢູ່ເຂດຊົນນະບົດຫ່າງໄກສອກຫຼີກຂອງແຂວງຊຽງຂວາງ, ສາລະວັນ ແລະ ຜົ້ງສາລີ ສາມາດເຂົ້າເຖິງແຫຼ່ງນໍ້າທີ່ໄດ້ຮັບການປັບປຸງດີຂຶ້ນ ຈາກເມື່ອກ່ອນ. ນັກຮຽນຊັ້ນປະຖົມ ຈໍານວນ 10.318 ຄົນ ເປັນຍິງ 5.145 ຄົນ ຈາກໂຮງຮຽນປະຖົມ 102 ແຫ່ງໃນ ແຂວງອຸດົມໄຊ, ສາລະວັນ ແລະ ສະຫວັນນະເຂດ ໄດ້ຮັບຜົນປະໂຫຍດໂດຍກົງ ຈາກການບໍລິການນໍ້າສະອາດ, ສຸຂາ ພິບານ, ສຸຂະອະນາໄມໃນໂຮງຮຽນ ເຊິ່ງລວມເອົາການສະໜອງວິດຖ່າຍທີ່ເດັກພິການສາມາດເຂົ້ານໍາໃຊ້ໄດ້ສະດວກ ເປັນວິດແຍກຫ້ອງສໍາລັບເດັກຊາຍ, ເດັກຍິງ ພ້ອມທັງມີອ່າງລ້າງມື ແລະ ມີການເຂົ້າເຖິງແຫຼ່ງນໍ້າທີ່ໄດ້ຮັບການປັບປຸງ.

ມີນັກຮຽນອີກ 5.452 ຄົນ ຈາກໂຮງຮຽນປະຖົມ 51 ແຫ່ງ ໄດ້ປະຕິບັດການລ້າງມືໃສ່ສະບູເປັນກຸ່ມທຸກມື້ ກ່ອນກິນເຂົ້າ ຢູ່ໂຮງຮຽນ, ກ່ອນ ແລະ ຫຼັງໃຊ້ຫ້ອງນໍ້າ, ດື່ມນໍ້າທີ່ກອງສະອາດດີໃນຫ້ອງຮຽນ ແລະ ອະນາໄມເດີ່ນໂຮງຮຽນໃຫ້ສະອາດ ໃນຖານະເປັນພຶດຕິກໍາປະຈໍາວັນ ພາຍໃຕ້ໂຄງການລິເລີ່ມສົ່ງເສີມສຸຂະອະນາໄມທີ່ນັກຮຽນເປັນເຈົ້າຕາມບັນດາໂຮງ ຮຽນເປົ້າໝາຍໃນແຂວງສາລະວັນ.

ອົງການ UNICEF ໄດ້ລິເລີ່ມວິທີການຂະຫຍາຍສຸຂາພິບານທົ່ວເມືອງ ໂດຍພິຈາລະນາລວມທົ່ວເມືອງເປັນຫົວໜ່ວຍ ດຽວ. ຜົນໄດ້ຮັບກໍຄື ສປປ ລາວ ຍາດໄດ້ຄວາມຄືບໜ້າສໍາຄັນຂອງຂອບເຂດປົກຄຸມດ້ານສຸຂາພິບານທົ່ວສອງເມືອງ ຄື: ເມືອງທ່າພະບາດ ແລະ ເມືອງປາກຊັນ ແຂວງບໍລິຄໍາໄຊ ເປັນສອງເມືອງທໍາອິດທີ່ປະກາດເປັນເມືອງປອດການຖ່າຍຊະຊາຍ. ມີປະຊາຊົນໃນເຂດຊົນນະບົດຂອງສອງແຂວງ (ຄື: ບໍລິຄໍາໄຊແລະສາລະວັນ) ຫຼາຍກ່ວາ 81.500 ຄົນ ເປັນເດັກຍິງແລະແມ່ຍິງ 40.635 ຄົນ ທີ່ປະຈຸບັນໄດ້ຢູ່ໃນສັງຄົມທີ່ປອດການຖ່າຍຊະຊາຍ. ເຖິງຢ່າງໃດກໍ່ຕາມ, ຢູ່ອີກຫຼາຍຊຸມຊົນໃນເຂດຊົນນະບົດ ຍັງມີຊ່ອງຫວ່າງໃຫຍ່ ລະຫວ່າງການເຂົ້າເຖິງ ແລະ ການນໍາໃຊ້ສິ່ງອໍານວຍຄວາມສະດວກດ້ານສຸຂາພິບານ.

ດ້ວຍການຊ່ວຍເຫຼືອຈາກຈາກອົງການ WHO, ໄດ້ໃຊ້ຂະບວນການຂໍຄໍາປຶກສາເພື່ອສ້າງນະໂຍບາຍ ແລະ ຍຸດທະສາດຮ່ວມລະຫວ່າງຫຼາຍຂະແໜງການ ເຊັ່ນ: ແຜນຍຸດທະສາດອະນາໄມສິ່ງແວດລ້ອມແຫ່ງຊາດ ສໍາລັບໄລຍະ 2016-2020, ລະບຽບການວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອທາງການແພດ, ມາດຕະຖານອະນາໄມສິ່ງແວດລ້ອມພື້ນຖານສໍາລັບສະຖານທີ່ໃຫ້ບໍລິການປິ່ນປົວ ແລະ ດໍາລັດນາຍົກລັດຖະມົນຕີວ່າດ້ວຍສຸຂະພາບ ແລະ ຄວາມປອດໄພແຮງງານ. ພະນັກງານຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນໂຮງໝໍ ປະຈຸບັນຖືວ່າ: ມີຄວາມເຂົ້າໃຈດີກ່ວາເກົ່າກ່ຽວກັບການຄຸ້ມຄອງນໍ້າຢູ່ສະຖານທີ່ປິ່ນປົວ. ໄດ້ມີການສ້າງໂຮງໝໍຕົວແບບທີ່ມີການຄຸ້ມຄອງສິ່ງເສດເຫຼືອຢູ່ສະຖານທີ່ປິ່ນປົວທີ່ເຮັດໄດ້ດີ.

ອົງການ WHO ໄດ້ໃຫ້ການຊ່ວຍເຫຼືອລັດຖະບານ ໃນການນໍາສະເໜີການຕິດຕາມເຝົ້າລະວັງຄຸນນະພາບນໍ້າ ແລະ ການກວດສອບແຜນນໍ້າປອດໄພ ໂດຍຜ່ານການສ້າງບົດແນະນໍາ ແລະ ຄູ່ມືຝຶກອົບຮົມຕ່າງໆ, ພ້ອມທັງສະໜອງອຸປະກອນເກັບຕົວຢ່າງ ແລະ ທົດສອບຄຸນນະພາບນໍ້າແບບວ່ອງໄວໃຫ້ກະຊວງສາທາ, ນໍ້າສະອາດສູນກາງ ແລະ ພະແນກສາທາລະນະສຸກແຂວງ ສິບແຂວງ. ໄດ້ຈັດການຝຶກອົບຮົມຄູຝຶກກ່ຽວກັບຄວາມປອດໄພຂອງນໍ້າ ໃຫ້ 11 ຫ້ອງການນໍ້າ ສະອາດຂັ້ນແຂວງແລະເມືອງ. ໄດ້ສ້າງ ແລະ ຈັດຕັ້ງປະຕິບັດແຜນນໍ້າປອດໄພສໍາລັບການສະໜອງນໍ້າທີ່ຊຸມຊົນເປັນເຈົ້າການຄຸ້ມຄອງຢູ່ 44 ບ້ານຊົນນະບົດ.

ຄູ່ຮ່ວມງານ ອົງການ ສປຊ (ອົງການ UNICEF, UNFPA ແລະ WHO) ໄດ້ສືບຕໍ່ສະໜອງການຊ່ວຍເຫຼືອຜ່ານແຜນງານສຸຂະພາບຈະເລີນພັນ, ສຸຂະພາບຂອງແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ທີ່ເປັນແຜນງານຮ່ວມ ດ້ວຍການປັບປຸງການປິ່ນປົວສູຕິສາດສຸກເສີນ ແລະ ການເບິ່ງແຍງເດັກເກີດໃໝ່,

*ຄູ່ຮ່ວມງານ ອົງການ ສປຊ (ອົງການ UNICEF, UNFPA ແລະ WHO) ໄດ້ສືບຕໍ່ສະໜອງການຊ່ວຍເຫຼືອຜ່ານແຜນ ງານສຸຂະພາບຈະເລີນພັນ, ສຸຂະພາບຂອງແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ທີ່ເປັນແຜນງານຮ່ວມ ດ້ວຍການປັບປຸງ ການປິ່ນປົວສູຕິສາດສຸກເສີນ ແລະ ການເບິ່ງແຍງເດັກເກີດໃໝ່, ສ້າງຄວາມເຂັ້ມແຂງໃຫ້ລະບົບສາທາລະນະສຸກ ແລະ ສ້າງຄວາມສາມາດໃນຂົງເຂດວຽກງານເຫຼົ່ານີ້ ຕະຫຼອດເຖິງເສີມຂະຫຍາຍການເຊື່ອມສານຂອງບໍລິການຕ່າງໆ ເພື່ອ ເປັນການເບິ່ງແຍງຕໍ່ເນື່ອງຕະຫຼອດຮອບວຽນຊີວິດ.*

ສ້າງຄວາມເຂັ້ມແຂງໃຫ້ລະບົບສາທາລະນະສຸກ ແລະ ສ້າງຄວາມສາມາດໃນຂົງເຂດວຽກງານເຫຼົ່ານີ້ ຕະຫຼອດເຖິງເສີມຂະຫຍາຍການເຊື່ອມສານຂອງບໍລິການຕ່າງໆ ເພື່ອ ເປັນການເບິ່ງແຍງຕໍ່ເນື່ອງຕະຫຼອດຮອບວຽນຊີວິດ . ຍ້ອນເຫດນັ້ນ, ແຜນງານດັ່ງກ່າວ ຈິ່ງປະກອບສ່ວນເຂົ້າໃນການບັນ ລຸເປົ້າໝາຍພັດທະນາແບບຍືນຍົງ ແລະ ບໍລິການສຸຂະພາບຢ່າງທົ່ວເຖິງ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ເຖິງແມ່ນວ່າ ຈະມີຫຼາຍຜົນສຳເລັດເປັນຮູບປະທຳ ໃນຊຸມປີຜ່ານມາ ອັນເປັນຜົນເນື່ອງຈາກການພັດທາເສດຖະກິດ-ສັງຄົມ, ເດັກນ້ອຍລາວ ຍັງຄົງຂາດສານອາຫານຫຼາຍທີ່ສຸດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ເຊິ່ງມີອັດຕາເດັກເຕ້ຍ 36 ສ່ວນຮ້ອຍ ໃນກຸ່ມເດັກນ້ອຍອາຍຸຕ່ຳກ່ວາ 5 ປີ. ຄວາມຍືນຍົງຂອງຜົນໄດ້ຮັບທີ່ບັນລຸໄດ້ສຳລັບເດັກນ້ອຍ ຜ່ານການຊ່ວຍເຫຼືອໃນຂົງເຂດການສັກຢາກັນພະຍາດ, ໃຫ້ວິຕາມິນ A ເສີມ ແລະ ການກິນຢາຂ້າແມ່ທ້ອງ ຍັງເຫັນວ່າ: ບໍ່ເຂັ້ມ ແຂງພໍ.

ເພື່ອປັບປຸງສຸຂະພາບຂອງເດັກນ້ອຍ ແລະ ປະຊາຊົນລາວ, ມີຄວາມຈຳເປັນຕ້ອງສືບຕໍ່ລົງທຶນໃສ່ການສະໜອງ ບໍລິການສາທາລະນະສຸກ, ນ້ຳສະອາດ, ສຸຂາພິບານ ແລະ ສຸຂະອະນາໄມ, ການສຶກສາ, ກິດຈະກຳຊ່ວຍເຫຼືອດ້ານກະ ສິກຳທີ່ເອົາໃຈໃສ່ໂພຊະນາການ ແລະ ການສື່ສານເພື່ອປ່ຽນແປງພຶດຕິກຳ - ເປັນວິທີທາງແກ້ບັນຫາແບບເຊື່ອມສານ ແລະຍືນຍົງເພື່ອແກ້ໄຂການຄ້ຳປະກັນສະບຽງອາຫານແລະໂພຊະນາການ.

ຍ້ອນວ່າ ສປປ ລາວ ກຳລັງກ້າວສູ່ການຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ ພາຍໃນ ປີ 2020, ຄາດວ່າ: ການຊ່ວຍເຫຼືອທາງດ້ານການເງິນເພື່ອການພັດທະນາ ກໍ່ຈະຄ່ອຍນັບມື້ນັບຫຼຸດລົງ ເຊິ່ງລວມທັງການ ຊ່ວຍເຫຼືອທາງການເງິນເພື່ອຈັດຊື້ອຸປະກອນຄຸມກຳເນີດ. ອົງການ UNFPA ເກືອບຢາກວ່າເປັນພາກສ່ວນດຽວທີ່ສະ ໜອງອຸປະກອນຄຸມກຳເນີດ ໃຫ້ແຜນງານວາງແຜນຄອບຄົວທົ່ວປະເທດ. ໃນໄລຍະ 5 ປີທີ່ຜ່ານມາ ດ້ວຍການໂຄສະ ນາ-ສົ່ງເສີມນະໂຍບາຍຢ່າງຕໍ່ເນື່ອງ, ລັດຖະບານ ໄດ້ເພີ່ມທຶນສົມທົບໃນການຈັດຊື້ສິນຄ້າເຫຼົ່ານັ້ນ. ເຖິງວ່າລັດມີຄຳ ໝາຍໝັ້ນຕໍ່ວຽກງານການວາງແຜນຄອບຄົວ, ການປະກອບສ່ວນທາງການເງິນເພື່ອຈັດຊື້ສິນຄ້າເຫຼົ່ານັ້ນ ຍັງເຫັນວ່າ: ບໍ່ ທັນພຽງພໍ.

ດັ່ງທີ່ເຫັນຕົວຢ່າງຂອງປະເທດ ກຳປູເຈຍ, ການໂຄສະນາ-ສົ່ງເສີມນະໂຍບາຍ ທີ່ນຳໃຊ້ຂໍ້ມູນການວິເຄາະຜົນໄດ້-ຜົນ ເສຍ ເປັນຜົນນຳໄປສູ່ການເພີ່ມຂຶ້ນຂອງການລົງທຶນຈາກລັດຖະບານ ເຂົ້າໃນຂົງເຂດວຽກງານດັ່ງກ່າວ ເຊິ່ງໃນທ້າຍທີ່ສຸດກໍນຳໄປສູ່ຄວາມເປັນເຈົ້າການຂອງປະເທດຢ່າງສົມບູນ - ປະຈຸບັນ, ລັດຖະບານກຳປູເຈຍ ເປັນຜູ້ສະໜອງສິນຄ້າດ້ານການວາງແຜນຄອບຄົວພຽງຜູ້ດຽວ. ດ້ວຍເຫດນັ້ນ, ອົງການ UNFPA ຈິ່ງໄດ້ເລີ່ມເຮັດວຽກກັບສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດ ເຊິ່ງເປັນເສນາທິການໃຫ້ລັດຖະບານໃນການຄົ້ນຄ້ວາບັນຫານະໂຍບາຍ ເພື່ອວິເຄາະຜົນໄດ້-ຜົນເສຍຂອງແຜນງານວາງແຜນຄອບຄົວ. ຈະມີການສ້າງເອກະສານເພື່ອໂຄສະນາ-ສົ່ງເສີມນະໂຍບາຍ ຕາມຂໍ້ມູນຫຼັກຖານຕົວຈິງ ທີ່ໄດ້ຈາກແຜນງານວາງແຜນຄອບຄົວ ແລະ ການລົງທຶນຂອງລັດຖະບານໃສ່ວຽກງານດັ່ງກ່າວ. ຜົນໄດ້ ຮັບເບື້ອງຕົ້ນຈາກການວິເຄາະດັ່ງກ່າວ ສະແດງໃຫ້ເຫັນວ່າ: ສໍາລັບການລົງທຶນທຸກໜຶ່ງໂດລາສະຫະລັດໃສ່ການວາງແຜນຄອບຄົວ ຈະໄດ້ຮັບຜົນຕອບແທນຄືນທີ່ມີມູນຄ່າ 5 ໂດລາສະຫະລັດ
ໂດຍສາມາດຊ່ວຍຫຼີກລ່ຽງກໍລະນີຖືພາແບບ ບໍ່ຕັ້ງໃຈໄດ້ 145.000 ກໍລະນີ, 120 ກໍລະນີການຕາຍຂອງແມ່ ແລະ 82.000 ກໍລະນີການແທ້ງລູກ.



# 5. ການປັບປຸງການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ

# ປະຊາຊົນທີ່ບໍ່ສາມາດປົກປ້ອງຕົນເອງໄດ້ ໄດ້ຮັບການຄໍ້າປະກັນສະບຽງອາຫານຫຼາຍຂຶ້ນ ແລະ ມີໂພຊະນາການທີ່ດີຂຶ້ນກວ່າເກົ່າ





## ທ່າອ່ຽງການພັດທະນາຕົ້ນຕໍ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP) ຄັ້ງທີ VIII ຮັບຮູ້ບັນຫາການຂາດການຄໍ້າປະກັນສະບຽງອາຫານ ແລະ ການຂາດສານອາຫານ ວ່າເປັນບັນຫາຕົ້ນຕໍຂອງການພັດທະນາ. ການຕອບໂຕ້ແກ້ໄຂຮ່ວມລະຫວ່າງຫຼາຍຂະແໜງຂອງອົງການ ສປຊ ຕໍ່ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ລວມມີ: ການໂຄສະນາ-ສົ່ງເສີມນະໂຍບາຍ, ການຊ່ວຍເຫຼືອດ້ານວິຊາການ ແລະ ການສະໜອງການຊ່ວຍເຫຼືອໃຫ້ບັນດາຊຸມຊົນຕ່າງໆ.

ກອງເລຂາຂອງຄະນະກໍາມະການໂພຊະນາການແຫ່ງຊາດ ດ້ວຍການຊ່ວຍເຫຼືອຈາກຈາກອົງການ ສປຊ ໄດ້ນໍາພາ ການຈັດຕັ້ງປະຕິບັດຍຸດທະສາດໂພຊະນາການແຫ່ງຊາດ 2016-2025 ແລະ ແຜນຈັດຕັ້ງປະຕິບັດ 2016-2020 ທີ່ເປັນການຮ່ວມມືລະຫວ່າງຫຼາຍຂະແໜງການ. ບັນດາຄາດໝາຍ ແລະ ເປົ້າໝາຍທີ່ກ່ຽວຂ້ອງກັບໂພຊະນາການ ໄດ້ ຖືກເຊື່ອມສານເຂົ້າໃນແຜນການຂອງຂະແໜງຕ່າງໆເຊັ່ນ: ຂະແໜງສາທາລະນະສຸກ, ກະສິກໍາ ແລະ ສຶກສາທິການ ແລະ ຄາດໝາຍເຫຼົ່ານີ້ ໄດ້ຖືກເນັ້ນໜັກເຂົ້າໃນບັນດາແຜນງານຕ່າງໆທີ່ໄດ້ຮັບການຊ່ວຍເຫຼືອຈາກຜູ້ໃຫ້ທຶນ. ນະໂຍບາຍການຄໍ້າປະກັນສະບຽງອາຫານຂອງລັດຖະບານ ຈຸດໜັກແມ່ນສຸມໃສ່ການຜະລິດເປັນສິນຄ້າຕໍ່ຜົນຜະລິດກະສິກໍາເປົ້າໝາຍຈໍານວນໜຶ່ງ ທີ່ໄດ້ກໍານົດລະອຽດໃນຍຸດທະສາດ ແລະ ແຜນການຂອງຂະແໜງກະສິກໍາ ທີ່ສ້າງສໍາເລັດໃນສົກ ປີ 2015/16. ໄດ້ສ້າງແຜນດໍາເນີນງານ ແລະ ແຜນຈັດຕັ້ງປະຕິບັດສະເພາະ ສໍາລັບການຜະລິດເຂົ້າ, ລ້ຽງສັດ ແລະ ການປະມົງ.

ການສໍາຫຼວດການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ 2015 ພ້ອມດ້ວຍການສໍາຫຼວດປະເມີນການວັດ ແທກຮ່າງກາຍຂອງເດັກນ້ອຍລາວທົ່ວປະເທດ 2016 ໄດ້ສະແດງໃຫ້ເຫັນການຫຼຸດລົງຂອງຈໍານວນເດັກເຕ້ຍ 8 ສ່ວນ ຮ້ອຍ ຈາກ

> *“ການສໍາຫຼວດການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ 2015 ພ້ອມດ້ວຍການສໍາຫຼວດປະເມີນການວັດແທກຮ່າງກາຍຂອງເດັກນ້ອຍລາວທົ່ວປະເທດ 2016 ໄດ້ສະແດງໃຫ້ເຫັນການຫຼຸດລົງຂອງຈໍານວນເດັກເຕ້ຍ 8 ສ່ວນ ຮ້ອຍ ຈາກ 44 ສ່ວນຮ້ອຍ ມາເປັນ 35,6 ສ່ວນຮ້ອຍ ລະຫວ່າງປີ 2011 ຫາ 2016.”*

44 ສ່ວນຮ້ອຍ ມາເປັນ 35,6 ສ່ວນຮ້ອຍ ລະຫວ່າງປີ 2011 ຫາ 2016 . ການສຳຫຼວດການຄ້ຳປະກັນສະ ບຽງອາຫານ ແລະ ໂພຊະນາການໃນຂັ້ນທ້ອງຖິ່ນ ໄດ້ສະແດງໃຫ້ເຫັນວ່າ ພະຍາດເລືອດຈາງໃນແມ່ຍິງໄວຈະເລີນພັນ ໄດ້ຫຼຸດລົງຈາກ 36 ສ່ວນຮ້ອຍ ມາເປັນ 23 ສ່ວນຮ້ອຍ ໃນລະຫວ່າງປີ 2011 ຫາ 2016 ໃນ 5 ແຂວງທີ່ໄດ້ເຮັດການສຳ ຫຼວດດັ່ງກ່າວ.

## ຜົນໄດ້ຮັບ

### ການຊ່ວຍເຫຼືອໃນການສ້າງນະໂຍບາຍ ແລະ ຍຸດທະສາດ

ອົງການ ສປຊ ປະສົບຜົນສຳເລັດໃນການໂຄສະນາ-ສົ່ງເສີມນະໂຍບາຍ ແລະ ໃຫ້ການຊ່ວຍເຫຼືອດ້ານວິຊາການໃນ ການເຊື່ອມສານຈຸດປະສົງ ແລະ ກິດຈະກຳບູລິມະສິດຂອງວຽກງານສົ່ງເສີມໂພຊະນາການ ເຂົ້າໃນ ແຜນ NSEDP ຄັ້ງທີ 8 ແລະ ແຜນດຳເນີນງານຂອງຍຸດທະສາດໂພຊະນາການແຫ່ງຊາດ ຕະຫຼອດເຖິງຂອບຕິດຕາມກວດກາ ແລະ ປະ ເມີນຜົນຂອງຍຸດທະສາດດັ່ງກ່າວ. ເພື່ອຮັບປະກັນການແກ້ໄຂບູລິມະສິດແຫ່ງຊາດໃນລັກສະນະທີ່ມີການປະສານງານ ກັນເປັນຢ່າງດີ, ອົງການ ສປຊ ໄດ້ສືບຕໍ່ລົງທຶນໃສ່ການສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດຂອງຄະນະກຳມະການ ໂພຊະນາການແຫ່ງຊາດ ແລະ ກອງເລຂາ ກໍ່ຄື ສູນໂພຊະນາການຂອງກະຊວງສາທາລະນະສຸກ ໃນຂົງເຂດການວິ ເຄາະ ແລະ ນຳໃຊ້ຂໍ້ມູນໂພຊະນາການ, ການວາງແຜນ, ການຂຶ້ນງົບປະມານ, ການສື່ສານ, ການຕິດຕາມກວດກາ ແລະ ການປະເມີນຜົນ. ບັນດາອົງການຈັດຕັ້ງຕ່າງໆພາຍໃຕ້ລະບົບ ສປຊ ໄດ້ນຳພາການສ້າງການໂຄສະນາ-ສົ່ງເສີມນະໂຍບາຍຮ່ວມ, ການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສ້າງແຜນງານ ແບບມີການປະສານງານກັນ, ໃຫ້ການຊ່ວຍເຫຼືອສ້າງແຜນວາດກຳນົດພາກສ່ວນກ່ຽວຂ້ອງກັບວຽກງານການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ແລະ ການຈັດກອງປະຊຸມໂພຊະນາການລະດັບຊາດ.

ການໂຄສະນາ-ສົ່ງເສີມນະໂຍບາຍຂອງອົງການ ສປຊ ແລະ ຄູ່ຮ່ວມພັດທະນາອື່ນໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ລະ ບຽບການຄຸ້ມຄອງການຕະຫຼາດຂອງຜະລິດຕະພັນປ່ຽນແທນນົມແມ່ ໄດ້ເປັນຜົນນຳໄປສູ່ການມີຄຳໝາຍໝັ້ນໂດຍກະຊວງສາທາລະນະສຸກ ທີ່ຈະຍົກລະດັບຈາກລະບຽບການທີ່ໃຊ້ຢູ່ໃນປະຈຸບັນ ເປັນດຳລັດພາຍໃນທ້າຍປີ 2017.

ໃນລະດັບຂະແໜງການ, ການໂຄສະນາ-ສົ່ງເສີມນະໂຍບາຍຂອງອົງການ ສປຊ ເພື່ອໃຫ້ເພີ່ມການຈັດສັນຊັບພະຍາ ກອນເຂົ້າໃນບັນດາກິດຈະກຳບູລິມະສິດໃນວຽກງານສົ່ງເສີມໂພຊະນາການ ໄດ້ປະກອບສ່ວນເຮັດໃຫ້ໄດ້ຮັບການຊ່ວຍ ເຫຼືອຢ່າງຕໍ່ເນື່ອງຈາກກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງສຶກສາທິ ການ ແລະ ກິລາ ເພື່ອປະກອບງົບເຂົ້າໃນການຈັດຊື້ສິນຄ້າຈຳເປັນບາງຢ່າງຕໍ່ວຽກງານສົ່ງເສີມໂພຊະນາການ ເຊັ່ນ: ຢາ ຂ້າແມ່ທ້ອງ ແລະ ອາຫານເສີມສຳເລັດຮູບເພື່ອການປິ່ນປົວ (RUTF) ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ຊ່ວຍປັບປຸງການຄ້ຳປະ ກັນສະບຽງອາຫານ ແລະ ສຸຂະພາບ ກໍ່ຄື ການຫຼຸດຜ່ອນບັນຫາອັດຕາເດັກເຕ້ຍ ແລະ ນ້ຳໜັກເດັກບໍ່ໄດ້ມາດຕະຖານ ໃນທົ່ວປະເທດ.

### ການພັດທະນາຄວາມສາມາດຂອງສະຖາບັນ

ຕະຫຼອດໜຶ່ງປີຜ່ານມາ, ອົງການ WFP ແລະ ອົງການອື່ນໆ ໃນລະບົບ ສປຊ ໄດ້ເນັ້ນໜັກການສ້າງຄວາມເຂັ້ມແຂງໃຫ້ຄວາມສາມາດຂອງລັດຖະບານຢູ່ຂັ້ນສູນກາງ ແລະ ເສີມຂະຫຍາຍວຽກງານຄ້ຳປະກັນສະບຽງອາຫານ ໃນໄລຍະເກີດເຫດການສຸກເສີນຕ່າງໆ ດ້ວຍການໃຫ້ການຊ່ວຍເຫຼືອສ້າງສຳເລັດ ແຜນຕອບໂຕ້ໄພພິບັດແຫ່ງຊາດ ເຊິ່ງຄາດວ່າ ຈະຖືກຮັບຮອງເອົາໃນປີ 2017.

ອົງການ WFP ໂດຍຮ່ວມມືກັບກະຊວງກະສິກຳ ແລະ ປ່າໄມ້ ໄດ້ດຳເນີນການປະເມີນການຄ້ຳປະກັນສະບຽງອາຫານແບບຮອບດ້ານ ເພື່ອຊ່ວຍເຫຼືອຄວາມພະຍາຍາມຂອງລັດຖະບານ ໃນການປັບປຸງສະພາບການການຄ້ຳປະກັນສະ ບຽງ ອາຫານ ທົ່ວ ສປປ ລາວ. ນອກຈາກການປະເມີນຄະແນນການບໍລິໂພກອາຫານ, ລະດັບຂອງໂພຊະນາການ ແລະ ສ້າງ ຄວາມເຂົ້າໃຈຕໍ່ຍຸດທະສາດໃນການຮັບມືແລ້ວ, ບົດສຶກສາດັ່ງກ່າວ ຍັງໄດ້ວິເຄາະສາເຫດຕົ້ນຕໍຂອງບັນຫາຂາດການ ຄ້ຳປະກັນສະບຽງອາຫານ.

ການສຳຫຼວດການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ 2015 ທີ່ລັດຖະບານເປັນຜູ້ຈັດຕັ້ງປະຕິບັດ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ ສປຊ, ສະຫະພາບເອີຣົບ, ແລະ ອົງການຮ່ວມມືເພື່ອການພັດທະນາຂອງປະເທດສະວິດເຊີແລນ ລວມທັງການສຳຫຼວດປະເມີນການວັດແທກຮ່າງກາຍຂອງເດັກນ້ອຍລາວ ທົ່ວປະເທດ 2016 ໄດ້ສະແດງໃຫ້ເຫັນວ່າ: ອັດຕາເດັກເຕ້ຍ ໄດ້ຫຼຸດລົງ 8 ສ່ວນຮ້ອຍ ຈາກ 44 ມາເປັນ 35,6 ສ່ວນຮ້ອຍ ໃນລະຫວ່າງປີ 2011 ຫາ 2016. ການສຳຫຼວດການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການຂັ້ນທ້ອງຖິ່ນ ໄດ້ສະແດງໃຫ້ເຫັນວ່າ: ພະຍາດເລືອດຈາງໃນແມ່ຍິງໄວຈະເລີນພັນ ໄດ້ຫຼຸດລົງຈາກ 36 ສ່ວນຮ້ອຍ ມາເປັນ 23 ສ່ວນຮ້ອຍ ໃນລະຫວ່າງປີ 2011 ຫາ 2016 ໃນ 5 ແຂວງທີ່ໄດ້ດຳເນີນການສຳຫຼວດດັ່ງກ່າວ.

ອົງການ UNICEF ໄດ້ໃຫ້ການຊ່ວຍເຫຼືອກະຊວງສາທາລະນະສຸກ ໃນການສ້າງແລະຈັດຕັ້ງປະຕິບັດປຶ້ມແນະນຳຊື່ວຄາວກ່ຽວກັບການຄຸ້ມຄອງແບບປະສົມປະສານຕໍ່ກໍລະນີການຂາດສານອາຫານຮຸນແຮງ. ຜົນໄດ້ຮັບກໍຄື ພະນັກງານສາ

> *“ການສຳຫຼວດການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການຂັ້ນທ້ອງຖິ່ນ ໄດ້ສະແດງໃຫ້ເຫັນວ່າ: ພະຍາດເລືອດຈາງໃນແມ່ຍິງໄວຈະເລີນພັນ ໄດ້ຫຼຸດລົງຈາກ 36 ສ່ວນຮ້ອຍ ມາເປັນ 23 ສ່ວນຮ້ອຍ ໃນລະຫວ່າງປີ 2011 ຫາ 2016 ໃນ 5 ແຂວງທີ່ໄດ້ດຳເນີນການສຳຫຼວດດັ່ງກ່າວ.”*

ທາລະນະສຸກໃນບັນດາແຂວງເປົ້າໝາຍ ໄດ້ປັບປຸງທັກສະ ແລະສັກກະຍະພາບໃນການປິ່ນປົວແລະຄຸ້ມຄອງກໍລະນີ ທີ່ ເດັກນ້ອຍຂາດສານອາຫານຮຸນແຮງ, ພ້ອມນັ້ນ ສຸກສາລາ ຍັງໄດ້ເພີ່ມຄວາມສາມາດ ເພື່ອຊ່ວຍຊຸມຊົນໃນການຄົ້ນຫາ ກໍລະນີເດັກຂາດສານອາຫານຮຸນແຮງ.

ອົງການ ສປຊ ຍັງໄດ້ສະໜອງການຊ່ວຍເຫຼືອເພີ່ມເຕີມ ເພື່ອ ຢັ້ງຢືນ 4 ບູລິມະສິດກິດຈະກໍາຊ່ວຍເຫຼືອດ້ານກະສິກໍາ ທີ່ກໍາ ນົດໄວ້ໃນວິທີການດໍາເນີນງານໄປລວງດຽວກັນພາຍໃນແຜນ ດໍາເນີນງານ ຢູ່ ສປປ ລາວ ຄື: ຫັນການຜະລິດພືດໃຫ້ມີ ຄວາມຫຼາກຫຼາຍ ແລະ ໃຫ້ການສຶກສາອົບຮົມວຽກງານສົ່ງ ເສີມໂພຊະນາການທີ່ເຊື່ອມໂຍງກັບກະສິກໍາ; ການລ້ຽງສັດ ຂະໜາດນ້ອຍ ເຊິ່ງລວມທັງການລ້ຽງປາ ແລະ ສັດນໍ້າອື່ນໆ; ການຮັບມືກັບສະພາບຫຼັງໄລຍະເກັບກ່ຽວ ແລະການປຸງແຕ່ງ ອາຫານ/ເກັບຮັກສາອາຫານ; ການຫາອາຫານ ແລະ ກິດຈະ ກໍາສ້າງລາຍໄດ້ທີ່ກ່ຽວຂ້ອງກັບເຄື່ອງປ່າຂອງດົງ.

ກິດຈະກໍາຊ່ວຍເຫຼືອທີ່ເປັນບູລິມະສິດທັງສີ່ ໄດ້ຮັບການທົດ ລອງຈັດຕັ້ງປະຕິບັດຢູ່ແຂວງຫຼວງນໍ້າທາ, ອຸດົມໄຊ ແລະ ໄຊ ຍະບູລີ ພາຍໃຕ້ແຜນງານຂອງລັດຖະບານ ໂດຍໄດ້ຮັບການ ຊ່ວຍເຫຼືອດ້ານການເງິນແລະວິຊາການຈາກອົງການ FAO ແລະ IFAD ແລະມີການອໍານວຍຄວາມສະດວກຈາກພະນັກ ງານກະສິກໍາເມືອງ. ຮູບການຈັດຕັ້ງປະຕິບັດ ປະກອບມີ ການຝຶກອົບຮົມຄູຝຶກ ທີ່ລວມເອົາພະນັກງານລັດແລະຊາວ ກະສິກອນຫຼາຍກວ່າ 50 ຄົນ ເຂົ້າຮ່ວມ, ແລ້ວຕິດຕາມດ້ວຍ ການຝຶກອົບຮົມທີ່ໂຮງຮຽນຊາວນາໃນຮູບແບບຫຼັກສູດໄລຍ ະສັ້ນ ຫຼື ຕະຫຼອດລະດູການຜະລິດ ໃນຫົວຂໍ້ທີ່ເອົາໃຈໃສ່ໂພ ຊະນາການ ເຊິ່ງມີຊາວກະສິກອນເຂົ້າຮ່ວມຫຼາຍກວ່າ 650 ຄົນ. ຢູ່ແຂວຫຼວງນໍ້າທາ, ໄດ້ດໍາເນີນການສໍາຫຼວດຂໍ້ມູນພື້ນ ຖານສໍາລັບຕົວຊີ້ວັດສໍາຄັນດ້ານການຜະລິດກະສິກໍາ ແລະໂພຊະນາການ ຕາມບ້ານເປົ້າໝາຍ ແລ້ວຈາກນັ້ນ ໃນປີ 2017 ຈະມີສໍາຫຼວດເອົາຂໍ້ມູນສຸດທ້າຍຫຼັງຈັດຕັ້ງປະຕິບັດ ກິດຈະກໍາຊ່ວຍເຫຼືອ. ພ້ອມນັ້ນ, ຍັງໄດ້ໃຫ້ການຊ່ວຍເຫຼືອ ທາງດ້ານສະຖາບັນ ເພື່ອສ້າງສວນຄົວໃນໂຮງຮຽນ ໂດຍການປະສານສົມທົບກັບ ກະຊວງສຶກສາທິການແລະກິລາ ກໍ່ຄື ອໍານາດການປົກຄອງແຂວງ/ເມືອງກ່ຽວຂ້ອງ ເຊິ່ງອົງການ FAO ໄດ້ທົດລອງຈັດຕັ້ງປະຕິບັດຢູ່ສອງແຂວງ.

ສໍາລັບການຄໍ້າປະກັນສະບຽງອາຫານໃນວົງກ້ວາງ, ໄດ້ມີການ ສະໜອງການຊ່ວຍເຫຼືອໃຫ້ກະຊວງກະສິກໍາແລະປ່າໄມ້ ເພື່ອ ພັດທະນາຄວາມສາມາດທາງດ້ານສະຖາບັນ ໂດຍຜ່ານການ ນໍາໃຊ້ເຄື່ອງມືວາງແຜນແລະວິທີການວິທະຍາສະ ເພາະສໍາລັບ ການຄໍ້າປະກັນສະບຽງອາຫານ ເພື່ອປັບປຸງການວິເຄາະ ແລະ ການຈັດຕັ້ງປະຕິບັດຕົວຈິງ.

## ກົນໄກການປະສານງານ

ໃນປີ 2016, ໄດ້ເຫັນການສັງລວມກົນໄກປະສານງານເພີ່ມ ທັງໃນຂັ້ນຂະແໜງການ, ສູນກາງ ແລະ ຂັ້ນແຂວງ ເພື່ອ ຈັດຕັ້ງ ປະຕິບັດວິທີການດໍາເນີນງານຮ່ວມລະຫວ່າງຫຼາຍຂະແໜງ ການໃນວຽກງານສົ່ງເສີມໂພຊະນາການ. ກອງປະຊຸມ ວຽກງານໂພຊະນາການທົ່ວປະເທດ ໄດ້ອອກຄໍາຖະແຫຼງ ຜົນໄດ້ຮັບ ທີ່ຢືນຢັນຄືນຄໍາໝາຍໝັ້ນຕໍ່ການສ້າງຄວາມເຂັ້ມ ແຂງໃຫ້ກົນໄກປະສານງານຂັ້ນທ້ອງຖິ່ນ ເພື່ອເລັ່ງລັດ ການຈັດຕັ້ງປະຕິບັດ ຍຸດທະສາດແລະແຜນດໍາເນີນງານໂພຊະ ນາການແຫ່ງຊາດ. ໄດ້ສ້າງກົນໄກການປະສານງານວຽກ ງານສົ່ງເສີມໂພຊະນາການຂັ້ນແຂວງ ຂຶ້ນຢູ່ບັນດາແຂວງ ຕ່າງໆເປັນສ່ວນໃຫຍ່ແລ້ວ ເຊິ່ງ ອົງການ ສປຊ ຍັງໄດ້ຊ່ວຍ ອອກແບບປຶດແນະນໍາການການປະສານງານຮ່ວມລະຫວ່າງ ຫຼາຍຂະແໜງການ.

ພາຍໃນອົງການຕ່າງໆ, ໄດ້ມີການສ້າງຄວາມເຂັ້ມແຂງໃຫ້ການ ປະສານງານລະຫວ່າງຂະແໜງການຕ່າງໆເຊັ່ນ: ວຽກງານສົ່ງ ເສີມນໍ້າສະອາດ, ສຸຂາພິບານ ແລະ ສຸຂະອະ ນາໄມ, ສຸຂະພາບແລະໂພຊະນາການ. ໃນຖານະເປັນປັດໄຈຂັບ ເຄື່ອນການແກ້ໄຂບັນຫາເດັກເຕ້ຍ, ເປົ້າໝາຍລຶບລ້າງ ການຖ່າຍຊະຊາຍ ຍິ່ງຄົງເປັນສິ່ງທ້າທາຍສໍາຄັນ ທີ່ບັນດາອົງ ການຕ່າງໆພາຍໃນລະບົບ ສປຊ ຕ້ອງສືບຕໍ່ໂຄສະນາ-ສົ່ງເສີມນະໂຍບາຍໃນອະນາຄົດ.

ນອກຈາກນັ້ນ, ບັນດາອົງການຕ່າງໆພາຍໃນລະບົບ ສປຊ ຍັງ ໄດ້ສືບຕໍ່ຮ່ວມມືກັບກະຊວງສາທາລະນະສຸກ ເພື່ອຊ່ວຍ ຂະ ຫຍາຍການຈັດຕັ້ງປະຕິບັດໂຄງການລິເລີ່ມເຄືອຄ່າຍສາກົນ ເພື່ອການຍຸຕິການຂາດສານອາຫານ (SUN) ໃນການ ຜັນ ຂະຫຍາຍກິດຈະກໍາລິເລີ່ມທາງດ້ານການຜະລິດກະສິກໍາທີ່ ເອົາໃຈໃສ່ໂພຊະນາການຕາມບັນດາເຂດພູດອຍ ເພື່ອ ປະ ກອບສ່ວນເຂົ້າໃນການປັບປຸງການຄໍ້າປະກັນສະບຽງອາຫານ ແລະ ຫຼຸດຜ່ອນການຂາດສານອາຫານ ແລະ ຄວາມ ທຸກຍາກ ກໍຄື ຫາວິທີທາງແກ້ແບບຍືນຍົງຕໍ່ບັນຫາການຄໍ້າປະກັນສະບຽງ ອາຫານ ຜ່ານເຄືອຄ່າຍເຮັດວຽກຂອງ SUN.

## ກິດຈະກໍາອື່ນໆ

ອົງການ ສປຊ ໄດ້ສືບຕໍ່ລົງທຶນໃສ່ການຫຼຸດຜ່ອນບັນຫາການ ຂາດສານອາຫານໃນກຸ່ມເດັກໃນໄວເຂົ້າໂຮງຮຽນ. ອົງການ WFP ໂດຍການຮ່ວມມືກັບ ກະຊວງສຶກສາທິການແລະກິລາ ແລະ ກະຊວງສາທາລະນະສຸກ ໄດ້ສະໜອງອາຫານໃຫ້ ນັກຮຽນຈໍານວນ 150.000 ຄົນ ໃນຖານະເປັນສ່ວນໜຶ່ງ ຂອງແຜນງານສະໜອງອາຫານໃນໂຮງຮຽນ ເຊິ່ງກວມເອົາ 17 ສ່ວນຮ້ອຍຂອງນັກຮຽນຊັ້ນປະຖົມສຶກສາທັງໝົດທົ່ວ ສປປ ລາວ. ອົງການ UNICEF ໄດ້ຊ່ວຍຂະຫຍາຍການເສີມ ທາດອາຫານໃນຄົວເຮືອນໃຫ້ເດັກນ້ອຍ ດ້ວຍການສະໜອງ ຝຸ່ນຈຸລະສານອາຫານ. ໄດ້ເຂົ້າເຖິງເດັກນ້ອຍທີ່ອາໄສຢູ່ ເຂດ ຊົນນະບົດແລະຫ່າງໄກສອກຫຼີກຫຼາຍແຫ່ງ ດ້ວຍກິດຈະ ກໍາສະໜອງບໍລິການສາທາແບບເຊື່ອມສານ ເຊິ່ງໄດ້ແຈກ ຢາຍຝຸ່ນຈຸລະສານອາຫານ ທັງໝົດ 1,3 ລ້ານຊອງ ຢູ່ຕາມເຂດເປົ້າໝາຍ ຖືເປັນການປະກອບສ່ວນເຮັດ ອັດຕາເດັກ ເຕ້ຍຫຼຸດລົງຫຼາຍ.

ບັນດາອົງການຕ່າງໆໃນລະບົບ ສປຊ ຍັງໄດ້ປະສານສົມທົບກັນ ເພື່ອສະໜອງບໍລິການແລະໃຫ້ຄໍາປຶກສາດ້ານສຸຂະ ພາບແລະໂພຊະນາການແບບຮອບດ້ານ. ຕົວຢ່າງ: ອົງການ UNICEF ແລະ ອົງການ WFP ໄດ້ສືບຕໍ່ໃຫ້ການຊ່ວຍ ເຫຼືອລັດຖະບານ ໃນການປັບປຸງສຸຂະພາບແລະໂພຊະນາ ການຂອງແມ່ຍິງຖືພາແລະແມ່ລ້ຽງລູກດ້ວຍນົມແມ່ ແລະ ຂອງເດັກນ້ອຍໃນໄລຍະ 1.000 ວັນທໍາອິດຂອງຊີວິດ.

ອົງການ WFP ໄດ້ສະໜອງໂພຊະນາການສຶກສາ ໂດຍຮ່ວມກັບອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມງານພາກລັດ ເຊິ່ງສາມາດເຂົ້າເຖິງແມ່ຍິງໄດ້ 19.000 ຄົນ ແລະ ເດັກນ້ອຍ 24.000 ຄົນ. ພ້ອມນັ້ນ, ຍັງໄດ້ສະໜອງຄຳແນະນຳດ້ານໂພຊະນາການ ໃຫ້ຜູ້ເບິ່ງແຍງເດັກນ້ອຍລຸ່ມຫ້າປີ ກ່ຽວກັບວິທີ ການໃຫ້ອາຫານເສີມຢ່າງພຽງພໍ, ຄວາມຫຼາກຫຼາຍຂອງອາຫານການກິນ ແລະ ກ່ຽວກັບວິທີເບິ່ງແຍງໃນໄລຍະຖືພາ, ຫຼັງ ເກີດລູກໃໝ່ ແລະ ໃນໄລຍະເປັນເດັກກ່ອນໄວຮຽນ. ໄດ້ມີການດັດແກ້ ແລະ ປັບປຸງເນື້ອໃນຂອງສື່ຂໍ້ມູນຂ່າວສານ, ສື່ ສຶກສາອົບຮົມໃຫ້ຄວາມຮູ້ ແລະ ສື່ການສື່ສານ ດ້ວຍຂໍ້ມູນຂ່າວສານຫຼ້າສຸດແລະເນື້ອໃນໃຈຄວາມສຳຄັນ ເພື່ອສົ່ງເສີມວິ ທີແນະນຳສຳລັບການໃຫ້ອາຫານເດັກເກີດໃໝ່ ແລະ ເດັກນ້ອຍ. ພະນັກງານແລະອາສາສະໝັກສາທາລະນະສຸກ ໄດ້ ປັບປຸງທັກສະດ້ານການສື່ສານກັບຜູ້ອື່ນ ແລະ ຄວາມຮູ້ກ່ຽວກັບການໃຫ້ອາຫານເດັກເກີດໃໝ່ແລະເດັກນ້ອຍ ໂດຍຜ່ານ ຮູບການຝຶກອົບຮົມ.

ເພື່ອບັນລຸການມີຄວາມຕ້ານທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ການຄ້ຳປະກັນສະບຽງອາຫານໃຫ້ຫຼາຍຂຶ້ນ, ບັນດາອົງການຕ່າງໆໃນລະບົບ ສປຊ ໄດ້ຊ່ວຍລັດຖະບານສ້າງຄວາມກຽມພ້ອມເພື່ອຮັບມືກັບ ໄພພິບັດຕ່າງໆທີ່ທີ່ພົວພັນກັບການປ່ຽນແປງຂອງສະພາບດິນຟ້າອາກາດ. ອົງການ WFP ໂດຍການຮ່ວມມືກັບອົງການ UNOCHA ໄດ້ຈັດຕັ້ງປະຕິບັດກິດຈະກຳຈຳລອງເຫດການ ເພື່ອທົດສອບລະບົບການປະສານງານລະຫວ່າງລັດຖະ ບານ ກັບ ບັນດາອົງການຈັດຕັ້ງສາກົນຕ່າງໆ ໂດຍມີບັນດາພາກສ່ວນກ່ຽວຂ້ອງຫຼັກໃນການຄຸ້ມຄອງໄພພິບັດ ໄດ້ເຂົ້າຮ່ວມກິດຈະກຳດັ່ງກ່າວ (ບັນດາອົງການຕ່າງໆພາຍໃຕ້ລະບົບ ສປຊ, ອົງການ INGOs, ບັນດາກະຊວງຂະແໜງການ ຕ່າງໆ ແລະ ຜູ້ໃຫ້ທຶນ). ໄດ້ມີຄຳແນະນຳຫຼາຍຢ່າງ ຈາກການຈັດຕັ້ງປະຕິບັດກິດຈະກຳຈຳລອງເຫດການດັ່ງກ່າວ ເພື່ອປັບປຸງຂອບການຄຸ້ມຄອງໄພພິບັດຢູ່ ສປປ ລາວ.

ໂດຍປະສານສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ-ປ່າໄມ້ແຂວງ ແລະ ອົງການ IFAD, ອົງການ WFP ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາການຫາລ້ຽງຊີບຢູ່ເຂດຊົນນະບົດ ດ້ວຍການສະໜັບສະໜູນຊຸມຊົນທ້ອງຖິ່ນ ສ້າງຊັບສິນຂອງຊຸມຊົນ 130 ລາຍການ, ເພີ່ມການຜະລິດກະສິກຳ ແລະ ການເຂົ້າເຖິງຕະຫຼາດ, ປັບ ປຸງຄວາມສາມາດຕ້ານທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ, ແລະ ສະກັດກັ້ນບັນຫາຄວາມບໍ່ສາມາດຄ້ຳປະກັນສະບຽງອາຫານ ໂດຍເຂົ້າເຖິງຜູ້ໄດ້ຮັບຜົນປະໂຫຍດທັງໝົດ 53.000 ຄົນ.

ໄດ້ມີການຂໍຄຳປຶກສານຳບັນດາຊຸມ ຊົນ ເຊິ່ງລວມທັງແນວໂຮມ, ແມ່ຍິງ ແລະ ຄົນພິການ ເພື່ອລະບຸວ່າຊັບສິນໃດທີ່ຈະເປັນປະໂຫຍດສູງສຸດຕໍ່ຊຸມຊົນ, ພ້ອມທັງຮັບປະກັນຄວາມເປັນເຈົ້າການ ແລະ ການມີສ່ວນຮ່ວມຂອງຄົນໃນຊຸມຊົນ.

ຜົນໄດ້ຮັບໃນຂົງເຂດການຄຸ້ມຄອງການປູກຝັງ ແລະ ລ້ຽງສັດ ໄດ້ປະກອບສ່ວນເຂົ້າໃນການສ້າງການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ຄື: i) ການສືບຕໍ່ໃຫ້ການຊ່ວຍເຫຼືອກົມລ້ຽງສັດ ແລະ ການປະມົງ ເປັນຜົນນຳໄປສູ່ການສ້າງສຳເລັດ ແລະ ພິມເຜີຍແຜ່ ແຜນຈັດຕັ້ງປະຕິບັດຍຸດທະສາດສຳລັບການພັດທະນາການຄຸ້ມຄອງການປະມົງ ແລະການລ້ຽງສັດນ້ຳ ຢູ່ ສປປ ລາວ ເຊິ່ງລວມທັງ ໂອກາດໃນການລົງທຶນ ແລະ ຂອບການພັດທະນາຄວາມສາມາດຢູ່ຂັ້ນທ້ອງຖິ່ນ; ii) ສະໜອງການຊ່ວຍເຫຼືອໃຫ້ການຝຶກອົບຮົມຄູຝຶກ ກ່ຽວກັບການຫຼຸດຜ່ອນຄວາມສ່ຽງຈາກຢາປາບສັດຕູພືດ ໃຫ້ພະນັກງານເມືອງ ແລະ ແຂວງ ຈຳນວນ 45 ທ່ານ ຈາກ 21 ເມືອງ ໃນ 8 ແຂວງ ແລະ ໃຫ້ພະນັກງານສົ່ງເສີມກະສິກຳ 19 ທ່ານ ຈາກ 4 ແຂວງພາກໃຕ້. ໄດ້ມີການປັບປຸງດັດແກ້ເອກະສານຝຶກອົບຮົມ ເພື່ອແຈກຢາຍໃຫ້ພະນັກງານສົ່ງເສີມກະສິກຳໃນ 17 ແຂວງ ໂດຍສຸມໃສ່ການຫຼຸດຜ່ອນຄວາມສ່ຽງຖືກກະທົບຈາກຢາປາບສັດຕູພືດ ແລະ ລຶບລ້າງການນຳໃຊ້ຢາປາບສັດຕູພືດທີ່ຈັດຢູ່ໃນປະເພດ I ຂອງອົງການ WHO/ຢາປາບສັດຕູພືດທີ່ເປັນອັນຕະລາຍສູງ ເຂົ້າໃນກິດຈະກຳການຜະລິດກະສິກຳ ໃນຂະນະທີ່ກ້າວໄປສູ່ການນຳໃຊ້ການຄຸ້ມຄອງສັດຕູພືດແບບປະສົມປະສານ. ນອກນັ້ນ, ຊາວກະສິກອນຈຳນວນ 350 ຄົນ (ເປັນຍິງ 150 ຄົນ) ຈາກສີ່ແຂວງ ຍັງໄດ້ເພີ່ມຄວາມຮູ້ຂອງເຂົາເຈົ້າໃນການຫຼຸດຜ່ອນຄວາມສ່ຽງຈາກຢາປາບສັດຕູພືດ ເປັນຜົນນຳໄປສູ່ການແຜນດຳເນີນງານສະເພາະຂັ້ນຊຸມຊົນ. ຊາວກະສິກອນອີກ 120 ຄົນ ກໍ່ໄດ້ຮັບຜົນປະໂຫຍດຈາກກິດຈະກຳສ້າງຄວາມສາມາດໄລຍະສັ້ນ ທີ່ມີການຈັດຕັ້ງປະຕິບັດເພີ່ມ.

*ໂດຍປະສານສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ-ປ່າໄມ້ແຂວງ ແລະ ອົງການ IFAD, ອົງການ WFP ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາການຫາລ້ຽງຊີບຢູ່ເຂດຊົນນະບົດ ດ້ວຍການສະໜັບສະໜູນຊຸມຊົນທ້ອງຖິ່ນ ສ້າງຊັບສິນຂອງຊຸມຊົນ 130 ລາຍການ, ເພີ່ມການຜະລິດກະສິກຳ ແລະ ການເຂົ້າເຖິງຕະຫຼາດ, ປັບ ປຸງຄວາມສາມາດຕ້ານທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ, ແລະ ສະກັດກັ້ນບັນຫາຄວາມບໍ່ສາມາດຄ້ຳປະກັນສະບຽງອາຫານ ໂດຍເຂົ້າເຖິງຜູ້ໄດ້ຮັບຜົນປະໂຫຍດທັງໝົດ 53.000 ຄົນ.*

ໃນອີກໂຄງການລິເລີ່ມໜຶ່ງຕ່າງຫາກ, ມີຊາວກະສິກອນຈຳນວນ 500 ຄົນ (ເປັນຍິງປະມານ 200 ຄົນ) ຢູ່ 4 ແຂວງ ທີ່ປູກເຂົ້າຕາມເຂດທົ່ງພຽງ ໄດ້ເຂົ້າຮ່ວມຫຼັກສູດຝຶກອົບຮົມຕະຫຼອດລະດູການຜະລິດທີ່ໂຮງຮຽນຊາວນາ ເພື່ອພັດທະນາຄວາມສາມາດດ້ານການເພີ່ມຜະລິດຕະພາບ ແລະ ກຳໄລຈາກເນື້ອທີ່ດິນເຮັດການຜະລິດ ຂະນະທີ່ຫຼຸດຜ່ອນການນຳໃຊ້ເຄມີເຂົ້າໃນການຜະລິດກະສິກຳ ແລະ ຕົ້ນທຶນທີ່ກ່ຽວຂ້ອງ ພາຍໃຕ້ຕົວແບບປະຢັດ ແລະ ປູກ ຂອງອົງການ FAO ເພື່ອ ເພີ່ມຜົນການຜະລິດແບບຍືນຍົງ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ການປະຕິຮູບວຽກງານຕ່າງໆໃນຊຸມປີທີ່ຜ່ານມາຂອງລັດຖະບານ ໄດ້ປະກອບສ່ວນຫຼຸດຜ່ອນລະດັບການຂາດສານອາ ຫານ ແລະ ເພີ່ມການຄ້ຳປະກັນສະບຽງອາຫານ ພາຍໃນປະເທດ. ເຖິງຢ່າງໃດກໍຕາມ, ສິ່ງທ້າທາຍຕົ້ນຕໍສຳລັບລັດຖະ ບານ ແລະ ບັນດາອົງການຕ່າງໆພາຍໃຕ້ ລະບົບ ສປຊ ຍັງຕ້ອງສືບຕໍ່ປະສານສົມທົບກັນເພື່ອຮັບປະກັນວ່າ: ບັນດາ ການປັບປຸງປະຕິຮູບເຫຼົ່ານີ້ ມີລັກສະນະຕັດສິນໃຈສູງຜັນຂະຫຍາຍເປັນການລົງທຶນໃສ່ບັນດາພື້ນຖານໂຄງລ່າງ, ບໍລິ ການຕ່າງໆຂອງລັດທີ່ພົວພັນກັບການຜະລິດສະບຽບອາຫານ ແລະ ຜົນໄດ້ຮັບທາງບວກໃນການປ່ຽນແປງພຶດຕິກຳ ດ້ານໂພຊະນາການ ສຳລັບກຸ່ມປະຊາກອນທີ່ບໍ່ສາມາດປົກປ້ອງຕົນເອງໄດ້ຫຼາຍສຸດ ແລະ ຂາດຄວາມສາມາດຄ້ຳປະກັນສະບຽງອາຫານ.

ວິທີການດຳເນີນງານຮ່ວມລະຫວ່າງຫຼາຍຂະແໜງຂອງລັດໃຫ້ໄປລວງດຽວກັນ ຖືວ່າ: ໄດ້ຮັບການສ້າງຄວາມເຂັ້ມແຂງຂຶ້ນຢ່າງຫຼວງຫຼາຍ ເນື່ອງຈາກສາມຂະແໜງການຫຼັກຄື: ສາທາ, ສຶກສາ ແລະ ກະສິກຳ ໄດ້ເຮັດວຽກນຳກັນເປັນຢ່າງດີຜ່ານວິທີການເຮັດວຽກທີ່ມີການປະສານງານກັນໄດ້ດີ ແລະ ມີເປົ້າໝາຍຄັກແນ່. ທຸກອົງການກ່ຽວຂ້ອງພາຍໃຕ້ລະບົບຂອງ ສປຊ ໄດ້ມີສ່ວນຮ່ວມຢ່າງຫ້າວຫັນ ໃນເຄືອຄ່າຍສາກົນເພື່ອຍຸຕິການຂາດສານອາຫານ (SUN) ຂອງອົງການ ສປຊ ເພື່ອສະໜອງບົດລາຍງານທີ່ມີການປະສານງານກັນເປັນຢ່າງດີ, ທ່ວງທັນກຳນົດເວລາ ແລະ ມີຂໍ້ມູນຄົບຖ້ວນ ເພື່ອລາຍງານຄະນະກຳມະການໂພຊະນາການແຫ່ງຊາດ. ພ້ອມນັ້ນ, ຍັງມີຄວາມພະຍາຍາມເພີ່ມເຕີມ ເພື່ອແກ້ໄຂບັນຫາທາງລະບົບຂອງການພັດທະນາຄວາມສາມາດ ທີ່ລວມເອົາການສ້າງຄວາມສາມາດທາງດ້ານສະຖາບັນ ແລະ ການປົກຄອງທ້ອງຖິ່ນ ກໍຄື ກົນໄກສະໜອງບໍລິການ, ການເສີມຂະຫຍາຍຄວາມສາມາດຕ້ານທານຂອງຊຸມຊົນຕໍ່, ການຄຸ້ມຄອງຄວາມສ່ຽງ ແລະ ການປັບຕົວເຂົ້າກັບສິ່ງທ້າທາຍຕ່າງໆທີ່ສົ່ງຜົນກະທົບຕໍ່ການຄ້ຳປະກັນສະບຽງອາຫານ ແລະ ການຫາລ້ຽງຊີບ ເຊັ່ນ: ບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ.

ດັ່ງທີ່ເຫັນໄດ້ຈາກຄວາມສຳຄັນຕໍ່ເນື່ອງທີ່ເນັ້ນໃສ່ການສືບຕໍ່ປະສານສົມທົບກັບລັດຖະບານ ໃນການແກ້ໄຂບັນຫາການຂາດສານອາຫານ ແລະ ຄວາມບໍ່ສາມາດຄ້ຳປະກັນສະບຽງອາຫານ, ໄດ້ມີການເຊື່ອມສານເອົາບັນດາຄາດໝາຍຕ່າງໆ ຂອງ SDG 2 ເຂົ້າໃນແຜນ 8 ໃນຂະນະທີ່ SDG 17 ເຮັດໜ້າທີ່ເປັນພື້ນຖານໃຫ້ການສົນທະນາແລກປ່ຽນລະຫວ່າງ ບັນດາໜ່ວຍງານສົນທະນາຈາກຂະແໜງການຕ່າງໆ.

ບັນດາອົງການຕ່າງໆໃນລະບົບ ສປຊ ຈະສືບຕໍ່ຊ່ວຍເຫຼືອຄວາມພະຍາຍາມຕ່າງໆຂອງລັດຖະບານ ໃນການປັບປຸງ ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ຜ່ານການເພີ່ມຜະລິດຕະພາບ ແລະ ຄວາມຫຼາກຫຼາຍໃນການຜະ ລິດກະສິກຳ ຕະຫຼອດເຖິງການໃຫ້ການຊ່ວຍເຫຼືອຕໍ່ຊາວກະສິກອນຂະໜາດນ້ອຍ; ການສ້າງຄວາມເຂັ້ມແຂງໃຫ້ຄວາມ ສາມາດທາງດ້ານສະຖາບັນ ແລະ ລະບົບຂອງລັດຖະບານ ເພື່ອປັບປຸງຖານການສະໜອງບໍລິການສະເພາະດ້ານໂພຊະນາການ; ການຊ່ວຍເຫຼືອການສ້າງຫຼັກຖານເພື່ອສະໜອງຂໍ້ມູນໃຫ້ການສ້າງນະໂຍບາຍ; ການສະໜັບສະໜູນການປ່ຽນແປງພຶດຕິກຳ ເພື່ອຫຼຸດຜ່ອນບັນຫາການຂາດສານອາຫານຂອງເດັກ; ການສ້າງຄວາມເຂັ້ມແຂງໃຫ້ບົດບາດຂອງແມ່ຍິງ ໃນວຽກໂພຊະນາການ ເພື່ອປັບປຸງການຄ້ຳປະກັນສະບຽງອາຫານ; ແລະ ຜ່ານການຂະຫຍາຍວິທີການແບບມີສ່ວນຮ່ວມ ເພື່ອໃຫ້ເຂົ້າເຖິງກຸ່ມປະຊາກອນຕາມເຂດທີ່ເຂົ້າເຖິງໄດ້ຍາກສຸດ ແລະ ດ້ອຍໂອກາດທີ່ສຸດ.




# 6. ການປ້ອງກັນ HIV, ການປິ່ນປົວ ແລະ ການຊ່ວຍເຫຼືອຜູ້ຕິດເຊື້ອ HIV

**ກຸ່ມປະຊາກອນ ຫຼັກທີ່ມີຄວາມສ່ຽງຕິດເຊື້ອ HIV ໄດ້ຮັບຜົນປະໂຫຍດ ຈາກການເພີ່ມຂອບເຂດປົກຄຸມ ແລະ ຄຸນນະພາບ ຂອງບໍລິການດ້ານການຊ່ວຍເຫຼືອ, ເບິ່ງແຍງ, ປິ່ນປົວ, ແລະ ຕ້ານເຊື້ອ HIV ແບບປະສົມປະສານ.**





## ທ່າອ່ຽງການພັດທະນາຕົ້ນຕໍ

ອັດຕາການແພ່ລະບາດຂອງເຊື້ອ HIV ໃນກຸ່ມຜູ້ໃຫຍ່ອາຍຸລະຫວ່າງ 15-49 ຢູ່ ສປປ ລາວ ຍັງຄົງຢູ່ໃນລະດັບຕ່ຳ ຄືທີ່ 0,3 ສ່ວນຮ້ອຍ. ປະມານກັນວ່າ: ມີປະຊາຊົນຈຳນວນ 11.000 ຄົນທີ່ດຳລົງຊີວິດກັບເຊື້ອ HIV, ໂດຍຕົວເລກປະເມີນ ຜູ້ຕິດເຊື້ອໃໝ່ທີ່ 1.000 ຄົນຕໍ່ປີ. ເພື່ອຫຼຸດຜ່ອນຈຳນວນຜູ້ຕິດເຊື້ອ HIV ໃໝ່ຕໍ່ປີ, ຈຸດສຸມໃນວຽກງານຕອບໂຕ້ HIV ແມ່ນໄດ້ເນັ້ນໃສ່ປະຊາກອນກຸ່ມສ່ຽງຫຼັກ. ປະຊາກອນກຸ່ມສ່ຽງຫຼັກ ລວມມີຊາຍຮ່ວມເພດກັບຊາຍ, ຜູ້ໃຫ້ບໍລິການທາງ ເພດ ແລະ ລູກຄ້າ, ຄົນທີ່ໃຊ້ຢາເສບຕິດປະເພດສັກໂດຍໃຊ້ອຸປະກອນສັກຮ່ວມກັນ ແລະ ຄົນເຈັບປ່ວຍຈາກພະຍາດວັນນະໂລກ. ຊ່ຽວຊານຫຼາຍຄົນໃນຂະແໜງນີ້ ປະເມີນວ່າ: ອັດຕາການແພ່ລະບາດໃນກຸ່ມຄົນເຫຼົ່ານີ້ ມີສູງເຖິງສິບທົບ ເມື່ອທຽບໃສ່ປະຊາກອນທົ່ວໄປ.

ການເຄື່ອນຍ້າຍຖິ່ນຖານໃນລະດັບສາກົນ ແລະ ການເຄື່ອນຍ້າຍໄປມາພາຍໃນພາກພື້ນອາຊຽນ ເປັນອີກປັດໃຈທີ່ເພີ່ມໃສ່ຄວາມກັງວົນດັ່ງກ່າວ. ໃນປະຈຸບັນ, ບັນດາໂຄງການພັດທະນາໂຄງລ່າງພື້ນຖານຂະໜາດໃຫຍ່ ແລະ ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ໄດ້ນຳເຂົ້າແຮງງານຕ່າງປະເທດ ເຊິ່ງເຮັດໃຫ້ ສປປ ລາວ ມີຄວາມສ່ຽງເພີ່ມສູງຂຶ້ນຕໍ່ການລະບາດຂອງເຊື້ອ HIV . ຜູ້ຊ່ຽວຊານດ້ານ HIV ຍັງກັງວົນອີກວ່າ: ກໍລະນີການຕິດເຊື້ອ HIV ໃໝ່ ຈະເພີ່ມສູງຂຶ້ນໃນກຸ່ມປະຊາກອນທັງຊາຍ ແລະ ຍິງທີ່ມີຄວາມສ່ຽງຕ່ຳ ໂດຍສະເພາະລູກຄ້າຂອງຜູ້ໃຫ້ບໍລິການທາງເພດ, ແຮງງານເຄື່ອນຍ້າຍ ແລະ ຄູ່ຮັກຂອງເຂົາເຈົ້າ.

> “*ໃນປະຈຸບັນ, ບັນດາໂຄງການພັດທະນາໂຄງລ່າງພື້ນຖານຂະໜາດໃຫຍ່ ແລະ ໂຄງການກໍ່ ສ້າງເຂື່ອນໄຟຟ້ານ້ຳຕົກ ໄດ້ນຳເຂົ້າແຮງງານຕ່າງປະເທດ ເຊິ່ງເຮັດໃຫ້ ສປປ ລາວ ມີຄວາມສ່ຽງເພີ່ມສູງຂຶ້ນຕໍ່ການລະ ບາດຂອງເຊື້ອ HIV.*”

## ຜົນໄດ້ຮັບ

ຍັງມີການສືບຕໍ່ຈັດຕັ້ງປະຕິບັດກິດຈະກຳໂຄສະນາຂໍການສະໜັບສະໜູນທາງນະໂຍບາຍຕະຫຼອດປີ. ຕົວຢ່າງ: ໄດ້ມີ ຄວາມພະຍາຍາມໂຄສະນາຂໍການສະໜັບສະໜູນຕໍ່ເນື່ອງເພື່ອເອົາຢາ ARV ໄປໄວ້ສູນບໍລິການຢາ ທີ່ຢູ່ໃກ້ເຂດບ່ອນ ຢູ່ອາໄສຂອງຜູ້ດຳລົງຊີວິດກັບເຊື້ອ HIV ໃຫ້ຫຼາຍຂຶ້ນ ເພື່ອສະດວກງ່າຍສຳລັບເຂົາເຈົ້າໃນການເຂົ້າເຖິງຢາ, ເພື່ອສ້າງ ແຜນຂ້າມຜ່ານການລະດົມທຶນພາຍໃນສຳລັບການປິ່ນປົວດ້ວຍຢາ ARV, ແລະ ເພື່ອແກ້ໄຂບັນຫາການລັງກຽດ ແລະ ການຈຳແນກຢູ່ສະຖານທີ່ບໍລິການສາທາລະນະສຸກ ທີ່ມີຕໍ່ຜູ້ຕິດເຊື້ອ . ອົງການ WHO ແລະ ອົງການ UNAIDS ໄດ້ ໂຄສະນາຂໍການສະໜັບສະໜູນຈາກກະຊວງສາທາລະນະສຸກ, ກະຊວງຍຸຕິທຳ ແລະ ຄະນະກຳມະການແຫ່ງຊາດເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ໃນການຊ່ວຍແກ້ໄຂອຸປະສັກທາງກົດໝາຍທີ່ກີດຂວາງປະຊາກອນກຸ່ມສ່ຽງຫຼັກ ໃນການເຂົ້າ ເຖິງບໍລິການຕ່າງໆທີ່ກ່ຽວກັບຂ້ອງກັບ HIV. ບົດສະເໜີແກ້ໄຂອຸປະສັກກີດຂວາງທາງກົດໝາຍ ແມ່ນໄດ້ຮັບການທົບທວນໂດຍຄະນະປັບປຸງດັດແກ້ປະມວນກົດໝາຍອາຍາ ເພື່ອແກ້ໄຂອຸປະສັກເຫຼົ່ານັ້ນໃນປະມວນກົດໝາຍອາຍາ ທີ່ມີ ແຜນຈະສົ່ງໃຫ້ສະພາແຫ່ງຊາດຮັບຮອງເອົາ.

ຜ່ານກິດຈະກຳຮ່ວມໂຄສະນາຂໍການສະໜັບສະໜູນດັ່ງກ່າວ, ລັດຖະບານ ໄດ້ຮັບຮອງເອົາການຂະຫຍາຍກິດຈະກຳປິ່ນປົວຢາເສບຕິດຂັ້ນຊຸມຊົນ ຫຼື ຂັ້ນບ້ານໄປສູ່ແຂວງອື່ນເພີ່ມອີກໃນປີ 2017. ນອກຈາກນັ້ນ, ວິທີການດຳເນີນງານ ຂອງຂະແໜງສາທາລະນະສຸກຄືການສົ່ງເສີມການຫຼຸດຜ່ອນອັນຕະລາຍຈາກຢາເສບຕິດ ປະຈຸບັນນີ້ ໄດ້ຖືກລວມເຂົ້າໃນແຜນແມ່ບົດ ຫຼື ຍຸດທະສາດແຫ່ງຊາດວ່າດ້ວຍການຄວບຄຸມຢາເສບຕິດສຳລັບໄລຍະ 2016-2020. ອົງການ UNAIDS ແລະ ອົງການ WHO ໄດ້ໃຫ້ການຊ່ວຍເຫຼືອກະຊວງສາທາລະນະສຸກ ແລະ ແຜນງານຄວບຄຸມ HIV/AIDS ແຫ່ງຊາດ ເພື່ອຈັດຕັ້ງປະຕິບັດຄຳໝາຍໝັ້ນທາງການເມືອງທີ່ໃຫ້ໄວ້ພາຍໃຕ້ຖະແຫຼງການການເມືອງວ່າດ້ວຍ HIV ແລະ AIDS. ລັດຖະບານລາວ ໄດ້ຮັບຮອງເອົາເປົ້າໝາຍເລັ່ງລັດເພື່ອຫຼຸດຜ່ອນຈຳນວນກໍລະນີຕິດເຊື້ອ HIV ໃໝ່ ໃຫ້ ຕໍ່າກ່ວາ 300 ຕໍ່ປີພາຍໃນປີ 2020 ແລະ ເພື່ອຍຸຕິການລະບາດຂອງໂລກ AIDS ໃຫ້ໄດ້ພາຍໃນປີ 2030. ອົງການ UNODC ໄດ້ລິເລີ່ມການສົ່ງເສີມສູນປິ່ນປົວຢາເສບຕິດຂັ້ນຊຸມຊົນຢູ່ໂຮງໝໍເມືອງສີສັດຕະນາ, ນະຄອນຫຼວງວຽງຈັນ ເພື່ອສຸມການປິ່ນປົວໃສ່ຜູ້ໃຊ້ຢາບ້າ.

ອົງການ UNAIDS ຍັງໄດ້ສະໜອງການຊ່ວຍເຫຼືອໃຫ້ແຜນງານ HIV/AIDS ແຫ່ງຊາດ ດ້ວຍການລະບຸວິທີການແບບໃໝ່ໃນການເຂົ້າເຖິງປະຊາກອນກຸ່ມເປົ້າໝາຍຫຼັກທີ່ໄດ້ຮັບຜົນກະທົບ. ໄປຄຽງຄູ່ກັນນັ້ນ, ອົງການ WHO ຍັງໄດ້ເຮັດ ວຽກຢ່າງໃກ້ຊິດກັບສູນຕ້ານເອດສ໌ ແລະ ການຕິດເຊື້ອທາງເພດສຳພັນ ເພື່ອເຊື່ອມສານເອົາຂໍ້ມູນ HIV/AIDS ເຂົ້າໃນ ລະບົບຂໍ້ມູນຂ່າວສານສາທາລະນະສຸກ. ບັນດາອົງການຕ່າງໆໃນລະບົບ ສປຊ ຍັງຈະສືບຕໍ່ໃຫ້ການຊ່ວຍເຫຼືອການ ກວດຫາການຕິດເຊື້ອ, ການຕ້ານ, ການປິ່ນປົວ ແລະ ການເບິ່ງແຍງຄົນເຈັບປ່ວຍຈາກເຊື້ອ HIV ກໍ່ຄືການແກ້ໄຂອຸປະສັກສິ່ງກີດຂວາງຕໍ່ການເຂົ້າເຖິງບໍລິການຕ່າງໆທີ່ພົວພັນກັບ HIV.

ໃນດ້ານການປັບປຸງຄຸນນະພາບຂອງແຜນງານໃຫ້ບໍລິການທີ່ພົວພັນກັບ HIV/AIDS, ອົງການ UNAIDS ຮ່ວມກັບອົງການ WHO ແລະ ຄູ່ຮ່ວມງານອື່ນໆ ໄດ້ອຳນວຍຄວາມສະດວກ ແລະ ຈັດຕັ້ງປະຕິບັດການທົບທວນ ແຜນງານເພື່ອນສອນເພື່ອນກ່ຽວກັບການຕິດຕໍ່ທາງເພດສຳພັນ ແລະ HIV. ອົງການ UNAIDS ແລະ ອົງການ WHO ຍັງໄດ້ປະກອບສ່ວນໃສ່ການໂຄສະນາຂໍການສະໜັບສະໜູນໃນລະດັບກະຊວງ ແລະ ກົນໄກການປະສານງານລະດັບຊາດເພື່ອຂໍທຶນຊ່ວຍເຫຼືອຈາກກອງທຶນໂລກ ເພື່ອຕ້ານ AIDS, ວັນນະໂລກ ແລະ ໄຂ້ຍຸງ, ຕະຫຼອດເຖິງຂໍການປະກອບງົບປະມານຈາກລັດຖະບານ.

ອົງການ UNFPA ໄດ້ລວມ HIV/AIDS ເຂົ້າໃນບໍລິການຊ່ວຍເຫຼືອ ແລະ ການໃຫ້ຂໍ້ມູນຂ່າວສານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນໄວໜຸ່ມ. ໃນປີ 2016, ກະຊວງສຶກສາທິການ ແລະ ກິລາ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງ ການ UNFPA ໄດ້ຈັດກອງປະຊຸມໂຄສະນາຂໍການສະໜັບສະໜູນໃຫ້ບັນດາຜູ້ສ້າງນະໂຍບາຍຢູ່ຂັ້ນແຂວງ. ຜົນທີ່ໄດ້ ກໍ່ຄືອົງການຈັດຕັ້ງຊາວໜຸ່ມ ຈະຮັບຜິດຊອບການປະສານງານກິດຈະກຳເຂົ້າເຖິງກຸ່ມເປົ້າໝາຍສຳລັບວຽກງານສຸຂະ ພາບທາງເພດ ແລະ ສຸຂະພາບຈະເລີນພັນໄວໜຸ່ມ ໃນຂະນະທີ່ຂະແໜງສາທາ ແລະ ສຶກສາ ຈະສະໜອງການປະກອບ ສ່ວນດ້ານວິຊາການໃຫ້ກິດຈະກຳເຂົ້າເຖິງກຸ່ມເປົ້າໝາຍ ໂດຍມີການຊີ້ນຳຈາກສູນໄວໜຸ່ມນະຄອນຫຼວງ ແລະ ສະມາ ຄົມສົ່ງເສີມສຸຂະພາບຄອບຄົວ. ໃນບັນດາຄວາມພະຍາຍາມສ້າງຄວາມສາມາດ ຍັງໄດ້ລວມເອົາການຝຶກອົບຮົມສ້າງ ທີມງານຫຼັກຂັ້ນເມືອງເພື່ອເຂົ້າເຖິງກຸ່ມເປົ້າໝາຍ ໂດຍມີຕົວແທນຈາກ 3 ຂະແໜງ (ສາທາ, ສຶກສາ ແລະ ອົງການຈັດ ຕັ້ງຊາວໜຸ່ມ).

ນອກຈາກນັ້ນ, ຍັງໄດ້ມີການສະໜອງຊຸດຂໍ້ມູນຂ່າວສານ, ຈັດການສຶກສາອົບຮົມ ແລະ ການສື່ສານ ເພື່ອ ຊ່ວຍກິດຈະກຳເຂົ້າເຖິງກຸ່ມເປົ້າໝາຍ ຢູ່ 5 ເມືອງ ເຊິ່ງສາມາດເຂົ້າເຖິງໄວໜຸ່ມທັງໝົດໄດ້ 1.550 ຄົນ ຈາກໂຮງຮຽນ ມັດທະຍົມຕ່າງໆ.

“ *ຍັງມີການສືບຕໍ່ຈັດຕັ້ງປະຕິບັດກິດຈະກຳໂຄສະນາຂໍການສະໜັບສະໜູນທາງນະໂຍບາຍຕະຫຼອດປີ. ຕົວຢ່າງ: ໄດ້ມີ ຄວາມພະຍາຍາມໂຄສະນາຂໍການສະໜັບສະໜູນຕໍ່ເນື່ອງເພື່ອເອົາຢາ ARV ໄປໄວ້ສູນບໍລິການຢາ ທີ່ຢູ່ໃກ້ເຂດບ່ອນ ຢູ່ອາໄສຂອງຜູ້ດຳລົງຊີວິດກັບເຊື້ອ HIV ໃຫ້ຫຼາຍຂຶ້ນ ເພື່ອສະດວກງ່າຍສຳລັບເຂົາເຈົ້າໃນການເຂົ້າເຖິງຢາ, ເພື່ອສ້າງແຜນຂ້າມຜ່ານການລະດົມທຶນພາຍໃນສຳລັບການປິ່ນປົວດ້ວຍຢາ ARV, ແລະ ເພື່ອແກ້ໄຂບັນຫາການລັງກຽດ ແລະ ການຈຳແນກຢູ່ສະຖານທີ່ບໍລິການສາທາລະນະສຸກ ທີ່ມີຕໍ່ຜູ້ຕິດເຊື້ອ.* ”

ພ້ອມນັ້ນ, ທີມງານເຂົ້າເຖິງກຸ່ມເປົ້າໝາຍ ຍັງໄດ້ໂຄສະນາກ່ຽວກັບບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນໄວໜຸ່ມ ຢູ່ໂຮງໝໍເມືອງ 5 ແຫ່ງ ເຊິ່ງປະຈຸບັນແມ່ນໄດ້ສະໜອງບໍລິການທີ່ເປັນມິດກັບໄວໜຸ່ມ. ດ້ວຍການຊ່ວຍເຫຼືອຈາກອົງການ UNFPA, ສູນໄວໜຸ່ມນະຄອນຫຼວງສາມາດໃຫ້ບໍລິການສຸຂະພາບທາງເພດ ແລະຈະເລີນພັນໃຫ້ໄວໜຸ່ມໄດ້ເຖິງ 7.159 ຄົນ. ນອກຈາກນັ້ນ, ໄວໜຸ່ມຈຳນວນ 786 ຄົນ ຍັງໄດ້ຮັບບໍລິການໃຫ້ຄຳປຶກສາກ່ຽວກັບ HIV/AIDS ແລະ ສາມາດກວດຫາເຊື້ອ HIV ທີ່ສູນໄວໜຸ່ມນະຄອນຫຼວງ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ເພື່ອຍຸຕິການລະບາດຂອງເຊື້ອ HIV ໃຫ້ໄດ້ພາຍໃນປີ 2030, ບັນດາຜູ້ຮ່ວມສະໜັບສະໜູນວຽກງານຂອງອົງການ UNAIDS ຈະຕ້ອງໄດ້ເພີ່ມການຊ່ວຍເຫຼືອຂອງເຂົາເຈົ້າຄືດັ່ງນີ້:

### ໂຄສະນາ ເພື່ອເຊື່ອມສານບັນຫາ HIV ເຂົ້າໃນແຜນງານຕ່າງໆຂອງລັດຖະບານແລະຄູ່ຮ່ວມພັດທະນາ:

ຄວາມຮູ້ ກ່ຽວກັບ HIV/AIDS, ການຕ້ານ ແລະ ການແກ້ໄຂຕອບໂຕ້ ຄວນຖືກລວມເຂົ້າໃນບັນດາແຜນງານຕ່າງໆ ທີ່ພົວພັນກັບຄວາມສະເໝີພາບບົດບາດຍິງ-ຊາຍ, ສິດທິມະນຸດ, ການໃຫ້ຄວາມຮູ້ຢູ່ສະຖານທີ່ເຮັດວຽກ, ການສ້າງຄວາມເຂັ້ມແຂງໃຫ້ລະບົບສາທາ, ຕາໜ່າງຄວາມປອດໄພທາງສັງຄົມ, ສຸຂະພາບແມ່ ແລະ ເດັກ, ສຸຂະພາບທາງເພດ ແລະຈະເລີນພັນ.

### ໂຄສະນາຂໍການສະໜັບສະໜູນຊັບພະຍາກອນທີ່ພຽງພໍເພື່ອຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດວ່າດ້ວຍ HIV ໄລຍະ 2016-2020:

ການສະໜອງທຶນໃຫ້ການແກ້ໄຂບັນຫາ HIV/AIDS ທີ່ມີໃນປະຈຸບັນແມ່ນຍັງ ເຫັນວ່າ: ຂາດຄວາມຍືນຍົງ ເຊິ່ງເກືອບວ່າ: 100 ສ່ວນຮ້ອຍ ແມ່ນໄດ້ຮັບແຫຼ່ງທຶນຈາກຕ່າງປະເທດ. ການປະຕິເສດການ ຊ່ວຍເຫຼືອຈາກຕ່າງປະເທດ ຈິ່ງມີຜົນກະທົບໃຫຍ່ຫຼວງຕໍ່ແຜນງານ HIV/AIDS ຢູ່ ສປປ ລາວ. ດັ່ງນັ້ນ, ຕ້ອງໄດ້ເພີ່ມ ການລະດົມ ແລະ ຈັດສັນຊັບພະຍາກອນພາຍໃນປະເທດ.

### ສ້າງຄວາມເຂັ້ມແຂງໃຫ້ແວດລ້ອມທີ່ເອື້ອອຳນວຍຕໍ່ການແກ້ໄຂ HIV ຢ່າງມີປະສິດທິຜົນ:

ສົ່ງເສີມວິທີການດຳເນີນ ງານແບບອົດທົນອົດກັ້ນໃນກຸ່ມເຈົ້າໜ້າທີ່ປະຕິບັດກົດໝາຍ ທີ່ເຮັດວຽກກັບປະຊາກອນກຸ່ມສ່ຽງ. ສືບຕໍ່ໂຄສະນາ ເພື່ອຂໍການຮ່ວມມືຈາກພາກເອກະຊົນໃນການແກ້ໄຂ HIV/AIDS ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງນິຕິ ກຳລຸ່ມກົດໝາຍວ່າດ້ວຍ HIV/AIDS ແລະ ປັບປຸງການແກ້ໄຂຜ່ານແຜນງານ ເຊິ່ງລວມທັງການຊ່ວຍເຫຼືອ, ການ ເບິ່ງແຍງ, ການປິ່ນປົວ, ແລະ ການຕ້ານ HIV ທີ່ເອົາຊຸມຊົນເປັນໃຈກາງ.

### ລະດົມຊັບພະຍາກອນຈາກຜູ້ລົງທຶນພາກເອກະຊົນ ໂດຍການປະສານສົມທົບກັບລັດຖະບານໃນການຈັດຕັ້ງປະຕິບັດໂຄງການພັດທະນາພື້ນຖານໂຄງລ່າງຂະໜາດໃຫຍ່ ເຊິ່ງລວມທັງໂຄງການບໍ່ແຮ່, ເຂື່ອນໄຟຟ້ານ້ຳຕົກ ແລະ ໂຄງການສ້າງທາງ:

ການມີສ່ວນຮ່ວມຂອງພາກເອກະຊົນໃນການແກ້ໄຂ HIV ຈະຊ່ວຍຫຼຸດຜ່ອນຜົນກະທົບຈາກ ບັນດາໂຄງການພັດທະຕ່າງໆທີ່ມີຕໍ່ສາຍໄຍທາງເສດຖະກິດສັງຄົມ ຢູ່ຕາມບັນດາເຂດອ້ອມຂ້າງທີ່ມີການພັດທະ ນາໂຄງການ. ການປະສານສົມທົບກັບປະເທດໃກ້ຄຽງ ກໍ່ເປັນສິ່ງຈຳເປັນ ເພື່ອແກ້ໄຂບັນຫາ HIV ໃນສະພາບ ເງື່ອນໄຂຂອງການເຄື່ອນຍ້າຍແຮງງານ. ເພື່ອຫຼຸດຜ່ອນຊ່ອງຫວ່າງດ້ານການສະໜອງທຶນໃນການແກ້ໄຂບັນຫາ HIV, ກະຊວງສາທາລະນະສຸກ ແລະ ຄູ່ຮ່ວມງານອື່ນໆ ຈະຕ້ອງໄດ້ເຮັດວຽກກັບຜູ້ລົງທຶນລາຍໃຫຍ່ ທີ່ນຳເຂົ້າແຮງງານເຄື່ອນຍ້າຍ ຫຼື ແຮງງານຕ່າງປະເທດຈຳນວນຫຼາຍພັນຄົນ ເພື່ອເຂົ້າມາເຮັດວຽກໃນເຂດພັດທະນາໂຄງການຂອງ ເຂົາເຈົ້າ.

ນອກຈາກສິ່ງທີ່ກ່າວມາຂ້າງເທິງແລ້ວ, ຍັງຈຳເປັນຕ້ອງມີການຊ່ວຍເຫຼືອເພີ່ມໃຫ້ການຕິດຕາມກວດກາວຽກເຂົ້າເຖິງ ກຸ່ມເປົ້າໝາຍທີ່ເລັງເປົ້າໝາຍໃສ່ໄວໜຸ່ມ. ທີມງານເຂົ້າເຖິງກຸ່ມເປົ້າໝາຍຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບກິດຈະກຳ ເຂົ້າເຖິງກຸ່ມເປົ້າໝາຍ ແລະ ເນື້ອໃນກ່ຽວກັບສຸຂະພາບທາງເພດ ແລະ ຈະເລີນພັນຂອງໄວໜຸ່ມ, ເຂົາເຈົ້າ ຕ້ອງມີຄວາມເຂົ້າໃຈສູງຂື້ນກ່ວາເດີມ ແລະຮູ້ນຳໃຊ້ບັນດາເຄື່ອງມືຕິດຕາມກວດກາ ແລະ ປະເມີນຜົນ.



# 7. ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ

# ລັດຖະບານ ຮັບປະກັນ ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງຜ່ານການປັບປຸງການຄຸ້ມຄອງ ແລະ ການມີສ່ວນຮ່ວມຂອງຊຸມຊົນ





## ທ່າອ່ຽງການພັດທະນາຕົ້ນຕໍ

ສປປ ລາວ ຍັງສືບຕໍ່ເປັນໜຶ່ງໃນບັນດາເສດຖະກິດ ທີ່ມີການເຕີບໂຕໄວສຸດພາຍໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໂດຍມີການເຕີບໂຕຂອງ GDP ສະເລ່ຍທີ່ເຈັດສ່ວນຮ້ອຍໃນໄລຍະຊຸມປີຜ່ານມາ. ການເຕີບໂຕທາງເສດຖະກິດດັ່ງ ກ່າວແມ່ນຢູ່ບົນພື້ນຖານການນຳໃຊ້ຊັບພະຍາກອນທຳມະຊາດ ໂດຍສະເພາະ ໄຟຟ້ານ້ຳຕົກ, ບໍ່ແຮ່ ແລະ ການຜະລິດ ກະສິກຳ-ປ່າໄມ້. ການນຳໃຊ້ຊັບພະຍາກອນທຳມະຊາດໃນຂອບເຂດກ້ວາງຂວາງ ໄດ້ເປັນຜົນເຮັດໃຫ້ມີການສູນເສຍເນື້ອທີ່ປົກຫຸ້ມຂອງປ່າໄມ້, ຊີວະນາໆພັນ ແລະ ສັດປ່າເປັນຈຳນວນຫຼາຍ, ພ້ອມທັງປະກອບສ່ວນເຮັດໃຫ້ເກີດຜົນກະທົບ ຕ່າງໆດ້ານໄພພິບັດ, ເຊິ່ງເຫັນວ່າ: ທ່າອ່ຽງເຫຼົ່ານີ້ ຍັງສືບຕໍ່ຮອດປີ 2016. ການສູນເສຍເນື້ອທີ່ປ່າ, ກິດຈະກຳອຸດສາຫະກຳ, ສວນປູກທີ່ໃຊ້ເນື້ອທີ່ຂະໜາດໃຫຍ່ເຊິ່ງມີຄວາມຕ້ອງການນ້ຳສູງ ແລະ ການນຳໃຊ້ຢາປາບສັດຕູພືດ ຖືເປັນບັນຫາ ຈຳນວນໜຶ່ງທີ່ປະກອບສ່ວນເຮັດໃຫ້ຊັບພະຍາກອນນ້ຳບົກແຫ້ງ ເຊິ່ງຕ້ອງໄດ້ມີການຄຸ້ມຄອງຢ່າງຖືກຕ້ອງ. ໜຶ່ງໃນຫຼາຍ ເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 (ແຜນ 8) ຄື: ຕ້ອງການບັນລຸເນື້ອທີ່ປົກຫຸ້ມ ຂອງປ່າໄມ້ໃຫ້ໄດ້ 70 ສ່ວນຮ້ອຍພາຍໃນປີ 2020.

ມີຂໍ້ມູນສະແດງໃຫ້ຮູ້ວ່າ: ສປປ ລາວ ຖືກນຳໃຊ້ເປັນທາງຜ່ານຂອງການຄ້າຂາຍສັດປ່າຜິດກົດໝາຍ ເຊິ່ງໄດ້ນຳໄປສູ່ ການມາເຮັດວຽກຄະນະປະເມີນການປະຕິບັດພັນທະຂອງ ສປປ ລາວ ຈາກກອງເລຂາສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງປະເທດ (CITES). ບົດລາຍງານການຈັດຕັ້ງປະຕິບັດສົນທິສັນຍາ CITES ຫຼັງການມາເຮັດວຽກຂອງຄະນະກອງເລຂາດັ່ງກ່າວ ໄດ້ຍົກໃຫ້ເຫັນຫຼາຍບັນຫາເຊັ່ນ: ການຄ້າຂາຍງາຊ້າງ, ການຄ້າຂາຍສັດເປັນ ແລະ ຟາມປະສົມພັນ ແລະ ລ້ຽງສັດປ່າແບບຜິດກົດໝາຍ, ພ້ອມນັ້ນ ບົດລາຍງານດັ່ງກ່າວຍັງຊີ້ໃຫ້ເຫັນຂອບລະບຽບກົດໝາຍ ຕະຫຼອດເຖິງການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ຍັງບໍ່ທັນເຂັ້ມແຂງ; ບັນຫາ ການຂາດຂໍ້ມູນວິທະຍາສາດທີ່ໜັກແໜ້ນເພື່ອໃຊ້ເຂົ້າໃນການຕັດສິນແກ້ໄຂບັນຫາ; ແລະ ການສື່ສານໃຫ້ຂໍ້ມູນຕໍ່ສັງຄົມ ແລະ ຄວາມຮັບຮູ້ຂອງສັງຄົມທີ່ຍັງບໍ່ທັນພຽງພໍ.

## ຜົນໄດ້ຮັບ

ໃນສ່ວນທີ່ກ່ຽວພັນກັບການຄອບຄອງນຳໃຊ້ທີ່ດິນ ແລະ ຊັບພະຍາກອນປ່າໄມ້, ອົງການ FAO ໄດ້ໃຫ້ການຊ່ວຍເຫຼືອການສຶກສາທີ່ຈັດຕັ້ງປະຕິບັດໂດຍກະຊວງຊັບພະຍາກອນທຳ ມະຊາດ ແລະ ສິ່ງແວດລ້ອມ ໂດຍປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ເພື່ອສະໜອງພາບລວມຂໍ້ມູນພື້ນຖານກ່ຽວກັບການຄອບຄອງນຳໃຊ້ທີ່ດິນຢູ່ ສປປ ລາວ ໂດຍ ມີຈຸດສຸມສະເພາະເນັ້ນໃສ່ການມີສ່ວນຮ່ວມຂອງຊຸມຊົນໃນການຄຸ້ມຄອງປ່າໄມ້ພາຍໃຕ້ສະພາບເງື່ອນໄຂຂອງຂອບກົດໝາຍປະຈຸບັນ ແລະ ແວດລ້ອມທີ່ເອື້ອອຳນວຍສຳລັບການຄຸ້ມຄອງປ່າໄມ້ແບບຍືນຍົງ. ສື່ການຝຶກອົບຮົມແລະ ການສື່ສານກັບສື່ມວນຊົນທີ່ມີເນື້ອໃນກ່ຽວກັບການຄອບຄອງສິດນຳໃຊ້ທີ່ດິນ, ການປະມົງ ແລະ ປ່າໄມ້ ສາມາດຊ່ວຍເສີມຂະຫຍາຍປັບປຸງການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດໂດຍສະເພາະຜ່ານການສ້າງຄວາມຮູ້ແລະຄວາມເຂົ້າໃຈໃນຂັ້ນຊຸມຊົນ/ບ້ານ, ເມືອງແລະແຂວງ.

> *“ອົງການ UNDP ແລະ FAO ຍັງສືບຕໍ່ໃຫ້ການຊ່ວຍເຫຼືອດ້ານການເຊື່ອມສານຊີວະນາໆພັນເຂົ້າໃນບັນດານະໂຍບາຍ, ແຜນການແລະແຜນງານ ຫຼື ໂຄງການທີ່ກ່ຽວກັບການຜະລິດກະສິກຳແລະການຄຸ້ມຄອງທີ່ດິນ ໂດຍມີການສ້າງຄວາມສາມາດໃຫ້ຊາວນາ ແລະ ຊຸມຊົນ.”*

ພ້ອມນັ້ນ, ຍັງໄດ້ມີການສະໜອງການຊ່ວຍເຫຼືອໃຫ້ກົມປ່າໄມ້ເພື່ອສ້າງຄວາມເຂັ້ມແຂງໃຫ້ລະບົບຕິດຕາມກວດກາປ່າໄມ້ແຫ່ງຊາດຜ່ານພະແນກສຳຫຼວດ ແລະ ວາງແຜນປ່າໄມ້ ໂດຍນຳໃຊ້ລະບົບຄໍເລັກເອີດທ໌ (CollectEarth) ເຊິ່ງພັດທະນາມາຈາກໂປແກຣມລະບົບຂໍ້ມູນຂ່າວສານພູມສາດທີ່ເປັນແຫຼ່ງໂປຣແກມເປີດ. ນອກຈາກນັ້ນ, ພະນັກງານປ່າໄມ້ຈາກແຂວງຫຼວງພະບາງ, ຫົວພັນ ແລະ ບໍ່ແກ້ວ ຍັງໄດ້ຮຽນຮູ້ທັກສະໃໝ່ໆກ່ຽວກັບການນຳໃຊ້ວິທີການເກັບກຳຂໍ້ມູນຈາກການສຳຫຼວດໄລຍະໄກ ຫຼື ຣີໂມດເຊັນຊິງ ເພື່ອຕິດຕາມກວດກາເບິ່ງເນື້ອທີ່ປົກຫຸ້ມຂອງປ່າ. ຂໍ້ມູນກ່ຽວກັບເນື້ອທີ່ປົກຫຸ້ມຂອງປ່າທີ່ໄດ້ມານັ້ນ ແມ່ນຖືກນຳໃຊ້ເປັນພື້ນຖານສຳລັບວຽກງານການວາງແຜນຂອງຂະແໜງປ່າໄມ້ ໂດຍສະເພາະສຳລັບການກຳນົດກິດຈະກຳຂອງໂຄງການ REDD+ ຢູ່ຂັ້ນແຂວງ, ແລະໃຊ້ເຂົ້າໃນການວິເຄາະ ຂອງພະແນກສຳຫຼວດແລະວາງແຜນປ່າໄມ້ ເພື່ອຢືນຢັນວິທີນຳໃຊ້ຂໍ້ມູນເຫຼົ່ານັ້ນ ເຂົ້າໃນການຕິດຕາມກວດກາປ່າໄມ້ທົ່ວປະເທດ ໃນອະນາຄົດ.

ອົງການ UNDP ໄດ້ເລີ່ມຈັດຕັ້ງປະຕິບັດແຜນງານຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງຢູ່ 5 ເມືອງໃນແຂວງສະຫວັນນະເຂດ, ເຊິ່ງເປັນແຂວງພາກໃຕ້ທີ່ໃຫຍ່ສຸດຂອງປະເທດ. ໂຄງການ ໄດ້ເອົາບັນດາຊຸມຊົນ ຫຼື ບ້ານຕ່າງໆໃນ 5 ເມືອງເປົ້າໝາຍເຂົ້າມີສ່ວນຮ່ວມໃນການຍົກລະດັບຄວາມຮັບຮູ້ກ່ຽວກັບວິທີຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ໄດ້ມີການສົ່ງເສີມໃຫ້ເຂົາເຈົ້ານຳໃຊ້ປ່າໄມ້ ໃນລັກສະນະທີ່ບໍ່ຂຸດຄົ້ນທຳລາຍ.

ອົງການ FAO ຍັງໄດ້ໃຫ້ການຊ່ວຍເຫຼືອກົມກວດກາປ່າໄມ້ ແລະ ອົງການຈັດຕັ້ງທາງສັງຄົມພາຍໃນປະເທດເພື່ອສ້າງກິດຈະກຳຊ່ວຍເຫຼືອໂດຍເອົາຊຸມຊົນເປັນໃຈກາງສຳລັບແຜນງານ FLEGT ທີ່ມີເປົ້າໝາຍຈັດຕັ້ງປະຕິບັດຢູ່ສອງເມືອງຂອງແຂວງຄຳມ່ວນ ເຊິ່ງເປັນແຜນງານທີ່ຖືກອອກແບບເພື່ອສ້າງຄວາມເຂັ້ມແຂງໃຫ້ປະຊາຊົນທ້ອງຖິ່ນ ແລະ ເພື່ອເພີ່ມ ຄວາມຮັບຮູ້ຂອງເຂົາເຈົ້າກ່ຽວກັບກົດໝາຍ, ການຄຸ້ມຄອງປ່າໄມ້ ແລະ ການຂຸດຄົ້ນໄມ້ທ່ອນ.

ອົງການ UNDP ແລະ FAO ຍັງສືບຕໍ່ໃຫ້ການຊ່ວຍເຫຼືອດ້ານການເຊື່ອມສານຊີວະນາໆພັນເຂົ້າໃນບັນດານະໂຍບາຍ, ແຜນການແລະແຜນງານ ຫຼື ໂຄງການທີ່ກ່ຽວກັບການຜະລິດກະສິກຳແລະການຄຸ້ມຄອງທີ່ດິນ ໂດຍມີການສ້າງຄວາມສາມາດໃຫ້ຊາວນາ ແລະ ຊຸມຊົນ ເຊັ່ນ: ໂຮງຮຽນຊາວນາ ເຊິ່ງມີພະນັກງານສົ່ງເສີມກະສິກຳເພດຍິງ ແລະ ຫົວໜ້າກຸ່ມ ຊາວນາເຮັດໜ້າທີ່ເປັນຜູ້ອຳນວຍຄວາມສະດວກໃນການແລກປ່ຽນຄວາມຮູ້. ການສ້າງ ແລະ ການແຈກຢາຍເຄື່ອງມືສຳຄັນຕ່າງໆ ເຊັ່ນ: ຄູ່ມືແນະນຳການຜະລິດເຫັດນາງລົມ ຄາດວ່າຈະຊ່ວຍຮັບປະກັນຄວາມຍືນຍົງຂອງການຝຶກອົບຮົມ ແລະການຜະລິດ. ກິດຈະກຳສົ່ງເສີມການປູກເຫັດນາງລົມ ເປັນຜົນເຮັດໃຫ້ມີການຜະລິດເຫັດນາງລົມໄດ້ຫຼາຍກ່ວາ 12 ໂຕນຈາກ 101.000 ຖົງ ເຊິ່ງໄດ້ສ້າງລາຍຮັບໄດ້ຫຼາຍກ່ວາ US$ 20.300 ໃຫ້ຜູ້ປູກທັງຍິງ ແລະ ຊາຍ. ດ້ວຍເຫດນັ້ນ, ຈຶ່ງເປັນການເຮັດຫຼາຍຄອບຄົວໃຊ້ເວລາໜ້ອຍລົງໃນການຊອກຢູ່ຫາກິນໃນປ່າ ຖືໄດ້ວ່າເປັນການປະກອບສ່ວນສ້າງຄວາມຍືນຍົງຫຼາຍຂຶ້ນໃນການເກັບເຄື່ອງປ່າຂອງດົງ. ຊາວນາທີ່ເຂົ້າຮ່ວມ ຍັງໄດ້ສະໜອງການຝຶກອົບຮົມໃຫ້ຊາວນາຜູ້ອື່ນ, ຄາດວ່າ: ຄູ່ມືສະບັບໃໝ່ ຈະຍິ່ງຊ່ວຍອຳນວຍຄວາມສະດວກໃຫ້ການຖ່າຍໂອນຄວາມຮູ້ ແລະ ການສ້າງຄວາມສາມາດໃຫ້ຊາວນາຕື່ມອີກ.

ວຽກງານສະຫງວນ ແລະ ຄຸ້ມຄອງຊາປ່າ ກໍ່ໄດ້ຮັບການສົ່ງເສີມຕາມບັນດາສວນຊາ ແລະ ຕາມເຂດພູດອຍ. ໄດ້ມີການ ເຊື່ອມສານອີກຫຼາຍຜະລິດຕະພັນຊີວະນາໆພັນກະສິກຳອື່ນໆ ເຂົ້າໃນລະບົບການຜະລິດຂອງຊຸມຊົນຕ່າງໆຢູ່ແຂວງ ຫຼວງພະບາງ ແລະ ຊຽງຂວາງຢ່າງປະສົບຜົນສຳເລັດ ເຊິ່ງເປັນການປະກອບສ່ວນເຂົ້າໃນວຽກງານຄໍ້າປະກັນສະບຽງອາ ຫານ ແລະ ໂພຊະນາການໃຫ້ປະຊາຊົນໃນເຂດຊົນນະບົດເຫຼົ່ານັ້ນ. ການສືບຕໍ່ສົນທະນາແລກປ່ຽນໃນລະດັບນະໂຍ ບາຍຊ່ວຍຮັບປະກັນວ່າ: ບັນຫາຕ່າງໆທີ່ພົວພັນກັບຊີວະນາໆພັນກະສິກຳແມ່ນໄດ້ຮັບການເຊື່ອມສານເຂົ້າໃນຂະ ບວນການວາງແຜນ. ໃນປີ 2016 ຜ່ານມາ, ໜ່ວຍງານສົນທະນາຍ່ອຍວຽກງານຊີວະນາໆພັນກະສິກຳ ເຊິ່ງອົງການ UNDP/FAO ຮ່ວມໃຫ້ການສະໜັບສະໜູນ ແລະ ສ້າງຕັ້ງຂຶ້ນນັ້ນ ໄດ້ເຮັດໜ້າທີ່ເປັນເວລາສົນທະນາແລກປ່ຽນລະ ຫວ່າງບັນດາພາກສ່ວນກ່ຽວຂ້ອງເພື່ອປຶກສາຫາລືບັນຫາຕ່າງໆກ່ຽວກັບການຄຸ້ມຄອງຢາປາບສັດຕູພືດ ແລະ ແຜນງານຊີວະນາໆພັນກະສິກຳແຫ່ງຊາດ. ນອກຈາກນັ້ນ, ຍັງໄດ້ສຳເລັດການສ້າງຍຸດທະສາດ ແລະ ແຜນດຳເນີນງານວ່າດ້ວຍຊີວະນາໆພັນສຳລັບແຂວງຫຼວງພະບາງ ແລະ ຊຽງຂວາງ.

ອົງການ UNODC ແລະ UNDP ພ້ອມດ້ວຍຄູ່ຮ່ວມພັດທະນາອື່ນໆ ໄດ້ເຮັດວຽກນຳກັນຢ່າງໃກ້ຊິດກັບລັດຖະບານໃນ ການກຳນົດຂອບການແກ້ໄຂຕໍ່ບັນດາສິ່ງຄົ້ນພົບຈາກການມາເຮັດວຽກຂອງຄະນະປະເມີນການປະຕິບັດພັນທະຕາມ ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງປະເທດ (CITES). ການສົນທະນາດັ່ງກ່າວ ໄດ້ເປັນຜົນນຳໄປສູ່ການຖະ

ແຫຼງຂອງລັດຖະບານແຫ່ງ ສປປ ລາວ ທີ່ກອງປະຊຸມກັບຄະນະປະຈຳສົນທິສັນຍາ CITES ແລະ ກອງປະຊຸມລັດພາຄີໃຫ້ຮູ້ກ່ຽວກັບມະຕິຂອງລັດຖະບານທີ່ຈະປິດຟາມລ້ຽງ ແລະ ປະສົມພັນເສືອໂຄ່ງ ແລະ ຈະກຳນົດໃຫ້ການຄ້າຂາຍສັດປ່າແບບຜິດກົດໝາຍ ເປັນການກະທຳຜິດທາງອາຍາ ໃນໄລຍະທີ່ກຳລັງດຳເນີນການປັບປຸງດັດແກ້ປະມວນກົດໝາຍອາຍາ.

ການຊ່ວຍເຫຼືອດ້ານວິຊາການຂອງອົງການ UNIDO ໄດ້ລິເລີ່ມຂະບວນການຮ່າງນະໂຍບາຍສົ່ງເສີມອຸດສາຫະກຳສີ ຂຽວ ແລະ ຈຳກັດການປ່ອຍກ໋າກບອນໃຫ້ຢູ່ໃນລະດັບຕ່ຳເຊິ່ງຖືເປັນການປະກອບສ່ວນໂດຍກົງໃຫ້ວຽກງານການປະຢັດພະລັງງານ, ການຜະລິດສະອາດ ແລະ ການປົກປັກຮັກສາສິ່ງແວດລ້ອມຂອງປະເທດ ດ້ວຍການຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວ. ອົງການ UNIDO ແລະ FAO ຍັງໄດ້ໃຫ້ການຊ່ວຍເຫຼືອປະເທດລາວ ໃນການຈັດຕັ້ງປະຕິບັດສົນທິສັນຍາສະຕ໋ອກໂຮມວ່າດ້ວຍ PoPs ເຊິ່ງໄດ້ຖືກເຊື່ອມສານເຂົ້າໃນກົດໝາຍປົກປັກຮັກສາສິ່ງແວດລ້ອມ .

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ການຊ່ວຍເຫຼືອທີ່ສະໜອງໃຫ້ໂດຍບັນດາອົງການຕ່າງໆພາຍໃນລະບົບ ສປຊ ແມ່ນສອດຄ່ອງກັບຈຸດສຸມຂອງລັດຖະບານທີ່ເນັ້ນໃສ່ຄວາມຍືນຍົງຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ການຫຼຸດຜ່ອນຄວາມບອບບາງຂອງຂະແໜງດັ່ງກ່າວ ພາຍໃຕ້ຜົ້ນໄດ້ຮັບທີສາມຂອງແຜນ 8. ສັງເກດເຫັນວ່າ: ຄວາມສາມາດທາງສະຖາບັນຂອງຫຼາຍຂະ ແໜງການໃນຂົງເຂດວຽກງານເຫຼົ່ານີ້ ແມ່ນຍັງຕ້ອງໄດ້ຮັບການພັດທະນາເພີ່ມ ນັບແຕ່ລະດັບນະໂຍບາຍລົງໄປຮອດລະດັບຈັດຕັ້ງປະຕິບັດຕົວຈິງ. ການສ້າງແຜນດຳເນີນງານ ແລະຂັ້ນຕອນການດຳເນີນງານມາດຕະຖານ (SOPs) ຂອງຂະແໜງກ່ຽວຂ້ອງ ຖືເປັນສິ່ງສຳຄັນທີ່ຈະຊີ້ນຳການເຮັດວຽກຂອງບັນດາອົງການຕ່າງໆໃນການປົກປັກຮັກສາ ແລະ ຟື້ນ ຟູຖານຊັບພະຍາກອນທຳມະຊາດຂອງປະເທດ ແລະ ໃນການຕອບໂຕ້ຕໍ່ໄພຄຸກຄາມຕ່າງໆ. ໃນພາກປະຕິບັດຕົວຈິງ, ຄວາມສາມາດຂອງອົງການໃນລະດັບການຈັດຕັ້ງປະຕິບັດຕົວຈິງເພື່ອປັບປຸງການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງເຊັ່ນ: ຂອງຂະແໜງປ່າໄມ້ ພົບວ່າ: ມີເພີ່ມຂຶ້ນສ່ວນໜຶ່ງແມ່ນເປັນຍ້ອນການຊ່ວຍເຫຼືອທີ່ໄດ້ຮັບຈາກບັນດາອົງການຕ່າງໆພາຍໃນລະບົບ ສປຊ.

ນອກຈາກການລະບຸຊັບພະຍາກອນຊ່ວຍເຫຼືອ ແລະ ການສ້າງຄວາມສາມາດແລ້ວ, ໃນບາງຂົງເຂດວຽກງານຍັງຈຳເປັນ ຕ້ອງມີຂໍ້ມູນທີ່ຖືກຕ້ອງຊັດເຈນ ແລະ ຂໍ້ມູນຂ່າວສານທີ່ເປັນພື້ນຖານ. ການຊ່ວຍເຫຼືອຂອງອົງການ ສປຊ ສາມາດສຸມໃສ່ ຂົງເຂດທີ່ກ່າວມານັ້ນ ຂະນະທີ່ຮັບປະກັນວ່າ: ລັດຖະບານ ເປັນເຈົ້າການໃນຂະບວນການດັ່ງກ່າວ. ການແລກປ່ຽນຂໍ້ມູນຂ່າວສານ ແລະ ໂອກາດລະຫວ່າງບັນດາອົງການຕ່າງໆໃນລະບົບ ສປຊ ອາດຈະເປັນວິທີທີ່ດີໃນການຢັ້ງຢືນຂໍ້ມູນ ພື້ນຖານແລະເປົ້າໝາຍຕ່າງໆ ກໍ່ຄືການລວມຈຸດແຂງ ແລະ ຄວາມຊຳນິຊຳນານສະເພາະຕ່າງໆເຂົ້າເປັນເອກະພາບ ໜຶ່ງດຽວພາຍໃນອົງການ ສປຊ ເພື່ອໃຫ້ການຊ່ວຍເຫຼືອລັດຖະບານ.

> *“ອົງການ UNIDO ແລະ FAO ຍັງໄດ້ໃຫ້ການຊ່ວຍເຫຼືອປະເທດລາວ ໃນການຈັດຕັ້ງປະຕິບັດສົນທິສັນຍາສະຕ໋ອກໂຮມວ່າດ້ວຍ PoPs ເຊິ່ງໄດ້ຖືກເຊື່ອມສານເຂົ້າໃນກົດໝາຍປົກປັກຮັກສາສິ່ງແວດລ້ອມ.”*



# 8. ການປັບຕົວ ແລະ ການຫຼຸດຜ່ອນຄວາມບອບບາງ ຈາກການປ່ຽນແປງຂອງ ສະພາບດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ

## ລັດຖະບານ ແລະ ຊຸມຊົນຕ່າງໆ ຄວນປັບຕົວ ແລະ ຫຼຸດຜ່ອນຄວາມບອບບາງ ດ້ານການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດໃນບັນດາຂະແໜງບູລິມະສິດ





### ທ່າອ່ຽງການພັດທະນາຕົ້ນຕໍ

ສປປ ລາວ ສືບຕໍ່ປະເຊີນໜ້າກັບຜົນກະທົບຈາກເຫດການຕ່າງໆທີ່ພົວພັນກັບການປ່ຽນແປງຂອງສະພາບດິນຟ້າອາກາດ ໂດຍທີ່ບັນດາຊຸມຊົນໃນເຂດຊົນນະບົດຖືກກະທົບຫຼາຍສຸດຈາກຮູບການຕ່າງໆຂອງສະພາບດິນຟ້າອາກາດທີ່ບໍ່ສາມາດຄາດເດົາໄດ້. ໃນໄລຍະ 6 ເດືອນທຳອິດຂອງປີ 2016 ພົບວ່າ: ມີບັນຫາອາກາດໜາວເຢັນທີ່ບໍ່ເຄີຍປະກົດມີມາກ່ອນ ແລະ ພາຍໃນປີດຽວກັນ ຍັງພົບວ່າ: ມີຝົນຕົກໜັກຫຼາຍຄັ້ງຈາກພະຍຸໄຕ້ຝຸ່ນ ແລະ ບັນຫາໄພແລ້ງທີ່ແກ່ຍາວ. ເຫດການເຫຼົ່ານີ້ ເປັນຜົນເຮັດໃຫ້ເກີດມີບັນຫານໍ້າກ້າມ, ນໍ້າຖ້ວມ ແລະ ໄພແລ້ງ ສ້າງຄວາມເສຍຫາຍຕໍ່ພືດຜົນຜະລິດ, ສັດລ້ຽງລົ້ມຕາຍ, ນໍ້າຖ້ວມກະທັນຫັນ, ຖະໜົນຫົນທາງຖືກທຳລາຍ, ຫຼາຍຊຸມຊົນຖືກໂດດດ່ຽວໃນໄລຍະຊົ່ວຄາວ ແລະ ມີບັນຫາການລະບາດຂອງພະຍາດ. ເມື່ອພິຈາລະນາຈາກລະບົບຕິດຕາມກວດກາ, ການຈັດຕັ້ງປະຕິບັດ ແລະ ລະບົບເຕືອນໄພລ່ວງໜ້າ ທີ່ຍັງອ່ອນນ້ອຍ, ປະເທດລາວ ຈິ່ງຍັງສືບຕໍ່ຖືກກະທົບຈາກຄວາມບອບບາງທີ່ມີໃນລະດັບສູງຕໍ່ການກະທົບທັງພາຍໃນ ແລະ ພາຍນອກ ເຊິ່ງລວມທັງຈາກຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດ.

ການປ່ຽນແປງຂອງສະພາບດິນຟ້າອາກາດ ມີຜົນກະທົບທາງກົງ ແລະ ທາງອ້ອມຕໍ່ສຸຂະພາບທາງຊີວະວິທະຍາ, ຈິດຕະວິທະຍາ ແລະ ສັງຄົມຂອງສ່ວນບຸກຄົນ ແລະ ຊຸມຊົນ. ແມ່ຍິງ, ເດັກນ້ອຍ ແລະ ບັນດາຊຸມຊົນໃນເຂດຊົນນະບົດແມ່ນຖືກກະທົບຫຼາຍສຸດ. ຜົນກະທົບທາງລົບທີ່ເກີດຈາກການ

> *ການປ່ຽນແປງຂອງສະພາບດິນຟ້າອາກາດ ມີຜົນກະທົບທາງກົງ ແລະ ທາງອ້ອມຕໍ່ສຸຂະພາບທາງຊີວະວິທະຍາ, ຈິດຕະວິທະຍາ ແລະ ສັງຄົມຂອງສ່ວນບຸກຄົນ ແລະ ຊຸມຊົນ. ແມ່ຍິງ, ເດັກນ້ອຍ ແລະ ບັນດາຊຸມຊົນໃນເຂດຊົນນະບົດແມ່ນຖືກກະທົບຫຼາຍສຸດ. ຜົນກະທົບທາງລົບທີ່ເກີດຈາກການປ່ຽນແປງຂອງສະພາບດິນຟ້າອາກາດ ຍິ່ງເຮັດໃຫ້ໄພແລ້ງແລະໄພນ້ຳຖ້ວມແກ່ຍາວ, ຈຳກັດການເຂົ້າເຖິງນ້ຳສະອາດ, ການບໍລິໂພກອາຫານທີ່ມີໂພຊະນາການ ແລະ ຈຳກັດການເຂົ້າເຖິງ ການສຶກສາ ແລະ ການບໍລິການອື່ນໆທາງດ້ານສັງຄົມ.*

ປ່ຽນແປງຂອງສະພາບດິນຟ້າອາກາດ ຍິ່ງເຮັດໃຫ້ໄພແລ້ງແລະ ໄພນ້ຳຖ້ວມແກ່ຍາວ, ຈຳກັດການເຂົ້າເຖິງນ້ຳສະອາດ, ການບໍລິໂພກອາຫານທີ່ມີໂພຊະນາການ ແລະ ຈຳກັດການເຂົ້າເຖິງ ການສຶກສາ ແລະ ການບໍລິການອື່ນໆທາງດ້ານສັງຄົມ. ນີ້ເຮັດໃຫ້ເປັນຜົນກະທົບຕໍ່ສະຫວັດດີການແລະສຸຂະພາບຂອງປະຊາຊົນ. ຜົນກະທົບດ້ານສຸຂະພາບທີ່ເກີດຈາກການປ່ຽນແປງຂອງສະພາບດິນຟ້າອາກາດ ລວມມີ: ຜົນກະທົບທີ່ມີສາເຫດ ຈາກສະພາບດິນຟ້າອາ ກາດປ່ຽນແປງຂັ້ນຮ້າຍແຮງເຊັ່ນ: ຄື້ນຄວາມຮ້ອນ, ໄພນ້ຳຖ້ວມ, ໄພແລ້ງ  ແລະ ພະຍຸຕ່າງໆ. ຜົນກະທົບອື່ນໆແມ່ນພົວພັນກັບການປ່ຽນ ແປງຂອງອຸນຫະພູມ, ປະລິມານນ້ຳຝົນ ແລະ ຄຸນນະ ພາບຂອງອາກາດ, ຄວາມສ່ຽງທີ່ເພີ່ມຂຶ້ນຂອງພະຍາດຕິດຕໍ່ ເຊິ່ງລວມເອົາບັນຫາພະຍາດເກີດໃໝ່ແລະ ພະຍາດເກົ່າທີ່ກັບຄືນມາປະກົດໃໝ່, ພະຍາດຈາກອາຫານ ແລະ ນ້ຳ, ພະຍາດບໍ່ຕິດຕໍ່ ແລະ ຜົນກະທົບຕ່າງໆຕໍ່ສຸຂະພາບຈິດ.

ຄາດໝາຍຜົນໄດ້ຮັບ 3 ຂອງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 8 ໄດ້ເນັ້ນໜັກຢ່າງຈະແຈ້ງວ່າ: ຕ້ອງຖືເປັນບູລິມະສິດ ວຽກງານການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ; ການສ້າງຄວາມກຽມພ້ອມເພື່ອຮັບມືກັບຄວາມສ່ຽງດ້ານໄພພິບັດ ແລະ ຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາ ກາດ; ແລະ ການຫຼຸດຄວາມໄວ້ສະເຖຍລະພາບຂອງການຜະລິດກະສິກຳທີ່ເປັນສາເຫດຈາກຜົນກະທົບຂອງໄພພິບັດ. ລັດຖະບານ ສືບຕໍ່ສະແດງໃຫ້ເຫັນເຖິງຄຳໝາຍໝັ້ນ ແລະ ການຊີ້ນຳນຳພາການດຳເນີນງານແກ້ໄຂບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ໂດຍການລົງນາມໃນສັນຍາປາຣີ, ແລ້ວສົ່ງເອກະສານໃຫ້ສັດຕະຍາບັນໄປຍັງທ່ານເລຂາທິການໃຫຍ່ອົງການ ສປຊ ໃນເດືອນກັນຍາ 2016 ໃນໄລຍະທີ່ ສປປ ລາວ ເປັນເຈົ້າພາບຈັດກອງປະຊຸມສຸດຍອດຜູ້ນຳອາຊຽນ. ສປປ ລາວ ຖືເປັນຊາດທຳອິດຈາກອາຊຽນທີ່ໃຫ້ສັດຕະຍາບັນຕໍ່ສັນຍາດັ່ງກ່າວ.

## ຜົນໄດ້ຮັບ

ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ UNDP, ການລົງນາມໃນສັນຍາປາຣີ, ການເຂົ້າຮ່ວມກອງປະຊຸມລັດພາຄີ ຂອງສົນທິສັນຍາວ່າດ້ວຍການປ່ຽນແປງຂອງສະພາບດິນຟ້າອາ ກາດ ແລະ ການຈັດຕັ້ງປະຕິບັດການປະກອບສ່ວນຫຼຸດການປ່ອຍທາດອາຍພິດເຮືອນແກ້ວ (NDC) ຖືໄດ້ວ່າເປັນພື້ນຖານສຳຄັນທີ່ຢັ້ງຢືນເຖິງການຊີ້ນຳນຳພາທີ່ເຂັ້ມແຂງ ແລະ ຄຳໝາຍໝັ້ນອັນແຮງກ້າຂອງລັດຖະບານທີ່ມີຕໍ່ການດຳເນີນງານແກ້ໄຂບັນຫາການປ່ຽນແປງຂອງສະພາບດິນ ຟ້າອາກາດ . NDC ສະໜອງພື້ນຖານໃຫ້ລັດຖະບານສົ່ງເອກະສານໃຫ້ສັດຕະຍາບັນໄປຍັງສະພາແຫ່ງຊາດເພື່ອຮັບ ຮອງການໃຫ້ສັດຕະຍາບັນຕໍ່ສັນຍາປາຣີ. ເອກະສານໃຫ້ສັດຕະຍາບັນ ແມ່ນໄດ້ມອບໃຫ້ທ່ານເລຂາທິການໃຫຍ່ອົງ ການ ສປຊ ໃນເດືອນກັນຍາ ຂະນະທີ່ທ່ານເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນຳອາຊຽນ. ຮ່າງສະບັບທຳອິດຂອງກົດໝາຍວ່າດ້ວຍໄພພິບັດ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ ໄດ້ຮັບການສະໜັບສະໜູນເປັນຢ່າງດີ ໂດຍເນັ້ນໜັກຢ່າງແຂງຂັນຕໍ່ຄວາມລະອຽດອ່ອນທາງດ້ານບົດບາດຍິງ-ຊາຍ.

ຫຼັງໄດ້ຮັບການຊ່ວຍເຫຼືອຈາກອົງການ UNDP, ໄດ້ມີການສ້າງຄວາມເຂັ້ມແຂງໃຫ້ຂອບນະໂຍບາຍຂັ້ນເມືອງວ່າດ້ວຍ ການຕ້ານທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ໃນຖານະເປັນບົດແນະນຳການພັດທະນາຂັ້ນເມືອງ ເຊິ່ງ

*“ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ UNDP, ການລົງນາມໃນສັນຍາປາຣີ, ການເຂົ້າຮ່ວມກອງປະຊຸມລັດພາຄີ ຂອງສົນທິສັນຍາວ່າດ້ວຍການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ການຈັດຕັ້ງປະຕິບັດການປະກອບສ່ວນຫຼຸດການປ່ອຍທາດອາຍພິດເຮືອນແກ້ວ (NDC) ຖືໄດ້ວ່າເປັນພື້ນຖານສຳຄັນທີ່ຢັ້ງຢືນເຖິງການຊີ້ນຳນຳພາທີ່ເຂັ້ມແຂງ ແລະ ຄຳໝາຍໝັ້ນອັນແຮງກ້າຂອງລັດຖະບານທີ່ມີຕໍ່ການດຳເນີນງານແກ້ໄຂບັນຫາການປ່ຽນແປງຂອງສະພາບດິນ ຟ້າອາກາດ.”*

ຖືກສ້າງສຳເລັດ ແລະ ຮັບຮອງເອົາໃນປີ 2015 ໂດຍໄດ້ຮັບການຮັບຮອງເອົາຢ່າງເປັນທາງການຈາກລັດຖະບານຜ່ານຂໍ້ຕົກລົງລັດຖະມົນຕີ. ນີ້ ເປັນບາດກ້າວສຳຄັນໃນການສ້າງບັນດານະໂຍບາຍທີ່ມີການເຊື່ອມສານວຽກງານແກ້ໄຂການປ່ຽນແປງຂອງສະພາບດິນຟ້າອາກາດ ຜ່ານການຮັບຮູ້ ແລະ ການຈັດຕັ້ງປະຕິບັດບົດແນະນຳສະບັບປັບປຸງ ເຊິ່ງລວມ ເອົາຄວາມຕ້ານທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ເຂົ້າເປັນມາດຖານໜຶ່ງໃນການອະນຸມັດເງິນຊ່ວຍເຫຼືອລ້າຂັ້ນເມືອງ ເພື່ອສະໜອງທຶນໃຫ້ການພັດທະນາພື້ນຖານໂຄງລ່າງຂະໜາດນ້ອຍ. ໃນປີ 2016, ມີ 12 ໂຄງການ ພື້ນຖານໂຄງລ່າງ ໄດ້ສຳເລັດການກໍ່ສ້າງ ແລະ ປະຊາຊົນທ້ອງຖິ່ນຫຼາຍກວ່າ 17.000 ຢູ່ແຂວງເຊກອງ ແລະ ສາລະວັນ ໄດ້ຮັບຜົນປະໂຫຍດຈາກພື້ນຖານໂຄງລ່າງຂະໜາດນ້ອຍທີ່ສະໜອງນ້ຳປະປາ, ຊົນລະປະທານ, ຝາຍນ້ຳລົ້ນ, ການ ຄວບຄຸມນ້ຳຖ້ວມ, ຂົວຊຸມຊົນ ແລະ ຄັນຄູດິນທີ່ຮັບໃຊ້ຊຸມຊົນເພື່ອປັບປຸງການຫາລ້ຽງຊີບຂອງປະຊາຊົນ, ຫຼຸດຜ່ອນຜົນ ກະທົບຈາກໄພພິບັດຕ່າງໆ ແລະ ເພີ່ມການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ. ສຳລັບການຈັດຕັ້ງປະຕິບັດ ໃນປີ 2017, ມີໂຄງການໃໝ່ອີກ 12 ໂຄງການຍ່ອຍທີ່ຕ້ານທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ.

ຄວາມສາມາດທາງສະຖາບັນ ຍັງສືບຕໍ່ໄດ້ຮັບການສ້າງຄວາມເຂັ້ມແຂງຢູ່ຂັ້ນສູນກາງ ແລະ ອີກ 3 ແຂວງ ເພື່ອຊ່ວຍ ສະໜັບສະໜູນການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດວ່າດ້ວຍການຫຼຸດຜ່ອນ ແລະ ຄຸ້ມຄອງຄວາມສ່ຽງຈາກໄພພິບັດໃນຂະແໜງກະສິກຳ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ FAO.

ບັນດາທາງເລືອກດ້ານແບບວິທີປະຕິບັດ ທີ່ດີໃນວຽກງານກະສິກຳ ແລະ ການຄ້ຳປະກັນສະບຽງອາຫານໃນລະດູຝົນ ແລະ ລະດູແລ້ງ ໄດ້ຖືກຢັ້ງຢືນສຳລັບເຂດທີ່ ສ່ຽງເກີດໄພພິບັດຢູ່ 3

ແຂວງ ໂດຍຄໍາອະທິບາຍກ່ຽວກັບແບບວິທີປະຕິບັດທີ່ດີ ພ້ອມດ້ວຍທິດນໍາກ່ຽວກັບວິທີການວິທະຍາ ແມ່ນໄດ້ຮັບການພິມເຜີຍແຜ່ເປັນພາສາລາວ. ແຜນດໍາເນີນງານດັ່ງກ່າວ ໄດ້ຮັບການປັບປຸງດັດແກ້ຜ່ານຂະ ບວນການຂໍຄໍາປຶກສາ ເພື່ອກວມເອົາການດໍາເນີນງານໃນໄລຍະ 2017-2019 ໂດຍຄາດວ່າຈະສ້າງສໍາເລັດໃນຕົ້ນປີ 2017.

ອົງການ IOM ໄດ້ເຮັດວຽກຮ່ວມກັບລັດຖະບານເພື່ອສ້າງ ຂອບຝຶກອົບຮົມການຄຸ້ມຄອງໄພພິບັດແຫ່ງຊາດ. ຂອບຝຶກອົບຮົມດັ່ງກ່າວ ໄດ້ສະໜອງຍຸດທະສາດທີ່ຄົບຖ້ວນຮອບດ້ານສໍາລັບການຈັດການຝຶກອົບຮົມວຽກງານຄຸ້ມຄອງໄພພິບັດໃນອະນາຄົດ ສໍາລັບທຸກກະຊວງທີ່ມີສ່ວນຮ່ວມໃນການຄຸ້ມຄອງໄພພິບັດ ແລະ ການຫຼຸດຜ່ອນຄວາມສ່ຽງ.

ທະນາຄານ ADB ແລະ ອົງການ UNDP ໄດ້ໃຫ້ການຊ່ວຍເຫຼືອສ້າງຕັ້ງຖານຂໍ້ມູນການຄຸ້ມຄອງຄວາມສ່ຽງໄພພິບັດທີ່ເອີ້ນວ່າ: ລາວດີ (LaoDi). LaoDi ຈະເຮັດໜ້າທີ່ເປັນສູນຂໍ້ມູນຂ່າວສານກ່ຽວກັບໄພພິບັດ ແລະ ສໍາຄັນໄປກ່ວານັ້ນ ແມ່ນຈະຊ່ວຍ ສປປ ລາວ ໃນການລາຍງານການປະຕິບັດຕາມມາດຕະຖານສາກົນເຊັ່ນ: ຂອບການຮ່ວມມືເຊັນໄດ ແລະ ເປົ້າໝາຍພັດທະນາແບບຍືນຍົງ (SDGs). ຄວາມສາມາດຂອງພະນັກງານຢູ່ຂັ້ນສູນກາງທີ່ກຳຄຸ້ມຄອງໄພພິ ບັດແລະການປ່ຽນແປງຂອງສະພາບດິນຟ້າອາກາດຂອງກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໄດ້ຮັບ ການພັດທະນາຂຶ້ນເພື່ອເພີ່ມຈໍານວນຂໍ້ມູນເຂົ້າໃນຖານຂໍ້ມູນດັ່ງກ່າວ. ນອກຈາກນັ້ນ ໄດ້ມີການຝຶກອົບຮົມໃຫ້ພະນັກ ງານຈາກພະແນກຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມຂອງແຂວງໄຊຍະບູລີ, ຫຼວງພະບາງ ແລະ ແຂວງຈໍາ ປາສັກ.

ໂຄງການລິເລີ່ມຂອງທະນາຄານ ADB ແລະອົງການ UNDP ຍັງຊ່ວຍສະໜັບສະໜູນການທົບທວນທາງສະຖາບັນ ແລະ ການທົບທວນລາຍຈ່າຍພາກລັດທີ່ນໍາໃຊ້ເຂົ້າໃນການຄຸ້ມຄອງຄວາມສ່ຽງໄພພິບັດ. ວຽກບຸກທະລຸດັ່ງກ່າວ ຍັງໄດ້ ລວມເອົາການເປັນຄູ່ຮ່ວມງານກັບກະຊວງການເງິນ ເຊິ່ງເປັນພາກສ່ວນທີ່ສະໜອງງົບປະມານແຫ່ງລັດໃຫ້ການທົບ ທວນ ແລະ ວິເຄາະດັ່ງກ່າວສໍາລັບໄລຍະເວລາ 4 ປີຕິດຕໍ່ກັນ. ການວິເຄາະດັ່ງກ່າວ ໄດ້ຮັບປະໂຫຍດຈາກການມີສ່ວນຮ່ວມຂອງຫຼາຍພາກສ່ວນກ່ຽວຂ້ອງ, ແລະ ຂະແໜງການຕ່າງໆ ແລະ ໄດ້ເປີດເຜີຍໃຫ້ຮູ້ 3 ກະຊວງຫຼັກທີ່ຮັບຜິດຊອບ ລາຍຈ່າຍຄຸ້ມຄອງຄວາມສ່ຽງໄພພິບັດຄື: ກະຊວງກະສິກໍາ ແລະປ່າໄມ້, ກະຊວງໂຍທາ ແລະ ຂົນສົ່ງ, ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ວຽກດັ່ງກ່າວ ຈະຊ່ວຍສະໜອງຂໍ້ມູນໃຫ້ການຕັດສິນບັນຫາກ່ຽວກັບການຈັດສັນງົບປະມານໃຫ້ບັນດາອົງປະກອບທີ່ພົວພັນກັບໄພພິບັດ.

ອົງການ WHO ແລະ ອົງການ UNDP ໄດ້ສ້າງບົດສະເໜີໂຄງການຮ່ວມກັນເພື່ອສ້າງຄວາມຕ້ານທານຕໍ່ການປ່ຽນແປງ ຂອງສະພາບດິນຟ້າອາກາດ ຂຶ້ນໃນລະບົບສາທາລະນະສຸກຂອງ ສປປ ລາວ ທີ່ກວມເອົາໄລຍະ 4 ປີຂ້າງໜ້າ - ບົດສະ ເໜີໂຄງການດັ່ງກ່າວ ຖືກສ້າງຂຶ້ນບົນພື້ນຖານເອກະສານແນວຄວາມຄິດທີ່ຖືກຮັບຮອງເອົາຈາກກອງທຶນສິ່ງແວດລ້ອມ ໂລກ ໃນປີ 2016. ໂຄງການລິເລີ່ມຮ່ວມກັນດັ່ງກ່າວ ຈະແກ້ໄຂອຸປະສັກກີດຂວາງສະເພາະ ແລະກົກເຫດຂອງບັນຫາ (ທັງທາງກົງ ແລະ ທາງອ້ອມ) ທີ່ສະກັດກັ້ນການປັບປຸງຄວາມສາມາດປັບຕົວຂອງຂະແໜງສາທາຕໍ່ການປັ່ນປ່ວນ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ. ໂຄງການດັ່ງກ່າວ ມີເປົ້າໝາຍເພື່ອທັບມ້າງອຸປະສັກກີດຂວາງທີ່ຖືກລະບຸ ແລະ ເພີ່ມຄວາມສາມາດປັບຕົວຂອງລະບົບ ແລະ ສະຖານທີ່ບໍລິການສາທາລະນະສຸກຢູ່ຂັ້ນສູນກາງ, ຕະຫຼອດເຖິງບັນດາຜູ້ມີບົດບາດຢູ່ຂັ້ນທ້ອງຖິ່ນ ເພື່ອຕອບໂຕ້ ແລະ ຄຸ້ມຄອງຄວາມສ່ຽງດ້ານສຸຂະພາບທີ່ອ່ອນໄຫວຕໍ່ການປ່ຽນແປງຂອງ ສະພາບດິນຟ້າອາກາດໃນໄລຍະຍາວຢູ່ ສປປ ລາວ. ບັນດາອຸປະສັກກີດຂວາງຕົ້ນຕໍ ໄດ້ສັງລວມໃຫ້ຮູ້ວ່າ: ອົງການກ່ຽວຂ້ອງຕ່າງໆຂອງລັດ ຍັງມີຄວາມອາດສາມາດບໍ່ພຽງພໍໃນການປັບຕົວເຂົ້າກັບການປ່ຽນແປງຂອງສະພາບດິນຟ້າອາກາດ; ມີຄວາມສາມາດຈໍາກັດໃນການປ້ອງກັນ ແລະ ປິ່ນປົວພະຍາດທີ່ອ່ອນໄຫວຕໍ່ສະພາບດິນຟ້າອາກາດ ລວມເຖິງຄວາມສາມາດໃນການສືບຕໍ່ໃຫ້ບໍລິການ ໃນໄລຍະເກີດເຫດການການປ່ຽນແປງຮ້າຍແຮງຂອງສະພາບດິນຟ້າອາກາດ; ພ້ອມນັ້ນ ຍັງເຫັນວ່າ: ການແລກປ່ຽນຄວາມຮູ້ໃນລະດັບພາກພື້ນ ແລະ ການຂະຫຍາຍການຈັດຕັ້ງປະຕິບັດໂຄງການທົດລອງທີ່ປະສົບຜົນສໍາ ແມ່ນຍັງເຮັດໄດ້ບໍ່ທັນພຽງພໍ.

> *ໃນສ່ວນທີ່ພົວພັນກັບການຕອບໂຕ້ແກ້ໄຂໄພພິບັດທໍາມະຊາດ, ກໍ່ໄດ້ມີການສະໜອງການຊ່ວຍເຫຼືອດ້ານການສ້າງຄວາມສາມາດ ແລະ ດ້ານພາລາທິການໃຫ້ລັດຖະບານເພື່ອຄຸ້ມຄອງເຫດການສຸກເສີນໃນລະດັບຊາດທີ່ເກີດຈາກບັນຫາການລະບາດຂອງຕັກແຕນໄມ້ປ່ອງ (Ceracris kiangsu), ເຊິ່ງໄດ້ກາຍເປັນບັນຫາຮ້າຍແຮງຄັ້ງທໍາອິດໃນປີ 2015. ຄວາມພະຍາຍາມປະສານສົມທົບລະຫວ່າງອົງການຕ່າງໆຢູ່ຂັ້ນສູນ ກາງ ແລະ ຂະແໜງກະສິກໍາ-ປ່າໄມ້ຢູ່ສາມແຂວງທີ່ຖືກກະທົບ ໄດ້ຊ່ວຍຈໍາກັດຄວາມເສຍຫາຍຕໍ່ຜົນລະປູກ ອັນເປັນສາເຫດຈາກການລະບາດຂອງຕັກແຕນດັ່ງ ກ່າວ ໂດຍການຊ່ວຍເຫຼືອບາງສ່ວນ ແມ່ນຈາກຊັບພະຍາກອນທີ່ສະໜອງໃຫ້ໂດຍອົງການ UN-CERF ແລະ ອົງການ FAO.*

ອົງການ UNICEF ໄດ້ຮັບຮອງເອົາຫຼາຍຍຸດທະສາດເພື່ອຮັບມືກັບສະພາບເງື່ອນໄຂດ້ານສິ່ງແວດລ້ອມໃນປະຈຸບັນ ເພື່ອປົກປ້ອງການລົງທຶນຂອງອົງການທີ່ມີສໍາລັບເດັກນ້ອຍ ແລະ ຄອບຄົວຂອງເຂົາເຈົ້າ. ບັນດາຍຸດທະສາດເຫຼົ່ານີ້ ໄດ້ ລວມເອົາການກວດກາການອອກແບບທາງເຕັກນິກຢູ່ໃນລະດັບສູງຕໍ່ລະບົບການສະໜອງນໍ້າ ໂດຍພິຈາລະນາເບິ່ງ ດ້ານຄວາມຕ້ານທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດເມື່ອສະໜອງບໍລິຫານກ່ຽວຂ້ອງ; ການຕິດຕັ້ງປໍ້ານໍ້າ ໂດຍຍົກຖານປໍ້າສູງຂຶ້ນໃນເຂດຊຸມຊົນທີ່ສ່ຽງຕໍ່ໄພນໍ້າຖ້ວມ ເຊິ່ງລວມທັງໂຮງຮຽນ ເພື່ອປົກປ້ອງປໍ້ານໍ້າບໍ່ໃຫ້ຈົມນໍ້າເວລາ ນໍ້າຖ້ວມ ພ້ອມນັ້ນ ຍັງຊ່ວຍ

ປະຢັດແຮງເມື່ອປໍ້ານໍ້າດ້ວຍມື; ຕະຫຼອດເຖິງການນໍາໃຊ້ລະບົບບໍ່ບາດານແບບປິດໃນເຂດ ແຫຼ່ງນໍ້າຢູ່ເລິກ ແລະ ຊັ້ນດິນບໍ່ແຂງແຮງ.

ກ່ຽວກັບວຽກງານຫຼຸດຜ່ອນຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດ, ສປປ ລາວ ໄດ້ລະບຸເຕັກນິກດີ ສຸດທີ່ມີແບບວິທີປະຕິບັດທີ່ເປັນມິດຫຼາຍສຸດກັບສິ່ງແວດລ້ອມໃນການຜະລິດໄຟຟ້າຈາກເຊື້ອໄຟທີ່ເປັນຟອດຊິວ ແລະໝໍ້ຕົ້ມອຸດສາຫະກໍາ ວ່າເປັນ: ກິດຈະກໍາບູລິມະສິດສໍາລັບຂະແໜງອຸດສາຫະກໍາໃນການຫຼຸດຜ່ອນການປ່ອຍທາດອາຍ ກາກບອນ. ທີ່ມະຫາວິທະຍາໄລແຫ່ງຊາດຂອງ ສປປ ລາວ ໄດ້ມີການສອນຫຼັກສູດ ການຄຸ້ມຄອງເຕັກໂນໂລຊີໝໍ້ຕົ້ມທີ່ເປັນມິດກັບສິ່ງແວດລ້ອມ ຫຼື ສີຂຽວ.

ໃນສ່ວນທີ່ພົວພັນກັບການຕອບໂຕ້ແກ້ໄຂໄພພິບັດທໍາມະຊາດ, ກໍ່ໄດ້ມີການສະໜອງການຊ່ວຍເຫຼືອດ້ານການສ້າງ ຄວາມສາມາດ ແລະ ດ້ານພາລາທິການໃຫ້ລັດຖະບານເພື່ອຄຸ້ມຄອງເຫດການສຸກເສີນໃນລະດັບຊາດທີ່ເກີດຈາກບັນ ຫາການລະບາດຂອງຕັກແຕນໄມ້ປ່ອງ (Ceracris kiangsu), ເຊິ່ງໄດ້ກາຍເປັນບັນຫາຮ້າຍແຮງຄັ້ງທໍາອິດໃນປີ 2015. ຄວາມພະຍາຍາມປະສານສົມທົບລະຫວ່າງອົງການຕ່າງໆຢູ່ຂັ້ນສູນກາງ ແລະ ຂະແໜງກະສິກໍາ-ປ່າໄມ້ຢູ່ສາມແຂວງທີ່ຖືກກະທົບ ໄດ້ຊ່ວຍຈໍາກັດຄວາມເສຍຫາຍຕໍ່ຜົນລະປູກ ອັນເປັນສາເຫດຈາກການລະບາດຂອງຕັກແຕນດັ່ງ ກ່າວ ໂດຍການຊ່ວຍເຫຼືອບາງສ່ວນ ແມ່ນຈາກຊັບພະຍາກອນທີ່ສະໜອງໃຫ້ໂດຍອົງການ UN-CERF ແລະ ອົງການ FAO . ນອກຈາກນັ້ນ, ແຜນງານສ້າງຄວາມສາມາດທີ່ກໍາລັງຈັດຕັ້ງປະຕິບັດຢູ່ຂອງອົງການ FAO ສໍາລັບການກວດຫາ ແລະ ຄວບຄຸມເຊື້ອພະຍາດໄຂ້ຫວັດສັດປີກ ຍັງໄດ້ສືບຕໍ່ຊ່ວຍເຫຼືອລັດຖະບານໃນການຕອບໂຕ້ຕໍ່ການລະບາດຢູ່ແຂວງ ຫຼວງພະບາງ ເຊິ່ງເຫັນວ່າປະສົບຜົນສໍາເລັດໃນການແກ້ໄຂບັນຫາຢ່າງວ່ອງໄວ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ການຄຸ້ມຄອງຊັບພະຍາກອນທໍາມະຊາດ, ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ຖືເປັນບັນຫາຮ່ວມລະຫວ່າງຂະແໜງການຕ່າງໆຢ່າງແທ້ຈິງ, ອີງຕາມປະສົບການໃນປີ 2016 ສະແດງໃຫ້ເຫັນເຖິງການຂະຫຍາຍຂອບເຂດການເປັນຄູ່ຮ່ວມງານລະຫວ່າງບັນດາອົງການຕ່າງໆຂອງລັດ, ຄູ່ຮ່ວມພັດທະນາ ແລະ ຊຸມຊົນ ເຊິ່ງໄດ້ຊ່ວຍປຸກຈິດສໍານຶກ ແລະ ສ້າງຄວາມເຂັ້ມແຂງໃຫ້ການສົນທະນາແລກປ່ຽນທາງດ້ານນະໂຍບາຍ. ສະນັ້ນ, ຈິ່ງຄວນສືບຕໍ່ຮັດແໜ້ນການເປັນຄູ່ຮ່ວມງານດັ່ງກ່າວໃນຮອບວຽນການວາງແຜນຮ່ວມມືຮອບໃໝ່ຂອງອົງການ ສປຊ ຕາມສະພາບເງື່ອນໄຂຂອງ ສປປ ລາວ (ຂອບການເປັນຄູ່ຮ່ວມງານລະຫວ່າງອົງການ ສປຊ ແລະ ສປປ ລາວ ສໍາລັບໄລຍະ 2017-2021)  ໂດຍມີເປົ້າໝາຍເພື່ອບັນລຸ SDGs.

ຄວາມສາມາດຂອງບັນດາອົງການຂັ້ນສູນກາງ ແລະ ຂັ້ນແຂວງໃນການຕອບໂຕ້ຕໍ່ການລະບາດຂອງພະຍາດ ແລະສັດຕູພືດ ຍັງເຫັນວ່າ: ບໍ່ທັງພຽງພໍໃນບາງຂົງເຂດ ແຕ່ພົບວ່າ: ຄວາມສາມາດ ແລະ ຄວາມໝັ້ນໃຈຂອງບັນດາອົງການເຫຼົ່ານັ້ນມີເພີ່ມສູງຂຶ້ນຢ່າງວ່ອງໄວ ເມື່ອໄດ້ຮັບການຊ່ວຍເຫຼືອຈາກອົງການ ສປຊ.



# 9. ການຫຼຸດຜ່ອນຜົນກະທົບຈາກບັນຫາ ລະເບີດບໍ່ທັນແຕກ

# ລັດຖະບານ ແລະ ອຳນາດການປົກຄອງທ້ອງຖິ່ນ ຕະຫຼອດເຖິງຊຸມຊົນ ໄດພ້ອມພຽງກັນຫຼຸດຜ່ອນຜົນກະທົບຈາກບັນຫາລະເບີດບໍ່ທັນແຕກທີ່ສົ່ງຜົນກະທົບຕໍ່ປະຊາຊົນຢູ່ ສປປ ລາວ





## ທ່າອ່ຽງການພັດທະນາຕົ້ນຕໍ

ທີ່ນະຄອນຫຼວງວຽງຈັນ, ເລຂາທິການໃຫຍ່ຂອງອົງການ ສປຊ ພະນະທ່ານ ບັນ ຄີມູນ ຮ່ວມກັບພະນະທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ໄດ້ພ້ອມກັນເຜີຍແຜ່ເປົ້າໝາຍພັດທະນາແບບຍືນຍົງ (SDG) 18 ເຊິ່ງເປັນເປົ້າໝາຍສະເພາະສຳລັບ ສປປ ລາວ. ເປົ້າໝາຍດັ່ງກ່າວ ຖືເປັນເປົ້າໝາຍ SDG ລະດັບຊາດເປົ້າໝາຍທຳອິດ ທີ່ໄດ້ເພີ່ມເຂົ້າໃນວາ ລະການພັດທະນາແບບຍືນຍົງທົ່ວສາກົນແຕ່ນີ້ຮອດປີ 2030. ເປົ້າໝາຍດັ່ງກ່າວ ແນໃສ່ຫຼຸດຜ່ອນຈຳນວນການຕາຍທີ່ ເກີດຈາກບັນຫາລະເບີດບໍ່ທັນແຕກ (ລບຕ), ປັບປຸງການພັດທະນາເສດຖະກິດ-ສັງຄົມ ຕາມບັນດາເຂດທີ່ຖືກກະທົບ ຈາກລະເບີດຕົກຄ້າງບໍ່ທັນແຕກ ແລະ ໃຫ້ການຊ່ວຍເຫຼືອທີ່ດີຂຶ້ນກ່ວາເດີມຕໍ່ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ. ການ ຍ້າຍຂະແໜງແກ້ໄຂ ລບຕ ໃຫ້ໄປຢູ່ພາຍໃຕ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມທີ່ມີຂຶ້ນຫວ່າງບໍ່ດົນມານີ້ ຖື ເປັນໂອກາດສຳລັບການເຊື່ອມໂຍງຜົນສຳເລັດຕ່າງໆຂອງຂະແໜງແກ້ໄຂ ລບຕ ເຂົ້າກັບວາລະການພັດທະນາສຳຄັນ ອື່ນໆຂອງຂະແໜງການເປັນຕົ້ນບັນຫາຄວາມພິການ.

## ຜົນໄດ້ຮັບ

ການຊ່ວຍເຫຼືອຂອງອົງການ UNDP ຕໍ່ຂະແໜງແກ້ໄຂ ລບຕ ໃນປີ 2016 ໄດ້ສ້າງຜົນໄດ້ຮັບໜັກແໜ້ນຫຼາຍຢ່າງ ໂດຍໂຄງການເກັບກູ້ລະເບີດແຫ່ງຊາດ ສາມາດເກັບກູ້ລະເບີດໃນເຂດທີ່ມີການຕົກຄ້າງສູງໄດ້ 2.593 ເຮັກຕາ ເພື່ອປົດປ່ອຍທີ່ດິນໃຫ້ການຜະລິດກະສິກຳ ແລະ ການພັດທະນາ. ຂະແໜງແກ້ໄຂ ລບຕ ທັງໝົດ ເຊິ່ງທາງອົງການ UNDP ໃຫ້ການ ຊ່ວຍເຫຼືອຮ່ວມກັບຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ໄດ້ດຳເນີນການເກັບກູ້ ລບຕ ຈາກທີ່ດິນໄດ້ທັງໝົດ 3.365 ເຮັກຕາ.

ເຖິງວ່າການເສຍຊີວິດຈາກ ລບຕ ມີຕົວເລກເພີ່ມຂຶ້ນເລັກນ້ອຍຈາກ 46 ກໍລະນີໃນປີ 2015 ມາເປັນ 47 ກໍລະນີໃນປີ 2016, ແຕ່ເຫັນວ່າ: ຕົວເລກດັ່ງກ່າວ ແມ່ນຢູ່ລຸ່ມເປົ້າໝາຍ 75 ທີ່ໄດ້ຂຶ້ນແຜນໄວ້ໃນແຜນຍຸດທະຍາດແຫ່ງຊາດແກ້ໄຂ ບັນຫາ ລບຕ (ເສັ້ນທາງກ້າວສູ່ຄວາມປອດໄພ II). ຄວາມສາມາດຂອງບັນດາອົງການຢູ່ຂັ້ນສູນກາງ ຍັງເຫັນວ່າເພີ່ມສູງ ຂຶ້ນ ໂດຍໄດ້ຮັບການຊ່ວຍເຫຼືອຝຶກອົບຮົມໃນຂົງເຂດການຄຸ້ມຄອງເງິນຊ່ວຍເຫຼືອລ້າ ແລະ ການຝຶກອົບຮົມດ້ານການເງິນ ກໍ່ຄື ການໃຫ້ການຊ່ວຍເຫຼືອໃນການເຮັດວຽກຕົວຈິງພາຍໃນຂົງເຂດຍຸດທະສາດ ແລະ ການຄຸ້ມຄອງແຜນງານ. ອົງການ UNDP ໄດ້ໃຫ້ການຊ່ວຍເຫຼືອຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ໃນການສ້າງ ນະໂຍບາຍທີ່ຈະແຈ້ງ ແລະ ໂປ່ງໃສກ່ຽວກັບວິທີຈັດບູລິມະສິດວຽກເກັບກູ້ ເຊິ່ງຄາດວ່າ: ຈະເຮັດສຳເລັດແລະ ເຜີຍແຜ່ ໃຫ້ຮັບຮູ້ທົ່ວສັງຄົມໄດ້ໃນປີ 2017.

## ບົດຮຽນຖອດຖອນໄດ້ແລະທິດທາງຕໍ່ໜ້າ

ອົງການ UNDP ໄດ້ປະເຊີນກັບສິ່ງທ້າທາຍຫຼາຍຢ່າງໃນການເອົາອົງການຈັດຕັ້ງທາງສັງຄົມເຂົ້າມາມີສ່ວນຮ່ວມໃນວຽກງານຂອງຕົນ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳໃຫ້ການຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ. ການວາງແຜນໃຫ້ການຊ່ວຍເຫຼືອຮອບໃໝ່ສຳລັບຂະແໜງ ລບຕ ແມ່ນໄດ້ຮັບຮູ້ກ່ຽວກັບສິ່ງທ້າທາຍເຫຼົ່ານັ້ນ.




*“ຈຳນວນຜູ້ໄດ້ຮັບບາດເຈັບ ຫຼື ເສຍຊີວິດຈາກລະເບີດບໍ່ທັນແຕກ ຢູ່ ສປປ ລາວ ຫຼາຍກວ່າເຄິ່ງໜຶ່ງ ແມ່ນເດັກນ້ອຍ ໂດຍສ່ວນໃຫຍ່ແມ່ນເດັກຜູ້ຊາຍ... ຈາກເປົ້າໝາຍການພັດທະນາແບບຍືນຍົງ ທີ 18 ນີ້, ພວກເຮົາມີເປົ້າໝາຍວ່າ ຈະຢຸດຕິທ່າອ່ຽງທີ່ໂຫດຮ້າຍນີ້ໃຫ້ໄດ້ ເພື່ອທຸກຄົນ. ຜົນກະທົບທາງດ້ານເສດຖະກິດ ແລະ ສັງຄົມ ຂອງ ລະເບີດບໍ່ທັນແຕກຕົກຄ້າງ ແມ່ນເຮັດໃຫ້ປະຊາຊົນຂາດຄວາມໝັ້ນໃຈດ້ານຄວາມປອດໄພໃນການນຳໃຊ້ທີ່ດິນຂອງ ພວກເຂົາ ເຊິ່ງນຳໄປສູ່ຜົນກະທົບທາງລົບຕໍ່ລາຍຮັບຂອງຊາວນາໃນຊົນນະບົດ ແລະ ຄອບຄົວຂອງພວກເຂົາ ແລະ ຂັດຂວາງການພັດທະນາທັງໝົດຂອງປະເທດ. ຂ້າພະເຈົ້າຂໍຮັບເອົາຄຳໝັ້ນໝາຍຂອງລັດຖະບານ ທີ່ຈະນຳພາປະ ຊາຊົນອອກຈາກຜົນກະທົບຈາກລະເບີດບໍ່ທັນແຕກ ໂດຍມີເຄື່ອງມືທີ່ມີພະລັງຄື ເປົ້າໝາຍການພັດທະນາແບບຍືນ ຍົງແຫ່ງຊາດ ເຊິ່ງຈະຮັບປະກັນວ່າຄວາມພະຍາຍາມດັ່ງກ່າວຈະໄດ້ຮັບການຮ່ວມແຮງຮ່ວມໃຈເພື່ອຜົນໄດ້ຮັບ ຢ່າງເຕັມສ່ວນ.”*

- ເລຂາທິການໃຫຍ່ ສປຊ ພະນະທ່ານ ບັນ ຄີ-ມູນ ກ່າວໃນພິທີເຜີຍແຜ່ເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ຂອງ ສປປ ລາວ ກ່ຽວກັບລະເບີດບໍ່ທັນແຕກ ເຊິ່ງເປັນພິທີທີ່ຖືກຈັດຂຶ້ນໃນໄລຍະດຳເນີນກອງປະຊຸມສຸດຍອດອາຊຽນ ໂດຍຮ່ວມກັບນາຍົກລັດຖະມົນ ພະນະທ່ານ ທອງລຸນ ສີສຸລິດ.



# 10. ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງແມ່ຍິງ

## ປະຊາຊົນພາຍໃນ ສປປ ລາວ ໄດ້ຮັບຜົນປະໂຫຍດ ຈາກບັນດານະໂຍບາຍ ແລະ ແຜນງານຕ່າງໆ ທີ່ສົ່ງເສີມຄວາມສະເໝີບົດບາດຍິງ-ຊາຍໃຫ້ມີປະສິດທິຜົນຍິ່ງຂຶ້ນ ແລະ ເພີ່ມການມີສ່ວນຮ່ວມ ແລະ ການຕາງໜ້າຂອງແມ່ຍິງໃນການຕັດສິນບັນຫາຕ່າງໆທັງໃນ ແລະ ນອກລະບົບ





### ທ່າອ່ຽງການພັດທະນາຕົ້ນຕໍ

ໃນປີ 2016, ລັດຖະບານ ໄດ້ສືບຕໍ່ສ້າງຄວາມກ້າວໜ້າດ້ານຄວາມເໝີພາບບົດບາດຍິງ-ຊາຍ, ເຊິ່ງເປັນໜຶ່ງໃນຂົງເຂດຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະບັບທີ 8 (ແຜນ 8), ແລະ ເປັນເງື່ອນໄຂເບື້ອງຕົ້ນຂອງປະເທດໃນການບັນລຸເປົ້າໝາຍພັດທະນາແບບຍືນຍົງ (SDGs). ຈຳເປັນຕ້ອງມີຂໍ້ມູນແຍກເພດ ເຊິ່ງລວມທັງບັນດາຕົວຊີ້ວັດບົດບາດຍິງ-ຊາຍສຳລັບທຸກຂະແໜງການ ເພື່ອຕິດຕາມກວດກາຄວາມຄືບໜ້າຂອງວຽກງານດັ່ງກ່າວໃນແຜນ 8 ແລະ ການຈັດຕັ້ງປະຕິບັດ SDGs.

ພ້ອມນັ້ນ, ຍັງໄດ້ມີການຮັບຮອງແຜນພັດທະນາຄວາມສະເໝີພາບບົດບາດຍິງ-ຊາຍແຫ່ງຊາດ (2016-2020) ແລະ ແຜນພັດທະນາຂອງສະຫະພັນແມ່ຍິງລາວ (2016-2020) ກ່ຽວກັບການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແມ່ຍິງ, ແລະ ກົດໝາຍງົບປະມານແຫ່ງລັດສະບັບປັບປຸງ ທີ່ລວມເອົາອົງປະກອບໃໝ່ຄືການຂຶ້ນງົບປະມານທີ່ຕອບສະໜອງວຽກງານບົດບາດຍິງ-ຊາຍ.

ໃນວັນທີ 28 ຕຸລາ, ລັດຖະບານ ໄດ້ປະກາດການລວມຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ເຂົ້າກັບຄະນະກຳມະການເພື່ອແມ່ແລະເດັກແຫ່ງຊາດ ມາເປັນຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງ ແມ່ຍິງ, ແມ່ ແລະ ເດັກ. ຄະນະກຳມະທິການໃໝ່ດັ່ງກ່າວ ແມ່ນຢູ່ພາຍໃຕ້ການເປັນປະທານຂອງທ່ານຮອງນາຍົກລັດຖະມົນຕີ ໂດຍມີສະຫະພັນແມ່ຍິງລາວເຮັດໜ້າທີ່ເປັນກອງເລຂາ.

ສປປ ລາວ ຍັງໄດ້ຍາດໄດ້ຄວາມຄືບໜ້າສຳຄັນໃນການສົ່ງເສີມແມ່ຍິງໃຫ້ໄດ້ຮັບຕຳແໜ່ງລະດັບຕັດສິນບັນຫາ. ການ ເລືອກຕັ້ງສະມາຊິກສະພາແຫ່ງຊາດໃນເດືອນເມສາ ພົບວ່າ: ມີການເພີ່ມຂຶ້ນຂອງສາມະຊິກສະພາແຫ່ງຊາດເພດຍິງ ຈາກ 25 ສ່ວນຮ້ອຍ ມາເປັນ 27 ສ່ວນຮ້ອຍ . ນີ້ ສະແດງໃຫ້ເຫັນວ່າ: ປະເທດລາວກ້າວໜ້າຢ່າງວ່ອງໄວໃນການບັນລຸ ເປົ້າໝາຍແຫ່ງຊາດໃນການມີຜູ້ຕາງໜ້າເພດຍິງໃນສະພາແຫ່ງຊາດໃຫ້ໄດ້ 30 ສ່ວນຮ້ອຍ, ລາວ ຖືເປັນປະເທດໜຶ່ງ ໃນພາກພື້ນທີ່ມີສັດສ່ວນການຕາງໜ້າຂອງເພດຍິງສູງສຸດໃນລັດຖະສະພາ. ນອກຈາກນັ້ນ, ໃນປະຈຸບັນ 12 ສ່ວນຮ້ອຍ ຂອງຕຳແໜ່ງລັດຖະມົນຕີ ຍັງດຳລົງຕຳແໜ່ງໂດຍເພດຍິງ (3 ຈາກທັງໝົດ 26 ທ່ານ).

ປະຈຸບັນ, ລັດຖະບານ ກຳລັງຮ່າງກົດໝາຍວ່າດ້ວຍຄວາມສະເໝີພາບບົດບາດຍິງ-ຊາຍ ສະບັບປັບປຸງ ເຊິ່ງຄາດວ່າ: ຈະສົ່ງໃຫ້ສະພາແຫ່ງຊາດພິຈາລະນາຮັບຮອງເອົາໃນປີ 2019.

ພ້ອມນັ້ນ, ຍັງພົບວ່າ: ໄດ້ມີການເສີມຂະຫຍາຍການເຂົ້າເຖິງຄວາມເປັນທຳ ແລະໄດ້ມີການດຳເນີນບາດກ້າວຕ່າງໆເພື່ອສ້າງຄວາມເຂັ້ມແຂງໃຫ້ຂອບລະບຽບກົດໝາຍ. ເຖິງວ່າ: ມີການນຳໃຊ້ນິຕິກຳສຳຄັນຫຼາຍຢ່າງເຊັ່ນ: ບັນດາກົດ ໝາຍທີ່ມີເປົ້າໝາຍແນໃສ່ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ແຕ່ ສປປ ລາວ ຍັງປະເຊີນໜ້າກັບສິ່ງທ້າທາຍ ແລະ ຊ່ອງຫວ່າງຫຼາຍຢ່າງໃນການຈັດຕັ້ງປະຕິບັດກົດໝາຍເຫຼົ່ານັ້ນ. ລັດຖະບານ ໄດ້ສະແດງຄວາມຂອບອົກຂອບໃຈຕໍ່ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມທີ່ໄດ້ປະກອບສ່ວນໃນການສ້າງນະໂຍບາຍ, ເຊັ່ນ: ລັດຮັບຮູ້ຈຸດດີຂອງການມີສ່ວນຮ່ວມ ຈາກສະມາຄົມເພື່ອພັດທະນາແມ່ຍິງ ແລະ

*"ສປປ ລາວ ຍັງໄດ້ຍາດໄດ້ຄວາມຄືບໜ້າສຳຄັນໃນການສົ່ງເສີມແມ່ຍິງໃຫ້ໄດ້ຮັບຕຳແໜ່ງລະດັບຕັດສິນບັນຫາ. ການ ເລືອກຕັ້ງສະມາຊິກສະພາແຫ່ງຊາດໃນເດືອນເມສາ ພົບວ່າ: ມີການເພີ່ມຂຶ້ນຂອງສາມະຊິກສະພາແຫ່ງຊາດເພດຍິງ ຈາກ 25 ສ່ວນຮ້ອຍ ມາເປັນ 27 ສ່ວນຮ້ອຍ."*

ການສຶກສາກົດໝາຍ ທີ່ປະກອບສ່ວນເຂົ້າໃນການສ້າງປະມວນກົດໝາຍອາຍາ ແລະ ກົດໝາຍອື່ນໆ. ພ້ອມນັ້ນ, ບັນດາສະມາຄົມທີ່ບໍ່ຫວັງຜົນກຳໄລອື່ນໆ ຍັງໄດ້ຮັບເຊີນເຂົ້າຮ່ວມການສົນທະນາທາງວິຊາການ
ລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາຢ່າງເປັນປະຈຳປົກກະຕິ.

## ຜົນໄດ້ຮັບ

ທຸກອົງການໃນລະບົບ ສປຊ ມີບູລິມະສິດຈະແຈ້ງທີ່ຈະສືບຕໍ່ໃຫ້ການຊ່ວຍເຫຼືອບັນດານະໂຍບາຍ ແລະ ຍຸດທະສາດຕ່າງໆຂອງລັດຖະບານ ເພື່ອສ້າງຄວາມກ້າວໜ້າດ້ານຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແມ່ຍິງໃນທຸກແຜນງານພັດທະນາເສດຖະກິດ-ສັງຄົມ ໂດຍຍາດໄດ້ຜົນໄດ້ຮັບສຳຄັນຫຼາຍຢ່າງໃນຂົງເຂດຕ່າງໆ.

ອົງການ ສປຊ ຍັງໄດ້ປະກອບສ່ວນຮັບປະກັນວ່າ: ແຜນ 8 ໄດ້ມີການເຊື່ອມສານບົດບາດຍິງ-ຊາຍ ໂດຍລວມເອົາບັນ ດາຕົວຊີ້ວັດໜັກແໜ້ນທີ່ຕ້ອງມີຂໍ້ມູນແຍກເພດ. ກ່ຽວແກ່ກັບເລື່ອງນີ້, ຫຼາຍອົງການ ຍັງໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອເພື່ອ ເຮັດແນວໃດໃຫ້ສາມາດສະໜອງຂໍ້ມູນແຍກເພດ ເຊັ່ນ: ການໃຫ້ການຊ່ວຍເຫຼືອການຈັດຕັ້ງປະຕິບັດການສຳຫຼວດພົນລະເມືອງແລະທີ່ຢູ່ອາໄສທົ່ວປະເທດ ປີ 2015.

ຜ່ານການໃຫ້ການຊ່ວຍເຫຼືອລັດຖະສະພາ, ອົງການ UNDP ໄດ້ຊ່ວຍການລວມເອົາບັນຫາຕ່າງໆດ້ານບົດບາດ
ຍິງ-ຊາຍເຂົ້າໃນຂະບວນການສ້າງກົດໝາຍ. ພ້ອມນັ້ນ, ທາງອົງການ ຍັງໄດ້ຊ່ວຍເຫຼືອການຈັດບັ້ນສົນທະນາກ່ຽວກັບການ ທົບທວນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ກົດລະບຽບ ແລະ ລະບຽບການຕ່າງໆບົນພື້ນຖານວິທີການດຳເນີນງານທີ່ເອົາໃຈໃສ່ຄວາມສະເໝີພາບບົດບາດຍິງ-ຊາຍພາຍໃຕ້ການຊີ້ສຳຂອງຄະນະສາມະຊິກສະພາແຫ່ງຊາດເພດຍິງ. ໜຶ່ງໃນຜົນໄດ້ຮັບທີ່ສາມາດເຊື່ອມໂຍງໃສ່ບັນດາກິດຈະກຳດັ່ງກ່າວ ແມ່ນການປັບປຸງດັດແກ້ກົດໝາຍງົບປະມານແຫ່ງລັດ 2015/2016. ກົດໝາຍສະບັບປັບປຸງ ໄດ້ກຳນົດສູດການຂຶ້ນງົບປະມານທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ເຊິ່ງຖື ວ່າເປັນການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ.

ນອກຈາກນັ້ນ, ອົງການ ສປຊ ຍັງໄດ້ປະກອບສ່ວນເຂົ້າໃນການສ້າງບົດລາຍງານການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ສະບັບທີ 8 ແລະ ທີ 9, ເຊິ່ງລັດຖະບານໄດ້ຮັບຮອງ ເອົາໃນເດືອນກຸມພາ.

ຄວາມຮຸນແຮງຕໍ່ແມ່ຍິງ ຍັງຄົງ ເປັນບັນຫາ
ບູລິມະສິດທີ່ອົງການ ສປຊ ກຳລັງຊ່ວຍແກ້ໄຂ.
ການເຜີຍແຜ່ບົດລາຍງານຜົນ ການສຳຫຼວດແຫ່ງຊາດກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ຖືເປັນການສຳຫຼວດທຳອິດທີ່ພະຍາຍາມ ເກັບກຳຂໍ້ມູນກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງສະໜອງທັງຂໍ້ມູນປະລິມານ ແລະ ຄຸນນະພາບ. ບົດລາຍງານດັ່ງກ່າວ ໄດ້ຮັບການສ້າງຂຶ້ນໂດຍຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ທີ່ຮ່ວມມືກັບ ສູນສະຖິຕິແຫ່ງຊາດ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ UNFPA, UN Women, ແລະ ອົງການ WHO.
ການເຜີຍແຜ່ບົດລາຍງານດັ່ງກ່າວ ເປັນຜົນນຳໄປສູ່ການໃຫ້ຄຳໝາຍໝັ້ນທີ່ໜັກແໜ້ນຈາກລັດຖະບານທີ່ຈະສືບຕໍ່ຄວາມພະ ຍາຍາມໃນການຈັດຕັ້ງປະຕິບັດກົດໝາຍສະບັບໃໝ່ ແລະ ແຜນດຳເນີນງານແຫ່ງຊາດເພື່ອລຶບລ້າງຄວາມຮຸນແຮງຕໍ່ ແມ່ຍິງແລະເດັກຍິງ. ອົງການ UNFPA ຍັງສືບຕໍ່ຊ່ວຍເຫຼືອຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແລະ ກະຊວງສາທາເພື່ອເຜີຍແຜ່ບັນດາສິ່ງຄົ້ນພົບຈາກການສຳຫຼວດແຫ່ງຊາດກ່ຽວກັບຄວາມຮຸນແຮງຕໍ່ ແມ່ຍິງ ເຊິ່ງເປັນການສຳຫຼວດຖັດຈາກການສຳຫຼວດແຫ່ງຊາດກ່ອນໜ້ານີ້ ໂດຍໄດ້ມີການເຜີຍແພ່ທົ່ວຂະແໜງສາທາ ແລະ ຂັ້ນແຂວງ. ດ້ວຍການຊ່ວຍເຫຼືອຈາກອົງການ UN Women, ໃນເດືອນມິຖຸນາ, ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໄດ້ເຜີຍແຜ່ຜົນການສຶກສາກ່ຽວກັບການຄິດໄລ່ຜົນເສຍຫາຍທີ່ເກີດຈາກຄວາມຮຸນແຮງ ເຊິ່ງເປັນວິທີການທີ່ເປັນນາວະກຳໃໝ່. ບົດລາຍງານດັ່ງກ່າວ ໄດ້ສະໜອງຂໍ້ມູນ ແລະຫຼັກຖານຕົວຈິງ, ເຊິ່ງຈະຊ່ວຍລັດຖະບານ ແລະ ຄູ່ຮ່ວມພັດທະນາໃນການວາງແຜນແລະຂຶ້ນງົບປະມານສຳລັບການດຳເນີນງານໃນສະພາບເງື່ອນໄຂຕ່າງໆ ແລະ ຊ່ວຍຂະແໜງກ່ຽວຂ້ອງໃນການແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ.

*"ການເຜີຍແຜ່ບົດລາຍງານຜົນ ການສຳຫຼວດແຫ່ງຊາດກ່ຽວກັບສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ ຖືເປັນການສຳຫຼວດທຳອິດທີ່ພະຍາຍາມ ເກັບກຳຂໍ້ມູນກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງສະໜອງທັງຂໍ້ມູນປະລິມານ ແລະ ຄຸນນະພາບ. ບົດລາຍງານດັ່ງກ່າວ ໄດ້ຮັບການສ້າງຂຶ້ນໂດຍຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ທີ່ຮ່ວມມືກັບ ສູນສະຖິຕິແຫ່ງຊາດ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ UNFPA, UN Women, ແລະ ອົງການ WHO."*

ໂດຍສານຕໍ່ຈາກຂໍ້ມູນ ແລະ ຫຼັກຖານຕົວຈິງຊຸດໃໝ່ທີ່ໄດ້ຮັບ, ທາງອົງການ UNFPA ແລະ UN Women ຍັງໄດ້ສືບຕໍ່ໃຫ້ການ ຊ່ວຍເຫຼືອລັດຖະບານໃນການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດວ່າດ້ວຍການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ. ພ້ອມນັ້ນ, ອົງການ UNFPA ແລະ UN Women ຍັງຮ່ວມມືກັບອົງການ CARE ສາກົນ, ສະມາຄົມເພື່ອການພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ, ແລະ ສະມາຄົມພັດທະນາບົດບາດ ຍິງ-ຊາຍ ໃນການຈັດຕັ້ງປະຕິບັດບັ້ນໂຄສະນາປູກຈິດສຳນຶກກ່ຽວກັບບັນຫາຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ. ບັ້ນໂຄສະນາດັ່ງກ່າວ ໄດ້ລວມເອົາຄຳຖະແຫຼງລະດັບສູງຈາກທ່ານຮອງນາຍົກລັດຖະມົນຕີ, ການຈັດສຳມະນາກ່ຽວກັບການສະໜອງງົບປະມານແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ ໂດຍມີຜູ້ເຂົ້າຮ່ວມຫຼາຍກ່ວາ 100 ຄົນຈາກບັນດາກະຊວງຂະແໜງການກ່ຽວຂ້ອງ, ແລະການຈັດສຳມະນາໃຫ້ໄວໜຸ່ມຢູ່ມະຫາວິທະຍາໄລແຫ່ງຊາດ ເຊິ່ງມີນັກສຶກສາ 300 ຄົນທີ່ໄດ້ຮັບປະໂຫຍດ.

ດ້ວຍການຊ່ວຍເຫຼືອຈາກອົງການ UNFPA, UN Women ແລະ ອົງການ WHO, ຄະນະຜູ້ແທນລາວ 7 ທ່ານ ໄດ້ ເພີ່ມຄວາມເຂົ້າໃຈຂອງຕົນກ່ຽວກັບການຕອບໂຕ້ແກ້ໄຂຮ່ວມລະຫວ່າງຂະແໜງການຕ່າງໆຕໍ່ບັນຫາຄວາມຮຸນແຮງບົນພື້ນຖານບົດບາດຍິງ-ຊາຍ. ເຂົາເຈົ້າ ໄດ້ຮັບການແນະນຳກ່ຽວກັບບົດແນະນຳຊຸດບໍລິການຈຳເປັນ ທີ່ຈຸດໜັກເນັ້ນໃສ່ການສະໜອງບໍລິການສາທາ, ບໍລິການທາງດ້ານຍຸຕິທຳ ແລະ ສັງຄົມ ໃຫ້ແມ່ຍິງທີ່ຖືກກະທົບຈາກຄວາມຮຸນແຮງ, ແລະ ການປະສານງານກັບຂະແໜງການຕ່າງໆ ເພື່ອແກ້ໄຂບັນຫາຄວາມຮຸນແຮງບົນພື້ນຖານບົດບາດຍິງ-ຊາຍ. ອີງຕາມຜົນໄດ້ຮັບຈາກການສົນທະນາດັ່ງກ່າວ, ຄະນະຜູ້ແທນລາວໄດ້ຮ່າງແຜນດຳເນີນງານຮ່ວມລະຫວ່າງຂະແໜງການກ່ຽວຂ້ອງ ໂດຍມີແຜນຈະຜັນຂະຫຍາຍເປັນແຜນລະອຽດ ແລະ ຂໍຄຳປຶກສາເພີ່ມໃນປີ 2017.

ດ້ວຍການຊ່ວຍເຫຼືອຈາກອົງການ UNFPA ທີ່ປະສານສົບທົບກັບອົງການຈັດຕັ້ງຊາວໜຸ່ມ, ສະຫະພັນແມ່ຍິງ, ຄະນະ ກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ , ແລະ ກະຊວງແຜນການ ແລະ ການລົງທຶນ, ໄດ້ ພ້ອມກັນເຜີຍແຜ່ບັ້ນໂຄສະນາເພື່ອເພີ່ມຄວາມເອົາໃຈໃສ່ຕໍ່ໄວໜຸ່ມຍິງ. ບັ້ນໂຄສະນາດັ່ງກ່າວ ລວມເອົາວິດີໂອກະ ຕູນທີ່ມີຕົວລະຄອນເອກຊື່ "ນ້ອຍ" ໂດຍເນັ້ນໃຫ້ເຫັນສິ່ງທ້າທາຍຕ່າງໆທີ່ໄວໜຸ່ມຍິງຢູ່ ສປປ ລາວ ຕ້ອງປະເຊີນ ແລະ ຄວາມສຳຄັນຂອງການລົງທຶນໃສ່ໄວໜຸ່ມຍິງ ເພື່ອບັນລຸການພັດທະນາແບບຍືນຍົງ . ບັ້ນໂຄສະນາດັ່ງກ່າວ ໄດ້ຮັບການ ສະໜັບສະໜູນຈາກກະຊວງຂະແໜງການກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາຕ່າງໆ ເຊິ່ງລວມທັງບັນດາອົງການ INGOs ທີ່ເຄື່ອນໄຫວປູກຈິດສຳນຶກກ່ຽວກັບຄວາມຕ້ອງການຂອງໄວໜຸ່ມຍິງ.

ເພື່ອປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງທາງເສດຖະກິດໃຫ້ແມ່ຍິງ, ອົງການ ILO ໄດ້ສະໜອງການຊ່ວຍເຫຼືອທາງວິຊາການເພື່ອປັບປຸງດັດແກ້ຂໍ້ຕົກລົງລັດຖະມົນຕີວ່າດ້ວຍການກວດກາແຮງງານ ຖືເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດກົດໝາຍແຮງງານ ເພື່ອຮັບປະກັນວ່າ: ຜູ້ອອກແຮງງານຄົນລາວເພດຍິງຈະໄດ້ຮັບການປະ ຕິບັດຕໍ່ຢ່າງສະເໝີພາບ ແລະ ໄດ້ຮັບການປົກປ້ອງຈາກກົດໝາຍ. ອົງການ UN Women ໄດ້ລິເລີ່ມການຄົ້ນຄ້ວາທາງ ດ້ານຄຸນນະພາບກ່ຽວກັບເງື່ອນໄຂການເຮັດວຽກ ແລະ ການດຳລົງຊີວິດຂອງແມ່ຄ້າຕະຫຼາດຢູ່ນະຄອນຫຼວງວຽງຈັນ.

*ດ້ວຍການຊ່ວຍເຫຼືອຈາກອົງການ UNFPA ທີ່ປະສານສົບທົບກັບອົງການຈັດຕັ້ງຊາວໜຸ່ມ, ສະຫະພັນແມ່ຍິງ, ຄະນະ ກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ , ແລະ ກະຊວງແຜນການ ແລະ ການລົງທຶນ, ໄດ້ ພ້ອມກັນເຜີຍແຜ່ບັ້ນໂຄສະນາເພື່ອເພີ່ມຄວາມເອົາໃຈໃສ່ຕໍ່ໄວໜຸ່ມຍິງ. ບັ້ນໂຄສະນາດັ່ງກ່າວ ລວມເອົາວິດີໂອກະຕູນທີ່ມີຕົວລະຄອນເອກຊື່ "ນ້ອຍ" ໂດຍເນັ້ນໃຫ້ເຫັນສິ່ງທ້າທາຍຕ່າງໆທີ່ໄວໜຸ່ມຍິງຢູ່ ສປປ ລາວ ຕ້ອງປະເຊີນ ແລະ ຄວາມສຳຄັນຂອງການລົງທຶນໃສ່ໄວໜຸ່ມຍິງ ເພື່ອບັນລຸການພັດທະນາແບບຍືນຍົງ.*

ນອກຈາກນັ້ນ, ອົງການ ILO ຍັງສືບຕໍ່ໃຫ້ການຊ່ວຍເຫຼືອໂຄງການສົ່ງເສີມການປະກອບອາຊີບ ແລະ ປັບປຸງການຫາລ້ຽງຊີບແບບປະສົມປະສານເພື່ອຫຼຸດຜ່ອນຄວາມທຸກຍາກຢູ່ເຂດຊົນນະບົດ ເຊິ່ງເປັນໂຄງການທົດລອງທີ່ຈັດຕັ້ງປະຕິບັດຢູ່ແຂວງເຊກອງ. ໂຄງການຊ່ວຍເຫຼືອດັ່ງກ່າວ ມີເປົ້າໝາຍແນໃສ່ຫຼຸດຜ່ອນຄວາມທຸກຍາດຢູ່ເຂດຊົນນະບົດຜ່ານຍຸດທະສາດແບບປະສົມປະສານທີ່ສົ່ງເສີມການຜະລິດ ແລະ ການມີວຽກເຮັດງານທຳທີ່ມີຄຸນຄ່າເປັນທຳ. ປະຊາຊົນໃນເຂດສາທິດເປົ້າໝາຍຂອງໂຄງການ ໄດ້ຮັບຮູ້ກ່ຽວກັບເຕັກໂນໂລຊີໃໝ່ແລະໄດ້ຮັບການຝຶກອົບຮົມ ເຮັດໃຫ້ເຂົາເຈົ້າຮູ້ກ່ຽວກັບຫຼາກຫຼາຍກິດຈະກຳສ້າງລາຍໄດ້ ທີ່ຈະສົມທົບເພີ່ມລາຍໄດ້ໃຫ້ເຂົາເຈົ້ານອກຈາກການຜະລິດແບບເອື່ອຍອີງທຳມະ ຊາດ. 718 ຄອບຄົວ ໃນເຂດຊຸມຊົນເປົ້າໝາຍ ໄດ້ຍົກລະດັບຄວາມຮູ້ຂອງຕົນຜ່ານກິດຈະກຳສ້າງຄວາມສາມາດທີ່ສະ ໜອງໃຫ້ໂດຍພະນັກງານຂັ້ນແຂວງແລະຂັ້ນເມືອງ. ຊາວບ້ານ ໄດ້ລາຍງານກ່ຽວກັບການປ່ຽນແປງທາງດ້ານພຶດຕິກຳ ເຊັ່ນ: ຜູ້ຊາຍຊ່ວຍແບ່ງເບົາວຽກເຮືອນການຊານຫຼາຍຂຶ້ນ, ເພີ່ມການປະກອບສ່ວນຂອງຕົນຈາກ 5 ສ່ວນຮ້ອຍ ເປັນ 35 ສ່ວນຮ້ອຍ, ແລະແມ່ຍິງ ມີຕຳແໜ່ງການນຳຂັ້ນບ້ານຫຼາຍຂຶ້ນຢູ່ຕາມບ້ານຕ່າງໆຂອງໂຄງການໂດຍເພີ່ມຈາກ 16 ເປັນ 35 ສ່ວນຮ້ອຍ.

ພ້ອມນັ້ນ, ອົງການ IOM ໄດ້ທົດລອງຈັດຕັ້ງປະຕິບັດການຝຶກອົບຮົມ ແລະ ໂຄງການຊອກວຽກເຮັດງານທຳໃຫ້ແມ່ຍິງ ດ້ອຍໂອກາດທີ່ມີລະດັບການສຶກສາຈຳກັດຈາກເຂດຫ່າງໄກສອກຫຼີກ.

ອົງການ WHO ໄດ້ໃຫ້ການຊ່ວຍເຫຼືອອົງການປະກັນສຸຂະພາບແຫ່ງຊາດພາຍໃຕ້ກະຊວງສາທາ ເຊິ່ງຮັບຜິດຊອບກອງທຶນປະກັນສຸຂະພາບ, ລະບົບປະກັນສຸຂະພາບຊຸມຊົນ ແລະ ບໍລິການສຸຂະພາບແມ່ ແລະ ເດັກແບບບໍ່ເສຍຄ່າ. ໃນປີ 2016,

ລະບົບປະກັນສຸຂະພາບແຫ່ງຊາດ ເຊິ່ງເປັນລະບົບທີ່ໄດ້ຮັບເງິນສົມທົບຈາກເງິນອາກອນ ແລະ ການຈ່າຍເງິນສົມທົບໃນມູນຄ່າຕໍ່າຈາກຜູ້ປະກັນຕົນ ໄດ້ເປີດໃຫ້ບໍລິການຢູ່ສີ່ແຂວງ ແລະ ຄາດວ່າຈະຂະຫຍາຍກວມເອົາເພີ່ມອີກຫ້າແຂວງພາຍໃນຕົ້ນປີ 2017. ນີ້ ເປັນໜຶ່ງໃນບັນດານະໂຍບາຍຫຼັກຂອງລັດຖະບານເພື່ອປັບປຸງການປົກປ້ອງທາງການເງິນ ເຊິ່ງລວມທັງແມ່ຍິງແລະຄົນທຸກ ເພື່ອເຮັດແນວໃດໃຫ້ບັນລຸການເບິ່ງແຍງສຸຂະພາບທຸກຖ້ວນໜ້າພາຍໃນປີ 2025.

ຜ່ານການກະຈາຍສຽງລາຍການຕ່າງໆທີ່ສົນທະນາກ່ຽວກັບບົດບາດຍິງ-ຊາຍ ໂດຍສະຖານີວິທະຍຸຊຸມຊົນທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການ UNDP, ແມ່ຍິງໃນຊຸມຊົນທ້ອງຖິ່ນໄດ້ຮັບການສ້າງຄວາມເຂັ້ມແຂງສ້າງວິທີຫາລ້ຽງຊີບທີ່ດີຂຶ້ນກ່ວາເດີມ. ດ້ວຍການເລັງເປົ້າໝາຍໃສ່ແມ່ຍິງຊົນເຜົ່າເປັນພິເສດ, ລາຍການວິທະຍຸຊຸມຊົນ ໄດ້ສະໜອງຂໍ້ມູນຂ່າວສານກ່ຽວກັບບັນຫາຕ່າງໆເຊັ່ນ: ສຸຂະພິບານ ແລະ ການຮັກສາອະນາໄມ, ການຜະລິດກະສິກຳແບບຍືນຍົງ ແລະ ການ ເຂົ້າເຖິງບໍລິການສັງຄົມຕ່າງໆ.
ວິທະຍຸຊຸມຊົນ ຍັງໄດ້ເປັນກະບອກສຽງໃຫ້ແມ່ຍິງ ເຮັດໃຫ້ແມ່ຍິງຊົນເຜົ່າໃນເມືອງຊົນ ນະບົດສາມາດເຂົ້າມີສ່ວນຮ່ວມໃນລາຍການຕ່າງໆຢ່າງຟົດຟື້ນ.

ຈາກ 76 ທຶນຊ່ວຍເຫຼືອລ້າຂະໜາດນ້ອຍທີ່ກອງທຶນພັດທະນາຄວາມສາມາດ ແລະ ການຫັນເປັນທັນສະໄໝ ທີ່ໄດ້ສະໜອງໃຫ້ບັນດາອົງການສະໜອງບໍລິການພາກລັດ ໃນໄລຍະປີ 2012 ເຖິງ 2016, 13 ທຶນ ໄດ້ເລັງເປົ້າໝາຍໃສ່ໂຄງ ການລິເລີ່ມທີ່ພົວພັນກັບການສົ່ງເສີມບົດບາດຍິງ-ຊາຍ ດັ່ງນັ້ນຈຶ່ງເປັນການປະກອບສ່ວນໃສ່ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ທັງເປັນການສົ່ງເສີມສິດທິຂອງແມ່ຍິງໃນຂັ້ນທ້ອງຖິ່ນ. ຕົວຢ່າງ: ໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອລ້າດັ່ງກ່າວ ໃນປີ 2016 ທີ່ຈັດຕັ້ງປະຕິບັດໂດຍສະຫະພັນແມ່ຍິງແຂວງຜົ້ງສາລີ ໄດ້ສົ່ງເສີມໂພຊະນາການທີ່ຖືກຕ້ອງ ຜ່ານການປຸກ ຈິດສຳນຶກໃຫ້ແມ່ຍິງຮູ້ໄດ້ເຖິງຄວາມສຳຄັນຂອງໂພຊະນາການ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ບັນດາອົງການຕ່າງໆພາຍໃຕ້ລະບົບ ສປຊ ໄດ້ສະໜອງການຊ່ວຍເຫຼືອທາງດ້ານວິຊາການແລະການເງິນໃຫ້ຂະແໜງ ການຕ່າງໆຂອງລັດເພື່ອທົບທວນ, ສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດ, ແຜນດຳເນີນງານ, ນະໂຍບາຍ ແລະ ກົດ ໝາຍ ທີ່ສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍໃນຂະແໜງການສ່ວນໃຫຍ່ເຊັ່ນ:
ແຮງງານ, ສາທາ, ສຶກສາ, ກະສິກຳ ແລະອື່ນໆ
ກໍ່ຄືຫົວຂໍ້ສະເພາະຕ່າງໆເຊັ່ນ: ການຍຸຕິຄວາມຮຸນແຮງຕໍ່ແມ່ຍິງ. ຫຼາຍເອກະສານທີ່ກ່າວເຖິງນັ້ນ ແມ່ນໄດ້ ຖືກຮັບຮອງແລ້ວ. ເຖິງຢ່າງໃດກໍ່ດີ, ຍັງຈຳເປັນຕ້ອງມີການຊ່ວຍເຫຼືອທາງດ້ານວິຊາການ ແລະ ການເງິນຈາກບັນດາອົງການຕ່າງໆໃນລະບົບ ສປຊ ເພື່ອຂະຫຍາຍການປະກອບສ່ວນທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ໂດຍບໍ່ຈຳກັດພຽງສະເພາະການປະກອບຄຳເຫັນໃສ່ເອກະສານ ແລະ ຍຸດທະຍາດຕ່າງໆ ແຕ່ລວມເຖິງການຈັດຕັ້ງປະຕິບັດຕົວຈິງ. ບັນຫາ ຕ່າງໆດ້ານບົດບາດຍິງ-ຊາຍ ບໍ່ຄວນຖືກເບິ່ງແບບຕັດແຍກຕ່າງຫາກ; ຄວນຖືກສັງລວມ ແລະ ເຊື່ອມສານເຂົ້າໃນທຸກ ແຜນງານ, ກິດຈະກຳ, ຍຸດທະສາດ ແລະ ນະໂຍບາຍ.

ຄວາມສາມາດທີ່ຍັງຈຳກັດຂອງບັນດາກົງຈັກບົດບາດຍິງ-ຊາຍຢູ່ຂັ້ນສູນກາງ ເຊິ່ງລວມທັງຂອດການປະສານງານ ເຫັນວ່າ: ເປັນສິ່ງທ້າທາຍໃນການຈັດຕັ້ງປະຕິບັດບັນດາແຜນງານ ຫຼື ໂຄງການສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການສ້າງຄວາມກ້າວໜ້າດ້ານຄວາມສະເໝີພາບບົດບາດຍິງ-ຊາຍ.

ການປ່ຽນແປງທີ່ມີຂຶ້ນໃນຫວ່າງບໍ່ດົນມານີ້ພາຍໃນລັດຖະບານ ຈະສະໜອງໂອກາດ ແລະ ສິ່ງທ້າທາຍໃນການຍູ້ດັນວາລະສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ ໂດຍສະເພາະການລວມຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ຄະນະກຳມາທິການເພື່ອແມ່ ແລະ ເດັກແຫ່ງຊາດເຂົ້າກັນເປັນຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ .

ຈຳເປັນຕ້ອງມີໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດທີ່ຈະແຈ້ງສຳລັບຈຸດປະສານງານບົດບາດຍິງ-ຊາຍໃນບັນດາອົງການພາຍໃນລະບົບ ສປຊ. ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ຄວນໄດ້ຮັບການສົ່ງເສີມໂດຍການນຳຂອງບັນດາອົງການພາຍໃນລະບົບ ສປຊ ແລະ ຖືກເຊື່ອມສານຢ່າງມີປະສິດທິຜົນເຂົ້າໃນທຸກແຜນງານ ຫຼື ໂຄງການຂອງທຸກອົງການເຫຼົ່ານັ້ນ.

> “*ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ຄວນໄດ້ຮັບການສົ່ງເສີມໂດຍການນຳຂອງບັນດາອົງການພາຍໃນລະບົບ ສປຊ ແລະ ຖືກເຊື່ອມສານຢ່າງມີປະສິດທິຜົນເຂົ້າ ໃນທຸກແຜນງານ ຫຼື ໂຄງການຂອງທຸກອົງການເຫຼົ່ານັ້ນ.*”




# ການສື່ສານຮ່ວມ

## ເບິ່ງຄືນຫຼັງ

ກຸ່ມສື່ສານຮ່ວມຂອງອົງການ ສປຊ ໄດ້ໃຫ້ການຊ່ວຍເຫຼືອທີມງານປະຈຳປະເທດຂອງອົງການ ສປຊ ໃນການຍົກສູງບົດບາດຂອງການຮ່ວມມືລະຫວ່າງລັດຖະບານແລະອົງການ ສປຊ ພ້ອມທັງປຸກຈິດສຳນຶກສ້າງຄວາມຮັບຮູ້ກ່ຽວກັບບັນດາບູລິມະສິດຮ່ວມ.

ໄດ້ມີການຈັດສະເຫຼີມສະຫຼອງວັນ ສປຊ ໃນວັນທີ 24 ຕຸລາ ໂດຍມີບັນດາຄູ່ຮ່ວມງານດັ້ງເດີມຂອງອົງ ການ ສປຊ ເຂົ້າຮ່ວມໃນງານດັ່ງກ່າວເຊັ່ນ: ລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາ ພ້ອມດ້ວຍປະຊາຊົນລາວ ໂດຍມີ ຄວາມພະຍາຍາມທີ່ຈະຖ່າຍທອດພາບອົງການ ສປຊ ໃນຖານະເປັນອົງການຈັດຕັ້ງທີ່ບໍ່ຢຸດຈີ້ງ ແລະ ມີຄວາມໜ້າສົນໃຈ ໂດຍຄົນເປັນກາງໃນເລື່ອງເລົ່າທີ່ໜ້າສົນໃຈຕ່າງໆ. ວັນ ສປຊ ຍັງຂີດໝາຍດ້ວຍເຫດການສຳຄັນຄື: ອົງການ ສປຊ ໃນຍຸກດີຈີຕໍ ທີ່ອະທິບາຍ ແລະ ເນັ້ນໜັກສາຍເຊື່ອມໂຍງລະຫວ່າງການພັດທະນາແບບຍືນຍົງ ກັບ ເຕັກໂນໂລຊີໃໝ່ໆ . ແຂກເຂົ້າຮ່ວມຫຼາຍກ່ວາ 250 ຄົນ ໄດ້ເຂົ້າຢ້ຽມຊົມບັນດາສະຖານີປະຕິສຳພັນກັບຜູ້ເຂົ້າຮ່ວມຊົມ ເຊິ່ງສະແດງ ຮູບເງົາສະເໝືອນຈິງ, ບັນດາໂປຣແກມ ຫຼື ອັບພລິເຄລຊັນເຄື່ອນທີ່ຂອງອົງການ ສປຊ, ຮູບຖ່າຍ 360 ອົງສາ, ບໍລິການ ຊຸມຊົນແບບໃຊ້ນາວະກຳໃໝ່, ການສະແດງວິດີໂອທີ່ໃຊ້ເຕັກນິກສະຕ໋ອບໂມເຊັນເອນນິເມຊັນ, ລະບົບສະມັກເປັນອາສາສະມັກຂອງອົງການ UNV ຜ່ານເວັບໄຊ໋, ແລະ ພາບຖ່າຍທາງອາກາດ ແລະ ຮູບພາບຈາກເຄື່ອງບິນບັງຄັບ (ໂດຣນ) ໃນ ຂະດຽວກັນກໍ່ມີການລົມກ່ຽວກັບເປົ້າໝາຍພັດທະນາແບບຍືນຍົງໃນທຸກບ້າດກ້າວຂອງເສັ້ນທາງຢ້ຽມຊົມງານ. ໃນການເຊີນໄວໜຸ່ມລາວ ແລະ ຊຸມຊົນທຸລະກິດເຂົ້າຮ່ວມງານດັ່ງກ່າວ ແມ່ນໄດ້ເຊີນຜ່ານສື່ອອນລາຍຂອງອົງການ ສປຊ ເຊິ່ງຄວາມສົນໃຈຂອງມວນຊົນໃນງານດັ່ງກ່າວ ພົບວ່າ: ມີການຕອບຮັບຢ່າງຫຼວງຫຼາຍເກີນພື້ນທີ່ຂອງໂຮງຮູບເງົາທີ່ໃຊ້ຈັດງານສະເຫຼີມສະຫຼອງດັ່ງກ່າວ.

ອີກກິດຈະກຳໜຶ່ງທີ່ໄດ້ຈັດຕັ້ງປະຕິບັດ ແມ່ນການໂຮມຊຸມນຸມດ່ວນແບບແຟດສ໌ມອບ ເຊິ່ງຖືວ່າ: ເປັນຄັ້ງທຳອິດຂອງ ການຈັດກິດຈະກຳໃນຮູບແບບດັ່ງກ່າວຢູ່ ສປປ ລາວ ໂດຍໃນກິດຈະກຳດັ່ງກ່າວແມ່ນການເຜີຍແຜ່ຂໍ້ຄວາມກ່ຽວກັບ ການດຳເນີນງານແກ້ໄຂບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ເຊິ່ງເປັນການປຸກຈິດສຳນຶກກ່ຽວກັບ SDG 13. ກິດຈະກຳດັ່ງກ່າວ ແມ່ນຈັດໂດຍການເປັນຄູ່ຮ່ວມງານກັບບໍລິສັດເຕັ້ນລາວບັ້ງໄຟ ແລະ ອົງການ CUSO ສາກົນ ໂດຍມີການສະແດງລະຄອນຕາມທ້ອງຖະໜົນຕາມທ້ອງເລື່ອງນິທານລາວຈາກສັດຕະວັດທີ 16 ເລື່ອງ: ເຄືອເຂົາກາດ ໂດຍມີເນື້ອເລື່ອງກ່ຽວກັບຄູ່ຜົວເມຍເຖົ້າທີ່ເສຍສະຫຼະຊີບເພື່ອຊ່ວຍມະນຸດຊາດດ້ວຍການຕັດເຄືອຍັກທີ່ບັງແສງຕາເວັນ ປຽບດັ່ງໄພຄຸກຄາມຕໍ່ການມີຊີວິດລອດຂອງໂລກ. ການສະແດງເລື່ອງດັ່ງກ່າວ ແມ່ນຖ່າຍທອດເລື່ອງຜ່ານການເຕັ້ນສະໄໝໃໝ່ ໂດຍມີຈຳນວນນັກເຕັ້ນຄ່ອຍໆເຂົ້າຮ່ວມການສະແດງ ຈົນມີຜູ້ຮ່ວມເຕັ້ນທັງໝົດປະມານ 50 ຄົນ ຖື ເປັນການສ້າງຄວາມປະຫຼາດໃຈຕໍ່ຜູ້ກາຍທາງໄປມາຕາມແຄມຂອງ ທີ່ນະຄອນຫຼວງວຽງຈັນ ດ້ວຍການເຕັ້ນໃນທ່າເຕັ້ນພ້ອມພຽງກັນ. ຂໍ້ຄວາມກ່ຽວກັບການດຳເນີນການແກ້ໄຂບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ໄດ້ສື່ສານ ຜ່ານປ້າຍແບນເນີ, ໂປດສ໌ກ໋າດ ແລະ ໜ້າສະເພາະຢູ່ເວັບໄຊ໋ຂອງອົງການ ສປຊ ປະຈຳ ສປປ ລາວ ເຊິ່ງໄດ້ອະທິບາຍ ກ່ຽວກັບວິທີແກ້ໄຂບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດທີ່ບຸກຄົນສາມາດເຮັດໄດ້ດ້ວຍຕົນເອງ. ວີດີໂອ ກ່ຽວກັບກິດຈະກຳໂຮມຊຸມນຸມດ່ວນແບບແຟດສ໌ມ໋ອບ ທີ່ຜະລິດໂດຍກຸ່ມສື່ສານຂອງອົງການ ສປຊ (UNCG) ແມ່ນໄດ້ ເຜີຍແຜ່ຢ່າງກ້ວາງຂວາງໃນໂລກສື່ອ໋ອນລາຍ.

ກຸ່ມສື່ສານຂອງອົງການ ສປຊ ໄດ້ຈັດກອງປະຊຸມຖະແຫຼງຂ່າວກ່ຽວກັບ SDGs ໃຫ້ສື່ມວນຊົນລາວ, ພ້ອມທັງໄດ້ຈັດການສົນທະນາກ່ຽວກັບ SDG ທີ່ເວທີສົນທະນາໄວໜຸ່ມ ແລະ ໄດ້ປຸກຈິດສຳນຶກຕາມສະຖານທີ່ສາທາລະນະຕ່າງໆ ໂດຍມີກິດຈະກຳສ້າງສັນໃນຫົວຂໍ້ “ສັດຍົນທ່ານສູ່ອະນາຄົດທີ່ສົດໃສ.”

ຢູ່ເວັບໄຊ໋ຂອງອົງການ ສປຊ ປະຈຳ ສປປ ລາວ, ກຸ່ມສື່ສານຂອງອົງການ ສປຊ ຍັງໄດ້ພິມເຜີຍແຜ່ໜ້າສະເພາະກ່ຽວກັບ ແຕ່ລະ SDG ພາຍໃຕ້ສະພາບເງື່ອນໄຂຂອງ ສປປ ລາວ. ທີ່ຈິງແລ້ວ, ໜ້າສະໜອງຂໍ້ມູນທີ່ກ່າວເຖິງນີ້ ແມ່ນມີການເຂົ້າຢ້ຽມຊົມຫຼາຍສຸດໃນເວັບໄຊ໋ຂອງອົງການ ສປຊ ເນື່ອງຈາກຜູ້ນຳໃຊ້ ນັບມື້ນັບຄົ້ນຫາເນື້ອໃນກ່ຽວກັບ SDG ຫຼາຍຂຶ້ນ ໃນໄລຍະທຳອິດຂອງການຈັດຕັ້ງປະຕິບັດວາລະການພັດທະນາແບບຍືນຍົງ.

ຜະລິດຕະພັນສື່ພາບ ກໍ່ນັບມື້ນັບໄດ້ຮັບການຜະລິດຫຼາຍຂຶ້ນ ໂດຍກຸ່ມສື່ສານຂອງອົງການ ສປຊ ໃນໄລຍະປີ 2016 ເຊິ່ງໃນນັ້ນລວມທັງຊຸດຮູບຖ່າຍ SDGs ທັງ 18 ເປົ້າໝາຍ.

ພ້ອມນັ້ນ, ຍັງມີຫຼາຍຊຸດກິດຈະກຳທີ່ໄດ້ຮັບການສະໜັບສະໜູນຈາກພາກສ່ວນຕ່າງໆ, ໃນນັ້ນລວມມີ: ກິດຈະກຳສະເຫຼີມສະຫຼອງວັນມະນຸດສະທຳສາກົນ ທີ່ນຳໂດຍທະນາຄານ RHB, ກິດຈະກຳທີ່ລິເລີ່ມໂດຍທະນາຄານ ANZ ທີ່ພົວ ພັນກັບຍິງຮັກຍິງ, ຮັກຮ່ວມເພດ, ຮັກຮ່ວມສອງເພດ, ຜູ້ແປງເພດ, ແລະ ຜູ້ຢູ່ລະຫວ່າງເພດຍິງ ແລະ ຊາຍ ຫຼື ອິນເຕີເຊັກສ໌ (ໝາຍເຖິງຜູ້ທີ່ເກີດມາພ້ອມອະໄວຍະວະສືບພັນທີ່ບໍ່ສາມາດລະບຸໄດ້ທາງສະລິຍະວິທະຍາວ່າເປັນຍິງ ຫຼື ຊາຍແທ້), ຕະຫຼອດເຖິງກິດຈະກຳສະເຫຼີມສະຫຼອງສັບປະດາຫຼຸດຜ່ອນຄວາມທຸກຍາກ/ວັນອາຫານໂລກຢູ່ແຂວງໄຊຍະບູລີ. ການວາງສະ

> *“ວັນ ສປຊ ຍັງຂີດໝາຍດ້ວຍເຫດການສຳຄັນຄື: ອົງການ ສປຊ ໃນຍຸກດີຈີຕໍ ທີ່ອະທິບາຍ ແລະ ເນັ້ນໜັກສາຍເຊື່ອມໂຍງລະຫວ່າງການພັດທະນາແບບຍືນຍົງ ກັບ ເຕັກໂນໂລຊີໃໝ່ໆ.”*

ແດງພາຍໃຕ້ຫົວຂໍ້ການພັດທະນາ ໃນໄລຍະການຈັດກອງປະຊຸມໂຕະມົນປະຈຳປີເມື່ອເດືອນພະຈິກຢູ່ແຂວງວຽງຈັນ ໄດ້ມີການສະແດງຮູບພາບ “ເຮັດວຽກຮ່ວມກັນເພື່ອ ສປປ ລາວ”, ຮູບເງົາສະເໝືອນຈິງຂອງອົງການ UNDP ໃນຊື່ເລື່ອງ “ລະເບີດຢູ່ໃຕ້ດິນ”, ບ່ອນສະແດງຮູບຖ່າຍແບບ 360 ອົງສາ, ກະຕູບກ່ຽວກັບເດັກຍິງຂອງອົງການ UNFPA ໃນຊື່ເລື່ອງ: ນ້ອຍ ເຊິ່ງເປັນຕົວແທນໃຫ້ໄວໜຸ່ມຍິງທຸກຄົນຢູ່ ສປປ ລາວ. ກຸ່ມສື່ສານອົງການ ສປຊ ຍັງໄດ້ໃຫ້ການສະໜັບສະໜູນກິດຈະກຳຕ່າງໆທີ່ອົງການ ສປຊ ເປັນຜູ້ນຳພາຈັດຕັ້ງປະຕິບັດໃນໄລຍະ ສປປ ລາວ ເປັນເຈົ້າພາບຈັດກອງປະຊຸມສຸດຍອດຜູ້ນຳອາຊຽນ ລະຫວ່າງ ວັນທີ 6-8 ກັນຍາ ທີ່ນະຄອນຫຼວງວຽງຈັນ ເຊິ່ງລວມທັງການເຜີຍແຜ່ SDG 18 ທີ່ເປັນເປົ້າໝາຍສະເພາະຂອງລາວຄື: “ຊີວິດທີ່ປອດໄພຈາກລບຕ” ແລະພິທີລົງນາມໃນຂອບການເປັນຄູ່ຮ່ວມງານລະຫວ່າງອົງການ ສປຊ ແລະ ສປປ ລາວ ພາຍໃຕ້ການເປັນສັກຂີພິຍານຂອງທ່ານເລຂາທິການໃຫຍ່ອົງການ ສປຊ ພະນະທ່ານ ບັນ ຄີມູນ.

ກ່ອນຈະຮອດກອງປະຊຸມສຸດຍອດຜູ້ນຳອາຊຽນ, ກຸ່ມສື່ສານຂອງອົງການ ສປຊ ໄດ້ດຳເນີນຄວາມພະຍາຍາມຮ່ວມ ແລະ ຍູ້ດັນເພື່ອເອົາສື່ຕ່າງປະເທດເຂົ້າມີສ່ວນຮ່ວມ ຜ່ານຊຸດການນຳສະເໜີເລື່ອງ ກໍ່ຄື ການສະໜອງຊຸດຂໍ້ມູນຂ່າວສານ ໃຫ້ບັນດາສຳນັກງານໃຫຍ່ຂອງສື່ຂ່າວຕ່າງປະເທດ ຕະຫຼອດໄລຍະການດຳເນີນກອງປະຊຸມສຸດຍອດຜູ້ນຳອາຊຽນ - ເຊິ່ງຄວາມພະຍາຍາມທັງໝົດ ໄດ້ນຳໄປສູ່ການມີບ່ອນຕິດຕໍ່ກັບສື່ຕ່າງໆເປັນຈຳນວນຫຼວງຫຼາຍ ເຊິ່ງບໍ່ເຄີຍມີມາກ່ອນ

> *“ອີກກິດຈະກຳໜຶ່ງທີ່ໄດ້ຈັດຕັ້ງປະຕິບັດ ມ່ນການໂຮມຊຸມນຸມດ່ວນແບບແຟດສ໌ມອບ ເຊິ່ງຖືວ່າ: ເປັນຄັ້ງທຳອິດຂອງ ການຈັດກິດຈະກຳໃນຮູບແບບດັ່ງກ່າວຢູ່ ສປປ ລາວ ໂດຍໃນກິດຈະກຳດັ່ງກ່າວແມ່ນການເຜີຍແຜ່ຂໍ້ຄວາມກ່ຽວກັບ ການດຳເນີນງານແກ້ໄຂບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ ເຊິ່ງເປັນການປູກຈິດສຳນຶກກ່ຽວກັບ SDG 13. ກິດຈະກຳດັ່ງກ່າວ ແມ່ນມີການສະແດງລະຄອນຕາມທ້ອງຖະໜົນ, ຖ່າຍທອດເລື່ອງຜ່ານການ ເຕັ້ນສະໄໝໃໝ່ ໂດຍມີຈຳນວນນັກເຕັ້ນຄ່ອຍໆເຂົ້າຮ່ວມການສະແດງ ຈົນມີຜູ້ຮ່ວມເຕັ້ນທັງໝົດປະມານ 50 ຄົນ ຖື ເປັນການສ້າງຄວາມປະຫຼາດໃຈຕໍ່ຜູ້ກາຍທາງໄປມາ ຕາມແຄມຂອງ ທີ່ນະຄອນຫຼວງວຽງຈັນ ດ້ວຍການເຕັ້ນໃນທ່າເຕັ້ນ ພ້ອມພຽງກັນ.”*

ໃນປະຫວັດສາດ, ພ້ອມນັ້ນຍັງມີຂ່າວຈາກຫຼາຍສຳນັກທີ່ກ່າວເຖິງອົງການ ສປຊ ຢູ່ ສປປ ລາວ ໃນນັ້ນລວມມີ: ສຳນັກຂ່າວຟຣານສ໌ 24 (France 24), ຣ໋ອຍເຕີສ໌ (Reuters), ແອດໂຊຊີເອັດເຕັດ ແພສ໌ (Associated Press) ແລະ ຊ່ອງ CCTV ຂອງ ສປ ຈີນ, ກໍ່ຄື ບັນດາບົດຄວາມຕ່າງໆທີ່ກຸ່ມສື່ສານອົງການ ສປຊ ໄດ້ສະໜອງຂໍ້ມູນຄວາມເປັນມາກ່ຽວກັບກອງປະຊຸມໃຫ້. ໃນ ໄລຍະປີ 2016, ໄດ້ມີການພິມເຜີຍແຜ່ບົດຄວາມຫຼາຍກ່ວາ 80 ບົດຄວາມ ຜ່ານສຳນັກຂ່າວສື່ພິມແຫ່ງຊາດທັງເຈັດແຫ່ງ ໃນຫົວຂໍ້ຕ່າງໆທີ່ພົວພັນໂດຍກົງກັບການປະກອບສ່ວນຂອງອົງການ ສປຊ ເຂົ້າໃນວຽກງານການພັດທະນາຂອງ ສປປ ລາວ ແລະ ມີອີກຫຼາຍບົດຄວາມທີ່ທາງທີມງານສື່ສານຂອງອົງການ ສປຊ ໄດ້ມີສ່ວນຮ່ວມໃນທາງອ້ອມ. ໂທລະພາບແຫ່ງຊາດລາວ ມີຢ່າງໜ້ອຍຫ້າບົດຂ່າວທີ່ເປັນການສຳພາດເພື່ອນຮ່ວມງານຈາກເບື້ອງອົງການ ສປຊ.

ໃນປີ 2016, ມີການເພີ່ມຂຶ້ນຂອງຜູ້ນຳໃຊ້ສື່ດີຈີຕ໋ອລຂອງອົງການ ສປຊ ຢູ່ ສປປ ລາວ:

**ເວັບໄຊ໋:** ມີການເຂົ້າຢ້ຽມຊົມ 4.499 ຄັ້ງຕໍ່ເດືອນໃນປີ 2016 (ທຽບໃສ່ 3.398 ຄັ້ງໃນປີ 2015). ເວລາສະເລ່ຍຂອງການເຂົ້າຢ້ຽມຊົມ 1:44 ນາທີ, ຫາກເກີນ 1:00 ນາທີ ຖືວ່າ: ເປັນເວລາສະເລ່ຍທີ່ດີສຳລັບເວັບໄຊ໋ທີ່ເຜີຍແຜ່ຂໍ້ມູນຂ່າວສານ. ບັນດາໜ້າຢູ່ດ້ານເທິງຂອງເວັບໄຊ໋: ໜ້າຫຼັກ (Home), ໜ້າຂໍ້ມູນກ່ຽວກັບຕຳແໜ່ງງານຫວ່າງ (vacancies), ໜ້າທີ່ສະໜອງພາບລວມກ່ຽວກັບເປົ້າໝາຍພັດທະນາແບບຍືນຍົງ (SDG overview).

**ແຟດສ໌ບຸກ:** ມີຜູ້ກົດມັກ (likes) 4.791 ຄັ້ງ, ຈາກ 3.810 ຄັ້ງອີງຕາມຂໍ້ມູນວັນທີ 1 ມັງກອນ 2016. ຕົວເລກກົດມັກ ສູງສຸດ: 51.900 ຄັ້ງ ຕາມການປະກາດໃນເວລາການມາຢ້ຽມຢາມເຮັດວຽກຢູ່ ສປປ ລາວຂອງ ທ່ານເລຂາທິການໃຫຍ່ ອົງການ ສປຊ, ທ່ານ ບັນ ຄີ-ມູນ (ຕົວເລກກົດມັກສູງສຸດໃນປີ 2015: 30.205).

**ທະວິດເຕີ:** ມີຜູ້ຕິດຕາມ 352 ຄົນ, ເພີ່ມຈາກ 65 ຄົນຕາມຂໍ້ມູນໃນວັນທີ 1 ມັງກອນ 2016. ບັນຊີນຳໃຊ້ທະວິດເຕີຂອງ ອົງການ ສປຊ ລາວ ແມ່ນເປີດນຳໃຊ້ເມື່ອວັນທີ 1 ກັນຍາ 2015. ທະວິດທີ່ໄດ້ຮັບຄວາມສົນໃຈສູງສຸດ: ງານດີຈີຕ໋ອລ ສປຊ ທີ່ຈັດໃນວັນສະເຫຼີມສະຫຼອງວັນສ້າງຕັ້ງ ສປຊ 2016 ມີຄົນໃຊ້ທະວິດເຕີເຫັນ 5.045 ຄັ້ງ (ຕົວເລກຄົນໃຊ້ທະວິດ ເຕີເຫັນທະວິດຂອງ ສປຊ ສູງສຸດໃນປີ 2015: 665 ຄັ້ງ).

**ເອັກສ໌ໂປດສ໌ເຊີ (Exposure):** ຮູບພາບເລົ່າເລື່ອງການມາຢ້ຽມຢາມຂອງ ທ່ານ ບັນ ຄີມູນ ໄດ້ຮັບການເຂົ້າເບິ່ງ 1.083 ຄັ້ງ. (2015: ຮູບພາບເລົ່າເລື່ອງງານ ຍູເອັນ ບລູ ປະຕູໄຊ (ງານອົງການ ປສຊ ປ່ຽນປະຕູໄຊເປັນສີຟ້າ) ໄດ້ຮັບການເຂົ້າເບິ່ງ 309 ຄັ້ງ. ນັບແຕ່ນັ້ນມາ, ຈຳນວນການເຂົ້າເບິ່ງຮູບພາບເລົ່າເລື່ອງດັ່ງກ່າວ ໄດ້ເພີ່ມຂຶ້ນເປັນ 813).

ກຸ່ມສື່ສານອົງການ ສປຊ ໄດ້ສ້າງສຳເລັດຍຸດທະສາດສື່ສານຮ່ວມຂອງອົງການຕ່າງໆໃນລະບົບ ສປຊ ຢູ່ ສປປ ລາວ ສຳລັບໄລຍະ 2017-2021 ເພື່ອຊ່ວຍການຈັດຕັ້ງປະຕິບັດຂອບການເປັນຄູ່ຮ່ວມງານລະຫວ່າງ ສປປ ລາວ ແລະອົງການ ສປຊ ແລະ ຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມງານເພື່ອການຮ່ວມມືພັດທະນາທີ່ມີປະສິດທິຜົນ.

## ບັນດາຍຸດທະສາດໃນອະນາຄົດ

ສິ່ງສຳຄັນທີ່ໄດ້ຈາກການເຮັດວຽກໃນປີ 2016 ຂອງກຸ່ມສື່ສານອົງການ ສປຊ ມີຢູ່ວ່າ: ຈຳເປັນຕ້ອງມີຄວາມພະຍາຍາມ ທີ່ເປັນເອກະພາບກັນລະຫວ່າງພະນັກງານສື່ສານຂອງບັນດາອົງການຕ່າງໆໃນລະບົບ ສປຊ ເພື່ອຈັດງານ ແລະ ກິດຈະ ກຳຕ່າງໆໃຫ້ອອກມາໃນຮູບແບບທີ່ມີຫົວຄິດສ້າງສັນ. ທີມງານສື່ສານ ຍັງຕ້ອງອາໄສການສະໜັບສະໜູນເພີ່ມສູງຂຶ້ນຈາກບັນດາອົງການຕ່າງໆໃນລະບົບ ສປຊ.

ຄວາມສຳເລັດຂອງງານຕ່າງໆໃນປີ 2016 ໄດ້ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການເອົາມວນຊົນລາວເຂົ້າມີສ່ວນຮ່ວມກັບງານ - ຍິ່ງສ້າງສັນ, ເປັນນາວະກຳໃໝ່, ແລະເປັນຮູບແບບງານທີ່ຄົນທົ່ວໄປຊື່ນຊົມຊາບຊຶມງ່າຍ, ຍິ່ງເຮັດ ໃຫ້ເກີດຜົນປະໂຫຍດຕໍ່ການສ້າງຄວາມເຂົ້າໃຈລວມຕໍ່ບັນຫາຕ່າງໆທີ່ອົງການ ສປຊ ກຳລັງປະກອບສ່ວນຊ່ວຍແກ້ໄຂ ແລະ ຕໍ່ຄວາມສຳເລັດຕ່າງໆຂອງແຜນງານໃນລະດັບຊາດທີ່ອົງການ ສປຊ ໄດ້ໃຫ້ການຊ່ວຍເຫຼືອ. ຮູ້ສຶກໄດ້ວ່າໄດ້ຮັບ ທັດສະນະຄະຕິຕອບຮັບເປັນຢ່າງດີຈາກມວນຊົນ, ມີຄວາມກະຫາຍຢາກຊອກຮູ້ເພີ່ມກ່ຽວກັບອົງການ ສປຊ ໂດຍສະ ເພາະໃນກຸ່ມໄວໜຸ່ມ. ຄວນໃຊ້ປະໂຫຍດຈາກຈັງວະຫວະທ່າແຮງດັ່ງກ່າວໂດຍການຈັດຊຸດກິດຈະກຳ ແລະ ການໂຄສະ ນາຕ່າງໆທີ່ເອົາມວນຊົນເຂົ້າມີສ່ວນຮ່ວມ.

ກ່ຽວແກ່ກັບມວນຊົນລາວ, ຈຳເປັນຕ້ອງສ້າງສາຍເຊື່ອມໂຍງທີ່ດີກ່ວາເດີມລະຫວ່າງສື່ທີ່ເຊື່ອມໂຍງກັບປັດໄຈຕ່າງໆທີ່ຂັບເຄື່ອນສັງຄົມລາວ. ຈຳເປັນຕ້ອງເພີ່ມການມີສ່ວນຮ່ວມຂອງພະນັກງານສື່ສານ ແລະ ນັກຂ່າວຈາກບັນດາສຳນັກຂ່າວລະດັບຊາດຂອງປະເທດ. ປີ 2017 ຈະເປັນປີທີ່ເຫັນກຸ່ມສື່ສານຂອງອົງການ ສປຊ ເພີ່ມການເຂົ້າຮ່ວມໃນການສົນທະ ນາບັນຫາຕ່າງໆທີ່ເປັນຄວາມສົນໃຈຂອງສັງຄົມລາວຫຼາຍຂຶ້ນ.

ງານກິດຈະກຳທີ່ເອົາມວນຊົນເຂົ້າມີສ່ວນຮ່ວມ ແລະເນື້ອໃນທີ່ສື່ສານຜ່ານພາບ ແທນການສື່ສານດ້ວຍຄຳເວົ້າ ຈະເປັນໃຈກາງການສື່ສານສຳລັບປີ 2017.



# ການຮ່ວມປະຕິບັດງານ

ໃນປີ 2016, ບັນດາອົງການຕ່າງໆຂອງລະບົບ ສປຊ ໄດ້ສືບຕໍ່ຍົກສູງການຮ່ວມມືພາຍໃນເພື່ອປັບປຸງຂົງເຂດການເຄື່ອນໄຫວວຽກງານຮ່ວມ. ພາຍໃຕ້ການນໍາພາຂອງອົງການ WFP, ທີມງານຄຸ້ມຄອງການຮ່ວມປະຕິບັດງານ (OMT) ເຊິ່ງລວມທັງສາມະຊິກຂອງຄະນະກໍາມະການສະເພາະກິດ ໄດ້ຈັດກອງປະຊຸມຄັ້ງປະຖົມມະເລີກຂອງທີມງານຄຸ້ມຄອງ ການຮ່ວມປະຕິບັດງານຂື້ນໃນເດືອນກັນຍາ 2016. ໜຶ່ງໃນຈຸດປະສົງຂອງກອງປະຊຸມດັ່ງກ່າວ ແມ່ນເພື່ອລິເລີ່ມການ ສ້າງຍຸດທະສາດວ່າດ້ວຍການຮ່ວມປະຕິບັດງານລະຫວ່າງອົງການຕ່າງໆໃນລະບົບ ສປຊ ເຊິ່ງຖືເປັນກະດູກສັນຫຼັງຂອງ ເສົາຄໍ້າ 'ການເຄື່ອນໄຫວເປັນໜຶ່ງດຽວ' ທີ່ກໍານົດໄວ້ພາຍໃນລະບຽບຄຸ້ມຄອງການເຄື່ອນໄຫວທີ່ເປັນມາດຕະຖານ ຂອງ ກຸ່ມພັດທະນາອົງການ ສປຊ ສໍາລັບການສະໜອງການຊ່ວຍເຫຼືອໃນຖານະເປັນອົງການ ສປຊ ດຽວ - ໂດຍມີຈຸດປະສົງເພື່ອສືບຕໍ່ປັບປຸງແລະທັນການເຄື່ອນໄຫວວຽກງານຕ່າງໆຂອງອົງການ ສປຊ ໃຫ້ກະທັດຮັດ ແລະ ເປັນເອກະພາບກັນທົ່ວລະບົບ ໃນຂະນະດຽວກັນກໍ່ສືບຕໍ່ປັບປຸງຄຸນນະພາບ, ປະສິດທິຜົນ ແລະ ການປະຢັດຄ່າໃຊ້ຈ່າຍຂອງການຊ່ວຍເຫຼືອໃນການຈັດຕັ້ງປະຕິບັດຂອບການເປັນຄູ່ຮ່ວມງານລະຫວ່າງ ສປປ ລາວ ແລະ ອົງການ ສປຊ, ສໍາລັບໄລຍະ 2017 - 2021.

ໃນການສ້າງຍຸດທະສາດວ່າດ້ວຍການຮ່ວມປະຕິບັດງານລະຫວ່າງອົງການຕ່າງໆໃນລະບົບ ສປຊ, ທາງທີມ ງານຄຸ້ມຄອງການຮ່ວມປະຕິບັດງານ ໄດ້ດໍາເນີນການວິເຄາະຂະບວນການເຮັດວຽກຕ່າງໆຢ່າງຖ້ວນຖີ່, ການວິເຄາະ ຜົນໄດ້-ຜົນເສຍ ແລະ ໄດ້ດໍາເນີນການຈັດບູລິມະສິດ ເຊິ່ງໄດ້ຊ່ວຍນໍາສະເໜີບັນດາແນວຄວາມຄິດໃໝ່ໆເພື່ອເຮັດ ແນວໃດໃຫ້ມີການເຄື່ອນໄຫວວຽກງານຕ່າງໆເປັນເອກະພາບກັນຫຼາຍຂື້ນກ່ວາເກົ່າ ດ້ວຍການລຶບລ້າງການມີຂະບວນ ການທັບຊ້ອນ, ນໍາໃຊ້ການຈັດຊື້ຈັດຈ້າງລວມເປັນເອກະພາບທົ່ວອົງການ ສປຊ ແລະ ເຮັດໃຫ້ມີການປະຢັດຈາກຂະ ໜາດໃຫ້ຫຼາຍທີ່ສຸດ. ການວິເຄາະຂະບວນການເຮັດວຽກຂອງລະບົບ ສປຊ ໄດ້ເປີດເຜີຍຂໍ້ມູນໃຫ້ຮູ້ວ່າ: ໃນໄລຍະແຜນ ງານ 5 ປີ ມີທ່າແຮງທີ່ສາມາດປະຢັດຄ່າໃຊ້ຈ່າຍໄດ້ປະມານ US$ 2 ລ້ານ, ເຊິ່ງໃນນັ້ນ US$ 1 ລ້ານ ແມ່ນຜ່ານບັນດາໂຄງການລິເລີ່ມໃໝ່ຕ່າງໆ .

ເພື່ອໃຫ້ບັນລຸທ່າແຮງບົ່ມຊ້ອນດັ່ງກ່າວ, ທາງ OMT ໄດ້ເຫັນດີເປັນເອກະພາບທີ່ຈະສຸມ ຍຸດທະສາດວ່າດ້ວຍການຮ່ວມປະຕິບັດງານລະຫວ່າງອົງການຕ່າງໆ ໃນລະບົບ ສປຊ ໃສ່ 5 ຜົນໄດ້ຮັບຍຸດທະສາດຄື:

- ບັນດາອົງການຕ່າງໆໃນລະບົບ ສປຊ ມີການຈັດຊື້ຈັດຈ້າງເອກະພາບທີ່ມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂື້ນກ່ວາເດີມ.
- ບັນດາອົງການຕ່າງໆໃນລະບົບ ສປຊ ມີການປະສານງານດີຂື້ນກ່ວາເກົ່າໃນການບັນຈຸພະນັກງານ ແລະ ການ ພັດທະນາຄວາມຮູ້ຄວາມສາມາດຂອງວິຊາການ.
- ບັນດາອົງການຕ່າງໆໃນລະບົບ ສປຊ ໄດ້ຮັບຜົນປະໂຫຍດຈາກບໍລິການ ICT ທີ່ຄຸນະພາບຖືກປັບປຸງ ແລະ ປະຢັດຕົ້ນທຶນ.
- ບັນດາອົງການຕ່າງໆໃນລະບົບ ສປຊ ມີວຽກງານການເງິນເອກະພາບທີ່ມີການປະສານງານດີຂື້ນກ່ວາເກົ່າ ແລະ ປະຢັດຄ່າໃຊ້ຈ່າຍ.
- ບັນດາອົງການຕ່າງໆໃນລະບົບ ສປຊ ຮ່ວມໃຊ້ສິ່ງອໍານວຍຄວາມສະດວກ ແລະ ພາລາທິການໂດຍມີການປະສານງານທີ່ດີຂື້ນກ່ວາເດີມ ແລະ ປະຢັດຄ່າໃຊ້ຈ່າຍ ເຊິ່ງລວມທັງຜ່ານການຂະຫຍາຍຫ້ອງການໃນສໍານັກງານອົງການ ສປຊ ປະຈໍາ ສປປ ລາວ.

ຕົວຢ່າງຂອງບາງໂຄງການລິເລີ່ມໃໝ່ພາຍໃຕ້ຜົນໄດ້ຮັບຍຸດທະສາດທີ່ກ່າວເຖິງຂ້າງເທິງນັ້ນ ລວມມີ: ສັນຍາຮ່ວມໄລຍະຍາວສໍາລັບການແຈ້ງຜ່ານພາສີ (ຄາດຄະເນວ່າ: ຊ່ວຍປະຢັດຄ່າໃຊ້ຈ່າຍໄດ້ຫຼາຍກ່ວາ US$ 100.000); ການໃຊ້ ພາຫານະຮ່ວມ (ຄາດຄະເນວ່າ: ຊ່ວຍປະຢັດຄ່າໃຊ້ຈ່າຍໄດ້ຫຼາຍກ່ວາ US$ 150.000); ສັນຍາຮ່ວມໄລຍະຍາວ ສໍາ ລັບຄ່າເຊົ່າອິນເຕີເນັດ (ຄາດຄະເນວ່າ: ຊ່ວຍປະຢັດຄ່າໃຊ້ຈ່າຍໄດ້ຫຼາຍກ່ວາ US$ 200.000); ການຂະຫຍາຍຫ້ອງ ການພາຍໃນສໍານັກງານອົງການ ປສຊ (ຄາດຄະເນວ່າ: ຊ່ວຍປະຢັດຄ່າໃຊ້ຈ່າຍໄດ້ຫຼາຍກ່ວາ US$ 250.000); ແລະ ໃຊ້ບໍລິການຂອງທະນາຄານທຸລະກິດດຽວກັນສໍາລັບການແລກປ່ຽນເງິນຕາ (ຄາດຄະເນວ່າ: ຊ່ວຍປະຢັດຄ່າໃຊ້ຈ່າຍ ໄດ້ຫຼາຍກ່ວາ US$ 300.000).

6 ອົງການໃຫຍ່ສຸດໃນລະບົບ ສປຊ ຄື: ອົງການ FAO, UNDP, UNFPA, UNICEF, WFP ແລະ ອົງການ WHO ໄດ້ເລີ່ມທົດລອງການຮ່ວມໃຊ້ຍານພາຫະນະ ໃນຖານະເປັນສ່ວນໜຶ່ງຂອງຄວາມພະຍາຍາມໃນລະດັບສາກົນພາຍໃນລະບົບ ສປຊ ທີ່ຊຸກຍູ້ໃຫ້ບັນດາອົງການຕ່າງໆໃນລະບົບ ສປຊ ນໍາໃຊ້ຍານພາຫະນະຮ່ວມກັນ ເພື່ອຮັບປະກັນໃຫ້ການເດີນທາງຂອງພະນັກງານ ສປຊ ມີການປະສານງານກັນດີຂື້ນກ່ວາເກົ່າ, ປະຢັດຄ່າໃຊ້ຈ່າຍ, ມີຄວາມປອດໄພກ່ວາເກົ່າ ແລະ ເປັນມິດກັບສິ່ງແວດລ້ອມຫຼາຍຂື້ນກ່ວາເກົ່າ. ລະບົບໃໝ່ດັ່ງກ່າວ ຕິດຕາມການເດີນທາງຂອງຍານພາຫະນະໃນເວລາເດີນທາງຕົວຈິງ ຂະນະທີ່ຂະບວນການຕ່າງໆທີ່ມີໃນຫ້ອງການຄຸ້ມຄອງອະນຸຍາດໃຫ້ສາມາດເຮັດການວິເຄາະ ເບື້ອງເລິກຕໍ່ການນໍາໃຊ້ຍານພາຫະນະ ແລະ ຄວາມໄວຂອງການຂັບຂີ່ ເນັ້ນໜັກໃຫ້ເຫັນກໍລະນີຄວາມສ່ຽງສູງເຊັ່ນ: ການ ເລັ່ງໄວເກີນຂອບເຂດ, ການເບກເກີນຂອບເຂດ ແລະ ອຸປະຕິເຫດຕ່າງໆ. ທີມງານຮັບຜິດຊອບ ໄດ້ເຮັດວຽກຢ່າງຫ້າວ ຫັນໃນການສ້າງໂຄງການທົດລອງທົ່ວໂລກ, ສະໜອງຄໍາແນະນໍາກ່ຽວກັບການປັບປຸງລະບົບເພີ່ມເຕີມ, ເຊັ່ນ: ການເຊື່ອມກັບໄກກູ້ຕົ້ນທຶນເຂົ້າໃນບັນດາອົງການຕ່າງໆພາຍ

> *ໃນການສ້າງຍຸດທະສາດວ່າດ້ວຍການຮ່ວມປະຕິບັດງານລະຫວ່າງອົງການຕ່າງໆ ໃນລະບົບ ສປຊ, ການວິເຄາະຂະບວນການເຮັດວຽກຂອງລະບົບ ສປຊ ໄດ້ເປີດເຜີຍຂໍ້ມູນໃຫ້ຮູ້ວ່າ: ໃນໄລຍະແຜນງານ 5 ປີ ມີທ່າແຮງທີ່ສາມາດປະຢັດຄ່າໃຊ້ຈ່າຍໄດ້ປະມານ US$ 2 ລ້ານ, ເຊິ່ງໃນນັ້ນ US$ 1 ລ້ານ ແມ່ນຜ່ານບັນດາໂຄງການລິເລີ່ມໃໝ່ຕ່າງໆ.*

ໃນລະບົບ ສປຊ. ການວິເຄາະໂດຍສົມທຽບຕໍ່ກິໂລແມັດເດີນທາງ/ເດືອນໃນໄລຍະກ່ອນ ແລະ ຫຼັງການຮ່ວມໃຊ້ຍານພາຫານະປະເມີນໃຫ້ເຫັນວ່າ: ມີການຫຼຸດລົງຫຼາຍກ່ວາ 10 ສ່ວນຮ້ອຍ. ໄດ້ຂະຫຍາຍໄລຍະຈັດຕັ້ງປະຕິບັດໂຄງການທົດລອງດັ່ງກ່າວຮອດເຄິ່ງປີທຳອິດຂອງປີ 2017 ເພື່ອເກັບກຳຂໍ້ມູນເພີ່ມເຕີມສຳລັບການວິເຄາະຜົນດີ-ຜົນເສຍຂອງທ່າແຮງການຮ່ວມໃຊ້ຍານພາຫະນະແບບເຕັມກຳລັງ.

ທີມງານຄຸ້ມຄອງການຮ່ວມປະຕິບັດງານ ຍັງໄດ້ຕໍ່ສັນຍາໄລຍະຍາວກັບບໍລິສັດນຳທ່ຽວ ແລະ ບໍລິສັດນ້ຳມັນເຊື້ອໄຟ ລາວ ເພື່ອອຳນວຍຄວາມສະດວກໃຫ້ບັນດາອົງການຕ່າງໆໃນລະບົບ ສປຊ ສາມາດສືບຕໍ່ການກະກຽມການເດີນທາງທີ່ມີປະສິດທິພາບ ແລະ ຊື້ນ້ຳມັນເຊື້ອໄຟໂດຍໄດ້ຮັບການຍົກເວັ້ນອາກອນ. ພ້ອມນັ້ນ, ຍັງໄດ້ມີການລົງນາມໃນສັນຍາໄລ ຍະຍາວສະບັບໃໝ່ກ່ຽວກັບບໍລິການອິນເຕີເນັດ ແລະ ໂປຣແກມ ICT ຕ່າງໆ ຮ່ວມກັບຜູ້ສະໜອງບໍລິການອິນເຕີເນັດ ເປັນຜົນເຮັດໃຫ້ສາມາດຫຼຸດຜ່ອນຄ່າໃຊ້ຈ່າຍທີ່ຄາດຄະເນໄວ້ສຳລັບບັນດາອົງການຕ່າງໆໃນລະບົບ ສປຊ ໄດ້ຢ່າງຫຼວງຫຼາຍ.

ການປະເມີນໂດຍພະແນກບໍລິການການແພດຂອງອົງການ ສປຊ ທີ່ນິວຢອກ ໄດ້ແນະນຳໃຫ້ສືບຕໍ່ໃຫ້ບໍລິການຄລີນິກຍູເອັນ (ຫ້ອງກວດພະຍາດຂອງອົງການ ສປຊ) ໂດຍໄດ້ສະໜອງທາງເລືອກສຳລັບຕົວແບບໃນການສະໜອງທຶນເພີ່ມເພື່ອແກ້ໄຂຄ່າໃຊ້ຈ່າຍກ່ຽວຂ້ອງຕ່າງໆ. ໂດຍປະຕິບັດຕາມຄຳແນະນຳຂອງທີມງານຄຸ້ມຄອງການຮ່ວມປະຕິບັດງານ, ໄດ້ມີການຕັດສິນໃຈວ່າ: ຈະນຳສະເໜີວິທີການກູ້ທຶນຄືນໃນປີ 2017 ຂຶ້ນກັບມູນຄ່າການເບີກຈ່າຍຕົວຈິງຈາກປະກັນ ໄພ. ວິທີນີ້ ຈະຊ່ວຍຫຼຸດຜ່ອນການແບກຫາບຕົ້ນທຶນຂອງບັນດາອົງການຕ່າງໆໃນລະບົບ ສປຊ.



# ພາບລວມດ້ານການເງິນໂດຍປະມານ

| ຂົງເຂດຜົນໄດ້ຮັບ | ປະເມີນຕົວເລກການສະໜອງທຶນໃນປີ 2016 (US$) | ປະເມີນຕົວເລກທຶນທີ່ມີໃນປີ 2017 (US$) |
|---|---|---|
| 1 - ການເຕີບໂຕທີ່ສະເໝີພາບ ແລະ ຍືນຍົງ | 5,090,676 | 6,506,961 |
| 2 - ການບໍລິການພາກລັດ, ສິດທິ ແລະ ການມີສ່ວນຮ່ວມ | 5,426,354 | 4,194,194 |
| 3 - ການສຶກສາ ແລະ ການຝຶກອົບຮົມທີ່ສະເໝີພາບ | 6,212,137 | 3,064,000 |
| 4 - ການບໍລິການສາທາ ແລະ ສະຫວັດດີການສັງຄົມທີ່ສະເໝີພາບ | 11,633,206 | 11,621,000 |
| 5 - ການປັບປຸງການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ | 24,725,067 | 26,496,760 |
| 6 - ການປ້ອງກັນ HIV, ການປິ່ນປົວ ແລະ ການຊ່ວຍເຫຼືອຜູ້ຕິດເຊື້ອ HIV | 1,237,000 | 1,914,000 |
| 7 - ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ | 1,999,313 | 6,074,661 |
| 8 - ການປັບຕົວ ແລະ ການຫຼຸດຜ່ອນຄວາມບອບບາງຈາກການປ່ຽນແປງ ຂອງສະພາບດິນຟ້າອາກາດແລະໄພພິບັດທຳມະຊາດ | 4,818,429 | 6,762,595 |
| 9 - ການຫຼຸດຜ່ອນຜົນກະທົບຈາກບັນຫາລະເບີດທີ່ບໍ່ທັນແຕກ | 5,513,603 | 4,144,814 |
| 10 - ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງ ແມ່ຍິງ | 35,700 | 750,000 |
| **ຂົງເຂດຜົນໄດ້ຮັບອື່ນໆທີ່ເປັນວຽກຮ່ວມລະຫວ່າງຂະແໜງການ** | **1,379,709** | **872,000** |
| ທັງໝົດ | **68,071,194** | **72,400,985** |

1. ຜົນໄດ້ຮັບທີ 10 ວ່າດ້ວຍຄວາມສະເໝີພາບບົດບາດຍິງ-ຊາຍແລະການມີສ່ວນຮ່ວມຂອງແມ່ຍິງ ຖືເປັນວຽກຮ່ວມລະຫວ່າງຂະ ແໜງການ. ຫຼາຍແຜນງານທີ່ປະກອບສ່ວນເຂົ້າໃນວຽກງານຄວາມສະເໝີພາບບົດບາດຍິງ-ຊາຍແລະການມີສ່ວນຮ່ວມຂອງແມ່ຍິງ ຖືກສ່ອງແສງໃຫ້ເຫັນພາຍໃນບັນດາຜົນໄດ້ຮັບຕົ້ນຕໍຕ່າງໆ.



ພາລະກິດຂອງພວກເຮົາ ແມ່ນຊ່ວຍລັດຖະບານແຫ່ງ ສປປ ລາວ &
ກຸ່ມຄົນທີ່ມີຄວາມບອບບາງທີ່ສຸດ ໃນການຕໍ່ສູ້ກັບຄວາມທຸກຍາກ ໂດຍຮັບ
ປະກັນໃຫ້ມີການພັດທະນາໃນທິດທາງທີ່ຍືນຍົງ ແລະ ມີສິດທິທີ່ເທົ່າທຽມກັນ
ເຊິ່ງສົ່ງເສີມສິດທິມະນຸດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ &
ການປົກຄອງທີ່ດີ.

ລິຂະສິດໂດຍ ອົງການສະຫະປະຊາຊາດ ປະຈໍາ ສປປ ລາວ, 2017